# ວັດທະນະທຳບັນດາເຜົ່າ ໃນງານມະໂຫລານ ປີ 2000





ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2008

ສະຫງວນລິຂະສິດ

# ສູນກາງແນວລາວສ້າງຊາດ
# ກົມຊົນເຜົ່າ

## ວັດທະນະທຳ ບັນດາເຜົ່າໃນງານມະໂຫລານ ປີ 2000


ຜູ້ຈັດພິມ: ກົມຊົນເຜົ່າ ສ ນ ຊ.

ພິມທີ່: ໂຮງພິມແຫ່ງລັດ
ຕາມທບ 86/ພຈ 03062008
ຂະໜາດ 15 x 20 ຊມ

ຈຳນວນ1.500 ຫົວ

ນະຄອນຫຼວງວຽງຈັນ, ວັນທີ 3 ມິຖຸນາ 2008



ສະຫງວນລິຂະສິດ
ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

## ຄະນະຮັບຜິດຊອບຈັດພິມປື້ມ:

ວັດທະນະທຳບັນດາເຜົ່າໃນງານມະໂຫລານປີ2000

## ຄະນະຊີ້ນຳ:

ທ່ານ ຄຳເຜີຍ ຈັນທະສຸກ
ທ່ານ ຄຳໃບ ຍຸນດາລາດ
ທ່ານ ເພັງ ຫຼ້າສຸກັນ

## ຜູ້ຂຽນບົດ ແລະຮຽບຮຽງ:

ສ.ນ້ອຍ ຈັນສຸກ ມາລາແສງຍະສິດ ຫຼື
ສ.ນ້ອຍຈັນສະໝອນ ແດນຈະເລີນສຸກ

## ຖ່າຍພາບ:

ອາຈານ: ບຸນສຸກ ສຸວັນນະໄຊ
ຂ່າວສານປະເທດລາວ

## ຄະນະກວດແກ້:

ທ່ານ ພັນມະລີ ສີງຄຳວົງສາ

ທ່ານ ນາງ ນັດ ພູມີວົງ

ທ່ານ: ເຢ່ຍເກີຢ່າ ໜໍຈໍຈີງຕົວ

**ຄອມພິວເຕີ:**

ນາງ ມະນີວັນ ແກ້ວໂກມິນ

ນາງ ສີເມືອງ ນຽມວານິດ

**ຈັດໜ້າ:**

ນາງ ມະນີວັນ ແກ້ວໂກມິນ

**ພິສູດອັກສອນ:**

ສ.ນ້ອຍ ຈັນສຸກ ມາລາແສງຍະສິດ

ນາງ ສີເມືອງ ນຽມວານິດ

**ອອກແບບໜ້າປົກ:**

ທ່ານ ແຮນຣີ ຕິງໂປຢາປັກຊີ່ງ

**ບໍລິຫານ :**

ນ. ແສງຈັນ ພິມມະວົງ

# ສາລະບານ

1. ຄວາມເຫັນຂອງ ທ່ານຫົວໜ້າກົມຊົນເຜົ່າ ສູນກາງ ແນວລາວສ້າງຊາດ ໜ້າ 1 - 3

2. ການຄົງຕົວແລະ ຂະຫຍາຍຕົວ ຂອງວຽກງານ
ສິລະປະ ວັນນະຄະດີ ບັນດາຊົນເຜົ່າ ນະຄອນຫຼວງວຽງຈັນ. ໜ້າ 4 - 9

3. ການອະນຸລັກ ແລະຟື້ນຟູ ວຽກງານສິລະປະວັນນະຄະດີ
ພື້ນເມືອງ ບັນດາຊົນເຜົ່າ ແຂວງ ຜົ້ງສາລີ ໜ້າ 10 -17

4. ວຽກງານສິລະປະ ວັນນະຄະດີ ບັນດາຊົນເຜົ່າ ແຂວງ
ອຸດົມໄຊ ບົນຕົວກ້າວຂຶ້ນ ພັດທະນາຕົນເອງ ໜ້າ 18- 27

5. ແຂວງ ຫຼວງນ້ຳທາ ກ່ຽວກັບການຟື້ນຟູ ສົ່ງເສີມ
ວຽກງານ ສິລະປະວັນນະຄະດີ ບັນດາຊົນເຜົ່າ ໜ້າ 28 -35

6. ວຽກງານສິລະປະ ວັນນະຄະດີ ບັນດາຊົນເຜົ່າ ແຂວງ
ບໍ່ແກວ ໄດ້ຮັບຄວາມນິຍົມຈາກມວນຊົນ ໜ້າ 36 - 41

7. ກອງ ສິລະປະ ວັນນະຄະດີ ບັນດາຊົນເຜົ່າ ແຂວງ
ຫຼວງພະບາງ ກັບການພັດທະນາຕົນເອງ ໜ້າ 42- 48

8.ບາດກ້າວການຂະຫຍາຍຕົວຂອງວຽກງານສິລະປະ
ວັນນະຄະດີ ບັນດາຊົນເຜົ່າ ແຂວງ ຫົວພັນ ໜ້າ 49 - 58

9. ວຽກງານສິລະປະ ວັນນະຄະດີ ບັນດາຊົນເຜົ່າ ແຂວງ
ຊຽງຂວາງ ກໍ່ໄດ້ຮັບການອະນຸລັກ ແລະເສີມຂະຫຍາຍ. ໜ້າ 59 - 63

10.ການເອົາໃຈໃສ່ລົງທຶນ ໃຫ້ແກ່ ວຽກງານສິລະປະ
ວັນນະຄະດີ ແຂວງ ໄຊຍະບູລີ ມີທ່ວງທ່າໃໝ່ ໜ້າ 64 - 72

11. ການຄົງຕົວແລະ ຂະຫຍາຍຕົວ ຂອງວຽກງານ
ສິລະປະ ວັນນະຄະດີ ບັນດາຊົນເຜົ່າ ແຂວງ ວຽງຈັນ ໜ້າ 73 - 77

12. ວຽກງານສິລະປະວັນນະຄະດີ ແຂວງ ບໍລິຄຳໄຊ
ກໍມີທ່າຂະຫຍາຍຕົວ ໜ້າ 78 - 83

13. ການຄົງຕົວແລະ ຂະຫຍາຍຕົວ ຂອງວຽກງານ
ສິລະປະ ວັນນະຄະດີ ບັນດາຊົນເຜົ່າ ແຂວງ ຄຳມ່ວນ ໜ້າ 84- 88

14.ການຄົງຕົວ ແລະ ຂະຫຍາຍຕົວຂອງວຽກງານ ສິລະປະ
ວັນນະຄະດີ ບັນດາຊົນເຜົ່າ ຢູ່ ແຂວງ ສະຫວັນນະເຂດ ໜ້າ 89 - 94

15.ການຄົງຕົວ ແລະ ຂະຫຍາຍຕົວຂອງວຽກງານ ສິລະປະ
ວັນນະຄະດີ ພື້ນເມືອງ ບັນດາຊົນເຜົ່າ ຢູ່ ແຂວງ ສາລະວັນ ໜ້າ 95 -102

16. ວຽກງານ ສິລະປະວັນນະຄະດີ ພື້ນເມືອງ ບັນດາຊົນເຜົ່າ
ຢູ່ ແຂວງ ເຊກອງ ກໍ່ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍ ໜ້າ103-110

17.ການຄົງຕົວ ແລະ ຂະຫຍາຍຕົວຂອງວຽກງານ ສິລະປະ
ວັນນະຄະດີ ຂອງ ບັນດາຊົນເຜົ່າ ຢູ່ ແຂວງ ຈຳປາສັກ ໜ້າ 111- 116

18. ວຽກງານ ສິລະປະວັນນະຄະດີ ບັນດາເຜົ່າ ຢູ່ ແຂວງ ອັດຕະປື
ໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍ ໜ້າ117- 125

19. ວຽກງານ ສິລະປະວັນນະຄະດີ ບັນດາຊົນເຜົ່າ ຢູ່ ເຂດພິເສດໄຊສົມບູນ
ພວມກໍ່ຮ່າງສ້າງຕົວຂຶ້ນຮັບໃຊ້ສັງຄົມ ໜ້າ126 - 128

---

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ສູນກາງແນວລາວສ້າງຊາດ
ໂທ: 213754

ເລກທີ 053/ທກ/ສນຊ
ນະຄອນຫຼວງວຽງຈັນ,ວັນທີ7/3/2007

# ຂໍ້ຕົກລົງ

ຂອງຄະນະກຳມະການສູນກາງແນວລາວສ້າງຊາດ ວ່າດ້ວຍການອະນຸມັດ
ໃຫ້ກົມຊົນເຜົ່າພິມປຶ້ມ " ວັດທະນະທຳບັນດາເຜົ່າໃນງານມະໂຫລານ ປີ2000 "

- ອີງຕາມໂຄງການດຳເນີນງານ ຂອງສູນກາງແນວລາວສ້າງຊາດ ທີ່ຮັບຮອງຈາກກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຄັ້ງທີ VIII ຂອງແນວລາວສ້າງຊາດ.
- ອີງຕາມໂຄງການ ພິມປຶ້ມ " ວັດທະນະທຳບັນດາເຜົ່າໃນງານມະໂຫລານ ປີ2000" ຂອງກົມຊົນເຜົ່າ.

## ຄະນະກຳມະການສູນກາງແນວລາວສ້າງຊາດ ຕົກລົງ

<u>ມາດຕາ01</u>: ອະນຸມັດໃຫ້ກົມຊົນເຜົ່າຂອງສູນກາງແນວລາວສ້າງຊາດ ພິມປຶ້ມ " ວັດທະນະທຳບັນດາເຜົ່າໃນງານມະໂຫລານ ປີ2000" . ດ້ວຍທຶນຈາກບໍລິສັດ, ຫ້າງຮ້ານ ນັບທັງພາກລັດ ແລະເອກະຊົນ.

<u>ມາດຕາ02:</u> ມອບໃຫ້ຄະນະກົມຊົນເຜົ່າ ແລະ ພະນັກງານພາຍໃນກົມດັ່ງກ່າວ ເຄື່ອນໄຫວລະດົມທຶນຈາກພາກ ສ່ວນຕ່າງໆ ເພື່ອພິມປຶ້ມດັ່ງກ່າວໃຫ້ສຳເລັດ.

<u>ມາດຕາ03:</u> ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະກຳມະການສູນກາງແນວລາວສ້າງຊາດ

ປະທານ

# ຄວາມເຫັນ
# ຂອງຫົວໜ້າກົມຊົນເຜົ່າ

ວັດທະນະທຳບັນດາຊົນເຜົ່າ ແມ່ນທຸກສິ່ງທຸກຢ່າງ ທີ່ບັນດາຊົນເຜົ່າປະດິດຄິດແຕ່ງຂຶ້ນ ໃນແຕ່ລະຍຸກແຕ່ລະສະໄໝ, ແມ່ນສີໄມ້ລາຍມືຫົວຄິດ, ປະດິດສ້າງ ,ສະຕິປັນຍາຂອງ ບັນດາຊົນເຜົ່າ, ນັບທັງພາສາປາກເວົ້າ ກິລິຍາມາລະຍາດ, ແບບແຜນການດຳລົງຊີວິດ, ການນຸ່ງຫົ່ມ, ເອ້ຍ້ອງ, ວິທີທຳມາຫາກິນ, ຮີດຄອງປະເພນີ, ເຄື່ອງມືການຜະລິດ, ໝາກຜົນຂອງ ການຄົ້ນຄ້ວາ ວິທະຍາສາດ....ຫຼື ເວົ້າໂດຍສັງລວມວ່າ: ວັດທະນະທຳ ຂອງບັນດາຊົນເຜົ່າ ແມ່ນຜະລິດຕະພັນທາງ ວັດຖຸ ແລະ ຈິດ ໃຈທັງໝົດສັງຄົມຊົນເຜົ່າ. ແຕ່ວັດທະນະທຳບັນດາຊົນເຜົ່າ ໃນບຸນມະໂຫ ລານ ປີ 2000 ແມ່ນເວົ້າເຖິງການຄົງຕົວ ແລະ ການເຕີບໃຫ່ຍ ຂະຫຍາຍ ຕົວ ຂອງວຽກງານສິລະປະວັນນະຄະດີ ພື້ນເມືອງບັນດາຊົນເຜົ່າ.

ບັນດາໜ່ວຍສິລະປະ ວັນນະຄະດີ ຂອງ ແຂວງຕ່າງໆ ທີ່ໄດ້ດຳເນີນການສະແດງໃນໂອກາດບຸນມະໂຫລານ ວັດທະນະທຳ ບັນດາຊົນເຜົ່າທົ່ວປະເທດຄັ້ງທີ່ II ປີ 2000 ທີ່ນະຄອນຫຼວງວຽງຈັນ ໄດ້ສະແດງໃຫ້ເຫັນວ່າ: ວຽກງານສິລະປະ ວັນນະຄະດີ ພື້ນ ເມືອງ ແລະ ສິລະປະວັດທະນະທຳຂອງບັນດາຊົນເຜົ່າແມ່ນໄດ້ມີການຄົງຕົວ, ເຕີບໃຫ່ຍຂະຫຍາຍຕົວ ພ້ອມທັງໄດ້ຮັບການອະນຸລັກຮັກສາ ແລະ ສົ່ງເສີມຂະຫຍາຍຈາກພັກ ປ ປ ລ, ລັດຖະບານ ແຫ່ງ ສ ປ ປ ລາວ ຕະຫຼອດມາ. ສະນັ້ນ ຈຶ່ງເຫັນວ່າ: ປື້ມວັດທະນະທຳບັນດາຊົນເຜົ່າ ໃນບຸນ ມະໂຫລານ ປີ 2000 ນີ້ ຄົງຈະມີຄຸນຄ່າໃນການ ອະນຸລັກ ຮັກສາ ສົ່ງເສີມຂະຫຍາຍວຽກງານສິລະປະວັນນະຄະດີພື້ນເມືອງ ຂອງບັນດາຊົນເຜົ່າ. ເຖິງວ່າບໍ່ຄົບທຸກຊົນເຜົ່າກໍ່ຕາມ ແຕ່ພວກເຮົາເຊື່ອແນ່ວ່າ: ປື້ມນ້ອຍຫົວນີ້ຈະເປັນບ່ອນອີງ ແລະ ປະໂຫຍດບໍ່ຫຼາຍກໍ່ໜ້ອຍ ໃຫ້ແກ່ບັນດາທ່ານຜູ້ອ່ານ ແລະ ນັກຄົ້ນຄວ້າ ສິລະປະວັນນະຄະດີຂອງບັນດາຊົນເຜົ່າ.

ກົມຊົນເຜົ່າ ຂອງ ສູນກາງ ແນວລາວສ້າງຊາດ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຢ່າງສູງຕໍ່ບັນດາທ່ານຄະນະນຳ ສູນກາງ ແນວລາວສ້າງຊາດ, ທ່ານ ລັດຖະມົນຕີ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ,ຄະນະກົມວັນນະຄະດີ ແລະ ວັດທະນະທຳ ມະຫາຊົນ ຂອງກະຊວງ ດັ່ງກ່າວທີ່ໄດ້ອຳນວຍຄວາມສະດວກ ແລະ ສ້າງທຸກເງື່ອນໄຂ ໃຫ້ແກ່ຄະນະວິຊາການພວກເຮົາໄດ້ເຄື່ອນໄຫວເກັບກຳຂໍ້ມູນບັນດາບັນຫາດັ່ງກ່າວ. ຂໍສະແດງຄວາມຂອບໃຈຢ່າງຫຼວງຫຼາຍນຳຄະນະນຳພະແນກຖະແຫຼງຂ່າວ ແລະ ວັດທະນະທຳ ຂອງບັນດາແຂວງ,ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ທີ່ໄດ້ ສະໜອງ ຂໍ້ມູນ ກ່ຽວກັບການຄົງຕົວ ແລະ ຂະຫຍາຍຕົວ ໃນວຽກງານສິລະປະວັນນະຄະດີ ພື້ນເມືອງ ຂອງບັນດາຊົນເຜົ່າ ອັນໄດ້ເຮັດໃຫ້ວິຊາການ ຂອງພວກເຮົາ ໄດ້ຂຽນ,ກວດແກ້,ຮຽບຮຽງ, ຈັດໜ້າ, ພິສູດອັກສອນ, ໂຮມເປັນເຫຼັ້ມ ແລະ ພິມຕົ້ນ ສະບັບໃນເບື້ອງຕົ້ນ. ພ້ອມກັນ ນັ້ນ, ກ່ອນປຶ້ມນ້ອຍຫົວນີ້ ຈະບັນລຸຜົນສຳເລັດໃນເບື້ອງຕົ້ນຄືແນວນີ້, ກົມຊົນເຜົ່າຂອງ ສູນກາງແນວລາວສ້າງຊາດ ຂໍສະແດງຄວາມຊົມເຊີຍຄະນະວິຊາການ ກົມຊົນເຜົ່າ ທີ່ໄດ້ໃຊ້ຄວາມພະຍາຍາມຂຽນ,ກວດແກ້, ຮຽບຮຽງ,ຈັດໜ້າ,ພິສູດອັກສອນ ແລະ ພິມຕົ້ນສະບັບໃນເບື້ອງຕົ້ນ ແລະ ອື່ນໆ. ແຕ່ບັນຫາທີ່ບໍ່ສາມາດ, ຫຼົງລືມໄດ້ນັ້ນ, ກ່ອນປຶ້ມ ນ້ອຍຫົວນີ້ຈະໄດ້ພິມຈຳໜ່າຍອອກສູ່ສາຍຕາຂອງມະຫາຊົນຄືແນວນີ້. ໃນ ນາມຕາງໜ້າ ກົມຊົນເຜົ່າ ແລະ ຕາງໜ້າ ຄະນະ ຮັບຜິດຊອບ ຈັດພິມປຶ້ມ ນ້ອຍຫົວນີ້ ຂໍສະແດງ ຄວາມ ຮູ້ບຸນຄຸນຢ່າງສູງ ແລະ ຂອບໃຈຢ່າງລົ້ນເຫຼືອ ນຳພາກສ່ວນທະນາຄານ, ບັນດາ ໂຮງແຮມ, ບັນດາ ໂຮງງານ, ບັນດາລັດວິສະຫະກິດ, ບັນດາບໍລິສັດ,ຫ້າງຮ້ານ ນັບທັງ ພາກສ່ວນລັດ ແລະ ເອກະຊົນ ທີ່ໄດ້ໃຫ້ການສະໜັບສະໜູນທຶນຮອນເປັນຈຳນວນບໍ່ໜ້ອຍປະກອບ ສ່ວນໃນການ ພິມຈຳໜ່າຍປຶ້ມ : ວັດທະນະທຳ ບັນດາຊົນເຜົ່າໃນງານມະໂຫລານປີ 2000.

ອີກເທື່ອໜຶ່ງ, ພວກຂ້າພະເຈົ້າເຊື່ອແນ່ວ່າ, ບັນດາເນື້ອໃນ ກໍ່ຄືເນື້ອຫາສາລະທີ່ໄດ້ສ່ອງແສງຢູ່ໃນປື້ມນ້ອຍຫົວນີ້ຄົງບໍ່ສາມາດຫຼີກລ່ຽງໄດ້ເຖິງຂໍ້ຂາດຕົກບົກຜ່ອງບໍ່ຫຼາຍກໍ່ໜ້ອຍ. ສະນັ້ນ, ຈຶ່ງຂໍສະເໜີມາຍັງບັນດາທ່ານ ບັນດາສະຫາຍທີ່ໄດ້ອ່ານຫຼືໄດ້ໃຊ້ປື້ມນ້ອຍຫົວນີ້ ຈົ່ງປະກອບຂໍ້ຄິດເຫັນສົ່ງໄປຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ ໂທ: 021 218965, 020 5451466 ທັງນັ້ນ, ກໍ່ເພື່ອແນໃສ່ເຮັດໃຫ້ເນື້ອໃນກໍ່ຄືເນື້ອຫາສາລະທີ່ໄດ້ສ່ອງແສງຢູ່ປື້ມນ້ອຍຫົວນີ້ໃຫ້ມີຄວາມອຸດົມສົມບູນ ແລະ ຄົບຖ້ວນກວ່າເກົ່າຍິ່ງໆຂຶ້ນ.

ຂໍອວຍພອນໄຊໃຫ້ແກ່ບັນດາທ່ານຜູ້ອ່ານຈົ່ງມີສຸຂະພາບເຂັ້ມແຂງ ປະສົບແຕ່ຄວາມສຸກຄວາມຈະເລີນ, ສໍາເລັດໜ້າທີ່ວຽກງານທຸກຢ່າງ ແລະມີຄວາມສຸກໃນຄອບຄົວ.

ນະຄອນຫຼວງວຽງຈັນ, ວັນທີ 31 / 7 / 2008

ຫົວໜ້າກົມຊົນເຜົ່າ

# ການຄົງຕົວ ແລະ ການຂະຫຍາຍຕົວຂອງວຽກງານສິລະປະ ວັນນະຄະດີບັນດາຊົນເຜົ່າໃນນະຄອນຫຼວງວຽງຈັນ.

***************

ນະຄອນຫຼວງວຽງຈັນ ຫຼື ວຽງຈັນ ມີຊື່ໃນປະຫວັດສາດ ນັບເປັນຫຼາຍຮ້ອຍປີມາແລ້ວ ຄູ່ກັບເມືອງວຽງຄຳ. ເຈົ້າໄຊຍະເສດຖາທິຣາດ ໄດ້ຍົກຍ້າຍ ນະຄອນຫຼວງຊຽງທອງ ມາວຽງຈັນ ໃນສະຕະວັດ ທີ 16 ( ປີ ຄ.ສ 1560 ) ແລະ ສ້າງຫໍໂຮງ: ຫໍພະແກ້ວ, ຫໍຄຳ, ພະທາດຫຼວງ ນະຄອນຫຼວງວຽງຈັນ ເປັນໃຈກາງຂອງວັດທະນະທຳລາວ ນັບແຕ່ສະໄໝນັ້ນເປັນຕົ້ນມາ ເລີ່ມລົ້ມຈົມລົງເມື່ອປະເທດລາວແຕກແຍກເປັນສາມອານາຈັກ. ເຊິ່ງຕໍ່ມາໄດ້ຕົກເປັນເມືອງຂຶ້ນ ຂອງສະຫຍາມພ້ອມກັນໃນປີ ຄ.ສ 1779 ຈາກນັ້ນ ນະຄອນຫຼວງວຽງຈັນ ທີ່ເຄີຍຮຸ່ງເຮືອງມາໄດ້ຫຼາຍສະຕະວັດ ກໍ່ຖືກເຜົາຜານຮາບກ້ຽງລົງໃນສະໄໝສົງຄາມ ລະຫວ່າງ ເຈົ້າອະນຸວົງ ກະສັດ ອົງສຸດທ້າຍ ແຫ່ງລາຊະວົງວຽງຈັນ ກັບກອງທັບສະຫຍາມເມື່ອປີ 1826 - 1828. ບໍ່ພຽງແຕ່ວັດວາ, ຫໍໂຮງ ອັນວິຈິດງົດງາມຖືກມ້າງເພທຳລາຍທັງນັ້ນ, ປະຊາຊົນລາວຖືກກວາດໄລ່ລົງໄປຢູ່ສະຫຍາມ ແລະ ໄດ້ກາຍເປັນພົນລະເມືອງໄທໃນກາລະຕໍ່ມາ. ວຽງຈັນ ເປັນເມືອງ ຮ້າງເປົ່າແປນຢູ່ສິບປີຄືນັບແຕ່ປີຄ.ສ. 1829 ເຖິງທ້າຍສະຕະວັດທີ 19 ( ຄ.ສ.1893 ) ເມື່ອຝຣັ່ງເຂົ້າມາຍຶດເອົາເປັນທົວເມືອງຂຶ້ນ. ນັບແຕ່ນັ້ນມາ ນະຄອນຫຼວງວຽງຈັນ ຈຶ່ງຄ່ອຍຟື້ນຊີບຄືນມາການສ້າງສາບູລະນະ ວັດວາອາຮາມທີ່ເຫຼືອເຊັ່ນ: ໃນປີ ຄ.ສ. 1928 ໄດ້ສ້ອມແປງ ຫໍພະແກ້ວ ແລະ ທາດຫຼວງ. ປະຈຸບັນ ວຽງຈັນ ເປັນ ນະຄອນຫຼວງ ຂອງ ສ. ປ. ປ. ລາວ ເປັນສູນກາງ ດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ, ມີສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າວິທະສາດ, ມີໂຮງຈັກ, ໂຮງງານຫຼາຍແຫ່ງ, ມີພົນລະເມືອງທີ່ໜາແໜ້ນກວ່າໝູ່ຄື: 113 ຄົນ / ກິໂລແມັດ. ເຂດນະຄອນຫຼວງວຽງຈັນຕັ້ງຢູ່ລະຫວ່າງພື້ນທີ່ຮາບພຽງຂອງລ້ອງ ແມ່ນ້ຳຂອງ ແລະ ນ້ຳງື່ມ, ມີທົ່ງພຽງ ເໝາະແກ່ການປູກຝັງ, ທົ່ງນີ້ເອີ້ນວ່າ: ທົ່ງຮາບ ວຽງຈັນ ຊຶ່ງ ອ້ອມດ້ວຍສາຍ ພູເຂົາຄວາຍຕໍ່ໃສ່ພູງູ.

ເນື່ອງຈາກ ວຽງຈັນເປັນ ນະຄອນຫຼວງ ຂອງປະເທດ ຈຶ່ງເປັນບ່ອນເຕົ້າໂຮມຂອງພົນລະເມືອງທຸກຊົນເຜົ່າ. ແຕ່ບັນດາຊົນເຜົ່າທີ່ເປັນບ້ານສະເພາະນັ້ນ ມີຊົນເຜົ່າລາວ, ຜູ້ໄຕ, ກຶມມຸ, ມົ້ງ, ແລະ ອີວມຽນ. ນອກຈາກນີ້ຍັງມີຫຼາຍຊົນເຜົ່າ ທີ່ໄດ້ຍົກຍ້າຍເຄື່ອນໄຫວປະຕິບັດໜ້າທີ່ວຽກງານທາງລັດຖະການ ແລະໃນນາມສ່ວນຕົວແລ້ວກໍ່ຕັ້ງເຮືອນຊານ ຮ່ວມກັນກັບບັນດາຊົນເຜົ່າທີ່ໄດ້ມາຢູ່ກ່ອນໝູ່ເຊັ່ນ: ຊົນເຜົ່າລື້, ກະຕາງ , ມັງກອງ, ອາຄາ, ຊ່ວຍ, ຍວນ, ຢຣຸ, ຕະໂອ້ຍ, ຕຣຽງ, ແສນສີລີ, ຕຣີ, ຜ້ອງ, ເບຣົາ, ກະຕູ, ລະເມດ, ໄປຣ, ຮາຣັກ, ປະໂກະ, ໂອຍ, ກຣຽງ, ລາຫູ, ທົ້, ເຈັງ, ຍະເຫີນ, ຢັ້ງ, ແຢະ, ແຊກ, ສີລາ, ສິງມູນ, ຕູມ, ງວນ, ໂລໂລ, ຮ່າຍີ່, ສະດາງ,ລະວີ, ຂະແມ, ກຣີ, ກີ່ງ ( ທວຽດນາມຕັດສັນຊາດເປັນລາວ ) ແລະ ປະກົດສະຖານທີ່ຕັດສັນຊາດເປັນລາວ.

ບັນດາຊົນເຜົ່າທີ່ມາຢູ່ນະຄອນຫຼວງວຽງຈັນ ເຖິງວ່າໄດ້ຍົກຍ້າຍມາຢູ່ເກົ່າແລະໃໝ່ນັ້ນແມ່ນຍັງຄົງຮັກສາບັນດາເອກະລັກສະເພາະຂອງຊົນເຜົ່າຕົນເອງເຊັ່ນ: ເອກະລັກກ່ຽວກັບ ພາສາປາກເວົ້າ ເອກະລັກກ່ຽວກັບປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດທີ່ຕິດພັນເຖິງຊື່ເອີ້ນເດີມທີ່ ພວກເຂົາເຈົ້າໄດ້ມີຄວາມສະໝັກໃຈໃຫ້ເອີ້ນ ແລະ ເອກະລັກກ່ຽວລະບົບແນວຄິດ, ຈິດຕະສາດທີ່ສະແດງອອກໃນວົງຄະນາຍາດ ວັດທະນະທຳ ຄື: ວັດທະນະທຳ ທາງດ້ານວັດຖຸ, ຈິດໃຈ ແລະດ້ານສັງຄົມ.

ຊົນເຜົ່າຕ່າງໆ ຢູ່ນະຄອນຫຼວງວຽງຈັນ ບໍ່ວ່າໄດ້ເປັນບ້ານສະເພາະ ແລະ ບ້ານປະສົມລ້ວນແຕ່ໄດ້ມີມູນເຊື້ອທາງດ້ານສິລະປະວັນນະຄະດີ, ບໍ່ວ່າພວກຜູ້ເຖົ້າ, ໜຸ່ມນ້ອຍລ້ວນແຕ່ໄດ້ມີພອນສະຫວັນໃນການຂັບງື່ມ, ຮ້ອງເພັງ, ຂັບລຳ ແລະ ມັກມ່ວນຊື່ນໃນງານບຸນປະເພນີຕ່າງໆ. ໃນໄລຍະທີ່ປະເທດຊາດຫາກໍ່ໄດ້ຮັບການປົດປ່ອຍໃໝ່ເມື່ອຊຸມປີ 1975 ຫາຊຸມປີ 1980 ໜ່ວຍ ສິລະປະວັນນະຄະດີ ສະໝັກຫຼິ້ນກໍ່ໄດ້ຈັດຕັ້ງຂຶ້ນຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ, ສຳນັກງານ, ອົງການ, ໂຮງຈັກ, ໂຮງງານ, ໂຮງໝໍ, ນິຄົມກະເສດ, ກອງທະຫານ ແລະ ອື່ນໆ ພ້ອມທັງໄດ້ເຄື່ອນໄຫວສະແດງຮັບໃຊ້ສັງຄົມຢ່າງເປັນຂະບວນ ຟົດຟື້ນ ໃນນັ້ນໜ່ວຍສິລະປະວັນນະຄະດີ ທີ່ເດັ່ນກວ່າໝູ່ສະໄໝນັ້ນແມ່ນສິລະປະວັນນະຄະດີສະໝັກຫຼິ້ນໂຮງຮຽນ ມັດທະຍົມໜອງບອນ, ບໍລິສັດໄຟຟ້າລາວ, ກະຊວງ ອຸດສະຫະກຳ ແລະ ການຄ້າ, ກະຊວງ ການເງິນ, ໂຮງໝໍ 103 ,

ນິຄົມ 23 ເວີນຄຳ, ກະຊວງພາຍໃນ ແລະໃນໄລຍະດຽວກັນນັ້ນ, ກອງສິລະປະກອນ ນະຄອນຫຼວງວຽງຈັນ ກໍ່ໄດ້ຈັດຕັ້ງຂຶ້ນເປັນທາງການ. ເຊິ່ງໄດ້ເຄື່ອນໄຫວສະແດງ ຮັບໃຊ້ໜ້າທີ່ການເມືອງຂອງ ພັກ - ລັດ ໃນໄລຍະນັ້ນ ດ້ວຍຄວາມຕັ້ງໜ້າ ແລະ ນັບ ແຕ່ນີ້ໄດ້ຮັບການສ້າງຕັ້ງຈົນຮອດ ຊຸມປີ 1990 ກອງສິລະປະກອນ ກຳແພງ ນະຄອນ ຫຼວງວຽງຈັນ ໄດ້ພະຍາຍາມປັບປຸງການຈັດຕັ້ງສົມທົບກັບໄດ້ຍົກລະດັບ ວິຊາການ ໃຫ້ແກ່ນັກສະແດງ ແລະນັກດົນຕີ ໃຫ້ສູງຂຶ້ນເທື່ອລະກ້າວພ້ອມຍັງໄດ້ປັບປຸງເນື້ອໃນ ລາຍການສະແດງໃຫ້ສອດຄ່ອງກັບໜ້າທີ່ການເມືອງຂອງພັກ - ລັດ ໃນແຕ່ລະໄລຍະ. ບໍ່ພຽງແຕ່ເທົ່ານັ້ນ ຄະນະກອງສິລະປະກອນ ກຳແພງ ນະຄອນຫຼວງວຽງຈັນ ໄດ້ ພະຍາຍາມປະດິດຄິດແຕ່ງ ບົດຮ້ອງທຳນອງເສບ, ຂັບລຳທ້ອງຖິ່ນ ເປັນຈຳນວນ ບໍ່ໜ້ອຍ ພ້ອມທັງໄດ້ເຄື່ອນໄຫວສະແດງຮັບໃຊ້ໜ້າທີ່ການເມືອງຂອງພັກ, ເຂົ້າ ຮ່ວມບັ້ນກວດສອບ ສິລະປະວັນນະຄະດີ ແລະເຂົ້າຮ່ວມງານມະໂຫລານວັດທະນະ ທຳ ບັນດາຊົນເຜົ່າ ລະດັບທ້ອງຖິ່ນ ແລະ ລະດັບຊາດ ກໍ່ບໍ່ ໜ້ອຍໜ້າກັບແຂວງອື່ນໆ..

ຮອດຊຸມປີ 1990 ກອງສິລະປະກອນ ນະຄອນຫຼວງວຽງຈັນ ໄດ້ຫັນການເຄື່ອນ ໄຫວໄປສູ່ຮູບການອື່ນໆ ພ້ອມດຽວກັນກັບ ກອງສິລະປະກອນຂອງບັນດາແຂວງໃນ ທົ່ວປະເທດ. ເມື່ອເປັນແນວນັ້ນມີນັກສະແດງຈຳນວນໜຶ່ງແມ່ນໄດ້ຖືກສັບຊ້ອນໄປ ເຮັດວຽກອື່ນ, ມີຈຳນວນໜຶ່ງໄດ້ເຂົ້າເຮັດວຽກຢູ່ຕາມຄະນະວົງດົນຕີຕ່າງໆ ແລະ ອີກເປັນຈຳນວນບໍ່ໜ້ອຍແມ່ນໄດ້ລົງ ຮາກຖານບ້ານປະຊາຊົນເຜົ່າຕ່າງໆ. ແຕ່ວ່າໃນ ຊ່ວງໄລຍະນັ້ນມາຮອດປະຈຸບັນວຽກງານ ສິລະປະວັນນະຄະດີ ຢູ່ນະຄອນຫຼວງວຽງ ຈັນ ກໍ່ໄດ້ປະກົດຕົວຂຶ້ນເປັນຮູບຮ່າງໃໝ່ຄື: ວົງດົນຕີ ຂອງ ບັນດາບຸກຄົນ ແລະ ລວມໝູ່ ໄດ້ມີການຈັດຕັ້ງສາມາດຕອບສະໜອງຕາມຄວາມຮຽກຮ້ອງ ຕ້ອງ ການຂອງສັງຄົມ ແລະ ໜ່ວຍສິລະປະວັນນະຄະດີ ສະໝັກຫຼິ້ນ ກໍ່ໄດ້ປະກົດຕົວຂຶ້ນ ຢູ່ຕາມໝູ່ບ້ານ ຊົນ ເຜົ່າ ຕ່າງໆໃນ 9 ຕົວເມືອງ, ປະຈຸບັນຕາມ ຕົວເລກທີ່ບໍ່ທັນຄົບຖ້ວນ ໃນປີ 2000-2001 ໄດ້ມີວົງດົນຕີ ທີ່ໄດ້ຂຶ້ນທະບຽນມີ 146 ຄະນະແຕ່ມາຮອດປີ 2001 - 2002 ໄດ້ມີ 80 ກວ່າຄະນະ, ໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນກໍ່ໄດ້ຈັດຕັ້ງຂຶ້ນໃນ 9 ຕົວ ເມືອງແຕ່ຄະນະ ທີ່ເດັ່ນກວ່າໝູ່ ແມ່ນ, ໜ່ວຍສິລະປະ ວັນນະຄະດີສະໝັກຫຼິ້ນ

ຂອງ ຊົນເຜົ່າມົ້ງ ຢູ່ບ້ານສີມສະໄໝ, ໂພນງາມ (1) ແລະ ໂພນງາມ (2) ເມືອງ ໄຊທານີ ໜ່ວຍສິລະປະ ວັນນະ ຄະດີ ຂອງຊົນເຜົ່າ ໄທດຳ ຢູ່ບ້ານ ສີງເປືອຍ ເມືອງ ນາຊາຍທອງ, ໜ່ວຍສິລະປະວັນນະຄະດີ ວິທະຍາຄານ ປ້ອງກັນຄວາມສະຫງົບ ເວີນຄຳ, ຄະນະໝໍລຳ ຂັບງື່ມ ຢູ່ເມືອງ ປາກງື່ມ ແລະ ຄະນະອື່ນໆ.

ປະຈຸບັນຢູ່ນະຄອນຫຼວງວຽງຈັນ ເຖີງວ່າບໍ່ມີກອງສະແດງອາຊີບກໍ່ຕາມ ແຕ່ໃນເມື່ອ ມີກອງປະຊຸມ, ແຂກໄປທາມາແວ່ຢາມ ນະຄອນຫຼວງວຽງຈັນ , ງານບຸນປະ ເພນີ ຫາກຕ້ອງການໃຫ້ມີການສະແດງສິລະປະ ວັນນະຄະດີ ກໍ່ໄດ້ເຕົ້າໂຮມນັກ ສະແດງ ຈາກໜ່ວຍວັນນະຄະດີ ພາກສ່ວນຕ່າງໆມາຝຶກຊ້ອມ ຊົ່ວໄລຍະໜຶ່ງກໍ່ສາມາດ ສະແດງຮັບຕ້ອນແຂກຕ່າງດ້າວທ້າວຕ່າງແດນໄດ້ຢ່າງທັນການ ແລະ ໃນໂອກາດບຸນ ມະໂຫລານວັດທະນະທຳບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ II ເມື່ອປີ 2000. ທີ່ໄດ້ ຈັດຂຶ້ນຢູ່ ຫໍວັດທະນະທຳແຫ່ງຊາດ ແລະເດີ່ນທາດຫຼວງນັ້ນ. ຄະນະ ພະແນກ ຖະແຫຼງ ຂ່າວ - ວັດທະນະທຳ ນະຄອນຫຼວງວຽງຈັນ ໄດ້ຄັດເລືອກນັກສະແດງຈາກ ໜ່ວຍສິລະປະ ວັນນະຄະດີ ວິທະຍາຄານປ້ອງກັນຄວາມສະຫງົບມາເຕົ້າໂຮມຝຶກຊ້ອມ ຊົ່ວໄລຍະ ໜຶ່ງແລ້ວກໍ່ໄດ້ ສະແດງຜ່ານ ຄະນະຮັບຜິດຊອບຈັດງານດັ່ງກ່າວ ຂັ້ນ ນະຄອນ ຫຼວງ ແລະ ການນຳ ນະຄອນຫຼວງວຽງຈັນ ແລ້ວກໍ່ສາມາດເຂົ້າຮ່ວມກັບ ໜ່ວຍສິລະປະວັນນະຄະດີ ພື້ນເມືອງບັນດາຊົນເຜົ່າ ໃນທົ່ວປະເທດ ແຕ່ຕົ້ນຕະຫຼອດປາຍ ແລະ ບັນດາລາຍ ການ ທີ່ໄດ້ສະແດງໃນຄັ້ງນີ້ ມີຟ້ອນລຳວົງລາວ, ຟ້ອນດົ່ງວແຄນຂອງ ຊົນເຜົ່າມົ້ງ ແລະ ອື່ນໆ.

ລວມຄວາມວ່າ: ວຽກງານສິລະປະວັນນະຄະດີບັນດາຊົນເຜົ່າຢູ່ນະຄອນ ຫຼວງວຽງຈັນ ບໍ່ພຽງແຕ່ໄດ້ຮັບການປົກປັກຮັກສາ ຍັງໄດ້ເສີມຂະຫຍາຍ ແລະໄດ້ມີ ການຂະຫຍາຍຕົວຈາກຮູບການນີ້ໄປສູ່ຮູບການອື່ນທີ່ເຫັນວ່າມີຄວາມສອດຄ່ອງ ກັບແນວທາງ ນະໂຍ ບາຍຂອງພັກ ແລະ ກົດໝາຍຂອງລັດຖະບານແຫ່ງ ສ ປ ປ ລາວ.

ຂອງກອງສິລະປະກອນແຂວງ ຜົ້ງສາລີ ແຕ່ປີ1965 ຫາ1988 ກອງສະແດງດັ່ງກ່າວ ໄດ້ເຄີຍໄປສຶກສາເພື່ອ ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ແກ່ນັກສະແດງຢູ່ພາຍໃນ ແລະຕ່າງປະເທດ ບໍ່ຕໍ່າ ກວ່າ 5 ຄັ້ງ, ປະດິດບົດຟ້ອນ 40 ກວ່າ ບົດ,ເພງຮ້ອງ 100 ກວ່າບົດ ແລະຂັບທ້ອງຖິ່ນຫຼາຍ ກວ່າ150 ບົດ. ໄປພ້ອມໆກັບການປັບປຸງ ຍົກລະດັບລີລາການ ສະແດງໃຫ້ແກ່ນັກ ສະແດງໃນແຕ່ລະ ຄັ້ງນັ້ນ, ກອງສິລະປະ ກອນແຂວງຜົ້ງສາລີ ແມ່ນໄດ້ເຄື່ອນໄຫວ ສະແດງຮັບໃຊ້ເນວໜ້າ ຮັບໃຊ້ພື້ນຖານການ ຜະລິດ,ສະແດງຮັບໃຊ້ ແຂກຕ່າງປະເທດມາ ຢ້ຽມຢາມແຂວງຜົ້ງສາລີ ໃນແຕ່ລະຄັ້ງ,ມັນບໍ່ພຽງ ແຕ່ເທົ່ານັ້ນ,ກອງສິລະ ປະກອນດັ່ງກ່າວຍັງໄດ້ ສະແດງແລກປ່ຽນບົດ ຮຽນຢູ່ບັນດາແຂວງໃກ້ ຄຽງຄື:ແຂວງອຸດົມໄຊ



ຊຸດອາພອນເພດຊິນເຜົ່າໄຕດໍາ,ນາງ ສິມແປນ ບ້ານ ນໍ້າງາມ
ເມືອງໃໝ່, ແຂວງ ຜົ້ງສາລີ

ຫຼວງພະບາງ ,ຫຼວງນ້ຳທາ, ບໍ່ແກ້ວ, ຫົວພັນ ແລະໄປສະແດງຢູ່ ສ. ສ. ຫວຽດນາມ ພ້ອມກັນນັ້ນ, ກອງສິລະປະກອນດັ່ງກ່າວຍັງໄດ້ໄປສະແດງຢູ່ຕ່າງປະເທດຮ່ວມກັບກອງ ສິລະປະກອນ ສູນກາງຄື: ສ. ປ ຈີນ, ອາດິດສະຫະພາບໂຊວຽດ, ເຢຍລະມັນ, ໂປໂລຍ ແລະ ມົງໂກນ.ໃນຊຸມປີ1990 ກອງສິລະປະກອນ ແຂວງ ຜົ້ງສາລີ ຖືກຍຸບ ນັກສະແດງ ຈຳນວນ ໜຶ່ງຖືກສັບຊ້ອນໄປເຮັດວຽກງານອື່ນໆ ຢູ່ບາງຂະແໜງການຂອງແຂວງ, ເມືອງ ແລະ ສ່ວນຫຼວງຫຼາຍແມ່ນໄດ້ລົງສູ່ຮາກຖານ ເຊິ່ງໄດ້ສຶກສາ ແລະ ສິດສອນໃຫ້ເຜົ່າລູກໆຫຼານໆ ຊົນເຜົ່າຕ່າງໆຢູ່ເຂດ ບ້ານ ແລະ ເມືອງທີ່ຕົນ ໄດ້ດຳລົງຊີວິດ.

ບົນພື້ນຖານໄດ້ ມີນັກສະແດງທີ່ມີຄວາມ ຊຳນິຊຳນານແຈກຢາຍ ຢູ່ຮາກຖານ ຄືໄດ້ກ່າວ ມານັ້ນ ຈຶ່ງໄດ້ມີໜ່ວຍ ສິລະປະວັນນະຄະດີ ພື້ນເມືອງຂອງຊົນເຜົ່າ ຕ່າງໆຢູ່ແຂວງ ຜົ້ງສາລີ ໄດ້ເກີດຂຶ້ນຢ່າງຫຼວງຫຼາຍ.



ຂັບໄຕຂາວໂດຍ: ສາວຈ່ອຍໜ່ວຍສິລະປະວັນນະຄະດີພື້ນເມືອງ
ບັນດາເຜົ່າແຂວງຜົ້ງສາລີ

ປະຈຸບັນຕາມຕົວເລກທີ່ຍັງບໍ່ທັນຄົບຖ້ວນໄດ້, ໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນມີຫຼາຍກວ່າ 34 ໜ່ວຍ. ເຊິ່ງໄດ້ແຈກຢາຍຢູ່ກອງທະຫານ, ຕຳຫຼວດ, ບັນດາໂຮງຮຽນຂັ້ນປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ ແລະ ຢູ່ຕາມ ຮາກຖານບ້ານຊົນເຜົ່າຕ່າງໆ. ດ້ວຍເຫດນັ້ນຢູ່ແຂວງຜົ້ງສາລີ, ເຖິງວ່າບໍ່ມີກອງສະແດງອາຊີບກໍ່ຕາມ ແຕ່ໃນເມື່ອມີຄວາມຕ້ອງການໃຫ້ມີການສະແດງຮັບໃຊ້ຂະບວນການຕ່າງໆ, ຮັບໃຊ້ຜູ້ນຳຂັ້ນສູງ ທີ່ໄດ້ມາຢ້ຽມຢາມ, ຮັບໃຊ້ງານບຸນໃຫຍ່ ທີ່ສຳຄັນຂອງຊາດ ແລະ ບຸນປະເພນີອື່ນໆ ກໍ່ເຕົ້າໂຮມນັກສະແດງສະໝັກຫຼິ້ນຢູ່ຮາກຖານມາຝຶກຊ້ອມໄລຍະໃດໜຶ່ງ, ກໍ່ສາມາດສະແດງຮັບໃຊ້ຂະບວນການຕ່າງໆ ຢ່າງທັນການ ໃນວາລະບຸນມະໂຫລານວັດ ທະນະທຳບັນດາຊົນເຜົ່າ ປີ2000 ເຊິ່ງໄດ້ຈັດຂຶ້ນເມື່ອວັນທີ 7-12 ພະຈິກ 2000 ທີ່ນະຄອນຫຼວງວຽງຈັນ ໝາກຫົວໃຈຂອງປວງຊົນລາວທັງຊາດນັ້ນ ທ່ານ ທອງຢັນ ຄຸນສະຫງ່າ ຮອງຫົວໜ້າພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງຜົ້ງສາລີ ໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ເພື່ອເປັນການປະກອບສ່ວນໃຫ້ແກ່ງານບຸນມະໂຫລານວັດທະນະທຳ ບັນດາຊົນເຜົ່າປີ 2000 ມີບັນຍາກາດຟົດຟື້ນ, ມີການສະແດງດ້ວຍຫຼາຍສີສັນຊົນເຜົ່າຕ່າງໆນັ້ນແຂວງຜົ້ງສາລີ ໄດ້ນຳສົ່ງນັກສະແດງ 24 ຄົນ ໃນນັ້ນ ມີ ແມ່ຍິງ 10 ຄົນ ປະກອບມີ5ຊົນເຜົ່າຄື: ແສນສີລີ, ຫໍ້, ກືມມຸ, ໄຕ ( ໄຕຂາວ,ໄຕດຳ ) ແລະ ມີລາຍການສະແດງຄື: ຮ້ອງເພງໝູ່ຍິງ - ຊາຍ ທີ່ເວົ້າເຖິງ ຜົ້ງສາລີວັນນີ້, ບົດຟ້ອນ ທີ່ເວົ້າ ເຖິງສັງຄົມ ບັນດາຊົນເຜົ່າ, ຂັບໄຕຂາວ ແລະ ບົດຟ້ອນ ທີ່ເວົ້າເຖິງຮີດຄອງປະເພນີຂອງ ເຜົ່າກືມມຸ. ບັນດານັກສະແດງ ແລະ ລາຍການສະແດງ ທີ່ໄດ້ມາສະແດງໃນ ຄັ້ງນີ້ ແມ່ນໄດ້ ຄັດເລືອກ ຈາກຮາກຖານຊົນເຜົ່າຕ່າງໆ ໂດຍ ຜ່ານ ຄະນະ ນຳຂັ້ນເມືອງ ແລະ ຂັ້ນແຂວງ ຈຶ່ງຄ່ອຍເດີນ ທາງມາຮ່ວມງານມະໂຫລານຄັ້ງນີ້.

ຄຽງຄູ່ກັບການໄດ້ນຳເອົາໜ່ວຍສິລະປະພື້ນເມືອງບັນດາຊົນເຜົ່າມາສະແດງ ໃນງານມະໂຫລານຄັ້ງນັ້ນແລ້ວແຂວງ ຜົ້ງສາລີ ຍັງໄດ້ນຳເອົາຜະລິດຕະພັນ, ຫັດຖະກຳທາງດ້ານວັດທະນະທຳ ,ທາງວັດຖຸຂອງ ຊົນເຜົ່າຕ່າງໆຢູ່ ແຂວງຜົ້ງສາລີ ສະແດງໃນໂອກາດງານດັ່ງກ່າວ ທີ່ຕະຫຼາດນັດທາດຫຼວງເຊັ່ນ: ເຄື່ອງນຸ່ງຫົ່ມເອ້ຢ້ອງຂອງຊົນເຜົ່າ ແສນສີລີ ລວມມີ: ສິ້ນ, ເສື້ອ, ຖົງພາຍ, ຜ້າປົກຫົວ, ຜ້າພັນຕີນ, ເຄື່ອງນຸ່ງຫົ່ມເອ້ຢ້ອງ ຂອງໄຕດຳມີ: ສິ້ນ, ເສື້ອ, ໂສ້ງ ແລະເສື້ອຂອງສາວຊົນເຜົ່າລື້, ເສື້ອ, ເກີບຂອງຊົນເຜົ່າຫໍ້, ເສື້ອ, ຜ້າປົກຫົວ, ຜ້າປົ້ງ, ຜ້າພັນຕີນ ຂອງແມ່ຍິງ ແລະໂສ້ງ, ເສື້ອຜູ້ ຊາຍຂອງຊົນເຜົ່າອາຄາ - ໂອມາ, ເຄື່ອງນຸ່ງຫົ່ມຂອງ ຜູ້ບ່າວ, ຍິງສາວຂອງຊົນເຜົ່າອາຄາ - ຈີ່ຈໍ່ ແລະເຫຼົ້າຊຽວ ແຂວງ ຜົ້ງສາລີ. ບັນດາຜະລິດຕະພັນ ວັດທະນະທຳ ທາງວັດຖຸ ທີ່ ແຂວງ ຜົ້ງສາລີໄດ້ວາງສະແດງ ແລະ ຂາຍຄັ້ງນີ້ແມ່ນໄດ້ບົ່ງບອກເຖິງ ສີໄມ້ລາຍມືອັນປານີດ ແລະຄວາມດຸໝັ່ນຂະຫຍັນພຽນຂອງແມ່ຍິງຊົນເຜົ່າຕ່າງໆຢູ່ແຂວງຜົ້ງສາລີ ທັງນັ້ນ. ແຕ່ສິ່ງທີ່ຊາວ ນະຄອນຫຼວງວຽງຈັນ ນິຍົມຫຼາຍກວ່າເພິ່ນນັ້ນແມ່ນເຫຼົ້າຊຽວ ຜົ້ງສາລີ ເຊິ່ງໄດ້ຂາຍໝົດແຕ່ຄືນທຳອິດ.

ລວມຄວາມວ່າ: ບັນດາເນື້ອໃນ ແລະ ລີລາການສະແດງແຕ່ລະລາຍການທີ່ໜ່ວຍສິລະປະພື້ນເມືອງບັນດາຊົນເຜົ່າແຂວງຜົ້ງສາລີ ທີ່ໄດ້ນຳມາສະແດງໃນ ບຸນມະໂຫລານ ວັດທະນະທຳ ບັນດາຊົນເຜົ່າ ປີ 2000 ຄັ້ງນີ້ ລ້ວນແຕ່ໄດ້ມີ ຄວາມຈັບອົກ, ຈັບໃຈ ແລະໄດ້ສ້າງຄວາມສະເທືອນໃຈໃຫ້ແກ່ຜູ້ຊົມ. ເຊິ່ງໄດ້ເຮັດໃຫ້ຜູ້ຊົມ ທີ່ບໍ່ທັນໄດ້ໄປເຖິງ ແຂວງຜົ້ງສາລີ ກໍ່ຢາກໄປແຂວງ ດັ່ງກ່າວ. ສຽງຂັບໄຕຂາວ ທີ່ມີເນື້ອໃນ ຖາມຂ່າວສະບາຍ, ຂັບຮ້ອງໂດຍ:ສາວຈອຍ ໄວ ອາຍຸ 16 ປີ ລູກສາວຂອງ ບ້ານຫ້ວຍກົກ, ເມືອງໃໝ່, ສຽງເພງຮ້ອງໂດຍ ໝູ່ຍິງ - ຊາຍ ຜົ້ງສາລີ ວັນນີ້, ວາດຟ້ອນ ສັງຄົມບັນດາຊົນເຜົ່າ ແລະ ວາດຟ້ອນ ຂອງຊົນເຜົ່າກຶມມຸ ປະສານສຽງຂັບເຕີມແມ່ນໄດ້ດັງກ້ອງຢູ່ຫໍວັດທະນະທຳແຫ່ງຊາດ ແລະ ເດີນທາດຫຼວງວຽງຈັນ ເຊິ່ງໄດ້ສ້າງຄວາມສະເທືອນໃຈ ແລະ ສະຖິດໝັ້ນເຂົ້າໃນໝາກ

ຫົວໃຈຂອງຊາວ ນະຄອນຫຼວງວຽງຈັນ ກໍ່ຄືປວງຊົນລາວທັງຊາດ ແລະ ໄດ້ມີພໍ່ເຖົ້າຄົນໜຶ່ງໄວ 60 ປີ ທີ່ພວມຢືນເບິ່ງລາຍການສະແດງຂອງໜ່ວຍສິລະປະວັນນະຄະດີ ພື້ນເມືອງບັນດາຊົນເຜົ່າ ແຂວງຜົ້ງສາລີ ທີ່ສະແດງຢູ່ເດີ່ນຫາດຫຼວງ ກໍ່ໄດ້ພຶມພຳດ້ວຍສຽງຄ່ອຍໆວ່າ: " ອີກບໍ່ພໍເທົ່າໃດວັນຂ້າງໜ້ານີ້ພວກລູກຫຼານກໍ່ຈະໄດ້ກັບຄືນສູ່ດິນແດນຜົ້ງສາລີ ທີ່ສວຍງາມ ແລະ ຮັ່ງມີ ແຕ່ທຸກໆລາຍການສະແດງຂອງພວກຫຼານແມ່ນຍັງຝັງເລິກຢູ່ໃນ ໝາກຫົວໃຈຂອງຊາວນະຄອນຫຼວງວຽງຈັນ ແລະ ຊາວລາວທັງຊາດທີ່ໄດ້ຕິດຕາມການສະແດງຂອງພວກຫຼານ. ອີກເທື່ອໜຶ່ງຂ້າພະເຈົ້າຄິດວ່າກ່ອນໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງຜົ້ງສາລີ ສາມາດເອົາລາຍການສະແດງທີ່ໄດ້ຮັບຄວາມນິຍົມຈາກມ່ວນຊົນ ຢ່າງບໍ່ມີວັນລືມຈືດຈາງ ແມ່ນເນື່ອງມາຈາກພາຍໃຕ້ການນຳຂອງພັກປະຊາຊົນ ປະຕິວັດລາວ ແລະຄະນະພັກ, ອຳນາດ ການປົກຄອງຂັ້ນຕ່າງໆຂອງແຂວງຜົ້ງສາລີ ເປັນຜູ້ຊີ້ນຳ ນຳພາໂດຍກົງ ແລະໃນອະນາຄົດເຊື່ອແນ່ວ່າໜ່ວຍສິລະປະວັນນະຄະດີພື້ນເມືອງຂອງບັນດາຊົນເຜົ່າຢູ່ ແຂວງດັ່ງກ່າວຈະນຳ ເອົາລາຍການສະແດງທີ່ໂດດເດັ່ນກວ່ານີ້ອີກ."



ໜ່ວຍສິລະປະວັນນະຄະດີ ພື້ນເມືອງຂອງບັນດາຊົນເຜົ່າ
ແຂວງ ຜົ້ງສາລີ ຮ້ອງເພງ ໝູ່ ຍິງ - ຊາຍ ທີ່ວ່າ:ຜົ້ງສາລີ ວັນນີ້

# ວຽກງານສິລະປະ ວັນນະຄະດີ ບັນດາຊົນເຜົ່າ ແຂວງ ອຸດົມໄຊ ບົນຕົວກ້າວຂຶ້ນພັດທະນາຕົນເອງ

**********************

"ອຸດົມໄຊ" ເປັນແຂວງຕັ້ງຢູ່ໃຈກາງບັນດາແຂວງພາກເໜືອແຫ່ງ ສ. ປ. ປ. ລາວ ເຊິ່ງມີ ເຂດແດນຕິດກັບ ແຂວງ ຫຼວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ຫຼວງພະບາງ, ຜົ້ງສາລີ ແລະ ສ.ປ ຈີນ. ເປັນແຂວງຕັ້ງໃໝ່ສະໄໝສົງຄາມກູ້ຊາດເຄີຍມີບົດບາດທາງດ້ານເສດຖະກິດຄື: ມີໂຮງງານຕ່ຳແຜນ, ພື້ນທີ່ສ່ວນຫຼາຍເປັນພູຜາ, ພູມອາກາດທົ່ວໄປເຢັນ ແລະ ສົດຊື່ນ, ອຸດົມໄຊ ເປັນແຂວງທີ່ມີຫຼາຍຊົນເຜົ່າ ທີ່ໄດ້ຕັ້ງພູມລຳເນົາ, ດຳລົງຊີວິດ ແລະ ທຳມາຫາກິນບົນດິນດອນຕອນນີ້ ຢ່າງສະຫຼັບສັບຫວ່າງເປັນໄລຍະເວລາເຫິງນານເຊັ່ນ: ຊົນເຜົ່າລາວ, ລື້, ຍວນ, ໄຕ (ໄຕດຳ, ໄຕຂາວ, ໄຕແດງ) , ອີວມຽນ, ອາຄາ ( ກໍ ), ພູຊາງ, ກືມມຸ, ມົ້ງ, ບິດ...ເປັນຕົ້ນ.



ຊຸດອາພອນເພດຊົນເຜົ່າ ກືມມຸຮອກ ນາງສາວ ໂພໄລ

ບັນດາຊົນເຜົ່າຢູ່ແຂວງ ອຸດົມໄຊ ໄດ້ມີມູນເຊື້ອແຫ່ງຄວາມສາມັກຄີໃນການຕໍ່ສູ້ກູ້ຊາດ ຕ້ານຈັກກະພັດ , ສັກດີນາຕ່າງດ້າວ ແລະ ສັກດີນາທ້ອງຖິ່ນຈີນເຖິງໄຊຊະນະສົມບູນ,ມີມູນເຊື້ອໃນການເພີ່ມພູນຜະລິດຜົນຊອກຫາຊ່ອງທາງຫັນປ່ຽນແບບແຜນການດຳລົງຊີວິດ ຂອງຕົນໃຫ້ທວງທັນກັບບາດກ້າວການຂະຫຍາຍຕົວຂອງປະເທດຊາດ ແລະ ຍຸກສະໄໝ.ຊົນເຜົ່າຕ່າງໆ ຢູ່ ແຂວງ ອຸດົມໄຊ ເປັນຊົນເຜົ່າດັ້ງເດີມເກົ່າແກ່ທີ່ໄດ້ຕັ້ງ ຫຼັກປັກຖານ

ບົນປີຕິພູມທີ່ແສນຮັກ ແລະ ຫວງແຫນແຫ່ງນີ້ຕັ້ງຫຼາຍສະຕະວັດ, ມີບາງຊົນເຜົ່າເຖິງວ່າບໍ່ມີຕົວໜັງສື (ພາສາຂຽນ) ແຕ່ກໍ່ມີພາສາປາກເວົ້າ ເປັນອັນສະເພາະຂອງຊົນເຜົ່າຕົນເອງ, ພວກເຂົາເຈົ້າໄດ້ນຳໃຊ້ພາສາປາກເວົ້າຂອງຊົນເຜົ່າຕົນເອງເປັນການສື່ສານຕິດຕໍ່ພົວພັນແລກປ່ຽນຊື້ຂາຍ ພາຍໃນຊົນເຜົ່າຕົນເອງ ແລະ ລະຫວ່າງບັນດາຊົນເຜົ່າຢູ່ໃກ້ຄຽງ ແຕ່ໃນນັ້ນກໍ່ໄດ້ໃຊ້ ພາສາລາວ ແລະ ຕົວໜັງສືລາວ ເປັນພາສາທາງລັດຖະການ, ເປັນໜັງສືປະຈຳຊາດຂອງທຸກຊົນເຜົ່າບໍ່ສະເພາະແຕ່ເທົ່ານັ້ນ ບັນດາຊົນເຜົ່າຢູ່ແຂວງດັ່ງກ່າວຍັງມີປະຫວັດສາດຄວາມເປັນມາກົກເຄົ້າ, ຕົ້ນກຳເນີດ ແລະ ມີຊື່ເອີ້ນເດີມທີ່ເປັນເອກະລັກສະເພາະຂອງແຕ່ ລະຊົນເຜົ່າ ບໍ່ພຽງແຕ່ເທົ່ານັ້ນ ບັນດາຊົນເຜົ່າຢູ່ແຂວງດັ່ງກ່າວ ຍັງມີເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດ,ຈິດຕະສາດທີ່ສະແດງອອກໃນ ວົງຄະນາຍາດວັດທະນະທຳຄື: ວັດທະນະທຳດ້ານວັດຖຸ,ຈິດໃຈ ແລະ ສັງຄົມບັນດາຊົນເຜົ່າຢູ່



ຊຸດອາພອນເພດຍິງຊົນເຜົ່າໄຕຂາວ:
ນາງ ສາວ ມິດສະຫວັນ ອາຍຸ16 ປີ

ແຂວງ ອຸດົມໄຊ ລ້ວນແຕ່ໄດ້ມີຮີດຄອງໃນການຊອກຫາທີ່ດິນຕັ້ງບ້ານ, ຕັ້ງເຮືອນ, ທຳການຜະລິດ, ມີຄຸນລັກສະນະສະເພາະໃນການຕັ້ງບ້ານ ແລະ ເຮືອນ, ການຄະລຳ ໃນຫ້ອງເຮືອນ, ການຈັດວາງໃນຫ້ອງເຮືອນ, ມີຄຸນລັກສະນະທາງດ້ານອາຫານ, ການດື່ມ, ມີເຄື່ອງມືການຜະລິດ, ວິທີການຂົນສົ່ງວັດຖຸສິ່ງຂອງ, ມີເຄື່ອງໃຊ້ໃນຄອບຄົວທີ່ໄດ້ຜະລິດຕາມຄຸນລັກສະນະຂອງຊົນເຜົ່າຕົນເອງ ,ມີເຄື່ອງນຸ່ງຫົ່ມເອ້ຍ້ອງ ເປັນອັນ ສະເພາະຂອງຕົນເອງ. ມີຫຼາຍຊົນເຜົ່າໄດ້ມີມູນເຊື້ອໃນການຕໍ່າຫູກທໍ່ໄໝຜະລິດເຄື່ອງນຸ່ງຫົ່ມ, ເອ້ຍ້ອງເປັນ ຂອງຊົນເຜົ່າຕົນເອງເປັນຕົ້ນ: ຊົນເຜົ່າມົ້ງໄດ້ມີມູນເຊື້ອໃນການຕໍ່າຫູກດ້ວຍປ່ານເປັນເວລາ 100 ກວ່າປີມາແລ້ວ. ນອກຈາກ ນັ້ນຍັງມີເຜົ່າອາຄາ ( ກໍ ), ລື້, ໄຕ, ຍວນ, ກໍ່ມີມູນເຊື້ອໃນການຕໍ່າຫູກທໍ່ໄໝຜະລິດເຄື່ອງນຸ່ງຫົ່ມ, ເອ້ຍ້ອງເພື່ອໄວ້ໃຊ້ແກ່ຕົນເອງ ແລະຂາຍເປັນສິນຄ້າ ແລະບາງແຂວງຂອງຊົນເຜົ່າກືມມຸໃນເມື່ອກ່ອນມີແຕ່ຊື້ເຄື່ອງນຸ່ງຫົ່ມເອ້ຍ້ອງຈາກຊົນເຜົ່າອື່ນ ທີ່ແທດເໝາະກັບຄຸນລັກສະນະຊົນເຜົ່າຕົນເອງ. ແຕ່ປະຈຸບັນມີຫຼາຍໝູ່ບ້ານຂອງຊົນເຜົ່າດັ່ງກ່າວກໍ່ຮູ້ຕໍ່າຫູກທໍ່ໄໝຄືກັນກັບຊົນເຜົ່າອື່ນໆຢູ່ໃກ້ຄຽງເໝືອນກັນ.

ຄຽງຄູ່ກັບບັນດາບັນຫາທີ່ກ່າວມານັ້ນ ບັນດາຊົນເຜົ່າຢູ່ ແຂວງ ອຸດົມໄຊ ຍັງມີເອກະລັກສະເພາະໃນການພົວພັນສັງຄົມພາຍໃນເຜົ່າ ແລະ ລະຫວ່າງຊົນເຜົ່າຕ່າງໆ, ມີໂຄງປະກອບທາງສັງຄົມ, ມີເອກະລັກໃນການລົມລິດ, ການສົ່ງສະການ ແລະການເກີດລູກເປັນອັນສະເພາະຂອງຊົນເຜົ່າຕົນເອງ, ຍິ່ງໄປກວ່ານັ້ນ, ບັນດາຊົນເຜົ່າຢູ່ ແຂວງ ອຸດົມໄຊ ລ້ວນແຕ່ມີການເຊື່ອຖື, ມີຮີດຄອງປະເພນີ ອັນດີງາມ, ມີສິລະປະ ວັດທະນະທຳ ແລະ ສິລະປະວັນນະຄະດີ ຫຼາກຫຼາຍເປັນຕົ້ນ: ແມ່ນມີນິທານພື້ນເມືອງ,ມີກອນຂັບ, ກອນລຳ, ມີຄຳຜັງເຜີຍ 12 ເດືອນ, ມີດົນຕີພື້ນເມືອງ ແລະອື່ນໆ ເປັນຂອງ ຊົນເຜົ່າຕົນເອງ. ຊົນເຜົ່າທີ່ມີວາດຂັບລຳ ຫຼາຍກວ່າເພິ່ນນັ້ນແມ່ນຊົນເຜົ່າກືມມຸ ມີເຖິງ 30 ຊະນິດ ແລະມີປະເພດດົນຕີ 20 ກວ່າ ຊະນິດ. ບັນດາວາດຂັບລຳ ທີ່ບັນດາຊົນເຜົ່າ ແຂວງ ອຸດົມໄຊນິຍົມຫຼາຍກວ່າໝູ່ມີ: ຂັບກະເລິງ ( ຂັບພວນ ), ຂັບເຕີນ, ຂັບມົ້ງ, ຂັບອາຄາ ( ກໍ ), ຂັບໄຕດຳ, ຂັບໄຕຂາວ, ຂັບອິວມຽນ ແລະ ສໍດ່ຽວຍິງ, ສໍດ່ຽວຊາຍຂອງຊົນເຜົ່າຍວນ. ບັນດາຊົນເຜົ່າຢູ່ແຂວງດັ່ງກ່າວມີຄວາມມັກສະຫງວນຄວາມງາມທາງດ້ານສິລະປະວັນນະຄະດີ ມີວາດຟ້ອນອັນເຄັ່ງຂຶມ ແລະອອນຊອນຂອງຊົນເຜົ່າຕ່າງໆ.

---
ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ບົນຈິດໃຈບັນດາຊົນເຜົ່າຢູ່ແຂວງດັ່ງກ່າວ ມີມູນເຊື້ອທາງດ້ານສິລະປະວັນນະຄະດີທີ່ລືຊື່ມາແຕ່ບູຮານນະການນັ້ນ , ສົມທົບກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ ແລະ ຄວາມຄອງຄອຍຂອງປະຊາຊົນເຜົ່າຕ່າງໆສະໄໝນັ້ນ. ຄະນະພັກ ແລະ ອຳນາດການປົກຄອງ ແຂວງອຸດົມໄຊຈຶ່ງໄດ້ຕົກລົງສ້າງຕັ້ງກອງສິລະປະກອນ ແຂວງຂຶ້ນໃນປີ 1966 ພ້ອມກັບການສ້າງຕັ້ງ ແຂວງອຸດົມໄຊ ແລະໃນເມື່ອໄດ້ຕົກລົງສ້າງຕັ້ງແລ້ວ, ອຳນາດການປົກຄອງແຂວງ ດັ່ງກ່າວໄດ້ຄັດເລືອກ ແລະ ເລືອກເຟັ້ນລູກຣັກຫຼານແພງຂອງປະຊາຊົນເຜົ່າຕ່າງໆ ທີ່ມີພອນສະຫວັນທາງດ້ານສິລະປະວັນນະຄະດີ ບັນຈຸສັບຊ້ອນເຂົ້າກອງສິລະປະກອນແຂວງ ແລ້ວໄດ້ຈັດສົ່ງໄປຍົກລະດັບທາງດ້ານວິຊາການຢູ່ໂຮງຮຽນສິລະປະດົນຕີຂອງສູນກາງ ທີ່ເມືອງວຽງໄຊ ຊົ່ວໄລຍະໜຶ່ງກໍ່ກັບຄືນມາເຄື່ອນໄຫວສະແດງຮັບໃຊ້ບັນດາກອງທະຫານທີ່ປະຈຳຢູ່ແນວໜ້າ.ສະແດງຮັບໃຊ້ພື້ນຖານການຜະລິດຢູ່ຕາມເຂດໝູ່ບ້ານຊົນເຜົ່າຕ່າງໆ ໃນເຂດທີ່ໝັ້ນ ຂອງການປະຕິວັດ ແລະເຂດຍາດແຍ່ງລະຫວ່າງຝ່າຍແນວລາວຮັກຊາດ



ຊຸດອາພອນເພດຊິງເຜົ່າລື້:ນາງສາວ ລຳໄພ ອາຍຸ 18 ປີ ອຸດົມໄຊ

ແລະ ຝ່າຍວຽງຈັນ. ສຽງເພງ ນັກຮົບນ້ຳບາກທີ່ມີໄຊ , ແດນແຫ່ງອິດສະຫຼະ, ຊາວປີແຫ່ງການປະຕິວັດ , ຊົມເຊີຍກອງປ້ອງກັນອາກາດ ແລະ ບົດເພງອື່ນໆທີ່ຜູ້ຂຽນບໍ່ສາມາດນຳມານັບໃນທີ່ນີ້ໄດ້, ທີ່ກອງສິລະປະກອນ ແຂວງ ອຸດົມໄຊ ນຳໄປສະແດງຂັບຮ້ອງຢູ່ແຕ່ລະແຫ່ງໃນຊຸມປີ 60 - 70 ແມ່ນໄດ້ປຸກລະດົມນ້ຳໃຈ ແລະສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນເຜົ່າຕ່າງໆໃນເຂດທີ່ໝັ້ນຂອງ ການປະຕິວັດ ແລະ ດຶງດູດຈິດໃຈ ຂອງປະຊາຊົນບັນດາຊົນເຜົ່າຢູ່ເຂດຍາດແຍ່ງ ແລະ ເຂດຄວບຄຸມຊົ່ວຄາວຕະຫຼອດເຖິງໄດ້ດູດດຶງຈິດໃຈຂອງນາຍ ແລະ ພົນທະຫານຂອງສັດຕູວ່າຍໜ້າກັບຄືນຫາບ້ານເກີດເມືອງນອນ ແລະເຂົ້າຮ່ວມເຮັດການປະຕິວັດ ຈົນກວ່າ ແຂວງອຸດົມໄຊ ແລະປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນເມື່ອປີ 1975.

1976 - 1989 ກອງສິລະປະກອນ ແຂວງອຸດົມໄຊ ບໍ່ພຽງແຕ່ໄດ້ບູລະນະໂຄງປະກອບການຈັດຕັ້ງຂອງຕົນໃຫ້ກະທັດຮັດເບົາບາງເທົ່ານັ້ນ, ຄະນະພັກ , ອຳນາດການປົກຄອງແຂວງອຸດົມໄຊ ຍັງໄດ້ເອົາໃຈໃສ່ກໍ່ສ້າງນັກສະແດງ, ປະດິດຄິດແຕ່ງລາຍການສະແດງໃຫ້ເພີ່ມຂຶ້ນທັງປະລິມານ ແລະຍົກສູງຄຸນນະພາບໃຫ້ດີຂຶ້ນກວ່າເກົ່າດ້ວຍຫຼາຍຮູບຫຼາຍສີແຕກຕ່າງກັນຄື: ກໍ່ສ້າງໂດຍຜ່ານຂະບວນການຕົວຈິງຢູ່ກັບແຂວງນັ້ນໆ ສົ່ງໄປຮຽນຢູ່ໂຮງຮຽນ ສິລະປະດົນຕີ ຢູ່ນະຄອນຫຼວງວຽງຈັນ ແລະຢູ່ ສ ສ ຫວຽດນາມ ເປັນຈຳນວນບໍ່ໜ້ອຍ.

ເຊິ່ງເລີ່ມແຕ່ມື້ສ້າງຕັ້ງເຖິງປີ 1989 ນັກສະແດງໄດ້ເພີ່ມຂຶ້ນຈາກ 20 ຄົນ ເຖິງ 40 ຄົນ, ໄດ້ເຄື່ອນໄຫວສະແດງຮັບໃຊ້ໜ້າທີ່ການເມືອງ, ຂະບວນການຕ່າງໆ, ສະແດງຮັບໃຊ້ກອງປະຊຸມໃຫ່ຍຂອງອົງຄະນະພັກແຂວງ, ເມືອງ, ກອງທະຫານຢູ່ ແນວໜ້າພາຍໃນແຂວງ ຂອງຕົນຫຼາຍກວ່າ 1.000 ຄັ້ງ, ສະແດງ ຮັບໃຊ້ບັນດາແຂວງ ພາກເໜືອປະມານ 20 ຄັ້ງ ແລະເຄື່ອນໄຫວສະແດງຢູ່ບັນດາແຂວງ ແຮກສ່ຽວຫຼາຍກ່ວາ 25 ຄັ້ງ . ກ້າວມາເຖິງຊຸມປີ 1990 ນັກສະແດງສ່ວນຫຼວງຫຼາຍແມ່ນ ເຖົ້າແກ່ ແລະສັບຊ້ອນໄປເຮັດວຽກງານໃໝ່ຢູ່ບັນດາຂະແໜງການຂອງແຂວງ , ເມືອງ ແລະ ລົງສູ່ຮາກຖານບ້ານຊົນເຜົ່າຕ່າງໆ ນັບແຕ່ນັ້ນມາຮອດມື້ນີ້, ນັກສະແດງຢູ່ກອງ ດັ່ງກ່າວຈິ່ງຍັງເຫຼືອພຽງ 10 ຄົນ ແລະ ກໍ່ຮັກສາໃນລະດັບ 10 ຄົນ ຕະຫຼອດມາ. ຈຳນວນ ທີ່ລົງສູ່ຮາກຖານບ້ານຊົນເຜົ່າ

ຕ່າງໆນັ້ນ ບໍ່ພຽງແຕ່ໄດ້ຊອກຢູ່ຫາກິນເພື່ອລ້ຽງຊີວິດ ຂອງຕົນເອງເທົ່ານັ້ນ ແຕ່ກໍ່ຍັງຫາໂອກາດຍາດເວລາທີ່ເໝາະສົມເຝິກແອບສິດສອນລູກໆຫຼານໆ ເພື່ອແນໃສ່ເຮັດໃຫ້ຄົນຮຸນສືບທອດຮູ້ຂັບລໍາ, ຮູ້ໃຊ້ເຄື່ອງດົນຕີພື້ນເມືອງ ຂອງຊົນເຜົ່າຕົນເອງ, ຮູ້ຮ້ອງເພງ, ຮູ້ຟ້ອນຕາມລາຍການສະແດງສະໄໝໃໝ່ ແລະເນື່ອງຈາກໄດ້ມີນັກສະແດງທີ່ມີຄວາມຊໍານານງານແຈກຢາຍຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆນັ້ນ ຈຶ່ງໄດ້ເຮັດໃຫ້ໜ່ວຍສິລະປະວັນນະຄະດີ ສະໝັກຫຼິ້ນຢູ່ແຂວງດັ່ງ ກ່າວມີຫຼາຍກວ່າ 50 ໜ່ວຍ ເຊິ່ງໄດ້ແຈກຢາຍຢູ່ຕາມບ້ານຊົນເຜົ່າຕ່າງໆ, ໂຮງຮຽນຊັ້ນຕ່າງໆ, ກອງກໍາລັງປ້ອງກັນຊາດ, ກອງກໍາລັງປ້ອງກັນຄວາມສະຫງົບ. ເຖິງວ່ານັກສະແດງຢູ່ກອງສິລະປະກອນ ແຂວງບໍ່ຫຼວງຫຼາຍກໍ່ຕາມແຕ່ ໃນເມື່ອຂະບວນການຕ່າງໆ ທີ່ສໍາຄັນ ຫາກຕ້ອງການເບິ່ງ ສິລະປະວັນນະຄະດີສະແດງຮັບໃຊ້ກໍ່ໄດ້ ເຕົ້າໂຮມເອົານັກສະແດງ ຢູ່ໜ່ວຍວັນນະຄະດີ ສະໝັກຫຼິ້ນນັ້ນມາເຝິກຊ້ອມຊົ່ວໄລຍະໜຶ່ງກໍ່ສາມາດສະແດງຮັບໃຊ້ໜ້າທີ່ການເມືອງ ແລະ ຄວາມຮຽກຮ້ອງຕ້ອງການຢ່າງທັນການເໝືອນກັນ.

ກອງສິລະປະກອນແຂວງ ກໍ່ຄືໜ່ວຍສິລະປະກອນພື້ນເມືອງບັນດາຊົນເຜົ່າແຂວງອຸດົມໄຊ ບໍ່ພຽງແຕ່ໄດ້ເຄື່ອນໄຫວສະແດງຮັບໃຊ້ໜ້າທີ່ການເມືອງ ແລະຂະບວນການຕ່າງໆພາຍໃນແຂວງເທົ່ານັ້ນ ແຕ່ຍັງໄດ້ສະແດງຮັບໃຊ້ ແລະສະແດງປະກວດໃນງານ ບຸນມະໂຫລານ ວັດທະນະທໍາບັນດາຊົນເຜົ່າ ໃນລະດັບແຂວງ ແລະ ລະດັບຊາດ, ໄດ້ເອົາເນື້ອຮ້ອງທໍານອງເສບ ມາສະແດງໃນງານ ປະກວດສິລະປະວັນນະຄະດີ ໃນຫຼາຍຄັ້ງ ພ້ອມທັງໄດ້ຮັບລາງວັນປະເພດຕ່າງໆ ແຕ່ວ່າເດັ່ນທີ່ສຸດນັ້ນແມ່ນເລີ່ມແຕ່ສະແດງປະກວດໃນໂອກາດງານ ບຸນມະໂຫລານວັດທະນະທໍາ ບັນດາຊົນເຜົ່າ ທົ່ວປະເທດຄັ້ງ ທີ I ແມ່ນໄດ້ຮັບລາງວັນປະເພດ II ແລະລາງວັນຊົມເຊີຍໃນດ້ານເພງ ແລະຂັບລໍາ, ບັ້ນປະກວດ ສິລະປະວັນນະຄະດີ ພື້ນເມືອງ ເຍົາວະຊົນ ບັນດາຊົນເຜົ່າ ປີ 1993 ແມ່ນໄດ້ຮັບລາງວັນປະເພດ II ແລະ ປະເພດ III . ຈາກນັ້ນຈຶ່ງຄ່ອຍມີນັກຮ້ອງດີເດັ່ນທີ່ໄດ້ຮັບຄວາມນິຍົມຈາກມວນຊົນຢ່າງກວ້າງຂວາງນັ້ນຄື: ສາວນ້ອຍ ສຸທິດາທໍ ແລະ ນາງ ແດງດວງເດືອນ , ບັ້ນຮັບໃຊ້ວຽກງານສຶກສາໄດ້ຮັບລາງວັນປະເພດ II ດ້ານ ການຟ້ອນ ແລະຮ້ອງເພງ ແມ່ນປະເພດ III , ສະແດງໃນບັ້ນປະກວດສິລະປະວັນນະຄະດີ ກອງທັບທົ່ວ

ປະເທດເມື່ອປີ 1994 , ຢູ່ໂຮງກາຍຍະສິນແຫ່ງຊາດ ທີ່ນະຄອນຫຼວງວຽງຈັນ ແມ່ນໄດ້ຮັບລາງວັນທີ I ສຽງເພງຂອງສາວນ້ອຍ ສຸທິດາທໍ ໄດ້ດັງກ້ອງຢູ່ໂຮງກາຍຍະສິນແຫ່ງຊາດ ອັນໄດ້ເຮັດໃຫ້ ກະຊວງ ຖະແຫຼງຂ່າວ - ວັດທະນະທຳ ເອົາສາວນ້ອຍ ດັ່ງກ່າວເຂົ້າຮຽນຢູ່ໂຮງຮຽນ ສິລະປະດົນຕີ ແຫ່ງຊາດ ແລະ ໃນທີ່ສຸດ ກໍ່ກາຍເປັນນັກສະແດງ ( ນັກຮ້ອງ ) ຊື່ດັງໃນໂຮງຮຽນແຫ່ງນັ້ນ, ສະແດງໃນບັ້ນປະກວດສິລະປະວັນນະຄະດີສາຍການເງິນ ຢູ່ແຂວງ ສະຫວັນນະເຂດ ແມ່ນໄດ້ ຮັບລາງວັນປະເພດ I ດ້ານບົດຟ້ອນຂອງຊົນເຜົ່າລື້ ແລະ ບັ້ນປະກວດສິລະປະວັນນະຄະດີໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງກອງ ທັບຄົບຮອບ 50 ປີໄດ້ຮັບ ລາງວັນ ປະເພດ II ດ້ານເພງ ຮ້ອງ ແລະ ລາງວັນທີ III ດ້ານ ບົດຟ້ອນ.

ໝາຍຄວາມວ່າ: ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍ ຢ່າງສົມບູນ ຈົນເຖິງ ປະຈຸບັນ, ຄະນະພັກ ແລະອຳນາດການປົກຄອງ ແຂວງອຸດົມໄຊ ກໍ່ໄດ້ເອົາໃຈໃສ່ອະນຸລັກຮັກສາ ແລະ ສົ່ງເສີມຂະຫຍາຍວຽກງານສິລະປະວັນນະຄະດີ ທີ່ເປັນມູນເຊື້ອຂອງບັນດາຊົນເຜົ່າ ພ້ອມທັງໄດ້ຕອບສະໜອງດ້ານງົບປະມານປີລະ 10.000.0000 ກີບ ໃຫ້ແກ່ຂົງເຂດວຽກງານດັ່ງກ່າວ ແລະບັນຫາທີ່ສຳຄັນຍິ່ງ ແມ່ນໄດ້ມີການສະແດງປະກວດ ສິລະປະວັນນະຄະດີ ຕາມແບບພື້ນເມືອງຂອງຊົນເຜົ່າຕ່າງໆ. ເພື່ອແນໃສ່ຂຸດຄົ້ນຄວາມສາມາດບົ່ມຊ້ອນຂອງບັນດາບຸກຄົນ ທີ່ມີພອນສະຫວັນດີເດັ່ນ, ຂຸດຄົ້ນຄວາມອຸດົມສົມບູນຫຼາກຫຼາຍຂອງສີສັນ ສິລະປະວັນນະຄະດີຂອງຊົນເຜົ່າຕ່າງໆຢ່າງບໍ່ໄດ້ລົດລະ ແລະ ບັນຫາທີ່ພົ້ນເດັ່ນກວ່າເພິ່ນແມ່ນໃນສອງ - ສາມປີຫຼັງນີ້ ແມ່ນໄດ້ຈັດງານປະກວດ ສິລະປະວັນນະຄະດີ ຂອງຊົນເຜົ່າມົ້ງ, ກຶມມຸ, ລື້ ແລະ...ຈາກນັ້ນ, ຈຶ່ງເຫັນໄດ້ວ່າ: ຊົນເຜົ່າ ກຶມມຸໄດ້ມີປະເພດຂັບລຳ 30 ກວ່າທຳນອງ ມີດົນຕີຫຼາຍກວ່າ 20 ຊະນິດ ແລະ ນັບແຕ່ນັ້ນມາກໍ່ໄດ້ເຮັດໃຫ້ເຜົ່າຕ່າງໆກັບຄືນໃຊ້ເຄື່ອງນຸ່ງຫົ່ມ, ເອ້ຍ້ອງທີ່ໄດ້ຜະລິດດ້ວຍສີ ໄມ້ລາຍມືຂອງຊົນເຜົ່າຕົນເອງຢ່າງກວ້າງຂວາງ.

ໃນໂອກາດບຸນມະໂຫລານວັດທະນະທຳບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ II ປີ 2000 ເຊິ່ງຈັດຂຶ້ນເມື່ອ ວັນທີ 7 - 12 ພະຈິກ 2000 ທີ່ນະຄອນຫຼວງວຽງຈັນ ໝາກຫົວໃຈຂອງປວງຊົນລາວທັງຊາດນັ້ນ , ທ່ານ ພອນສະຫວັນ ພັນທະວິຈິດ ຮອງຫົວໜ້າພະແນກຖະແຫຼງຂ່າວ - ວັດທະນະທຳປະຈຳແຂວງອຸດົມໄຊ ທີ່ໄດ້ເຂົ້າຮ່ວມງານ ບຸນມະໂຫລານ...ໄດ້ໃຫ້ຄວາມເຫັນກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ເພື່ອແນໃສ່ເຮັດໃຫ້ບຸນມະໂຫ

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ລານຄັ້ງນີ້ ມີບັນຍາກາດຟົດຟື້ນປະຕິວັດມີເນື້ອໃນສ່ອງແສງໃຫ້ເຫັນໄດ້ເຖິງລັກສະນະຊາດ, ວິທະຍາສາດ ແລະ ລັກສະນະມະຫາຊົນ, ມີການສະແດງຫຼາຍດ້ວຍ ສີສັນຂອງຊົນເຜົ່າຕ່າງໆນັ້ນ, ແຂວງອຸດົມໄຊ ພວກເຮົາໄດ້ນຳເອົານັກສະແດງ 23 ຄົນ , ໃນນັ້ນມີຍິງ 12 ຄົນ, ເຊິ່ງປະກອບມີຊົນເຜົ່າ ມົ້ງ, ກຶມມຸ, ລາວ, ລື້ , ໄຕດຳ, ໄຕ ຂາວ... ແລະ ມີລາຍ ການສະແດງ 5 ລາຍການ ເຊິ່ງໄດ້ມີການເລືອກເຟັ້ນ ແລະຄັດຈ້ອນມາຈາກບັນດາໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຕາມບັນດາໂຮງຮຽນ ແລະໝູ່ບ້ານຊົນເຜົ່າຕ່າງໆ ສົມທົບກັບນັກສະແດງຂອງກອງສິລະປະກອນແຂວງທີ່ໄດ້ຮັບຄວາມນິຍົມຈາກມວນຊົນຫຼາຍກວ່າໝູ່ຄືບົດຟ້ອນທຸງແຫ່ດອກໄມ້ໃນບຸນປີໃໝ່ຂອງຊົນເຜົ່າລື້, ຂັບກະເລິງ(ຊົນເຜົ່າພວນເມືອງຮຸ່ນ )ເປົ່າແຄນໄກ່ຜູ້, ໄກ່ແມ່ຕໍ່ແຍ່ກັນຂອງຊົນເຜົ່າມົ້ງ, ບົດເພງສຽງແຄນແດນລາວບົດເພງເຮັດນາ ແຊງແຂ່ງຂັນທີ່ຮ້ອງເປັນພາສາລາວ, ມົ້ງ , ກຶມມຸ ແລະບົດຟ້ອນການດື່ມເຫຼົ້າໄຫ ມ່ວນຊື່ນຂອງຊົນເຜົ່າກຶມມຸ.



ຊຸດອາພອນເພດ ຂອງຊົນເຜົ່າອາຄາ(ພູຊາງ ) ນາງ ແສງຄຳ

ລວມຄວາມວ່າ:ເກືອບທຸກລາຍການ ແລະ ລີລາ ການສະແດງຂອງ ໜ່ວຍ ສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງ ອຸດົມໄຊ ທີ່ນຳມາສະແດງຢູ່ນະຄອນຫຼວງວຽງຈັນ ໃນໄລຍະທີ່ຜ່ານມາກໍ່ຄື ໃນໂອ ກາດ ບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າທົ່ວປະເທດຄັ້ງທີ່ II ປີ 2000 ລ້ວນແຕ່ໄດ້ສ້າງຄວາມສະເທືອນໃຈ ແລະ ສະຖິດໝັ້ນຢູ່ທີ່ໃຈຂອງຊາວ ນະຄອນຫຼວງວຽງຈັນ ແລະ ຊາວລາວທົ່ວປະເທດ. ສຽງເພງຮ້ອງໂດຍສາວນ້ອຍ ສຸທິດາທໍ ໃນໂອກາດປັ້ນປະກວດ ສິລະປະວັນ ນະຄະດີພື້ນເມືອງ ເຍົາວະຊົນບັນດາຊົນເຜົ່າ ເມື່ອປີ1993 ແລະ ໃນປັ້ນປະກວດສິລະປະວັນນະຄະດີທົ່ວກອງທັບ ເມື່ອປີ 1994 ໄດ້ດັງກ້ອງຢູ່ໂຮງມະໂຫລະສົບແຫ່ງຊາດ ແລະ ໂຮງກາຍະສິນແຫ່ງຊາດ. ແມ່ນໄດ້ປຸກລະດົມ ແລະ ກະຕຸກຊຸກຍູ້ ໃຫ້ແກ່ເຍົາວະຊົນ ບັນດາຊົນເຜົ່າໃນທົ່ວປະເທດມີຄວາມຮັກສິລະປະວັນນະຄະດີ, ສິລະປະວັດທະນະທຳຂອງຊົນເຜົ່າຕົນເອງ ແລະ ຂອງຊາດ ນັບມື້ນັບສູງຂຶ້ນຢ່າງບໍ່ຢຸດຢັ້ງ. ສຽງເພງເຮັດນາແຊງແຂ່ງຂັນທີ່ໄດ້ສ່ອງແສງເຖິງປະຊາຊົນລາວບັນດາຊົນເຜົ່າ ພູດອຍຢູ່ ແຂວງອຸດົມໄຊ ປະຕິບັດ ແນວທາງນະໂຍບາຍຂອງພັກ - ລັດ ລົງມາດຳເນີນຊີວິດການຜະລິດຄົງທີ່ ແລະ ເຮັດນາທັງສອງລະດູຄື : ຈາກການຜະລິດ ເພື່ອໄວ້ກິນພາຍໃນຄອບຄົວແລ້ວກໍ່ດຳເນີນການຜະລິດເປັນສິນຄ້າຂາຍອອກສູ່ຕະຫຼາດ ພາຍໃນແຂວງຢ່າງ ຫຼວງຫຼາຍ, ເຊິ່ງໄດ້ໃຊ້ເປັນສາມພາສາ ຄື:



ວາດຟ້ອນທຽນແຮດອກໄມ້ຂອງຊົນເຜົ່າລື້

ພາສາລາວ ພາສາມົ້ງ ແລະ ພາສາກຶມມຸ ຂັບຮ້ອງໂດຍ ໝູ່ຍິງ ຄື: ສາວຄຳພູ ລູກສາວ ຊົນເຜົ່າລາວ ຢູ່ບ້ານ ໜອງແປນ ສາວທອມ ລູກສາວຜູ້ງາມຍິ່ງ ຂອງຊົນເຜົ່າມົ້ງ ແລະ ນາງສອນ ລູກສາວ ຊົນເຜົ່າກຶມມຸ ຢູ່ບ້ານທົ່ງປ່າສັກໃຕ້; ສຽງເພງ, ສຽງແຄນ ແດນລາວທີ່ໄດ້ສ່ອງແສງເຖິງ ຄວາມເປັນເອກະລັກຂອງຊາດລາວ, ທັງມີເນື້ອຮ້ອງ ທຳນອງ ແລະ ລີລາການຟ້ອນ ປະກອບສະແດງໂດຍນັກສະແດງໝູ່ຍິງຊາຍ;. ສຽງແຄນໄກ່ຜູ້ ແລະ ໄກ່ແມ່ຕໍ່ແຍ່ກັນ ເຊິ່ງມີຄວາມໝາຍເຖິງຄູ່ ບ່າວ - ສາວ ຂອງຊົນເຜົ່າມົ້ງຂັບ ຕໍ່ແຍ່ກັນໃນງານບຸນຕ່າງໆ ໂດຍສະເພາະແມ່ນໃນມື້ບຸນປີໃໝ່ຂອງ ຊົນເຜົ່າມົ້ງ ບ້ານ ຜາແກ້ວ ເມືອງແປ່ງ ສະແດງໂດຍ ສະຫາຍ ຈົວປໍ ແລະ ເລົາຈືວາ, ວາດ ຟ້ອນມ່ວນຊື່ນໃນບຸນເກັບກູ້ເຜືອກ, ມັນ, ທີ່ສ່ອງແສງເຖິງຮີດຄອງປະເພນີອັນ ດີງາມປະກອບມີການສະແດງເຖິງຄວາມເກັ່ງກ້າສາມາດຂອງຜູ້ຄົນ ເພື່ອເຮັດໃຫ້ຜູ້ເຂົ້າ ຮ່ວມໄດ້ເບິ່ງໄດ້ຊົມ ແລະ ວາດຟ້ອນທຽນແຫ່ດອກໄມ້ໃນບຸນປີໃໝ່ທີ່ສ່ອງແສງ ເຖິງຮີດຄອງ ປະເພນີ ຂອງຊົນເຜົ່າລື້ ໃນຍາມເດືອນ 6 ທີ່ໄດ້ດັງກ້ອງ ແລະ ປະທັບໃຈຂອງ ບັນດາທ່ານ ຜູ້ແທນ ຢູ່ຫໍວັດທະນະທຳແຫ່ງຊາດ ທີ່ນະຄອນຫຼວງວຽງຈັນ ໃນໂອກາດ ບຸນມະໂຫລານວັດທະນະທຳບັນດາຊົນເຜົ່າທົ່ວປະເທດ ປີ 2000 ແລະ ບຸນນະມັດ ສະການພະທາດຫຼວງ ປີ 2000 ຍັງຝັງເລິກ ຢູ່ໃນຫົວໃຈ ແລະ ປະກົດອອກຢູ່ໃນສາຍຕາ ຂອງຊາວ ນະຄອນຫຼວງວຽງຈັນ ຢ່າງບໍ່ມີວັນຈືດຈາງ ແລະ ມັນສ້າງຄວາມສຳນຶກໃຫ້ແກ່ ຊົນເຜົ່າຕ່າງໆ ໃນທົ່ວປະເທດຈະມີຄວາມສຳນຶກໃນການອະນຸລັກ, ປົກປັກຮັກສາ ແລະ ສົ່ງເສີມຂະຫຍາຍວຽກງານ ສິລະປະວັນນະຄະດີ ຂອງຊົນເຜົ່າຕົນເອງ ໃນສະຕະວັດໃໝ່ ໃຫ້ຍືນຍົງຄຽງຄູ່ກັບວຽກງານສິລະປະວັນນະຄະດີແຫ່ງຊາດ. ທັງໝົດເຫຼົ່ານັ້ນ ກໍ່ແມ່ນ ເນື່ອງຈາກມີການນຳພາ ຂອງພັກ ປະຊາຊົນ ປະຕິວັດລາວອັນມີ ສະຫາຍ ປະທານ ຄຳໄຕ ສີພັນດອນ ຜູ້ນຳໜ້າ ແລະ ຍັງມີບັນດາທ່ານໃນ ຄະນະປະຈຳພັກ ແຂວງ ເປັນຜູ້ຊີ້ນຳ ນຳພາ ກະຕຸກຊຸກຍູ້ໂດຍກົງ ແລະ ອີກເທື່ອໜຶ່ງກ້າວ ເຂົ້າສູ່ສະຕະວັດ ໃໝ່ນັ້ນຄື: ສະຕະວັດທີ 21 ເຊື່ອແນ່ວ່າ ຂົງເຂດວຽກງານຖະແຫຼງຂ່າວ - ວັດທະນະທຳ ໂດຍສະເພາະແມ່ນຂົງເຂດ ວຽກງານສິລະປະວັນນະຄະດີບັນດາຊົນເຜົ່າ ຂອງແຂວງ ອຸດົມໄຊ ຄົງຈະມີການພັດທະ ນາ ທັນກັບບາດກ້າວ ຂະຫຍາຍຕົວ ແລະຄວາມຮຽກຮ້ອງ ຕ້ອງການຂອງປະເທດຊາດ ແລະຍຸກສະໄໝຢ່າງແນ່ນອນ.

# ແຂວງ ຫຼວງນ້ຳທາ ກ່ຽວກັບການຟື້ນຟູ ສົ່ງເສີມວຽກງານສິລະປະ ວັນນະຄະດີບັນດາຊົນເຜົ່າ

*********************

" ຫຼວງນ້ຳທາ " ເປັນແຂວງ ທີ່ຕັ້ງຢູ່ ເໜືອສຸດ ຂອງ ສ ປ ປ ລາວ, ມີເຂດແດນ ຕິດກັບ ແຂວງ ບໍ່ແກ້ວ, ອຸດົມໄຊ , ບາງແຂວງ ຂອງ ສ ປ ຈີນ ແລະ ບາງແຂວງ ຂອງປະເທດ ມ້ຽນມາ. ຫຼວງນ້ຳທາ ເປັນແຂວງທີ່ເຄີຍຮູ້ຈັກທາງດ້ານ ຊື່ສຽງຄວາມອຸດົມຮັ່ງມີທາງດ້ານ ຊັບພະຍາກອນ ທຳມະຊາດ ມີທິວທັດທຳມະຊາດທີ່ສວຍງາມ ສາມາດ ດຶງດູດແຂກຕ່າງ ດ້າວ ທ້າວຕ່າງແດນ ທີ່ແວ່ຢາມ ແລະ ທ່ອງທ່ຽວຢ່າງບໍ່ໄດ້ລົດລະ. ຫຼວງນ້ຳທາ ເປັນແຂວງ ດັ້ງເດີມເກົ່າແກ່ ເຊິ່ງປະກອບມີຫຼາຍຊົນເຜົ່າທີ່ໄດ້ຕັ້ງພູມລຳເນົາ, ດຳລົງຊີວິດ ແລະ ທຳມາຫາກິນ ບົນດິນດອນຕອນນີ້ ຕັ້ງຫຼາຍສະຕະວັດແລ້ວຄື: ຊົນເຜົ່າລາວ, ລື້, ໄຕເໜືອ, ໄຕ ,ສາມຕ່າວ , ຍວນ, ກຶມມຸ, ອີວມຽນ, ອາຄາ, ລາຫູ, ບິດ, ພູນ້ອຍ....ເປັນຕົ້ນ.



ຊຸດອາພອນເພດຂອງຊົນເຜົ່າ ກຶມມຸ ນາງ ຕົມ,ທ້າວ ດົມ, ນາງ ເຮັງ, ທ້າວ ກາງ

ບັນດາເຜົ່າຢູ່ແຂວງຫຼວງນ້ຳທາ ສ່ວນຫຼວງຫຼາຍແມ່ນຊົນເຜົ່າດັ້ງເດີມເກົ່າແກ່ ແຕ່ມີບາງຊົນເຜົ່າ ແມ່ນເຄື່ອນຍ້າຍມາຈາກບັນດາປະເທດໃກ້ຄຽງໄດ້ຫຼາຍສະຕະວັດມາແລ້ວ. ຊົນເຜົ່າຕ່າງໆຢູ່ ແຂວງ ດັ່ງກ່າວບໍ່ວ່າພວກຢູ່ດັ້ງເດີມ ແລະ ພວກທີ່ເຄື່ອນຍ້າຍ ມາຢູ່ໃໝ່ ແມ່ນຍັງຄົງຮັກສາບັນດາເອກະລັກສະເພາະຂອງ ຊົນເຜົ່າ ໃຜລາວຄື: ເອກະລັກ ກ່ຽວກັບພາສາປາກເວົ້າ, ປະຫວັດສາດຄວາມເປັນມາ, ກົກເຄົ້າ, ຕົ້ນກຳເນີດ ຊື່ເອີ້ນເດີມ ແລະ ເອກະລັກ ກ່ຽວກັບການປະກອບ ສ້າງທາງ ດ້ານລະບົບແນວຄິດ, ຈິດຕະສາດ ທີ່ສະແດງໃນວິງຄະນາຍາດ ວັດ ທະນະທຳ ຄື: ວັດທະນະທຳດ້ານວັດຖຸ, ດ້ານສັງຄົມ ແລະ ດ້ານຈິດໃຈ. ບັນດາຊົນເຜົ່າ ຢູ່ແຂວງ ຫຼວງນ້ຳທາ ລ້ວນແຕ່ເປັນຊົນເຜົ່າ ທີ່ມີຈິດໃຈເອື້ອເຟື້ອອາລີ, ຮູ້ຈັກແຂກຄົນ, ຮັບແຂກຕ່າງດ້າວທ້າວຕ່າງແດນທີ່ແວ່ຢາມ, ເປັນແຂວງທີ່ມີສິລະປະວັດທະນະທຳ ແລະ ສິລະປະວັນນະຄະດີ ຫຼາຍສີສັນເກືອບທຸກຊົນເຜົ່າ. ໃນໂອກາດບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າ ປີ 2000 ເຊິ່ງໄດ້ຈັດຂຶ້ນໃນເມື່ອວັນທີ 7 -12 ພະຈິກ 2000 ທີ່ ນະຄອນຫຼວງວຽງຈັນນັ້ນ, ທ່ານ ສີຈັນ ສໍສະຫວັນແສງ ຫົວໜ້າ ກອງສິລະປະດົນຕີ ທັງເປັນຫົວໜ້າ ຄະນະຮັບຊອບໜ່ວຍ ສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງ ຫຼວງນ້ຳທາ.



ຊຸດອາພອນເພດຂອງຊົນເຜົ່າໄຕດຳ: ທ. ບຸນເຮືອງ ໄຊຍະວົງ, ນ. ສົມ ໄຊຍະວົງ, ທ. ບົກ ແລະນ. ວອນ

ເດີນທາງມາເຂົ້າຮ່ວມບຸນມະໂຫລານວັດທະນະທຳບັນດາຊົນເຜົ່າ ທົ່ວປະເທດຄັ້ງທີ II ປີ 2000 ໄດ້ໃຫ້ ຄວາມກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ບັນດາເຜົ່າຢູ່ ແຂວງຫຼວງນ້ຳທາ ລ້ວນແຕ່ໄດ້ມີມູນເຊື້ອທາງດ້ານສິລະປະວັດທະນະທຳ ແລະ ສິລະປະວັນນະຄະດີ ເປັນອັນສະເພາະຂອງຊົນເຜົ່າໃຜລາວ, ເກືອບທຸກຊົນເຜົ່າ ເມື່ອໃຫ່ຍຊ້ອນບ່າວ, ຊ້ອນສາວ ກໍ່ລ້ວນແຕ່ໄດ້ຮູ້ຂັບ, ຮູ້ລຳ ແລະ ຮູ້ນຳໃຊ້ເຄື່ອງດົນຕີ ພື້ນເມືອງ ຂອງຊົນເຜົ່າຕົນເອງ. ຖ້າທ່ານໃດຫາກໄດ້ແວ່ຢາມແຂວງ ຫຼວງນ້ຳທາ ກໍ່ຈະປະກົດໄດ້ຍິນສຽງຂັບລຳສາວຊົນເຜົ່າ ( ອາຄາ ) ຢູ່ຕາມສວນຝ້າຍ, ສຽງຂັບລື້, ຂັບກະລອມ, ສຽງຂັບເຕີມ, ສຽງຂັບມົ້ງ, ສຽງຂັບຂອງສາວອີວມຽນ, ໄຕດຳ, ໄຕເໜືອ ຢູ່ຕາມສະຖານທີ່ການອອກແຮງງານຕ່າງໆ, ມັນບໍ່ພຽງແຕ່ເທົ່ານັ້ນ ບັນດາຊົນເຜົ່າຢູ່ ແຂວງຫຼວງນ້ຳທາ ເປັນຜູ້ມີຈິດໃຈປອດໃສຂາວສະອາດຮັກໝູ່ຄູ່ເພື່ອນຝູງເອົາອົກ, ເອົາໃຈແຂກຕ່າງດ້າວທ້າວຕ່າງແດນ ເພາະສະນັ້ນຖ້າຄົນແຂວງ ຫຼວງນ້ຳທາ ຫາກໄດ້ປະຕິບັດໜ້າທີ່ວຽກງານຢູ່ແຫ່ງໃດ ແລ້ວເຂົາເຈົ້າຈະມີເພື່ອນຝູງ. ບາດເວລາກັບຄືນ ທ້ອງຖິ່ນ ຂອງຕົນເອງ ໂດຍສະເພາະແມ່ນ ຜູ້ບ່າວ, ຍິງສາວ ກໍ່ສາມາດເຮັດໃຫ້ບ່າວສາວ ມີຄວາມຕິດອົກຕິດໃຈ, ມີຄວາມປະສົງ ຢາກໄປຢູ່ ແຂວງຫຼວງນ້ຳທາ, ອັນນັ້ນແຫຼະ ຈຶ່ງສົມກັບຄຳຊ່າລືກ່າວຂານກັນວ່າ ແຂວງ ຫຼວງນ້ຳທາ ເປັນດິນ ແດນ ເຂົ້າຂາວສາວງາມ ເຊິ່ງໃນເມື່ອນ້ອງແສ້ ຫຼານສາວໄດ້ເຂົ້າອົກ ຂົ້າໃຈຢ່າງເລິກເຊິ່ງ ກັບບ່າວໆ ສາວໆ ຫຼວງນ້ຳທາ ກໍ່ສະເໜີນຳພໍ່ແມ່ ຫຼື ການຈັດຕັ້ງຂອງຕົນ ວ່າຢາກໄປເຮັດວຽກເຮັດງານຢູ່ທີ່ນັ້ນ ແຕ່ໃນເມື່ອພໍ່ແມ່ ຫຼື ການຈັດຕັ້ງບໍ່ເຫັນດີກໍ່ລັກໄປພຸ້ນລະ ທັງນັ້ນ ກໍ່ເນື່ອງຈາກ ຄົນຫຼວງນ້ຳທາ ໄດ້ຮູ້ເອົາໃຈແຂກຄົນນັ້ນແຫຼະ!

ບົນພື້ນຖານບັນດາຊົນເຜົ່າຢູ່ ແຂວງຫຼວງນ້ຳທາ ເປັນຄົນທີ່ຮັກມູນເຊື້ອທາງດ້ານສິລະປະວັດທະນະທຳ ແລະ ສິລະປະວັນນະຄະດີ ຂອງຊົນເຜົ່າຕົນເອງ ເຊິ່ງໄດ້ສືບທອດມາແຕ່ບູຮານ ນະການ, ສົມທົບກັບຄວາມຮຽກຮ້ອງຕ້ອງການຂອງ ການປະຕິວັດ ແລະຄວາມຄອງ ຄອຍຂອງ ປະຊາຊົນເຜົ່າຕ່າງໆ ໃນສະໄໝນັ້ນ. ເພາະສະນັ້ນຄະນະພັກ, ອຳນາດການປົກຄອງ ແຂວງ ຫຼວງນ້ຳທາ ຈຶ່ງໄດ້ຕົກລົງສ້າງຕັ້ງກອງສິລະປະກອນແຂວງຂຶ້ນໃນ ປີ 1976 ເປັນຕົ້ນມາ. ແຕ່ຜ່ານຂະບວນວິວັດແຫ່ງການຄົງຕົວ ແລະ ການຂະຫຍາຍຕົວເປັນເວລາສາມທົດສະຕະວັດມານີ້, ກອງສິລະປະກອນແຂວງຫຼວງນ້ຳທາ.

ບໍ່ພຽງແຕ່ເຄື່ອນໄຫວສະແດງ ຮັບໃຊ້ ງານບຸນ ສຳຄັນຂອງຊາດ, ກອງປະຊຸມໃຫ່ຍຂອງອົງຄະນະພັກແຂວງ, ເມືອງ, ພື້ນຖານການຜະລິດ, ຂະບວນການຕ່າງໆພາຍໃນແຂວງເທົ່ານັ້ນ, ແຕ່ຍັງໄດ້ໄປສະແດງເພື່ອເປັນການຖອດຖອນບົດຮຽນນຳບັນດາແຂວງໃກ້ຄຽງຄື:ແຂວງ ຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ ແລະ ຍັງໄດ້ໄປ ສະແດງຢູ່ຕ່າງປະເທດ (ບັນດາແຂວງແຫກສ່ຽວ ) ບັນດາປະເທດ ທີ່ໃກ້ຄຽງອີກດ້ວຍ. ພ້ອມກັບໄດ້ຕັ້ງໜ້າເຄື່ອນໄຫວໄປສະແດງຮັບໃຊ້ຂະບວນການ ຕ່າງໆແລ້ວກອງສິລະປະກອນແຂວງ ຫຼວງນ້ຳທາ ຍັງໄດ້ເຄື່ອນໄຫວ ໄປສະແດງຮັບໃຊ້ ງານບຸນປະເພນີ ຂອງຊົນເຜົ່າຕ່າງໆອີກ. ບໍ່ສະເພາະແຕ່ເທົ່ານັ້ນ ກອງສິລະປະກອນແຂວງຫຼວງນ້ຳທາ ຍັງບໍ່ໄດ້ລົດລະໃນການປັບປຸງໂຄງປະກອບການຈັດຕັ້ງ, ເລືອກເຟັ້ນ ບຸກຄະລະກອນ ຜູ້ທີມີພອນສະຫັວນ ທາງດ້ານສິລະປະວັນນະຄະດີຂອງບາງຊົນເຜົ່າ ບັນຈຸສັບຊ້ອນເຂົ້າກອງສະແດງດັ່ງກ່າວ. ມາເຖິງ ປະຈຸບັນ ແຂວງຫຼວງນ້ຳທາ ນອກຈາກມີກອງສິລະປະດົນຕີອາຊີບ ແລ້ວຍັງມີໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນ 50 ໜ່ວຍ ເຊິ່ງໄດ້ແຈກຢາຍ ຢູ່ຕາມໂຮງຮຽນຂັ້ນປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ, ໂຮງໝໍ, ກອງທະຫານ ແລະ ຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ. ພ້ອມກັນນັ້ນ, ທ່ານຫົວໜ້າກອງສິລະປະດົນຕີແຂວງຫຼວງນ້ຳທາ ຍັງໄດ້ຢືນຢັນ ອີກວ່າ" ກ່ອນຈະເດີນທາງມາຮ່ວມບຸນມະໂຫລານວັດທະນະທຳ ບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ II ປີ 2000 ເທື່ອນີ້ ", ຢູ່ ແຂວງ ຫຼວງນ້ຳທາ ແມ່ນໄດ້ມີການກະກຽມແຕ່ເດືອນ 8 ພຸ້ນ ເຊິ່ງໄດ້ມີຈັດຕັ້ງຄະນະຊີ້ນຳຂັ້ນແຂວງລົງມາຮອດຂັ້ນບ້ານ ພ້ອມທັງໄດ້ຈັດຕັ້ງຄະນະຕ່າງໆ. ແຕ່ລະຊົນເຜົ່າສອງສະຫາຍ ແລະໄດ້ລົງກວດກາ ເຝິກຊ້ອມຈົນຮອດວັນທີ 30 / 10 / 2000 ຈິ່ງບັນລຸຜົນສຳເລັດ ໃນການສະແດງຜ່ານ ຄະນະນຳຂັ້ນເມືອງ ແລະຂັ້ນແຂວງ. ເພື່ອເປັນການປະກອບສ່ວນເຮັດໃຫ້ບຸນມະໂຫລານວັດທະນະທຳ ບັນດາຊົນເຜົ່າ ຄັ້ງ ທີ II ປີ 2000 ມີບັນຍາກາດຟົດຟື້ນ ຮ່ວມກັບບັນດານັກສະແດງທີ່ມາຈາກແຂວງຕ່າງ ທົ່ວປະເທດນັ້ນແຂວງ ຫຼວງນ້ຳທາ ພວກເຮົາໄດ້ນຳ ເອົາ ນັກສະແດງ 27 ຄົນ ໃນນັ້ນມີ ຍິງ 10 ຄົນ, ເຊິ່ງນອນໃນ 3 ຊົນເຜົ່າຄື: ຊົນເຜົ່າລື້,ໄຕດຳ ແລະເຜົ່າກຶມມຸ,

ເຊິ່ງໄດ້ມີການເລືອກເຟັ້ນຈາກໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຢູ່ຕາມໝູ່ບ້ານເຜົ່າຕ່າງໆ ສົມທົບກັບກອງສິລະປະດົນຕີແຂວງ ພ້ອມທັງໄດ້ນຳເອົາລາຍການ ເຊິ່ງໄດ້ຄັດຈ້ອນຈາກລາຍການສະແດງທີ່ໄດ້ຮັບຄວາມນິຍົມຊົມຊອບຈາກມວນຊົນ ຢູ່ພາຍໃນແຂວງຫຼາຍກວ່າເພິ່ນ ແລະໄດ້ຜ່ານການເລືອກເຟັ້ນແຕ່ຮາກຖານຈົນຮອດຂັ້ນແຂວງລວມມີ 6 ລາຍການຄື: ຂັບລື້ທີ່ໄດ້ ເວົ້າເຖິງ ການນຳພາຂອງພັກ ປະຊາຊົນ ປະຕິວັດລາວ, ຟ້ອນແມ່ລາຍງາມຂອງຊົນເຜົ່າລື້ ເຊິ່ງໄດ້ເວົ້າເຖິງຮີດຄອງປະເພນີອັນດີງາມຂອງຊົນເຜົ່າລື້, ຂັບໄຕດຳ ຊົມເຊີຍການນຳພາອັນສະຫຼາດສ່ອງໃສ ຂອງພັກປະຊາຊົນ ປະຕິວັດລາວ, ຟ້ອນເຕັ້ນແຊໝູ່ຍິງ - ຊາຍ ມ່ວນຊື່ນເວລາເສັນບາງຂອງເຜົ່າໄຕດຳ, ຂັບເຕີມ ໝູ່ຍິງຂອງຊົນເຜົ່າກຶມມຸ ຊົມເຊີຍການສ້າງບ້ານແປງເມືອງ ແລະຟ້ອນລາບ ມ່ວນຊື່ນໃນເວລາຂຶ້ນເຮືອນໃໝ່ຂອງຊົນເຜົ່າກຶມມຸ.

ຄຽງຄູ່ກັບໄດ້ນຳເອົາສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າມາສະແດງໃນງານອັນຄຶກຄື້ນນັ້ນ. ຄະນະສະຫະພັນແມ່ຍິງແຂວງຫຼວງນ້ຳທາ ຍັງໄດ້ເອົາຜະລິດຕະພັນທາງວັດທະນະທຳ , ດ້ານວັດຖຸ ເຊິ່ງເປັນສີໄມ້ລາຍມືອັນປານີດ, ອັນລື້ຊື່ຂອງເອື້ອຍນ້ອງ ແມ່ຍິງບັນດາຊົນເຜົ່າແຂວງຫຼວງນ້ຳທາ ມາວາງສະແດງ ແລະຂາຍ ໃນໂອກາດບຸນນະມັດສະການພະທາດຫຼວງປີ 2000. ນາງ ທຳມາ ແມ່ຍິງ ສາວເຜົ່າລື້ ສັງກັດສະຫະພັນແມ່ຍິງແຂວງຫຼວງນ້ຳທາ ໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ບັນດາຜົນຜະລິດທາງດ້ານວັດທະນະທຳ, ດ້ານວັດຖຸທີ່ໄດ້ມາວາງສະແດງໃນຄັ້ງນີ້ ແມ່ນຜົນຜະລິດຂອງແມ່ຍິງຊົນເຜົ່າຕ່າງໆ ຈາກເມືອງນາແລ, ເມືອງລອງ ແລະ ເມືອງຫຼວງນ້ຳທາ , ເຊິ່ງມີລາຍລະອຽດຄື: ເສື້ອບັງຕົບ, ເສື້ອໝາກແປ່ນ, ສິ້ນໝີ່, ຜ້າປັ່ງວປົກຫົວ, ຖົ່ວເປ້, ແພໃໝມ້ອນ ແລະລົມຢຽນຂອງຊົນເຜົ່າໄຕດຳ, ເສື້ອແມ່ຍິງ, ສົ້ງຜູ້ຊາຍ, ຊຸດນຸ່ງຂອງແມ່ຍິງ ແລະຜູ້ຊາຍ, ເຈັ້ຍໝໍ່, ຝ້າຍຮຳດຳ, ຝ້າຍຮຳຂາວ, ຖົງ , ເສື້ອໝໍ່ຜີບູຮານ, ຜ້າພັນແຂ່ງ, ຜ້າປົກຫົວຂອງຊົນເຜົ່າ ອີວມຽນ ( ລາວຫ້ວຍ ) ; ຊຸດນຸ່ງຜູ້ຊາຍ ຂອງຊົນເຜົ່າກຶມມຸ ; ຊຸດກໍ່ , ເສື້ອຊ້ອນ, ເສື້ອແຂນສັ້ນ , ເສື້ອແຂນ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ຍາວ, ສິ້ນກະໂປ່ງ, ຜ້າຮັດແອວ, ຖົງໃສ່ແຂ່ງ, ດອກໄມ້ປັກຫົວ,ຖົງເປ້ຂອງເຜົ່າອາຂ່າ ( ກໍ ) , ສິ້ນຂອງຊົນເຜົ່າລະເມດ; ສິ້ນດອກ ,ຜ້າປູ່ບ່ອນ, ແພປູ່ໂຕະ ຂອງຊົນເຜົ່າລາວເຮືອຢູ່ເມືອງ ນາແລ ແລະສິ້ນດອກ ຂອງຊົນເຜົ່າລື້.

ຜ່ານໄລຍະທີ່ໜ່ວຍສິລະປະ ວັນນະຄະດີພື້ນເມືອງ ບັນດາຊົນເຜົ່າ ແຂວງ ຫຼວງ ນ້ຳທາ ໄດ້ສະແດງໃນໂອກາດບຸນມະໂຫລານວັດທະນະທຳ ບັນດາ ຊົນເຜົ່າທົ່ວປະເທດ ຄັ້ງທີ II ປີ 2000 ຄັ້ງນີ້ ກໍ່ເຫັນວ່າມີຄວາມໂດດເດັ່ນພໍສົມຄວນ ເຊິ່ງໄດ້ເຮັດໃຫ້ຊາວ ນະຄອນຫຼວງວຽງຈັນ ມີຄວາມນິຍົມຊົມຊອບຢ່າງສຸດຊຶ້ງ. ສຽງຂັບລື້ໂດຍສາວຫຼ້າຜົວ ລູກສາວຂອງຊົນເຜົ່າລື້ ບ້ານນ້ຳທົ່ງ ເມືອງນ້ຳທາ ທີ່ໄດ້ຊົມເຊີຍການນຳພາຂອງພັກ, ວາດຟ້ອນແພລາຍງາມຂອງຊົນເຜົ່າລື້ສະແດງໂດຍ ທ້າວ ໄມຄຳ ແລະ ວັນດາ ທີ່ໄດ້ ສ່ອງ ແສງເຖິງຮີດຄອງປະເພນີອັນດີງາມ ຂອງຊົນເຜົ່າລື້; ຂັບໄຕດຳ ໂດຍນາງ ສາວຕຳ ລູກສາວ ຊົນເຜົ່າໄຕດຳຢູ່ບ້ານທົ່ງຄີ ເມືອງນ້ຳທາ ເຕັ້ນແຊນຳສະແດງໂດຍໝູ່ ຍິງ - ຊາຍ ທີ່ເວົ້າ ເຖິງການມ່ວນຊື່ນເວລາເສັນປາງ; ສຽງຂັບເຕີນຂອງຊົນເຜົ່າກຶມມຸ ນຳສະແດງໂດຍ ນາງສາວເຮີມ ແລະ ນາງ ສາວຕິ່ມ ລູກສາວຂອງຊາວບ້ານເຜີ້ງ ເມືອງ ນາແລ ທີ່ສ່ອງແສງ ເຖິງການມ່ວນຊື່ນ ເວລາຂຶ້ນເຮືອນໃໝ່ໄດ້ດັງກ້ອງ ຢູ່ຫໍວັດທະນະທຳແຫ່ງຊາດ ແລະ ເດີ່ນທາດຫຼວງ ເຊິ່ງໄດ້ສ້າງຄວາມສະເທືອນໃຈ ແລະຝັງເລິກຢູ່ໃນຫົວໃຈຂອງຊາວ ນະຄອນຫຼວງວຽງຈັນ ຢ່າງບໍ່ມີວັນຈືດຈາງ ເຊິ່ງມັນສາມາດດຶງດູດຈິດໃຈ ແຂກຕ່າງດ້າວ ທ້າວຕ່າງແດນ ໃຜກໍ່ມີຄວາມປາຖະໜາຢາກໄປທ່ອງທ່ຽວ ແລະ ຂໍຂັນອາສາເປັນເຂີຍ, ເປັນໄພ້ຊາວຫຼວງນ້ຳທາ. ມັນບໍ່ສະເພາະແຕ່ເທົ່ານັ້ນເວລາມາເບິ່ງຮ້ານວາງສະແດງ ຜະລິດຕະພັນ ວັດທະນະທຳທາງວັດຖຸ ບັນດາຊົນເຜົ່າ ແຂວງ ຫຼວງນ້ຳທາ ແມ່ນໄດ້ ອັ່ງອໍ ເຕັມໄປດ້ວຍແຂກພາຍ ໃນ ແລະ ຕ່າງປະເທດ ໄດ້ເຂົ້າມາຊົມ ແລະ ຊື້ເພື່ອຈະມອບເປັນ ຂອງຂວັນ ໃຫ້ແກ່ຊູ້ ຮັກແຟນແພງ ແລະ ໃຫ້ພັນລະຍາສາມີຢ່າງບໍ່ຂາດໄລຍະ.

ໃນຕອນທ້າຍ ຂອງການສົນທະນາຢູ່ ບ້ານພັກ ປ່າພ້າວ ທີ່ນະຄອນຫຼວງວຽງຈັນ, ທ່ານ ສີຈັນ ສໍສະຫ້ວນແສງ ຫົວໜ້າກອງສິລະປະດົນຕີ ແຂວງຫຼວງນ້ຳທາ ຍັງໄດ້ຢືນຢັນວ່າ: ພາຍຫຼັງກັບຈາກການເຂົ້າຮ່ວມບຸນມະໂຫລານວັດທະນະທຳບັນດາຊົນເຜົ່າປີໃໝ່ໃຫ້ຮູ້ອະນຸລັກ ແລະສືບທອດແບບແຜນການດຳລົງຊີວິດຕາມຮີດຄອງປະເພນີ. ບັນດາຂະແໜງການຂັ້ນແຂວງ, ເມືອງ ແລະ ໝູ່ບ້ານຊົນເຜົ່າຕ່າງໆເພື່ອປັບປຸງ, ປຸກລະດົມຊຸກຍູ້ໃຫ້ເຜົ່າຊົນຕ່າງໆ ອະນຸລັກຮັກສາ ແລະ ເສີມຂະຫຍາຍສິລະປະວັດທະນະທຳ ແລະ ສິລະປະວັນນະຄະດີ ຂອງບັນດາຊົນເຜົ່າ ໃຫ້ຍືນຍົງຄົງຕົວຄຽງຄູ່ກັບວັດທະນະທຳແຫ່ງຊາດ ຄືນັບທັງຊີວິດການເປັນຢູ່, ການນຸ່ງຖື ເອ້ຢ້ອງ, ອາຫານ ການກິນ, ການດື່ມ, ກອນຂັບກອນລຳ, ບົດຮ້ອງ ທຳນອງເສບ, ນິທານພື້ນເມືອງ ທີ່ເປັນມູນເຊື້ອ ຂອງ ຊົນເຜົ່າຕ່າງໆ ແຕ່ບັນຫາທີ່ຈຳເປັນ ແລະ ສຳຄັນຍິ່ງແມ່ນຈະສຸມໃສ່ການກໍ່ສ້າງ, ເຝິກແອບຄົນຮຸ່ນດັ້ງເດີມຂອງຊົນເຜົ່າຕ່າງໆ. ແຕ່ຕ້ອງແມ່ນ ບັນດາຮີດຄອງທີ່ບໍ່ຂັດກັບແນວທາງນະໂຍບາຍ ຂອງພັກ ແລະ ກົດໝາຍຂອງລັດ, ສິດສະເໝີພາບລະຫ່ວາງ ຍິງ - ຊາຍ, ບໍ່ແຕະຕ້ອງເຖິງການຜະລິດ. ທັງໝົດເຫຼົ່ານັ້ນ ແມ່ນແນໃສ່ເຮັດໃຫ້ຄວາມແຕກຕ່າງ ລະຫ່ວາງຊົນເຜົ່າຕ່າງໆ ຄ່ອຍໆ ຫຍັບເຂົ້າ ຫາກັນ ແລະ ເຊື່ອແນ່ວ່າ ພາຍໃຕ້ການ ນຳພາ ຂອງພັກປະຊາຊົນ ປະຕິວັດລາວ ອັນມີ ສະຫາຍປະທານ ຄຳໄຕ ສີພັນດອນ ເປັນຜູ້ນຳໜ້ານັ້ນອີງ ຄະນະພັກແຂວງ ແລະ ເມືອງເປັນຜູ້ຊີ້ນຳ ນຳພາໂດຍກົງນັ້ນ ຄົງຈະເຮັດໃຫ້ວຽກງານສິລະປະວັດທະນະທຳ ແລະ ສິລະປະວັນນະຄະດີຂອງຊົນເຜົ່າຕ່າງໆຢູ່ ແຂວງ ຫຼວງນ້ຳທາມີການຂະຫຍາຍຕົວທັນກັບບາດກ້າວການຂະຫຍາຍຕົວຂອງສັງຄົມລາວ ແລະສັງຄົມຍຸກສະໄໝ.



ຊຸດອາພອນເພດຊາຍຂອງຊົນເຜົ່າລື້ ແຂວງ ຫຼວງນໍ້າທາ



ຫໍພິພິດຕະພັນ ເມືອງສິງ ແຂວງ ຫຼວງນໍ້າທາ

# ວຽກງານສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າ ແຂວງ ບໍ່ແກ້ວ ໄດ້ຮັບຄວາມນິຍົມຈາກມວນຊົນ

***********

" ບໍ່ແກ້ວ " ແມ່ນແຂວງໜຶ່ງໃນບັນດາ ແຂວງທີ່ຕັ້ງ ຢູ່ທາງພາກເໜືອຂອງ **ສ ປ ປ** ລາວ ເຊິ່ງມີເຂດແດນຕິດກັບແຂວງອຸດົມໄຊ, ຫຼວງນ້ຳທາ ແລະບາງແຂວງຂອງ ປະເທດມຽນມ້າ ແລະໄທ. ບໍ່ແກ້ວ ເປັນແຂວງທີ່ຫາກໍ່ຕັ້ງເມື່ອປີ 1984 ເຊິ່ງຕັ້ງຢູ່ແຄມ ຂອງ ຝັ່ງຊ້າຍ, ມີພື້ນທີ່ຮາບພຽງເລັກນ້ອຍຕາມລ້ອງນ້ຳ, ພື້ນທີ່ສ່ວນຫຼາຍເປັນພູພຽງ ແລະ ພູສູງ.ບໍ່ແກ້ວ ເປັນແຂວງທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ແຕ່ປະກອບມີຫຼາຍຊົນເຜົ່າທີ່ໄດ້ຕັ້ງ ພູມລຳເນົາ, ດຳລົງຊີວິດ, ທຳມາຫາກິນ ຢ່າງສະຫຼັບສັບຫ່ວາງ ບົນດິນດອນຕອນນີ້ເປັນ ເວລາ ຫຼາຍເສັ້ນຄົນມາແລ້ວ ຄື: ຊົນເຜົ່າລາວ, ລື້, ຍວນ, ໄຕ, ອາຄາ( ກໍ ), ອີວມຽນ, ລາຫູ ( ມູເຊີ + ກູ່ຍ), ມົ້ງ, ກືມມຸ, ລະເມດ,ໄທເໜືອ, ບົດເປັນຕົ້ນ.

ບັນດາຊົນເຜົ່າຢູ່ແຂວງ ບໍ່ແກ້ວ ແມ່ນຊົນເຜົ່າດັ້ງເດີມເກົ່າແກ່ ແຕ່ຍັງຮັກສາບັນດາ ເອກະລັກສະເພາະຂອງຊົນເຜົ່າໃຜລາວຄື: ເອກະລັກກ່ຽວກັບພາສາປາກເວົ້າ; ປະ ຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດ, ຊື່ຮຽກເດີມ ແລະເອກະລັກກ່ຽວກັບການ ປະກອບສ້າງ ທາງດ້ານລະບົບແນວຄິດ,ຈິດຕະສາດ ທີ່ສະແດງອອກໃນວົງຄະນາຍາດ ວັດທະນະທຳຄື: ວັດທະນະທຳ ດ້ານວັດຖຸ, ວັດທະນະທຳ ດ້ານສັງຄົມ ແລະ ວັດທະນະທຳ ດ້ານຈິດໃຈ ບໍ່ສະເພາະແຕ່ເທົ່ານັ້ນ, ບັນດາຊົນເຜົ່າຢູ່ແຂວງບໍ່ແກ້ວ ເປັນຊົນເຜົ່າທີ່ມີມູນເຊື້ອ ດຸໝັ່ນຂະຫຍັນພຽນໃນການອອກແຮງງານເພີ່ມພູນຜະລິດຜົນຫາລ້ຽງກຸ້ມຕົນເອງ, ມີຄວາມສະຫງວນຄວາມງາມ ຮັກສິລະປະວັນນະຄະດີ ແລະການນຸ່ງຖືຕາມແບບ ເອກະລັກສະເພາະຂອງຊົນເຜົ່າຕົນເອງ. ບັນດາຊົນເຜົ່າຢູ ແຂວງບໍ່ແກ້ວ ໄດ້ມີບຸນ ປະເພນີທີ່ສຳຄັນຄື: ບຸນປີໃໝ່ ຫຼື ກຸດສົງການ, ບຸນເກັບກ່ຽວ ແລະ ບຸນປະຈຳ ຄອບຄົວເຊັ່ນ: ບຸນຂຶ້ນເຮືອນໃໝ່ ແລະການເຢົາ, ມີຂັບລື້ , ຂັບຂຶມ, ຂັບອາຄາ, ຂັບເຕີມ, ສໍດ່ຽວຊາຍ ແລະ ສໍດ່ຽວຍິງຂອງຊົນເຜົ່າຍວນ ແລະອື່ນໆ.

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ຢູ່ແຂວງບໍ່ແກ້ວ ເຖິງວ່າບໍ່ທັນມີກອງສະແດງອາຊີບແຕ່ພັດມີໜ່ວຍສິລະປະວັນນະຄະດີພື້ນເມືອງຂອງມະຫາຊົນເຜົ່າຕ່າງໆ ເຊິ່ງຕາມຕົວເລກທີ່ບໍ່ທັນຄົບຖ້ວນປະຈຸບັນໄດ້ ມີໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຈຳນວນ 22 ໜ່ວຍ ເຊິ່ງນອນຢູ່ຕາມສຳນັກງານ ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ບັນດາໂຮງຮຽນ ຂັ້ນປະຖົມ, ມັດທະຍົມຕອນ ຕົ້ນ, ມັດທະຍົມຕອນປາຍ ແລະ ໝູ່ ບ້ານ ຊົນເຜົ່າຕ່າງໆ ເຊິ່ງຖ້າມີບັນດາຜູ້ນຳຂັ້ນສູງ ຫຼື ມີງານສຳຄັນຕ່າງໆ ຫາກຕ້ອງການໃຫ້ມີການສະແດງ ສິລະປະວັນນະຄະດີ ແລ້ວກໍ່ເຕົ້າໂຮມເອົາບັນດານັກສະແດງສະໝັກຫຼິ້ນຢູ່ຮາກຖານມາເຝິກຊ້ອມຊົ່ວໄລຍະ ໜຶ່ງກໍ່ສາມາດສະແດງຮັບໃຊ້ຂະບວນການຕ່າງໆເຫຼົ່ານັ້ນຢ່າງທັນການ. ໃນວາລະບຸນ ມະໂຫລານວັດທະນະທຳບັນດາຊົນເຜົ່າປີ 2000 ທົ່ວປະເທດ ຄັ້ງທີ II ເຊິ່ງໄດ້ຈັດຂຶ້ນເມື່ອ ວັນທີ 7-12/11/ 2000 ທີ່ ນະຄອນຫຼວງວຽງຈັນ ໝາກຫົວໃຈຂອງປວງຊົນລາວທັງຊາດນັ້ນ,ທ່ານ ບຸນສີ ບຸນຍາວົງ ຮອງຫົວໜ້າພະແນກຖະແຫຼງຂ່າວ



ຊຸດອາພອນເພດຊິງເຜົ່າຂຶນ(ລື້ ນາງ ແສງຄຳ ອາຍຸ 16 ປີ ບໍ່ແກ້ວ)

ວັດທະນະທຳແຂວງບໍ່ແກ້ວ ໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ເພື່ອຕອບສະໜອງ ຕາມໜັງສືແຈ້ງການຂອງ ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ - ວັດທະນະທຳ ແລະ ເພື່ອເປັນການປະກອບສ່ວນເຮັດໃຫ້ບຸນມະໂຫລານວັດທະນະທຳບັນດາຊົນເຜົ່າ ມີບັນຍາກາດຟົດຟື້ນ ແລະ ມີການສະແດງປະກອບດ້ວຍຫຼາຍສີສັນຂອງຊົນເຜົ່າຕ່າງໆນັ້ນ.

ແຂວງບໍ່ແກ້ວ ພວກ ຂ້າພະເຈົ້າໄດ້ນຳ ເອົານັກສະແດງ 14 ຊີວິດ ໃນນັ້ນມີ ຍິງ 7 ຊີວິດ ເຊິ່ງນອນໃນ 3 ຊົນເຜົ່າ ຄື: ຍວນ, ຂຶນ (ລື້), ອາຄາ (ກໍ)ແລະ ໄດ້ນຳເອົາລາຍການ ສະແດງເລັກນ້ອຍຄື: ສໍດ່ຽວຍິງ ແລະ ສໍດ່ຽວ ຊາຍຂອງຊົນເຜົ່າຍວນ ຂັບຂຶນ (ລື້), ຟ້ອນ ສາມັກຄີປູກຝ້າຍຮ້ອງ ເພງລວມໝູ່ ຍິງ ທີ່ ເວົ້າເຖິງບົດບາດ ຂອງ ຍິງ - ຊາຍ, ຮ້ອງເພງ ປະກອບຟ້ອນທີ່ເວົ້າ ເຖິງການຊົມສວນດອກ ໄມ້ທຳມະຊາດຂອງຊົນ ເຜົ່າ ອາຄາ (ກໍ) ແລະ ເພງປະກອບຟ້ອນແອ່ວ ບຸນກິນຈຽງ.



ສາວ ເກສອນ ຊົນເຜົ່າຍວນ ຂັບຍວນ ທີ່ເວົ້າເຖິງ
ໄປແວ່ຢາມ ແຂວງ ບໍ່ແກ້ວ

ຜ່ານໄລຍະທີ່ໜ່ວຍ ສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງບໍ່ແກ້ວ ທີ່ໄດ້ສະແດງຢູ່ຫໍວັດທະນະທຳ ແລະເດີ່ນທາດຫຼວງວຽງຈັນໃນໂອກາດບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າ ປີ 2000 ແລະ ບຸນນະມັດສະການພະທາດຫຼວງ ແມ່ນໄດ້ ມີບັນຍາກາດຟົດຟື້ນລົມຄວນ ເຊິ່ງໄດ້ສ້າງຄວາມຈັບອົກຈັບໃຈ ແລະໄດ້ເຮັດໃຫ້ບັນດາ ຜູ້ເບິ່ງ, ຜູ້ຊົມມີຄວາມປາຖະໜາຢາກໄປທ່ອງທ່ຽວແຂວງ ບໍ່ແກ້ວ ຢ່າງບໍ່ລົດລະ, ສຽງສໍດ່ຽວ ຍິງ ໂດຍສາວ ເກສອນ ແລະ ສໍດ່ຽວ ຊາຍ ໂດຍສະຫາຍ ອຳພອນ ທີ່ເວົ້າເຖິງ ເຊີນໄປແວ່ຢາມ ແຂວງ ບໍ່ແກ້ວ ແລະ ເຊີນແວ່ຫຼິ້ນບຸນ ກິນຈຽງຂອງຊົນເຜົ່າຍວນ , ສຽງຂັບຂຶມ ( ລື້ ) ຂັບໂດຍສາວ ແສງຄຳ, ສຽງເພງຮ້ອງໝູ່ຍິງ ທີ່ເວົ້າເຖິງບົດບາດຍິງ - ຊາຍ , ສຽງເພງປະ ກອບຟ້ອນຊົມສວນດອກໄມ້ທຳມະຊາດ ຮ້ອງໂດຍ ສາວຫຼ້າ ລູກສາວຊົນເຜົ່າອາຄາ ແລະ ສຽງເພງ ປະກອບຟ້ອນ ສາມັກຄີປູກຝ້າຍ ຂັບຮ້ອງໂດຍ ສາວ ຫຼ້າ ລູກສາວຊົນເຜົ່າອາຄາ ໄດ້ດັງກ້ອງ ຢູ່ຫໍວັດທະນະທຳແຫ່ງຊາດ ແລະ ເດີ່ນທາດຫຼວງ ວຽງຈັນ ເຊິ່ງໄດ້ຝັງເລິກ ແລະ ສະຖິດໝັ້ນຢູ່ໃນຫົວໃຈຂອງຊາວ ນະຄອນຫຼວງວຽງຈັນ ແລະ ປວງຊົນລາວທັງຊາດ, ໄດ້ມີ ລຸງໄວອາຍຸ 70 ປີ ທີ່ມາຈາກແຂວງຈຳປາສັກ ມາທ່ຽວຫຼິ້ນບຸນທາດຫຼວງ ທີ່ພວມຢືນເບິ່ງ ລາຍການສະແດງສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າຂອງແຂວງບໍ່ແກ້ວ ໄດ້ຄຶດລະເມີ ແລະພຶມພຳໂດຍຄົນດຽວດ້ວຍສຽງຄ່ອຍໆວ່າ: ໂອອານິຈາເອີຍ ! ສາວອາ ຄາ ສາວຂຶມ, ສາວຍວນ ພວກເຈົ້າຄືວ່າຟ້ອນງາມ, ຮ້ອງເພງມ່ວນອັນອອນຊອນແທ້ນໍ ! ພວກ ເຈົ້າເກີດມາແຕ່ໃສ ຫຼື ວ່າໄດ້ມີເທວະດາຟ້າແຖນໄດ້ປັ້ນໄດ້ແຕ່ງ ແລະ ລົງມາເກີດຊັ້ນ ຫວະ ! ລຸງຄິດເສຍດາຍທີ່ບໍ່ໄດ້ພົບເຫັນພວກເຈົ້າແຕ່ສະໄໝຍັງໜຸ່ມແໜ້ນພຸ້ນ ຈະຂໍຂວານ ອາສາເປັນ ເຂີຍຂອງສາວອາຄາ, ສາວຂຶມ ແລະ ສາວ ຍວນພຸ້ນລະ ແລະ ຍັງມີລຸງ ທີ່ເປັນ ເພື່ອນບ້ານຫວຽດນາມ ທີ່ເຄີຍເປັນຊ່ຽວຊານທາງ ດ້ານການທະຫານສະໄໝການ ປະຕິວັດຊາດ ປະຊາທິປະໄຕພຸ້ນໄດ້ມາທ່ຽວຊົມເບິ່ງບຸນທາດຫຼວງ ທີ່ພວມຕິດຕາມ ເບິ່ງການສະແດງຂອງໜ່ວຍສິລະປະວັນນະຄະດີພື້ນເມືອງ ບັນດາຊົນເຜົ່າແຂວງ ບໍ່ແກ້ວ

ດ້ວຍຄວາມຈິດຈໍ່ ແລ້ວກໍ່ເວົ້າຂຶ້ນດ້ວຍສຽງຄ່ອຍໆວ່າ: ອີກບໍ່ພໍເທົ່າໃດວັນພວກລູກຫຼານກໍ່ຈະກັບຄືນສູ່ດິນແດນແຂວງບໍ່ແກ້ວທີ່ສວຍງາມ ແລະ ອຸດົມຮັ່ງມີ ແຕ່ທຸກສຽງເພງທີ່ມ່ວນຫູ ແລະ ວາດຟ້ອນອັນງາມຕາຂອງພວກລູກຫຼານ ແມ່ນຍັງຝັງເລິກ ແລະ ສະຖິດໝັ້ນໃນຫົວໃຈ ຂອງບ່າວສາວຊາວນະຄອນຫຼວງວຽງຈັນ ກໍ່ຄືຊາວລາວທົ່ວປະເທດຢ່າງບໍ່ມີວັນຈືດຈາງ.

ທັງໝົດເຫຼົ່ານັ້ນມັນສ່ອງແສງໃຫ້ເຫັນວ່າ: ນະໂຍບາຍສາມັກຄີສະເໝີພາບລະຫວ່າງຊົນເຜົ່າຕ່າງໆ ຂອງ ພັກປະຊາຊົນປະຕິວັດລາວ ແມ່ນໄດ້ຮັບການຈັດຕັ້ງປະຕິບັດໃນທຸກການເຄື່ອນໄຫວແຫ່ງຊີວິດຂອງສັງຄົມ, ຄວາມແຕກຕ່າງລະຫວ່າງຊົນເຜົ່າຕ່າງໆ ແລະລະຫວ່າງຕົວເມືອງກັບຊົນນະບົດ, ລະຫວ່າງທົ່ງພຽງກັບພູດອຍກໍ່ຄ່ອຍໆຫຍັບເຂົ້າຫາກັນ ແລະ ກໍ່ມີແຕ່ຢູ່ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວ




ນາງສາວຫຼ້າພ້ອມດ້ວຍນັກຮ້ອງຍິງ -ຊາຍ , ຮ້ອງເພັງລວມໝູ່ເປັນພາສາ ຊົນເຜົ່າ ອາຄາ

---
ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

**ອັນມີ** ສະຫາຍ ປະທານ ຄຳໄຕ ສີພັນດອນ ເປັນຜູ້ນຳໜ້ານັ້ນ ແລະ ຍັງມີບັນດາທ່ານ **ກຳມະການ**ໃນຄະນະປະຈຳພັກແຂວງ, ເມືອງເປັນຜູ້ຊີ້ນຳ ນຳພາ ແລະກະຕຸກຊຸກຍູ້ **ໃນ**ການຈັດຕັ້ງປະຕິບັດໂດຍກົງເທົ່ານັ້ນຈຶ່ງຈະເຮັດໃຫ້ບັນດາເອກະລັກທາງດ້ານ **ວັດທະນະທຳ** ທີ່ເປັນມູນເຊື້ອ ຂອງບັນດາຊົນເຜົ່າ ຈຶ່ງຈະໄດ້ມີການ ອະນຸລັກ, ຮັກສາ ແລະ **ສົ່ງ**ເສີມຂະຫຍາຍຂຶ້ນຕາມບາດກ້າວການຂະຫຍາຍຕົວຂອງປະເທດຊາດ ແລະ **ຍຸກ**ສະໄໝຢ່າງແນ່ນອນ.



ຊຸດອາພອນເພດຂອງຊົນເຜົ່າ ອາຄາ ( ກໍ) ນາງ ສາວຫຼ້າ ອາຍຸ 20 ປີ ແຂວງ ບໍ່ແກ້ວ

# ກອງສິລະປະແຂວງ ຫລວງພະບາງ ກັບການພັດທະນາຕົນເອງ

*******************

ຫຼວງພະບາງ ແມ່ນໜຶ່ງໃນຈຳນວນ 16 ແຂວງ ຂອງ ສ ປ ປ ລາວ ເຊິ່ງມີເຂດແດນຕິດກັບແຂວງຫົວພັນ, ຊຽງຂວາງ, ວຽງຈັນ, ໄຊຍະບູລີ, ຜົ້ງສາລີ, ອຸດົມໄຊ ແລະ ສ ສ ຫວຽດນາມ ເປັນແຂວງທີ່ເກົ່າແກ່ ເຊິ່ງປະກອບດ້ວຍຫຼາຍຊົນເຜົ່າ ທີ່ໄດ້ຕັ້ງພູມລຳເນົາບົນດິນຕອນນີ້ຕັ້ງຫຼາຍພັນປີມາແລ້ວຄື: ຊົນເຜົ່າລາວ, ລື້, ຍວນ, ກຶມມຸ, ມົ້ງ, ລະເມດ, ໄຕ, ແສນສີລີ...ບັນດາຊົນເຜົ່າຢູ່ແຂວງຫຼວງພະບາງ ເປັນຊົນເຜົ່າດັ້ງເດີມເກົ່າແກ່ ແຕ່ຍັງຄົງຮັກສາເອກະລັກສະເພາະຂອງຊົນເຜົ່າໃຜລາວເປັນຕົ້ນ ແມ່ນເອກະລັກ ກ່ຽວກັບ ພາສາປາກເວົ້າ; ປະຫວັດສາດຄວາມເປັນມາ. ກົກເຄົ້າຕົ້ນກຳເນີດ ແລະ ຊື່ຮຽກເດີມທີ່ພວກເຂົາເຈົ້າມີຄວາມສະໝັກໃຈ ພ້ອມນັ້ນຍັງມີ ເອກະລັກ ກ່ຽວກັບການປະກອບສ້າງ, ທາງດ້ານລະບົບແນວຄິດ,ຈິດຕະສາດ ທີ່ສະແດງອອກໃນວົງຄະນາຍາດ ວັດທະນະທຳ ຄື: ວັດທະນະທຳດ້ານວັດຖຸ, ວັດທະນະທຳດ້ານສັງຄົມ ແລະ ວັດທະນະທຳ ດ້ານຈິດໃຈ.

ບັນດາຊົນເຜົ່າຢູ່ແຂວງ ຫຼວງພະບາງ ລ້ວນແລ້ວແຕ່ເປັນຊົນເຜົ່າທີ່ມີມູນເຊື້ອທາງ ດ້ານສິລະປະວັດທະນະທຳ ແລະ ສິລະປະວັນນະຄະດີ, ທັງເປັນຜູ້ມີຄວາມສະຫງວນຄວາມງາມ, ຮັກສິລະປະວັນນະຄະດີຂອງຊົນເຜົ່າຕົນເອງຢ່າງແຮງກ້າທີ່ສຸດເປັນແຂວງໜຶ່ງທີ່ມີວາດຂັບລຳຂອງ ຊົນເຜົ່າຕ່າງໆປະຈຳແຂວງຫຼວງພະບາງ ເຊັ່ນ: ຂັບທຸ້ມ, ຂັບສາມສ້າວ, ອ່ານໜັງສືຂອງຊົນເຜົ່າລາວ, ຂັບເຈີມອ້າຍ, ເຈີມນ້ອງ, ຂອງ ຊົນເຜົ່າກຶມມຸ, ຂັບລື້, ຂັບຍວນ, ຂັບມົ້ງ ແລະ ຍັງມີວາດຟ້ອນພື້ນເມືອງ ລາວ ຢ່າງຫຼວງ ຫຼາຍ. ເນື່ອງຈາກ ບັນດາຊົນເຜົ່າແຂວງ ຫຼວງພະບາງ ເປັນຄົນທີ່ຮັກ ສິລະປະວັນນະຄະດີຂອງຕົນສົມທົບກັບ ຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ ແລະ ຄວາມຄອງຄອຍຂອງປະຊາຊົນເຜົ່າຕ່າງໆໃນສະໄໝນັ້ນ. ຄະນະພັກ , ອຳນາດການປົກຄອງແຂວງຫຼວງພະບາງ ຈຶ່ງໄດ້ຕົກລົງ ສ້າງ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ຕັ້ງກອງສິລະປະກອນແຂວງຂຶ້ນເມື່ອປີ 1967 ກ່ອນ ບັ້ນຮົບນ້ຳບາກ ທີ່ລີຊີ 1 ປີ ເຊິ່ງປະກອບມີ ນັກຮ້ອງນັກຟ້ອນ ແລະ ນັກດົນຕີ ປະມານ 40 ຄົນ ໃນນັ້ນມີແມ່ຍິງ 18 ຄົນ ເຊິ່ງປະກອບດ້ວຍເກືອບທຸກຊົນເຜົ່າ. ພາຍຫຼັງໄດ້ຮັບການສ້າງຕັ້ງຂຶ້ນແລ້ວກອງສະແດງອາຊີບດັ່ງກ່າວໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ໜ້າທີ່ການເມືອງ, ຮັບໃຊ້ກອງທະ ຫານຢູ່ແນວໜ້າ, ຮັບໃຊ້ຮາກຖານການຜະລິດ ຢູ່ເຂດທີ່ໝັ້ນ ຂອງການປະຕິວັດ ແລະ ຢູ່ ເຂດຍາດແຍ່ງ ຂອງ ສອງກຳລັງ ສະໄໝນັ້ນ. ຕົກມາຮອດໄລຍະໜຶ່ງ ຄະນະນຳ ແຂວງ ຫຼວງພະບາງໄດ້ສົ່ງ ກອງ ສະແດງ ດັ່ງກ່າວໄປ ຍົກລະດັບ ແລະ ປັບປຸງການສະແດງ ຂອງ ຕົນຢູ່ ໂຮງຮຽນສິລະປະດົນຕີຣ ຂອງ ສູນກາງ ທີ່ເມືອງວຽງໄຊ ແຂວງ ຫົວພັນ ແລະ ຢູ່ ແຂວງ ລາຍເຈົາແຫ່ງ ສ ສ ຫວຽດນາມ. ຜ່ານໄລຍະແຫ່ງການເຕີບໃຫ່ຍຂະຫຍາຍຕົວ ເປັນໄລຍະເວລາຫຼາຍ ທົດສະຕະວັດ ມານັ້ນ, ກອງສິລະປະກອນ ແຂວງ ຫຼວງພະບາງ ໄດ້ສູ້ຊົນພະຍາຍາມປະດິດ ຄິດແຕ່ງ ບົດຟ້ອນພື້ນເມືອງ ປະມານ 30 ກ່ວາບົດ, ປະດິດຄິດແຕ່ງບົດເພງ ແລະຂັບລຳທ້ອງຖິ່ນ ປະມານ 50 ບົດ. ບໍ່ພຽງແຕ່ເທົ່ານັ້ນ ກອງ ສິລະປະກອນ ແຂວງ ຫຼວງພະບາງຍັງໄດ້ເຄື່ອນໄຫວສະແດງຮັບໃຊ້ພາຍໃນແຂວງ ຂອງຕົນປະມານ 100 ກ່ວາຄັ້ງ, ສະແດງຢູ່ຕ່າງປະເທດເປັນຕົ້ນ ຢູ່ ສ.ສ ຫວຽດນາມ ແລະ ຊຽງຄານ ແຫ່ງລາຊະອານາຈັກໄທ ແລະໄດ້ເຂົ້າຮ່ວມງານມະໂຫລານລະດັບທ້ອງຖິ່ນ ແລະ ລະດັບຊາດຫຼາຍຄັ້ງ ແຕ່ສິ່ງໂດດເດັ່ນກ່ວາໝູ່ນັ້ນແມ່ນ ປີ1986 ໄດ້ເຂົ້າຮ່ວມປະກວດ ແຂ່ງຂັນລຳທ້ອງຖິ່ນ ທົ່ວປະເທດແມ່ນໄດ້ຮັບທຸງໄຊຊະນະເລີດ ຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ. ເຂົ້າຮ່ວມງານສະແດງຟ້ອນ ພື້ນເມືອງໄດ້ຮັບລາງວັນຊົມເຊີຍ, ເຂົ້າຮ່ວມງານປະກວດລຳເລື່ອງ ໃນປີ 1982 ໄດ້ ລາງ ວັນປະເພດ 2 ແລະ ປະກວດ ສິລະປະວັນນະຄະດີ ທົ່ວກອງທັບ ເມື່ອປີ 1994 ໄດ້ລະດັບ ທີ່ 2 ແລະ ບັນດາລາຍການກໍຄື: ການສະແດງແຕ່ລະຄັ້ງນັ້ນລ້ວນແຕ່ໄດ້ຮັບຄວາມນິຍົມ ແລະ ໄດ້ສ້າງຄວາມສະເທືອນໃຈສາມາດ ດຶງດູດຈິດໃຈແຂກ ຕ່າງດ້າວ ທ້າວ ຕ່າງແດນ ຢາກແວ່ຢາມແຂວງ ຫຼວງພະບາງ ບໍ່ຂາດລະດູການ.

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ປະຈຸບັນຢູ່ແຂວງຫຼວງພະບາງ ໄດ້ມີກອງສິລະປະດົນຕີແຂວງ, ໜ່ວຍສິລະປະວັນນະຄະດີຂອງກອງບັນຊາການທະຫານແຂວງ ແລະ ຄະນະຟື້ນຟູບົດຟ້ອນພື້ນເມືອງລາວ, ໜ່ວຍສິລະປະວັນນະຄະດີ ເມືອງຫຼວງພະບາງ ທີ່ມີລັກສະນະເຄິ່ງອາຊີບພ້ອມກັນນັ້ນຍັງມີໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນໃນທຸກເມືອງ ເກືອບທຸກບ້ານໃນໂອກາດເຂົ້າຮ່ວມບຸນມະໂຫລານວັດທະນະທຳບັດາຊົນເຜົ່າທົ່ວປະເທດຄັ້ງທີ່ II ປີ 2000 ທີ່ນະຄອນ ຫຼວງວຽງຈັນນັ້ນ ທ່ານ ພອນໄຊ ອິນທະຈັກ ຫົວໜ້າ ກອງສິລະປະກອນ ແຂວງຫຼວງພະບາງ ໄດ້ມີຄວາມກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ເພື່ອເປັນການປະກອບສ່ວນໃນການສະແດງໃນໂອກາດບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າທົ່ວປະເທດຄັ້ງ ທີ່II ປີ 2000 ໃຫ້ມີບັນຍາກາດ ຟົດຟື້ນນັ້ນ ແຂວງ ຫຼວງພະບາງ ຂອງພວກເຮົາໄດ້ນຳເອົານັກສະແດງ



ສາກໜຶ່ງຂອງວາດຟ້ອນຄາບໄຫເຫຼົ້າ ຂອງຊົນເຜົ່າ ກຶມມຸ ສະແດງໂດຍ ໜ່ວຍສິລະປະ ວັນນະຄະດີພື້ນເມືອງບັນດາຊົນເຜົ່າ ແຂວງ ຫຼວງພະບາງ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

22 ຄົນເຊິ່ງໄດ້ ເລືອກເຟັ້ນມາຈາກ ກອງ ສິລະປະກອນແຂວງ ແລະ ໜ່ວຍ ສິລະປະວັນນະຄະດີ ສະໜັກຫຼິ້ນໝູ່ບ້ານຊົນເຜົ່າຕ່າງໆ ແລະ ບາງໂຮງຮຽນ ມັດທະຍົມຕອນປາຍ ພ້ອມດ້ວຍ ລາຍ ການສະແດງ 4 ລາຍການ ຄື: ຮ້ອງເພງ ລວມໝູ່: ຊົມເຊີຍ ບັ້ນຮົບນ້ຳບາກ ທີ່ມີໄຊ ແລະ ຫຼວງພະບາງ ຍິນດີຕ້ອນຮັບ, ຂັບພື້ນເມືອງ ຫຼວງພະບາງ ( ຂັບທຸ້ມ ) ທີ່ສ່ອງແສງເຖິງການກ່ຽວບ່າວສາວ,ຟ້ອນຄາບໄຫເຫຼົ້າ ຊົນເຜົ່າກືມມຸ ເຊິ່ງແມ່ນລາຍການໃໝ່ໄດ້ເລືອກເຟັ້ນມາຈາກເມືອງນ້ຳບາກ ທີ່ສ່ອງແສງເຖິງຜູ້ມີກຳລັງແຮງ, ມີເວດມົນ ກົນກະຖາ ແລະ ບົດຟ້ອນເມືອງ ນາງແກ້ວ; ພ້ອມກັນນັ້ນແຂວງຫຼວງພະບາງ ຍັງໄດ້ນຳເອົາຜະລິດຕະພັນທາງດ້ານວັດທະນະທຳ, ດ້ານວັດຖຸຂອງບາງຊົນເຜົ່າມາວາງສະແດງໃນງານຕະຫຼາດນັດບຸນທາດຫຼວງ ປີ 2000 ຄື: ຜ້າແພຂອງຊົນເຜົ່າລື້ ຢູ່ບ້ານພະນົມ ເຊິ່ງໄດ້ມີຊື່ສຽງໃນການຕຳຫູກທໍ່ໄໝ ບໍ່ຈັກວ່າທໍ່ໃດເສັ້ນຄົນມາແລ້ວ. ພ້ອມກັນນັ້ນຍັງມີອາຫານ ພື້ນບ້ານຂອງແຂວງຫຼວງພະບາງເປັນຕົ້ນ: ແຈ່ວບອງ, ໄຄແຜ່ນ, ເຂົ້າຂື້ໝູ ເຊິ່ງເປັນອາຫານທີ່ຊາວຫຼວງພະບາງ ມີຄວາມນິຍົມມາແຕ່ບູຮານນະການພຸ້ນ. ຄຽງຄູ່ກັບບັນດາບັນຫາທີ່ກ່າວມານັ້ນແລ້ວ, ທ່ານ ພອນໄຊ ອິນທະຈັກ ຍັງໄດ້ເນັ້ນໜັກເຖິງທິດທາງ ແຜນ ການທີ່ຈະສືບຕໍ່ສູ້ຊົນຈັດຕັ້ງປະຕິບັດໃນຂົງເຂດວຽກງານສິລະປະວັນນະຄະດີ ພື້ນເມືອງ ບັນດາ ຊົນເຜົ່າຢູ່ ແຂວງ ຫຼວງພະບາງວ່າ: ມີແຜນການຟື້ນຟູ ບົດຟ້ອນພື້ນເມືອງ ແລ້ວຈະອັດໃສ່ກະແຊັດ ແລະ ແຈກຢາຍລົງແຕ່ລະໂຮງຮຽນຊັ້ນຕ່າງໆເພື່ອແນໃສ່ໃຫ້ຄູອາຈານດຳເນີນການສິດສອນ ຢູ່ແຕ່ລະ ໂຮງຮຽນ.

ຈະສ້າງເປັນໂຄງການຫຼັກສູດ ເພື່ອດຳເນີນການສິດສອນຢູ່ໂຮງຮຽນ ສາມັນຊັ້ນຕ່າງໆ.

ຈະປັບປຸງບຸກຄາລະກອນຄືນໃໝ່ ເປັນຕົ້ນແມ່ນຈະໄດ້ຊອກຫາ ຜູ້ທີ່ມີພອນສະຫວັນ ຢູ່ຕາມໂຮງຮຽນສາມັນ ແລະ ໝູ່ບ້ານຊົນເຜົ່າຕ່າງໆ ປະກອບເຂົ້າໃຫ້ກອງສິລະປະກອນແຂວງເພື່ອຈະເປັນຜູ້ສືບທອດ.

ຈະນຳໃຊ້ທຶນ 50.000.000 ກີບ ທີ່ແຂວງອະນຸມັດໃຫ້ນັ້ນ ເພື່ອຊື້ອຸປະກອນຮັບໃຊ້ໃນການສະແດງຢ່າງມີປະສິດທິຜົນ.

ພ້ອມກັບບັນດາບັນຫາທີ່ກ່າວມານັ້ນແລ້ວ ທ່ານຫົວໜ້າກອງສິລະປະກອນ ແຂວງ ຫຼວງພະບາງ ຍັງໄດ້ ເນັ້ນໜັກເຖິງມາດຕາການຕ່າງໆ ເພື່ອຈຳກັດ ບັນດາວັດທະນະທຳ ທີ່ບໍ່ດີຈະແຊກເຂົ້າມາທຳລາຍວັດທະນະທຳອັນດີງາມຂອງຊາດ ເປັນຕົ້ນ ແມ່ນໄດ້ຈຳກັດບໍ່ໃຫ້ຮ້ອງເພງຕ່າງປະເທດ ແລະ ຫຼິ້ນກິນຟູມເຟືອຍທີ່ເກີນຄວນນັ້ນກໍ່ຈະໃຫ້ຍຸບເປັນທາງການ. ທັງໝົດເຫຼົ່ານັ້ນກໍ່ເພື່ອຮັກສາ ແລະ ຂະຫຍາຍນາມໃຫ້ສົມຊື່ວ່າ: ເມືອງ ຫຼວງພະບາງ ແຫ່ງມໍລະດົກໂລກ.



ສາກໜຶ່ງຂອງການສະແດງຟ້ອນຄາບໄຫເຫຼົ້າ ຊົນເຜົ່າ ກຶມມຸ ເມືອງ ນ້ຳບາກ ແຂວງ ຫຼວງພະບາງ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ສັງລວມແລ້ວຜ່ານໄລຍະທີ່ ໜ່ວຍສິລະປະວັນນະຄະດີ ພື້ນເມືອງ ບັນດາຊົນເຜົ່າແຂວງຫຼວງພະບາງ ໄດ້ສະແດງຢູ່ຫໍວັດທະນະທຳແຫ່ງຊາດ ແລະ ຢູ່ເດີ່ນຫາດຫຼວງວຽງຈັນ ໃນໂອກາດບຸນມະໂຫລານວັດທະນະທຳ ບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ II ປີ 2000 ຄັ້ງນີ້ ແມ່ນໄດ້ຮັບຄວາມນິຍົມຈາກ ບັນດາທ່ານ ຜູ້ຊົມຢ່າງໜ້າຈັບໃຈທີ່ສຸດ ແຕ່ລາຍ ການທີ່ຊາວນະຄອນຫຼວງວຽງຈັນ ແລະ ຊາວລາວທົ່ງປະເທດມີຄວາມງຶດງໍ້ ອັດສະຈັນນັ້ນແມ່ນບົດຟ້ອນຄາບໄຫເຫຼົ້າຂອງຊົນເຜົ່າ ກຶມມຸ ທີ່ມາຈາກ ເມືອງ ນ້ຳບາກ ແລະ ບົດຟ້ອນ ຄາບໄຫເຫຼົ້າ ທີ່ມີນ້ຳໜັກ 20 ກິໂລກຣາມ ( ນັບທັງໄຫ, ເຫຼົ້າ ແລະ ນ້ຳ ) ມັນສະແດງໃຫ້ເຫັນໄດ້ມີສອງຄວາມໝາຍ ຄື: ສະແດງເຖິງຜູ້ທີ່ມີ ລິດເດດ ແລະ ເວດມົນ ກົນກະຖາ ອາຄົມ ຈຶ່ງ ສາມາດເອົາປາກຄາບໄຫເຫຼົ້າທີ່ມີນ້ຳໜັກຫຼາຍສົມຄວນໄປໄກໄດ້. ຖ້າອີງໃສ່ວິທະຍາສາດ ຫຼືຕົວຈິງແລ້ວແມ່ນຜູ້ທີ່ມີຄວາມສາມາດເອົາປາກຄາບໄຫເຫຼົ້າທີ່ມີນ້ຳໜັກສູງຄືແນວນີ້ ຕ້ອງແມ່ນຜູ້ທີ່ມີສຸຂະພາບເຂັ້ມແຂງ ແລະ ທັງແມ່ນ ຜູ້ທີ່ມີໄຫວພິກຕິກຕັກດີ ແລະ ທັງມີລີລາໃນການສະແດງສູງສົມຄວນ. ແຕ່ວ່າບັນດາບັນຫາທີ່ໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງຫຼວງພະບາງ ສາມາດພັດທະນາຕົນເອງ ແລະບົນຕົວກ້າວຂຶ້ນຈົນກ່ວາໄດ້ເຮັດໃຫ້ພວກເຂົາເຈົ້າມີບົດບາດ ຊື່ສຽງດັ່ງໄດ້ກ່າວມາຂ້າງເທິງນັ້ນ, ກໍ່ແມ່ນເນື່ອງມາຈາກຢູ່ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວອັນມີສະຫາຍ ຄຳໄຕ ສີພັນດອນ ເປັນຜູ້ນຳໜ້າ ແລະມັນໄດ້ຊີ້ໃຫ້ເຫັນວ່ານະໂຍບາຍສາມັກຄີສະເໝີພາບລະຫ່ວາງຊົນເຜົ່າຕ່າງໆແມ່ນໄດ້ຮັບການຈັດຕັ້ງປະຕິບັດໃນທຸກການເຄື່ອນໄຫວແຫ່ງຊີວິດ ສັງຄົມ%




ຮ້ານວາງສະແດງຜະລິດຕະພັນ ທາງດ້ານ ວັດທະນະທຳ ດ້ານ ວັດຖຸ ຂອງ ແຂວງ ຫຼວງພະບາງ



ການສະແດງຟ້ອນຄາບໄຫເຫຼົ້າ ຊົນເຜົ່າ ກຶມມຸ ສະແດງໂດຍໜ່ວຍສິລະປະວັນນະຄະດີ ພື້ນເມືອງ
ບັນດາຊົນເຜົ່າ ເມືອງນ້ຳບາກ ແຂວງ ຫຼວງພະບາງ

# ບາດກ້າວການຂະຫຍາຍຕົວຂອງວຽກງານ ສິລະປະວັນນະຄະດີບັນດາຊົນເຜົ່າຢູ່ ແຂວງ ຫົວພັນ

***********************************

ຫົວພັນ ແມ່ນແຂວງໜຶ່ງຕັ້ງຢູ່ພາກຕາເວັນອອກສ່ຽງເໜືອຂອງ ສ.ປ.ປ.ລາວ ມີເຂດ ແດນຕິດກັບແຂວງ ຊຽງຂວາງ, ຫຼວງພະບາງ, ບັນດາແຂວງ ຂອງ ສ. ສ ຫວຽດນາມ. ຫົວພັນ ແມ່ນດິນແດນແຫ່ງປະຫວັດສາດທີ່ລືຊື່ ສຳຄັນແຫ່ງໜຶ່ງຂອງປະເທດເຮົາ. ດ້ວຍທີ່ຕັ້ງທາງດ້ານພູມສາດ, ສະໄໝສົງຄາມກູ້ຊາດ ຫົວພັນຈຶ່ງໄດ້ກາຍເປັນເຂດທີ່ໝັ້ນ ຂອງການປະຕິວັດ, ຖ້ຳຜາທຳມະຊາດ ແລະ ຖ້ຳທີ່ໄດ້ຂຸດໃໝ່ໃນຊຸມປີ 1960 ອັນກວ້າງໃຫຍ່ ແລະຫຼວງຫຼາຍຢູ່ເມືອງວຽງໄຊ ບໍ່ພຽງແຕ່ເປັນບ່ອນພັກພາອາໄສ ອັນປອດໄພຂອງປະຊາຊົນເທົ່ານັ້ນ. ແຕ່ຍັງເປັນເຮືອນພັກພາອາໄສ ຂອງບັນດາທ່ານຜູ້ນຳ ຂອງການປະຕິວັດ, ເປັນບ່ອນຕັ້ງສຳນັກງານອົງການ, ໂຮງຈັກ, ໂຮງງານ, ໂຮງໝໍ, ໂຮງຮຽນ ແລະ ກອງບັນຊາການກຳລັງປະຕິວັດອີກ. ພື້ນທີ່ ສ່ວນຫຼາຍເປັນພູຜາສູງ ຊັນ, ມີຖ້ຳ, ມີບໍ່ນ້ຳຮ້ອນ ແລະໄມ້ຊະນິດຫາຍາກນັ້ນຄື: ໄມ້ໂລ່ງເລ່ງ ແລະ ອື່ນໆ.

ຫົວພັນ ແມ່ນແຂວງເກົ່າແກ່ດັ້ງເດີມປະກອບມີຫຼາຍຊົນເຜົ່າທີ່ໄດ້ດຳລົງຊີວິດ, ຕັ້ງພູມລຳເນົາຢ່າງສະຫຼັບສັບຫວ່າງເຊິ່ງກັນ ແລະ ກັນບົນດິນດອນຕອນນີ້ເປັນເວລາເຫິງນານມາແລ້ວຄື: ຊົນເຜົ່າລາວ, ຜູ້ໄທ, ໄຕ(ໄຕດຳ, ໄຕແດງ, ໄຕຂາວ ), ມົ້ງ, ກຶມມຸ, ອີວມຽນ, ຜ້ອງ, ຊິງມູນ ແລະ ເມືອງ. ບັນດາຊົນເຜົ່າທີ່ກ່າວມານີ້ ສວນຫຼວງຫຼາຍເປັນ ຊົນເຜົ່າດັ້ງເດີມ ແຕ່ມີບາງຊົນເຜົ່າ ແມ່ນຫາກໍ່ເຄື່ອນຍ້າຍມາຈາກບັນດາປະເທດ ທີ່ໃກ້ຄຽງປະມານ 3 - 4 ສະຕະວັດມານີ້. ຊົນເຜົ່າຕ່າງໆຢູ່ແຂວງຫົວພັນ ແມ່ນຍັງຄົງໄດ້ຮັກສາເອກະລັກກ່ຽວກັບພາສາປາກເວົ້າ ເຊິ່ງໄດ້ນຳໃຊ້ເປັນສື່ສານຕິດຕໍ່ພົວພັນແລກປ່ຽນຊື້ຂາຍພາຍໃນຊົນເຜົ່າຂອງຕົນເອງ ແລະ ບັນດາຊົນເຜົ່າທີ່ໃກ້ຄຽງ; ບໍ່ສະເພາະແຕ່ເທົ່ານັ້ນ ພວກເຂົາເຈົ້າຍັງມີປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດ ແລະ ຊື່ຮຽກເດີມເປັນອັນສະເພາະຂອງຊົນເຜົ່າຕົນເອງ ແລະ ຍັງມີເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດຈິດຕະສາດທີ່ສະແດງອອກໃນວົງຄະນາຍາດ ວັດທະນະທຳ ຄື: ວັດທະນະທຳ

ວັດຖຸ, ດ້ານສັງຄົມ ແລະ ວັດທະນະທຳດ້ານຈິດໃຈ. ບັນດາຊົນເຜົ່າຢູ່ ແຂວງຫົວພັນ ເປັນຊົນເຜົ່າທີ່ມີຄວາມສະຫງວນຄວາມງາມ, ມີມູນເຊື້ອທາງດ້ານ ສິລະປະວັນນະຄະດີ, ມີກອນຂັບລຳ, ວາດຟ້ອນປະຈຳທ້ອງຖິ່ນ ແລະ ຊົນເຜົ່າຂອງຕົນເອງຄື: ຂັບຊຳເໜືອ, ຂັບໄຕດຳ, ຂັບອີລູລາແລ, ຂັບມົ້ງ, ຂັບເຕີນ, ຂັບອີວມຽນ, ຂັບເມືອງ ແລະ ຂັບມະຫາໄຊ ຂອງຊົນເຜົ່າຜ້ອງ ຢູ່ເຂດບ້ານສະເລີຍ ທີ່ອອນຊອນ ແລະໜ້າຈັບໃຈ, ບໍ່ສະເພາະແຕ່ເທົ່ານັ້ນບັນດາຊົນເຜົ່າຢູ່ແຂວງດັ່ງກ່າວ ຍັງມີວາດຟ້ອນທີ່ອ່ອນ ຊອນ ແລະ ງາມຕາທີ່ສະແດງເຖິງຄວາມດຸໝັ່ນຂະຫຍັນພຽນ ແລະ ສີໄມ້ລາຍມືອັນລະອຽດອ່ອນ, ອັນປານີດຂອງແມ່ຍິງຊາວແຂວງຫົວພັນ ບໍ່ພຽງແຕ່ເທົ່ານັ້ນ, ແມ່ຍິງ ຊົນເຜົ່າຕ່າງໆ ຢູ່ ແຂວງ ຫົວພັນ ຍັງມີມູນເຊື້ອໃນການປູກມອນປ້ອນໄໝມາແຕ່ບູຮານນະການ, ແມ່ຍິງສ່ວນຫຼາຍໃຊ້ແພຂັ້ນເຊິ່ງຫົວໃນລະດູໜາວ ອາດແມ່ນຍ້ອນເຫດນີ້ເອງຈຶ່ງໄດ້ຊື່ວ່າ: ຫົວພັນ ຜ້າຝ້າຍແພໄໝຕໍ່າ ຈົກດ້ວຍລີງລາຍອັນລະອຽດອ່ອນ ແລະ ຍ້ອນດ້ວຍສີທຳມະຊາດຂອງ ນາງສາວ ໄຕດຳ, ໄຕຂາວ, ໄຕແດງ ຈາກແຂວງຫົວພັນ ເປັນຜະລິດ ຕະພັນຫັດຖະກຳ ບໍ່ພຽງແຕ່ສ້າງລາຍຮັບໃຫ້ແກ່ຊ່າງຕໍ່າຫູກທໍ່ໄໝເທົ່ານັ້ນ ແຕ່ຍັງສ້າງຊື່ສຽງໃຫ້ແກ່ຄົນລາວໂດຍທົ່ວໄປວ່າເປັນຊ່າງຕໍ່າຫູກ ສີມືເປັນເລີດ.

ບົນພື້ນຖານບັນດາຊົນເຜົ່າ ແຂວງ ຫົວພັນ ມີມູນເຊື້ອທາງດ້ານ ສິລະປະ ວັນນະຄະດີ ທີ່ເລີ່ມຈາກການ ຂັບລຳ ຂອງບັນດາບຸກຄົນ ຢູ່ຕາມໝູ່ບ້ານຕ່າງໆກາຍເປັນ ໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຂອງບ້ານຊຳເໜືອ ແລະສົມທົບກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ ແລະຕອບສະໜອງຄວາມຄ່ອງຄອຍຂອງປະຊາຊົນເຜົ່າຕ່າງໆ ຢູ່ແຂວງດັ່ງກ່າວສະໄໝນັ້ນ, ຄະນະພັກ, ຄະນະປົກຄອງ ແຂວງຫົວພັນ ຈຶ່ງໄດ້ຕົກລົງສ້າງຕັ້ງກອງສິລະປະກອນແຂວງຂຶ້ນໃນປີ 1964 ແລະ ໃນເບື້ອງຕົ້ນມີນັກສະແດງພຽງແຕ່ 24 ຄົນ, ໃນນັ້ນມີແມ່ຍິງ 12 ຄົນ ເຊິ່ງປະກອບມີນັກຮ້ອງ, ນັກຂັບລຳ, ນັກຟ້ອນ ແລະນັກດົນຕີເມື່ອໄດ້ສ້າງຕັ້ງແລ້ວກອງສະແດງອາຊີບດັ່ງກ່າວ ໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ກອງທະຫານທີ່ປະຈຳຢູ່ ແນວໜ້າ ແລະ ຮາກຖານການ ຜະລິດ ຈຳນວນ ໜຶ່ງ. ຖັດຈາກ ນັ້ນເພື່ອແນໃສ່ເຮັດໃຫ້ ນັກ ສະແດງມີຄວາມຮູ້ຄວາມສາມາດ ທາງດ້ານ ວິຊາການ ສະແດງຢ່າງ ແນ່ນອນ ແລະ ສູງຂຶ້ນກ່ວາເກົ່ານັ້ນ. ອຳນາດການປົກຄອງແຂວງຫົວພັນ ຈຶ່ງໄດ້ຕົກລົງໃຫ້ກອງ

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ສະແດງດັ່ງກ່າວໄປຍົກລະດັບ ແລະ ປັບປຸງເນື້ອໃນລາຍການສະແດງຂອງຕົນຢູ່ແຂວງ ແທກສ່ງວ ເຊີນລາ ແຫ່ງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເປັນເວລາ 6 ເດືອນ ຈຶ່ງກັບ ຄືນເຄື່ອນໄຫວສະແດງ ຮັບໃຊ້ຢູ່ ແນວໜ້າໂດຍ ສະເພາະແມ່ນສະໄໝ ປົດປ່ອຍຜາ ຖີ່, ນາຄັງ, ເມືອງ ເປີນ ແລະແຫ່ງ ອື່ນໆ, ຖັດຈາກນັ້ນມາຮອດ ປີ 1973 ກອງ ສິລະປະກອນ ແຂວງ ຫົວພັນ ໄດ້ປັບປຸງ ນັກ ສະແດງ ແລະ ລາຍການສະແດງ ຂອງຕົນຢູ່ແຂວງແທກສ່ງວ ແທັງຮວາ ແຫ່ງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ,ປີ 1974,1975 ໄດ້ສົ່ງນັກ ສະແດງຈຳນວນໜຶ່ງໄປ ຍົກລະດັບຢູ່ໂຮງຮຽນສິລະ ປະດິນຕີຂອງສູນກາງທີ່ ເມືອງ ວຽງໄຊ, ປີ 1977 ໄດ້ມີການແລກປ່ຽນບົດ ຮຽນດ້ານສິລະປະວັນນະ ຄະດີ ລະຫ່ວາງ 2 ແຂວງ ຫົວພັນ, ແຂວງຊຽງຂວາງ ແຕ່ປີ1987 ເຖິງປະຈຸບັນ ເນື່ອງຈາກນັກສະແດງ ເຖົ້າແກ່ອາວຸໂສ ,ຈຶ່ງຍັງ ເຫຼືອພຽງແຕ່ 9 ຄົນ.ບັນ ດານັກສະແດງອາວຸໂສ ຈຳນວນໜຶ່ງແມ່ນໄດ້ຍົບ ຈຸສັບຊ້ອນເຮັດວຽກງານ ໃໝ່ຢູ່ບັນດາຂະແໜງ ການຂອງແຂວງ ແລະ ເມືອງ, ສ່ວນ ຈຳນວນ ຫຼວງຫຼາຍນັ້ນແມ່ນໄດ້



ຊຸດອາພອນເພດຊົນເຜົ່າໄຕແດງ:ນ.ລານ ແລະທ.ສົມຈັນ ແຂວງ ຫົວພັນ

ລົງສູ່ຮາກຖານ ແລະໄດ້ຊອກຫາໂອກາດທີ່ເໝາະສົມເພື່ອສິດສອນໃຫ້ລູກໆຫຼານໆ ເພື່ອແນໃສ່ເຮັດໃຫ້ຄົນຮຸ່ນໃໝ່ຮູ້ຂັບລຳ, ຮູ້ຟ້ອນ ແລະຮູ້ໃຊ້ເຄື່ອງດົນຕີພື້ນເມືອງ ຂອງຊົນເຜົ່າຕົນເອງຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ ເນື່ອງຈາກ ມີນັກສະແດງທີ່ ມີຄວາມ ຊຳນານງານທີ່ໄດ້ແຈກຢາຍຢູ່ຕາມຄູ້ມບ້ານຕ່າງໆ ຄືໄດ້ກ່າວມານັ້ນ ຈຶ່ງໄດ້ເຮັດໃຫ້ ໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຢູ່ແຂວງທົ່ວພັນ ໄດ້ມີການຂະຫຍາຍຕົວຢ່າງ ແຂງແຮງຕາມຕົວເລກທີ່ບໍ່ທັນຄົບຖ້ວນ ນັ້ນແມ່ນມີຫຼາຍກ່ວາ 40 ໜ່ວຍ ທີ່ນອນຢູ່ ຕາມໂຮງຮຽນຂັ້ນປະຖົມ, ມັດທະຍົມຕອນຕົ້ນ, ຕອນປາຍ ແລະໝູ່ບ້ານຂອງ ຊົນເຜົ່າຕ່າງໆ ເຊິ່ງຖ້າຫາກມີຜູ້ນຳຂັ້ນສູງ, ແຂກຕ່າງປະເທດ, ມີກອງປະຊຸມໃຫຍ່, ງານບຸນໃຫຍ່ສຳຄັນ ຂອງຊາດ ແລະ...ຮຽກຮ້ອງຕ້ອງການໃຫ້ມີການສະແດງສິລະປະວັນນະຄະດີ ນັ້ນກໍ່ ແມ່ນເຕົ້າໂຮມບັນດານັກສະແດງຢູ່ຕາມໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນ ມາເຝິກ ຊ້ອມຊົ່ວໄລຍະໜຶ່ງສົມທົບກັບໜ່ວຍສິລະປະວັນນະຄະດີແຂວງທີ່ບໍ່ຫຼວງຫຼາຍ ນັ້ນກໍ່ ແມ່ນສາມາດສະແດງຮັບໃຊ້ຂະບວນການຕ່າງໆຢ່າງທັນການ.

ຜ່ານຂະບວນວິວັດແຫ່ງການເຕີບໃຫຍ່ຂະຫຍາຍຕົວໜ່ວຍສິລະປະ ວັນນະຄະດີ ພື້ນເມືອງບັນດາຊົນເຜົ່າແຂວງທົ່ວພັນ ເປັນໄລຍະເວລາ 3 ທົດສະຕະວັດນັ້ນແມ່ນ ໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ຕາມໜ້າທີ່ການເມືອງ ແລະ ຂະບວນການຕ່າງໆ ພາຍໃນແຂວງຂອງຕົນບໍ່ຕ່ຳກ່ວາ1.000 ຄັ້ງ, ສະແດງຮັບໃຊ້ແຂວງແຮກສ່ຽວ ຫວຽດນາມ 20 ຄັ້ງ , ປະດິດແຕ່ງບົດຟ້ອນ 10 ບົດ, ປະດິດເພງ 60 ບົດ, ຂັບລຳທ້ອງຖິ່ນ 150 ບົດ, ປະດິດ ດົນຕີຣ 10 ບົດ ແລະ ບັນຫາທີ່ພົ້ນເດັ່ນກ່ວາໝູ່ແມ່ນໄດ້ປະດິດ ບົດລະຄອນຟ້ອນປົດປ່ອຍ ຜາຖີ່. ນອກຈາກບັນດາບັນຫາທີ່ກ່າວມານັ້ນ. ໜ່ວຍສິລະປະວັນນະຄະດີພື້ນເມືອງ ບັນດາ ຊົນເຜົ່າແຂວງທົ່ວພັນ ຍັງໄດ້ເຂົ້າຮ່ວມສະແດງໃນງານບຸນມະໂຫລານລະດັບທ້ອງຖິ່ນ, ລະດັບຊາດເຂົ້າຮ່ວມການສະແດງບັ້ນປະກວດບົດຮ້ອງທຳນອງເສບຕາມທີ່ຂັ້ນເທິງ ຈັດຂຶ້ນໃນແຕ່ລະຄັ້ງເປັນຕົ້ນໃນ ປີ 1986 ແມ່ນໄດ້ເຂົ້າຮ່ວມສະແດງໃນໂອກາດບຸນມະ ໂຫລານວັດທະນະທຳບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ່ I ທີ່ ນະຄອນຫຼວງວຽງຈັນ ແມ່ນ ໄດ້ຮັບລາງວັນປະເພດII, ໃນງານປະກວດການແຂ່ງຂັນ ສິລະປະວັນນະຄະດີ ພື້ນເມືອງ ເຍົາວະຊົນບັນດາຊົນເຜົ່າທົ່ວປະເທດ ປີ 1993 ທີ່ນະຄອນຫຼວງວຽງຈັນ ໄດ້ຮັບລາງວັນ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ປະເພດI, ບັ້ນປະກວດ ສິລະປະວັນນະຄະດີ ທົ່ວກອງທັບ ປີ 1994 ທີ່ນະຄອນຫຼວງວຽງຈັນ ໄດ້ຮັບລາງວັນປະເພດII, ບັ້ນປະກວດ ສິລະປະວັນນະຄະດີ ສາຍການເງິນ ທີ່ຈັດຂຶ້ນ ຢູ່ ແຂວງສະຫວັນນະເຂດ ໄດ້ຮັບລາງວັນປະເພດIII ແລະ ບັ້ນປະກວດສິລະປະ ວັນນະຄະດີສາຍກອງທັບເມື່ອປີ1998 - 1999 ໄດ້ປະເພດຊົມເຊີຍ ແລະເນື່ອງຈາກ ກອງສິລະປະກອນແຂວງຫົວພັນ ໄດ້ມີຜົນງານດີເດັ່ນໃນການເຄື່ອນໄຫວຮັບໃຊ້ໜ້າທີ່ ການເມືອງ ແລະຂະບວນການຕ່າງໆ ຢ່າງບໍ່ ຢຸດຢັ້ງນັ້ນ, ອຳນາດການປົກຄອງແຂວງ, ລັດຖະ ບານແຫ່ງ ສປປລາວ ແລະ ອຳນາດການປົກຄອງທ້ອງຖິ່ນກໍ່ຄື ລັດຖະບານ ຂອງ ປະເທດເພື່ອນມິດ ຈຶ່ງໄດ້ຕີກລາຍ້ອງຍໍດ້ວຍ ຮູບການຕ່າງໆ ໃຫ້ແກ່ ກອງສິລະປະກອນແຂວງ ຫົວພັນ ຢ່າງສົມກຽດເຊິ່ງ ມີລາຍລະອຽດດັ່ງນີ້ຄື: ປີ 1968 ແລະ1972 ແມ່ນໄດ້ຮັບຫຼຽນໄຊອິດ ສະຫຼະ ຊັ້ນII, ໄດ້ຮັບໃບ ຍ້ອງຍໍ ຂອງສູນກາງແນວ ລາວຮັກຊາດ 3 ໃບໄດ້ຮັບ ໃບຍ້ອງຍໍຂອງແຂວງ16ໃບ ແລະ ໃບຍ້ອງຍໍຂອງແຂວງ ແຮກສ່ວງແລະລັດຖະບານ ແຫ່ງ ສສ ຫວຽດນາມ10 ໃບ. ໃນໂອກາດ ເຂົ້າຮ່ວມ ບຸນມະ ໂຫລານວັດທະນະທຳ ບັນດາ ຊົນເຜົ່າ ຄັ້ງທີ II ປີ 2000 .



ຊຸດອາພອນເພດຊິງຊົນເຜົ່າ ໄຕດຳ, ບ.ນາລີ ,ທ.ອ້ອຍ,ຂ.ຫົວພັນ

ເຊິ່ງໄດ້ຈັດຂຶ້ນ ເມື່ອ ວັນທີ 7 - 12 / 11 / 2000 ທີ່ ນະຄອນຫຼວງວຽງຈັນ ທ່ານ ແພງສີ ສຸກຈະເລີນ ຫົວໜ້າ ພະແນກຖະແຫຼງຂ່າວ - ວັດທະນະທຳ ແຂວງ ຫົວພັນໄດ້ ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ເພື່ອປະກອບສ່ວນເຮັດໃຫ້ບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າຄັ້ງນີ້ ມີບັນຍາກາດຟົດຟື້ນນັ້ນແຂວງ ຫົວພັນ ຂອງ ພວກເຮົາໄດ້ນຳເອົານັກສະແດງ 22 ຄົນ ໃນນັ້ນມີແມ່ຍິງ 12 ຄົນ ເຊິ່ງປະກອບມີ 4 ຊົນເຜົ່າຄື: ຊົນເຜົ່າກຶມມຸ, ໄຕດຳ, ໄຕແດງ ແລະ ຊົນເຜົ່າລາວ ທີ່ໄດ້ມີການເລືອກເຟັ້ນຈາກຮາກຖານສົມທົບກັບນັກສະແດງຂອງກອງສິລະປະກອນແຂວງ ແລະໃນໄລຍະທີ່ຜ່ານມາບັນດານັກສະແດງເຫຼົ່ານີ້ ລ້ວນແຕ່ໄດ້ເຄີຍເຄື່ອນໄຫວໄປສະແດງຮັບໃຊ້ຂະບວນການຕ່າງໆພາຍໃນແຂວງ, ຕ່າງປະເທດ, ເຄີຍເຂົ້າຮ່ວມສະແດງໃນງານບຸນມະໂຫລານ ແລະ ບັ້ນປະກວດສິລະປະວັນນະຄະດີ ລະດັບທ້ອງຖິ່ນ ແລະ ລະດັບຊາດ ເຊິ່ງໄດ້ຮັບຄວາມນິຍົມຊົມຊອບຈາກບັນດາທ່ານຜູ້ເບິ່ງຜູ້ຊົມມາແລ້ວ ພ້ອມທັງໄດ້ເອົາ 2 ລາຍການໃຫ່ຍ ແລະແບ່ງເປັນ 12 ລາຍການນ້ອຍ ເພື່ອສະແດງປະກອບສ່ວນກັບໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າເຂດແຂວງອື່ນໆ ໃນໂອກາດງານບຸນອັນຄຶກຄື້ນນັ້ນຄື:

- ລາຍການຟ້ອນມີ 5 ລາຍການ : ບົດຟ້ອນເຂັນຝ້າຍ ທີ່ສ່ອງແສງເຖິງສີໄມ້ ລາຍມືອັນລະອຽດອ່ອນ ແລະ ຄວາມດຸໝັ່ນຂະຫຍັນພຽນຂອງແມ່ຍິງຊົນເຜົ່າລາວ ແຂວງ ຫົວພັນ ຢູ່ ເມືອງ ຊຳເໜືອ , ບົດຟ້ອນແກ່ວງລອງຮາງທີ່ສ່ອງແສງເຖິງຄວາມດຸໝັ່ນ ແລະ ວິຖີຊີວິດ ຂອງ ຍິງສາວ ຫຼື ແມ່ຍິງຊົນເຜົ່າໄຕແດງ, ບົດຟ້ອນສັກດຸງ ( ສັກເຂົ້າໄຮ່ ) ທີ່ໄດ້ຊີ້ໃຫ້ເຫັນເຖິງແບບແຜນການດຳລົງຊີວິດຂອງຊົນເຜົ່າກຶມມຸ ສະໄໝບູຮານ ແລະ ປະຈຸບັນ ບົດຟ້ອນມ່ວນຊື່ນຫຼິ້ນບຸນປີໃໝ່ທີ່ສ່ອງແສງເຖິງຮີດຄອງປະເພນີອັນດີງາມ ແລະ ຄວາມລິເລີ່ມໃນ ການຊອກຄູ່ຮັກຂອງບ່າວ - ສາວ ຊົນເຜົ່າມົ້ງສະໄໝບູຮານ ແລະ ປະຈຸບັນ ບົດຟ້ອນການມ່ວນ ຊື່ນເກັບກ່ຽວເຂົ້າຂອງໄຕດຳ.

- ລາຍການດົນຕີ, ຂັບລຳ ແລະ ເພງຮ້ອງມີ 7 ລາຍການຄື: ເປົ່າແຄນ ຊຳເໜືອ, ເສບດົນຕີ ພື້ນເມືອງຂອງຊົນເຜົ່າກຶມມຸ , ເພງຂອງຊົນເຜົ່າກຶມມຸ ທີ່ເວົ້າເຖິງຊີວິດໃໝ່ ຂອງ ຊົນເຜົ່າດັ່ງກ່າວ, ເພງສິ່ງພອນປີໃໝ່ຂອງຊົນເຜົ່າມົ້ງ, ຂັບຊຳເໜືອ ທີ່ເວົ້າເຖິງການຂັບຕໍ່ແຍ່ລະຫວ່າງຄູ່ບ່າວສາວ, ຂັບໄຕດຳ, ຂັບໄຕແດງ. ບັນດາບົດຮ້ອງ ທຳນອງເສບທີ່ໄດ້ນຳ

ເຊິ່ງໄດ້ຈັດຂຶ້ນ ເມື່ອ ວັນທີ 7 - 12 / 11 / 2000 ທີ່ນະຄອນຫຼວງວຽງຈັນ ທ່ານ ແພງສີ ສຸກຈະເລີນ ຫົວໜ້າ ພະແນກຖະແຫຼງຂ່າວ - ວັດທະນະທຳ ແຂວງ ຫົວພັນໄດ້ ໃຫ້ຄວາມ ກະຈ່າງແຈ້ງຕໍ່ຜູ້ຂຽນວ່າ: ເພື່ອປະກອບສ່ວນເຮັດໃຫ້ບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າ ຄັ້ງນີ້ ມີບັນຍາກາດຟົດຟື້ນນັ້ນແຂວງ ຫົວພັນ ຂອງ ພວກເຮົາໄດ້ນຳເອົານັກສະແດງ 22 ຄົນ ໃນນັ້ນມີແມ່ຍິງ 12 ຄົນ ເຊິ່ງປະກອບມີ 4 ຊົນເຜົ່າຄື: ຊົນເຜົ່າກຶມມຸ, ໄຕດຳ, ໄຕແດງ ແລະ ຊົນເຜົ່າລາວ ທີ່ໄດ້ມີການເລືອກເຟັ້ນຈາກຮາກຖານສົມທົບກັບນັກສະແດງຂອງກອງສິລະປະ ກອນແຂວງ ແລະໃນໄລຍະທີ່ຜ່ານມາບັນດານັກສະແດງເຫຼົ່ານີ້ ລ້ວນແຕ່ໄດ້ເຄີຍເຄື່ອນໄຫວ ໄປສະແດງຮັບໃຊ້ຂະບວນການຕ່າງໆພາຍໃນແຂວງ, ຕ່າງປະເທດ, ເຄີຍເຂົ້າຮ່ວມ ສະແດງໃນງານບຸນມະໂຫລານ ແລະ ບັ້ນປະກວດສິລະປະວັນນະ ຄະດີ ລະດັບທ້ອງຖິ່ນ ແລະ ລະດັບຊາດ ເຊິ່ງໄດ້ຮັບຄວາມນິຍົມຊົມຊອບຈາກບັນດາທ່ານຜູ້ເບິ່ງຜູ້ຊົມມາແລ້ວ ພ້ອມທັງໄດ້ເອົາ 2 ລາຍການໃຫຍ່ ແລະແບ່ງເປັນ 12 ລາຍການນ້ອຍ ເພື່ອສະແດງປະ ກອບສ່ວນກັບໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າເຂດແຂວງອື່ນໆ ໃນໂອກາດງານບຸນອັນຄຶກຄື້ນນັ້ນຄື:

- ລາຍການຟ້ອນມີ 5 ລາຍການ : ບົດຟ້ອນເຂັນຝ້າຍ ທີ່ສ່ອງແສງເຖິງສີໄມ້ ລາຍ ມືອັນລະອຽດອ່ອນ ແລະ ຄວາມດຸໝັ່ນຂະຫຍັນພຽນຂອງແມ່ຍິງຊົນເຜົ່າລາວ ແຂວງ ຫົວພັນ ຢູ່ ເມືອງ ຊຳເໜືອ , ບົດຟ້ອນແກ່ວງລອງຮາງທີ່ສ່ອງແສງເຖິງຄວາມດຸໝັ່ນ ແລະ ວິຖີຊີວິດ ຂອງ ຍິງສາວ ຫຼື ແມ່ຍິງຊົນເຜົ່າໄຕແດງ, ບົດຟ້ອນສັກດຸງ ( ສັກເຂົ້າໄຮ່ ) ທີ່ໄດ້ ຊີ້ໃຫ້ເຫັນເຖິງແບບແຜນການດຳລົງຊີວິດຂອງຊົນເຜົ່າກຶມມຸ ສະໄໝບູຮານ ແລະ ປະຈຸບັນ ບົດຟ້ອນມ່ວນຊື່ນຫຼິ້ນບຸນປີໃໝ່ທີ່ສ່ອງແສງເຖິງຮີດຄອງປະເພນີອັນດີງາມ ແລະ ຄວາມ ລິເລີ່ມໃນ ການຊອກຄູ່ຮັກຂອງບ່າວ - ສາວ ຊົນເຜົ່າມົ້ງສະໄໝບູຮານ ແລະ ປະຈຸບັນ ບົດຟ້ອນການມ່ວນ ຊື່ນເກັບກ່ຽວເຂົ້າຂອງໄຕດຳ.

- ລາຍການດົນຕີ, ຂັບລຳ ແລະ ເພງຮ້ອງມີ 7 ລາຍການຄື: ເປົ່າແຄນ ຊຳເໜືອ, ເສບດົນຕີ ພື້ນເມືອງຂອງຊົນເຜົ່າກຶມມຸ , ເພງຂອງຊົນເຜົ່າກຶມມຸ ທີ່ເວົ້າເຖິງຊີວິດໃໝ່ ຂອງ ຊົນເຜົ່າດັ່ງກ່າວ, ເພງສິ່ງພອນປີໃໝ່ຂອງຊົນເຜົ່າມົ້ງ, ຂັບຊຳເໜືອ ທີ່ເວົ້າເຖິງການຂັບຕໍ່ ແຍ່ລະຫວ່າງຄູ່ບ່າວສາວ, ຂັບໄຕດຳ, ຂັບໄຕແດງ. ບັນດາບົດຮ້ອງ ທຳນອງເສບທີ່ໄດ້ນຳ

ມາສະແດງໃນງານບຸນອັນຄຶກຄື້ນນີ້ ລ້ວນແຕ່ໄດ້ເຄີຍໄປສະແດງຮັບໃຊ້ຂະບວນການຕ່າງໆພາຍໃນແຂວງ ແລະ ແຂວງແຮກສ່ຽວຄັ້ງແລ້ວຄັ້ງເຫຼົ່າ. ນອກຈາກໄດ້ນຳເອົາລາຍການສະແດງທາງດ້ານສິລະປະວັນນະຄະດີແລ້ວແຂວງຫົວພັນ ຍັງໄດ້ນຳເອົາຜະລິດຕະພັນທາງດ້ານວັດທະນະທຳ ທາງວັດຖຸ ຂອງບາງຊົນເຜົ່າ ເຊິ່ງເປັນສີໄມ້ລາຍມື ອັນປານີດ ແລະ ລະອຽດອ່ອນຂອງແມ່ຍິງບັນດາຊົນເຜົ່າ ຢູ່ແຂວງຂອງຕົນມາວາງສະແດງໃນໂອກາດບຸນມະມັດສະການພະທາດຫຼວງວຽງຈັນ ປີ 2000 ເປັນຕົ້ນ: ມີຜ້າແພຂອງ ຊົນເຜົ່າລາວຢູ່ເມືອງຊຳເໜືອ ເຄື່ອງນຸ່ງຫົ່ມ, ເອ້ຍ້ອງຂອງຜູ້ບ່າວສາວ ແລະ ຜູ້ເຖົ້າຂອງຊົນເຜົ່າໄຕດຳ, ໄຕແດງ, ມົ້ງ, ອິວມຽນ, ຮູບຈຳລອງເຮືອນຂອງຊົນເຜົ່າຕ່າງໆ ແລະ ເຄື່ອງຫັດຖະກຳຈັກສານຫວາຍ. ບັນດາຜະລິດຕະພັນທາງດ້ານ ວັດທະນະທຳດ້ານວັດຖຸ ຂອງຊາວ ແຂວງຫົວພັນ ມາວາງສະແດງໃນຄັ້ງນີ້ ແມ່ນໄດ້ຮັບຄວາມນິຍົມຈາກແຂກຕ່າງແດນ ເຂົ້າຊົມຢ່າງອົ່ງອໍ ເຊິ່ງມີບາງຄົນກໍ່ຊື້ເພື່ອໃຊ້, ແຕ່ບາງຄົນກໍ່ຊື້ເພື່ອເປັນທີ່ລະນຶກ ແລ້ວຈະມອບເປັນຂອງຂວັນໃຫ້ກັນ ແລະ ກັນ.

ຕອນທ້າຍຂອງການສົນທະນາ ຢູ່ໂຮງ ແຮມໂພນໄຊ ທີ່ ນະຄອນຫຼວງວຽງຈັນ, ທ່ານຫົວໜ້າ ພະແນກຖະແຫຼງຂ່າວ - ວັດທະນະທຳ ແຂວງຫົວພັນ ໄດ້ຢືນຢັນຕື່ມອີກວ່າ: ໃນຕໍ່ໜ້າແຂວງຫົວພັນ ແມ່ນຈະໄດ້ອອກແຮງປົກປັກຮັກສາ ວັດທະນະທຳ ທາງດ້ານວັດຖຸຂອງຊົນເຜົ່າຕ່າງໆ ເທົ່າທີ່ສາມາດເຮັດໄດ້ຈະສົມທົບກັບຫຼາຍພາກສ່ວນທີ່ກ່ຽວຂ້ອງ ເພື່ອສຶກສາອົບຮົມໃຫ້ຄົນຮຸ່ນໃໝ່ຮັກ ແລະ ຮູ້ສິລະປະວັນນະຄະດີອັນດີງາມຂອງຊົນເຜົ່າຕົນເອງ ແລະ ຂອງຊາດຕົ້ນຕໍ່ແມ່ນຈະເລັ່ງໃສ່ບັນດາໂຮງຮຽນ ຂັ້ນປະຖົມ, ມັດທະຍົມ ແລະ ໝູ່ບ້ານຊົນເຜົ່າຕ່າງໆ ເພື່ອແນໃສ່ເຮັດໃຫ້ພວກເຂົາເຈົ້າຮູ້ຂັບ, ຮູ້ລຳ, ຮູ້ໃຊ້ເຄື່ອງດົນຕີ ແລະ ມີຄວາມສະຫງວນຄວາມງາມ ດ້ານສິລະປະວັນນະຄະດີ ເລີ່ມແຕ່ເຍົາໄວພຸ້ນ ຈະອອກແຮງປຸກລະດົມ, ຊຸກຍູ້ສົ່ງເສີມທຸກຮູບການເຄື່ອນໄຫວທາງດ້ານສິລະປະວັນນະຄະດີທີ່ເປັນມູນເຊື້ອຂອງຊົນເຜົ່າຕ່າງໆ. ພາຍຫຼັງກັບຈາກການເຂົ້າຮ່ວມບຸນມະໂຫລານວັດ

ທະນະທຳບັນດາຊົນເຜົ່າທົ່ວປະເທດຄັ້ງນີ້ຢູ່ແຂວງຫົວພັນ ຈະມີການປະກວດສິລະປະວັນນະຄະດີບັນດາຊົນເຜົ່າ, ຈະເປີດງານມະໂຫລານວັດທະນະທຳ ບັນດາຊົນເຜົ່າຂັ້ນແຂວງ, ສົ່ງເສີມໃຫ້ຊົນເຜົ່າຕ່າງໆ ນຳໃຊ້ເຄື່ອງດົນຕີພື້ນເມືອງ ຂອງຊົນເຜົ່າຕົນເອງ ແລະຈະປຸກລະດົມຊຸກຍູ້ຂົນຂວາຍຂະບວນການກໍ່ສ້າງບ້ານວັດທະນະທຳໃໝ່. ພ້ອມກັນນັ້ນ ທ່ານຫົວໜ້າ ພະແນກຖະແຫຼງຂ່າວ - ວັດທະນະທຳ ຍັງໄດ້ເນັ້ນໜັກເຖິງວິທີການອະນຸລັກວັດທະນະທຳ ຂອງຊົນເຜົ່າຕ່າງໆ ວ່າ: ຈະສືບຕໍ່ຄົ້ນຄ້ວາ, ເກັບກຳຂໍ້ມູນດ້ວຍຫຼາຍຮູບການຕາມຄວາມສາມາດຂອງແຂວງເປັນຕົ້ນແມ່ນ ຈະສືບຕໍ່ເຮັດໂຄງການກໍ່ສ້າງຫໍວາງສະແດງວັດທະນະທຳບັນດາຊົນເຜົ່າຂັ້ນແຂວງ ເພື່ອສະເໜີຂັ້ນເທິງພິຈາລະນາ, ສືບຕໍ່ ລົງເກັບກຳຂໍ້ມູນ ວັດທະນະທຳ ດ້ານວັດຖຸ ແລະ ຈິດໃຈຂອງຊົນເຜົ່າຕ່າງຈະເປີດ ກອງປະຊຸມສຳມະນາເພື່ອຄົ້ນຄ້ວາປະຫວັດສາດ ຄວາມເປັນມາວັດທະນະທຳ ຂອງ ບັນດາຊົນເຜົ່າ, ເກັບກຳຂໍ້ມູນ ແລະ ຮຽບຮຽງບັນດາກອນຂັບ, ກອນລຳຂອງຊົນເຜົ່າຕ່າງໆ ທີ່ມີເນື້ອໃນລັກສະນະຊາດວິທະຍາສາດ ແລະ ມະຫາຊົນແນໃສ່ພິມຈຳໜ່າຍເຜີຍແຜ່ອອກສູ່ສາຍຕາຂອງມະຫາຊົນຢ່າງກ້ວາງຂວາງສົ່ງເສີມກອນຂັບກອນລຳ ຂອງ ບັນດາຊົນເຜົ່າດ້ວຍວິທີການອັດໃສ່



ວາດຟ້ອນເກັບດອກຝ້າຍຂອງແມ່ຍິງຊົນເຜົ່າລາວ ແຂວງ ຫົວພັນ

ກະແຊັດ, ເທບ ແລະຖ່າຍວີດີໂອ ເພື່ອຈຳໜ່າຍເປັນສິນຄ້າ ແລະຈັດງານປະກວດເຄື່ອງດົນຕີພື້ນເມືອງຂອງຊົນເຜົ່າຕ່າງໆ .

ລວມຄວາມວ່າ: ຜ່ານໄລຍະທີ່ ໜ່ວຍ ສິລະປະ ວັນນະຄະດີພື້ນເມືອງບັນດາຊົນເຜົ່າ ແຂວງ ຫົວພັນ ສະແດງຢູ່ຫໍວັດທະນະທຳແຫ່ງຊາດ ຈົນເຖິງຄືນສຸດທ້າຍ ຢູ່ ເດີ່ນ ທາດຫຼວງ ກໍ່ ເຫັນວ່າໄດ້ສ້າງຄວາມປະທັບໃຈ ແລະດຶງດູດຈິດໃຈຂອງບັນດາ ທ່ານ ຜູ້ໄດ້ ເບິ່ງ. ໄດ້ຊົມຢ່າງແຮງກ້າທີ່ສຸດ. ສຽງຂັບໄທດຳ ໂດຍ ສາວນາລີ ແລະ ຂັບໄທແດງໂດຍ ສາວລານ, ສຽງເພງຊີວິດໃໝ່ຂອງຊົນເຜົ່າກຶມມຸ, ເພງສົ່ງພອນປີໃໝ່ຂອງຊົນເຜົ່າມົ້ງ, ສຽງດົນຕີຣວາດຟ້ອນເຂັນຝ້າຍຂອງຊົນເຜົ່າລາວ ເມືອງ ຊຳເໜືອ ແລະ ລາຍການອື່ນໆທີ່ໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າ ແຂວງ ຫົວພັນ ໄດ້ນຳມາສະແດງ ຄັ້ງນີ້ ແມ່ນໄດ້ດັງກ້ອງຢູ່ຫໍວັດທະນະທຳແຫ່ງຊາດ ແລະເດີ່ນທາດຫຼວງວຽງຈັນ ແມ່ນໄດ້ຝັງເລິກ ຢູ່ໃນຫົວໃຈ ແລະໄດ້ສະຖິດໝັ້ນໃນຫູ, ສາຍຕາ ຂອງ ຊາວນະຄອນຫຼວງ ວຽງ ຈັນ ແລະ ຊາວລາວທົ່ວປະເທດຢ່າງບໍ່ມີວັນເຫືອດແຫ້ງ ແລະຈືດຈາງແຕ່ຢ່າງໃດ.

ທັງໝົດບັນດາບັນຫາທີ່ກ່າວມານັ້ນ ກໍ່ແມ່ນຢູ່ພາຍໃຕ້ການນຳພາ ຂອງພັກປະຊາຊົນ ປະຕິວັດລາວ ແລະການຄຸ້ມຄອງຂອງ ລັດຖະບານແຫ່ງ ສ ປ ປ ລາວ. ຂ້າພະເຈົ້າຄິດວ່າ: ຖ້າບໍ່ມີພັກ, ບໍ່ມີລັດ ແລະບໍ່ມີລະບອບໃໝ່ໜ່ວຍສິລະປະວັນນະຄະດີພື້ນເມືອງຂອງຊົນເຜົ່າຕ່າງໆຢູ່ແຂວງຫົວພັນ ຄົງຈະບໍ່ໄດ້ຮັບການປົກປັກຮັກສາ ແລະສົ່ງເສີມຢ່າງໃດ. ອີກເທື່ອໜຶ່ງ ພາຍໃຕ້ແສງສະຫວ່າງແນວທາງປ່ຽນແປງໃໝ່ ແລະບັນດາມະຕິຂອງສູນກາງພັກ ປະຊາຊົນ ປະຕິວັດລາວ ອັນມີສະຫາຍ ປະທານ ຄຳໄຕ ສີພັນດອນ ເປັນຜູ້ນຳໜ້າ ສະຫາຍ ເຈັຍັງຫວ່າງ ເລຂາພັກ ທັງເປັນເຈົ້າແຂວງ ຫົວພັນ ເປັນຜູ້ຊີ້ນຳ ນຳພາ ແລະ ກະຕຸກຊຸກຍູ້ໂດຍກົງນັ້ນກໍ່ຈະເຮັດໃຫ້ໜ່ວຍສິລະປະວັນນະຄະດີພື້ນເມືອງ ທີ່ເປັນມູນເຊື້ອຂອງຊົນເຜົ່າຕ່າງໆຢູ່ແຂວງຫົວພັນກໍ່ຈະຍືນຍົງຄົງຕົວຄຽງຄູ່ກັບວັດທະນະທຳແຫ່ງຊາດ ຈົນຊົ່ວກາລະນານ.



ວິຖີຊີວິດຂອງຊົນເຜົ່າອີວມຽນ ແຂວງ ຫົວພັນ




ຮ້ານວາງສະແດງຜະລິດຕະພັນ ທາງດ້ານ ວັດທະນະທຳບັນດາຊົນເຜົ່າ ແຂວງ ຫົວພັນ

# ວຽກງານສິລະປະວັນນະຄະດີບັນດາຊົນເຜົ່າຢູ່ ແຂວງ ຊຽງຂວາງ ກໍ່ໄດ້ຮັບການອະນຸລັກ ແລະ ເສີມຂະຫຍາຍ

*******************************

ຊຽງຂວາງ ເປັນແຂວງທີ່ມີຄວາມສຳຄັນທາງ ດ້ານຍຸດທະສາດ ດ້ານການເມືອງ, ການທະຫານ ແລະ ປະຫວັດສາດບູຮານ. ແຂວງ ຊຽງຂວາງ ມີເຂດແດນຕິດກັບແຂວງ ຫົວພັນ, ຫຼວງພະບາງ, ວຽງຈັນ, ແຂວງ ບໍລິຄຳໄຊ ແລະ ບາງແຂວງຂອງ ສ.ສ ຫວຽດນາມ. ຊຽງຂວາງ ມີບໍ່ນ້ຳຮ້ອນທຳມະຊາດຫຼາຍແຫ່ງ ຄື: ຢູ່ເມືອງ ຄຳ ແລະ ເມືອງ ຄູນ ເປັນແຂວງ ດຽວໃນ ສ.ປ.ປ ລາວ ທີ່ປູກໝາກຄາຍ, ໝາກຈອງ ແລະ ໝາກໝັ້ນໄດ້. ນອກຈາກເປັນດິນແດນທຳມະຊາດ ແຕກຕ່າງກັບເຂດແຂວງອື່ນແລ້ວ ແຂວງຊຽງຂວາງຍັງມີບູຮານວັດຖຸເກົ່າແກ່ຫຼາຍພັນປີຄື: ໄຫຫີນ ຂະໜາດໃຫຍ່, ນ້ອຍຕ່າງກັນຈຳນວນຫຼາຍ ຮ້ອຍໜ່ວຍ ທີ່ວາງຢາຍຢູ່ຕາມທົ່ງພຽງໃກ້ເມືອງແປກ. ນັກປະຫວັດສາດທັງຫຼາຍຖືວ່າ: ໄຫຫີນເຫຼົ່ານີ້ ເປັນບູຮານວັດຖຸ ທີ່ມີຄຸນຄ່າສູງຕໍ່ການສຶກສາ ແລະ ເປັນສິ່ງທີ່ຢັ້ງຢືນວ່າ:ດິນແດນແຫ່ງນີ້ເຄີຍມີມະນຸດຢູ່ມາຫຼາຍພັນປີ ຫຼື ແສນປີແລ້ວຕຳນານພື້ນເມືອງເລົ່າວ່າ: ໄຫຫີນຍັກ ເຫຼົ່ານີ້ແມ່ນໄຫຫີນຂອງ ທ້າວ ເຈືອງ ກະສັດ ຜູ້ຍິ່ງ ໃຫຍ່ເຊື້ອຊາດຂອມ ໃນສະໄໝບູຮານ. ຊຽງຂວາງເປັນເຂດຍາດແຍ່ງຂອງກຳລັງ ຕ່າງໆ ແລະ ໄດ້ກາຍເປັນບ່ອນດຳເນີນ ສະໜາມຮົບຕ່າງໆຂອງພວກຈັກກະພັດເຊັ່ນ: ບັ້ນຮົບກູ້ກຽດ, ທະນົງກຽດ...ແລະ ກາຍເປັນພື້ນທີ່ຖືກຖິ້ມລະເບີດໃສ່ຢ່າງໜັກໜ່ວງ ກວ່າເຂດແຂວງອື່ນໆ ທັງປະເທດຄື: ປະມານ 2.000.000 ໂຕນ. ອັນໄດ້ເຮັດໃຫ້ປະຊາຊົນເຜົ່າຕ່າງໆ ໃນແຂວງ ຊຽງຂວາງ ຕ້ອງອົບພະຍົບໜີ ແລະຕົວເມືອງຊຽງຂວາງ ໄດ້ຖືກທຳລາຍຢ່າງບໍ່ເຫຼືອເຮືອນຈັກຫຼັງເລີຍ.

ເມື່ອສິ້ງຄາມຍຸດຕິລົງໃນປີ 1973 ຊາວຊຽງຂວາງ ຈຶ່ງພາກັນກັບ ຕ່າວ ຄືນບ້ານ ແລະ ສ້າງສາບ້ານ ເມືອງຄືນໃໝ່ ແລະ ຮອດປະຈຸບັນນີ້ເຫັນວ່າ: ຊຽງຂວາງ ກໍ່ແມ່ນແຂວງໜຶ່ງທີ່ໄດ້ຮັບການພັດທະນາໄວຖ້າຫາກສົມທຽບກັບບັນດາ ແຂວງ ຢູ່ພາກໃຕ້ ຂອງ ສ.ປ.ປ.ລາວ. ຊຽງຂວາງ ເປັນແຂວງດັ້ງເດີມເກົ່າແກ່ຕັ້ງແສນປີ ແຕ່ປະກອບດ້ວຍຫຼາຍ ຊົນເຜົ່າທີ່ໄດ້ຕັ້ງພູມລຳເນົາ ແລະທຳມາຫາກິນຢ່າງສະຫຼັບສັບຫວ່າງຊຶ່ງກັນ ແລະ ກັນບົນດິນ

ດອນຕອນນີ້ ເປັນໄລຍະເວລາຊ້ານານມາແລ້ວເຊັ່ນ: ຊົນເຜົ່າລາວ (ພວນ), ຊົນເຜົ່າໄຕ, ຊົນເຜົ່າກຶມມຸ, ຊົນເຜົ່າມົ້ງ, ຊົນເຜົ່າຜ້ອງ ແລະຊົນເຜົ່າເອີດູ. ນອກຈາກນີ້ຍັງມີຫຼາຍຊົນເຜົ່າທີ່ເປັນບັນດາບຸກຄົນ, ຄອບຄົວໄດ້ເຄື່ອນໄຫວປະຕິບັດ ໜ້າທີ່ ວຽກງານທາງລັດຖະການ ແລະ ໃນນາມສ່ວນຕົວ ແລ້ວກໍ່ຕັ້ງເຮືອນຊານຮ່ວມກັບບັນດາຊົນເຜົ່າ ມາຢູ່ກ່ອນ. ຊົນເຜົ່າຕ່າງໆ ຢູ່ແຂວງ ຊຽງຂວາງ ເປັນຊົນເຜົ່າທີ່ເກົ່າແກ່ ແຕ່ຍັງຄົງຮັກສາບັນດາເອກະລັກ ສະເພາະຂອງຊົນເຜົ່າຕົນເອງເຊັ່ນ: ເອກະລັກກ່ຽວກັບພາສາປາກເວົ້າທີ່ພວກເຂົາເຈົ້າໃຊ້ໃນການສື່ສານຕິດຕໍ່ພົວພັນແລກປ່ຽນວັດທະນະທຳລະຫວ່າງ ບັນດາຊົນເຜົ່າທີ່ໃກ້ຄຽງ. ບໍ່ສະເພາະແຕ່ເທົ່ານັ້ນພວກເຂົາເຈົ້າຍັງມີປະຫວັດສາດຄວາມ ເປັນມາ, ກົກເຄົ້າຕົ້ນກຳເນີດ ທີ່ຕິດພັນເຖິງຊື່ຮຽກເດີມ ທີ່ເປັນສະເພາະຂອງຊົນເຜົ່າ ຕົນເອງ ແລະ ຍັງມີເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດ ຈິດຕະສາດທີ່ສະແດງ ອອກໃນ ວົງຄະນາຍາດ ວັດທະນະທຳ ຄື: ວັດທະນະທຳ ດ້ານ ວັດຖຸ, ຈິດໃຈ ແລະສັງຄົມ. ບັນດາຊົນເຜົ່າຢູ່ແຂວງ ຊຽງຂວາງ ເປັນຊົນເຜົ່າທີ່ມີຄວາມສະ ຫງວນຄວາມງາມ, ມີມູນເຊື້ອທາງດ້ານສິລະປະວັນນະຄະດີ, ມີວາດຂັບລຳ, ວາດຟ້ອນປະຈຳທ້ອງຖິ່ນ ແລະ ຊົນເຜົ່າ ຂອງຕົນຄື: ຂັບໄອພວນ, ຂັບ ຊຽງຂວາງ, ຂັບມົ້ງ, ຂັບໄຕດຳ, ຂັບເຕີມ...ທີ່ອອນຊອນ ແລະໜ້າຈັບໃຈ. ມັນບໍ່ພຽງແຕ່ເທົ່ານັ້ນ ຄົນພວນ ຊຽງຂວາງ ມີຄວາມຊຳນິ ຊຳນານໃນການປູກມອນປ້ອນໄໝ, ມັດໝີ່ຕີລາຍທີ່ລີຊື່ລືຊາບໍ່ໜ້ອຍໜ້າຊາວເມືອງອື່ນ. ໂດຍສະເພາະແມ່ນການມັດໝີ່ ດ້າຍໄໝເສັ້ນແລບບາງ ແລະ ລາຍນ້ອຍອັນປະນີດລະອຽດອ່ອນ . ຄົນຊຽງຂວາງ ມີນິໄສມັກຕ້ອນຮັບແຂກຄົນ, ເຂົາເຈົ້າມີຄຳເວົ້າປະຈຳທ້ອງຖິ່ນວ່າ: ເວລາມີແຂກມາ ຢ້ຽມຢາມຈະບໍ່ ໃຫ້ແຂກລົງ ເຮືອນມືເປົ່າຄືຕ້ອງມີເຄື່ອງຝາກຂອງຕ້ອນໃສ່ມືໃຫ້ແຂກ. ຄົນຊຽງຂວາງ ມີພອນສະຫວັນ ໃນການຂັບລຳກະຈ່າຍຜະຫຍາກ້ຽວກັນ.

ບົນພື້ນຖານຈິດໃຈຄົນຊຽງຂວາງ ມີມູນເຊື້ອທາງດ້ານສິລະປະວັນນະຄະດີ ສົມທົບກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ ແລະ ຄວາມຄ່ອງຄອຍຂອງປະຊາຊົນເຜົ່າຕ່າງໆໃນສະໄໝນັ້ນ. ຄະນະພັກ ແລະ ອຳນາດການປົກຄອງປະຕິວັດແຂວງຊຽງຂວາງ ຈຶ່ງໄດ້ສ້າງຕັ້ງກອງສິລະປະກອນແຂວງ ຂຶ້ນເມື່ອຊຸມປີ 1960 ແລະ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ພ້ອມກັບກອງ ສິລະປະກອນ ແຂວງ ແລ້ວ ຍັງມີກອງ ສິລະປະກອນ ເຂດຊຽງຂວາງ ແລະ ກອງສິລະປະກອນ ຂອງບັນດາກຳລັງເປັນກາງຮັກຊາດ, ຜ່ານໄລຍະການຄົງຕົວ ແລະ ຂະຫຍາຍຕົວເປັນໄລຍະເວລາລາເຫິງນານ. ກອງສິລະປະກອນທັງສາມຄະນະນັ້ນ ກໍ່ໄດ້ພະຍາຍາມປັບປຸງການຈັດຕັ້ງ, ຍົກລະດັບທາງດ້ານວິຊາການໃຫ້ແກ່ນັກສະແດງ ຢູ່ພາຍໃນ ແລະຕ່າງປະເທດຫຼາຍຄັ້ງ, ປັບປຸງເນື້ອໃນລີລາ ການສະແດງ ແລະປະດິດ ຄິດ ແຕ່ງເພງ, ດົນຕີ, ວາດຟ້ອນ ແລະ ຂັບລຳທ້ອງຖິ່ນເປັນຈຳນວນບໍ່ໜ້ອຍ. ພາຍຫຼັງໄດ້ຮັບ ການສ້າງຕັ້ງແລ້ວເຖິງວ່າສະພາບສົງຄາມດຸເດືອດ, ນັກສະແດງ ແລະນັກດົນຕີ ມີບໍ່ພໍ ເທົ່າໃດ ອຸປະກອນຮັບໃຊ້ການສະແດງບໍ່ພຽງພໍກໍ່ຕາມ. ແຕ່ກອງສິລະປະກອນ ເຫຼົ່ານັ້ນໄດ້ ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ ກອງທະຫານຢູ່ແນວໜ້າ, ຢູ່ເຂດແນວຫຼັງ ຂອງສັດຕູ, ສະແດງຮັບໃຊ້ສຳນັກງານ, ອົງການ, ໂຮງຮຽນ, ໂຮງໝໍ ແລະ ພື້ນຖານການຜະລິດ ໃນ ເດືອນໜຶ່ງບໍ່ຕ່ຳກ່ວາ 10 ເທື່ອ. ບັນດາສຽງເພງປະຕິວັດທີ່ກອງສິລະປະກອນໄດ້ສະແດງ ແຕ່ລະຄັ້ງ ນັ້ນແມ່ນໄດ້ປະກອບສ່ວນເຂົ້າໃນປຸກລະດົມກຳລັງໃຈ ແລະເປັນການ ກະຕຸກຊຸກຍູ້ ໃຫ້ກອງທັບ ແລະ ປະຊາຊົນເຜົ່າຕ່າງໆ ຢູ່ແຂວງ ຊຽງຂວາງ ລັ່ງໄຫຼອອກ ເຮັດການປະຕິວັດ, ເດັ່ນກວ່າໝູ່ແມ່ນການປຸກລະດົມ ນ້ຳໃຈຕໍ່ສູ້ບໍ່ຍອມຈຳນົນຂອງ ກອງພັນທີ 2 , ກອງກຳລັງໄພ ເພດຍິງ ແລະ ອື່ນໆ ເພື່ອດຳ ເນີນການຕໍ່ ສູ້ຕ້ານ ຈັກກະພັດ ຕ່າງດ້າວ ແລະ ລົບລ້າງທຸກການກົດຂີ່ ຂູດຮີດ ຂອງເຈົ້າ ສັກດີນາ ທ້ອງຖິ່ນ ຢ່າງສິ້ນເຊີງ. ມັນບໍ່ພຽງແຕ່ເທົ່ານັ້ນ ມັນຍັງສາມາດດູດດຶງຈິດໃຈ ຂອງນາຍ ແລະ ພົນ ທະຫານ ຝ່າຍລາ ຊະອານາຈັກລາວຫັນມາຮ່ວມມື ກັບກຳລັງປະຕິວັດຈົນກວ່າປະເທດຊາດໄດ້ຮັບ ການປົດປ່ອຍຢ່າງສົມບູນ ເມື່ອ ປີ 1975 .

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍຢ່າງສົມບູນແລ້ວ. ກອງສະແດງເຂດ ຊຽງຂວາງ ແລະ ເປັນກາງຮັກຊາດ ແມ່ນໄດ້ຫັນການເຄື່ອນໄຫວໄປສູ່ຮູບການອື່ນ. ສ່ວນກອງ ສິລະປະກອນແຂວງ ຊຽງຂວາງ ຍັງສືບຕໍ່ປັບປຸງການຈັດຕັ້ງ, ເນື້ອໃນລີລາ ການສະແດງໃຫ້ມີສີສັນຂອງບັນດາຊົນເຜົ່າ, ຍົກລະດັບທາງດ້ານ ວິຊາການ ແລະ ໄດ້ປະດິດ ຄິດແຕ່ງເພງ, ດົນຕີ ວາດຟ້ອນ ແລະ ຂັບລຳທ້ອງຖິ່ນເປັນຈຳນວນຫຼວງຫຼາຍ ພ້ອມທັງ ໄດ້ເຄື່ອນໄຫວສະແດງຮັບໃຊ້ກອງ ປະຊຸມໃຫ່ຍອົງຄະນະພັກແຂວງ, ເມືອງ, ກົມກອງ

ທະຫານ, ສຳນັກງານອົງການ, ໂຮງຮຽນ, ໂຮງໝໍ, ພື້ນຖານການຜະລິດ, ງານບຸນ ປະເພນີ ຂອງຊົນເຜົ່າຕ່າງໆ, ໄປສະແດງແລກປ່ຽນ ບົດຮຽນ ຢູ່ແຂວງແຮກ ສ່ຽວ ເພື່ອນບ້ານ ຫວຽດນາມ ແລະ ສິ່ງທີ່ໜ້າສັນລະເສີນອີຫຼີນັ້ນບົນເສັ້ນທາງ ແຫ່ງການເຕີບໃຫ່ຍຂະຫຍາຍຕົວເປັນ ໄລຍະເຫີງນານນັ້ນ, ກອງສິລະປະກອນ ແຂວງ ຊຽງຂວາງ ໄດ້ສະແດງຮັບໃຊ້ການນຳ ຂັ້ນ ຕ່າງໆ, ແຂກຕ່າງດ້າວທ້າວຕ່າງແດນທີ່ມາແວ່ຢ້ຽມຢາມ ແຂວງຊຽງຂວາງ , ໄດ້ເຂົ້າຮ່ວມ ງານປະກວດສິລະປະວັນນະຄະດີ ແລະ ເຂົ້າຮ່ວມງານມະໂຫລານວັດທະນະທຳ ລະດັບ ທ້ອງຖິ່ນ ແລະ ລະດັບຊາດ ເປັນຈຳນວນບໍ່ໜ້ອຍ. ຮອດຊຸມປີ 1990 ກອງສິລະປະກອນ ແຂວງຊຽງຂວາງ ໄດ້ຫັນການເຄື່ອໄຫວໄປສູ່ຮູບການອື່ນ. ແຕ່ວຽກງານສິລະປະວັນ ນະຄະດີ ຢູ່ແຂວງ ຊຽງຂວາງ ພັດໄດ້ເກີດຂຶ້ນຫຼາຍຮູບການຄື: ວົງດົນຕີ ທີ່ເປັນຂອງບັນ ດາບຸກຄົນ, ລວມໝູ່ ແລະ ໜ່ວຍສິລະປະວັນນະຄະດີ ສະໝັກຫຼີ້ນກໍ່ໄດ້ຮັບການສ້າງ ຕັ້ງຂຶ້ນຢູ່ບັນດາໂຮງຮຽນ, ໝູ່ບ້ານຊົນເຜົ່າຕ່າງໆ ແລະ ກອງທະຫານ ແຕ່ເດັ່ນກວ່າໝູ່ ນັ້ນ ມີວົງດົນຕີຂອງ ກອງພັນ 702 , ກອງພັນ 850 ແລະ ໜ່ວຍສິລະປະ ວັນນະຄະດີ ສະໝັກຫຼີ້ນ ໂຮງຮຽນ ມັດທະຍົມຕອນປາຍ ໂພນສະຫວັນ ແລະ ໃນປະຈຸບັນ ຕາມ ຕົວເລກ ທີ່ບໍ່ທັນຄົບ ຖ້ວນທົ່ວແຂວງ ຊຽງຂວາງ ມີວົງດົນຕີຣ ແລະ ໜ່ວຍສິລະປະວັນນະຄະດີ ສະໝັກ ຫຼີ້ນຫຼາຍ ກວ່າ 20 ຄະນະ ສະເພາະ ຢູ່ແຂວງ ຊຽງຂວາງ ປະຈຸບັນ ເຖິງວ່າບໍ່ມີກອງສະແດງ ອາຊີບ ກໍ່ຕາມແຕ່ໃນເມື່ອມີ ຜູ້ແທນຂັ້ນສູງ ແລະ ງານຕ່າງໆຫາກຕ້ອງການຊົມການສະແດງ ສິລະປະວັນນະຄະດີ ແລ້ວກໍ່ເຕົ້າໂຮມນັກສະແດງຈາກພາກສ່ວນຕ່າງໆມາເຝິກຊ້ອມ ຊົ່ວໄລຍະໜຶ່ງແລ້ວກໍ່ສາມາດສະແດງຮັບໃຊ້ສັງຄົມຢ່າງທັນການ ແລະໃນໂອກາດ ບຸນມະໂຫລານວັດທະນະທຳ ບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ່ 2 ປີ 2000 ທີ່ໄດ້ ຈັດຂຶ້ນ ທີ່ນະຄອນຫຼວງວຽງຈັນ . ຄະນະ ພະແນກຖະແຫຼງຂ່າວ - ວັດທະນະທຳ ແຂວງ ຊຽງຂວາງ ໄດ້ເລືອກເຟັ້ນນັກສະແດງຈາກພາກສ່ວນຕ່າງໆ 20 ກວ່າ ຊີວິດມາເຝິກຊ້ອມຊົ່ວໄລຍະ ໜຶ່ງແລ້ວກໍ່ສະແດງຜ່ານຄະນະ ຮັບຜິດຊອບງານດັ່ງກ່າວ ຈາກນັ້ນກໍ່ສະແດງຜ່ານ ຄະນະ ນຳຂັ້ນ ແຂວງ ຊຽງຂວາງ ແລ້ວເດີນທາງມາ ນະຄອນຫຼວງວຽງຈັນເພື່ອດຳເນີນການ ສະແດງຮ່ວມກັບ ໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າທົ່ວ ປະເທດ ທີ່ຫໍວັດທະນະທຳແຫ່ງຊາດ ແລະເດີນທາດຫຼວງວຽງຈັນ.

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ແຕ່ມື້ນັ້ນມາຮອດມື້ນີ້ ເຖິງວ່າງານ ບຸນມະໂຫລານ ດັ່ງກ່າວໄດ້ຜ່ານໄປເປັນ ເວລາຫຼາຍປີແລ້ວກໍ່ຕາມ. ແຕ່ຊາວນະຄອນຫຼວງວຽງຈັນ ກໍ່ຄືຊາວລາວທັງຊາດ ຍັງປະກົດໄດ້ຍິນໄດ້ເຫັນສຽງຂັບໂອພວນ ຂອງຊົນເຜົ່າລາວ, ສຽງຂັບເຕີມຂອງຊົນເຜົ່າກຶມມຸ ປະສານກັບວາດຟ້ອນຖັ່ງບັ້ງໄດ້ປະກົດຍິນສຽງແຄນປະສານກັບວາດຟ້ອນ ຕີລັງກາຂອງຊົນເຜົ່າມົ້ງ ໂດຍບໍ່ມີວັນ ຈືດຈາງ ແຕ່ຢ່າງໃດເລີຍ.

ລວມຄວາມວ່າ: ວຽກງານ ສິລະປະວັນນະຄະດີພື້ນເມືອງ ແລະ ວັດທະນະທຳຂອງ ຊົນເຜົ່າຕ່າງໆ ຢູ່ແຂວງ ຊຽງຂວາງ ບໍ່ພຽງແຕ່ໄດ້ຮັບການປົກປັກຮັກສາເທົ່ານັ້ນ ແຕ່ຂັ້ນເທິງຍັງໄດ້ມີການຊຸກຍູ້ຢ່າງບໍ່ຢຸດຢັ້ງອັນໄດ້ເຮັດໃຫ້ພວກເຂົາເຈົ້າມີຄວາມສາມາດ ບີນຕົວກ້າວຂຶ້ນໃນການພັດທະນາຕົນເອງ ຕາມສະພາບຄວາມເປັນຈິງຂອງປະເທດຊາດທີ່ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ./



ຂັບໂອພວນ ສະແດງ ໂດຍ ໜ່ວຍສິລະປະວັນນະຄະດີ ພື້ນເມືອງບັນດາເຜົ່າ ແຂວງ ຊຽງຂວາງ

# ການເອົາໃຈໃສ່ລົງທຶນໃຫ້ແກ່ວຽກງານ
# ສິລະປະວັນນະຄະດີຢູ່ແຂວງໄຊຍະບູລີໄດ້ມີທວງທ່າໃໝ່

*****************************

"**ໄຊຍະບູລີ**" ເປັນແຂວງທີ່ຕັ້ງຢູ່ຝັ່ງຂວາແມ່ນ້ຳຂອງ ແຫ່ງ ສປປ ລາວ ເຊິ່ງມີເຂດແດນຕິດກັບແຂວງວຽງຈັນ, ຫຼວງພະບາງ, ອຸດົມໄຊ, ບໍ່ແກ້ວ ແລະ ຕິດ 5 ແຂວງ ຂອງລາຊະອານາຈັກໄທ, ເປັນແຂວງທີ່ອຸດົມຮັ່ງມີທາງດ້ານຊັບພະຍາກອນທຳມະຊາດ ແລະ ມີທິວທັດທຳມະຊາດທີ່ສວຍງາມ ແລະ ໜ້າຈັບໃຈ. ໄຊຍະບູລີເປັນແຂວງໜຶ່ງທີ່ໄດ້ມີການພັດທະນາໄວເຊິ່ງຕາມບາງບຸກຄົນໄດ້ເວົ້າສູ່ຟັງວ່າ: ບັນດາເມືອງທີ່ໄດ້ພັດທະນາຊັກຊ້າກ່ວາໝູ່ຢູ່ແຂວງດັ່ງກ່າວແມ່ນເມືອງຊຽງຮອນ ແຕ່ຫາກສົມທຽບໃສ່ບັນດາເມືອງ ຢູ່ບັນດາແຂວງພາກໃຕ້ ຂອງປະເທດເຮົາແລ້ວກໍ່ເຫັນວ່າ: ໄດ້ມີການພັດທະນາລື່ນບັນດາເມືອງເຫຼົ່ານັ້ນ ບໍ່ຈັກວ່າເທົ່າໃດທົບທັງນັ້ນ ມັນໄດ້ສ່ອງແສງໃຫ້ເຫັນບຸກຄະລິກຂອງພະນັກງານການນຳແຂວງນັ້ນໂດຍສົມທົບກັບທ່າແຮງທາງທຳມະຊາດ ແລະສັງຄົມຂອງແຂວງນັ້ນແຫຼະ.



ຊຸດອາພອນເພດຊົນເຜົ່າຍວນ ນາງ ສາວ ໄຊຍະສິດ

ໄຊຍະບູລີ ເປັນແຂວງດັ້ງເດີມ,ເກົ່າແກ່ ເຊິ່ງປະກອບດ້ວຍຫຼາຍຊົນເຜົ່າທີ່ໄດ້ດຳລົງຊີວິດ, ຕັ້ງພູມລຳເນົາຢ່າງສະຫຼັບສັບຫວ່າງເຊິ່ງກັນ ແລະ ກັນບົນດິນດອນຕອນນີ້ເປັນໄລຍະເວລາຫຼາຍ ສະຕະວັດມາແລ້ວເຊັ່ນ: ຊົນເຜົ່າລາວ,ຜູ້ໄທ, ໄຕ,ຍວນ,ລື້,ກຶມມຸ,ໄປຣ, ມົ້ງ, ອິວມຽນ ແລະ ຢູບີຣ.

ນອກຈາກນີ້ແລ້ວຍັງມີບັນດາຊົນເຜົ່າທີ່ເປັນບຸກຄົນ,ຄອບຄົວເຊິ່ງໄດ້ເຄື່ອນໄຫວປະຕິບັດໜ້າທີ່ວຽກງານທາງລັດຖະການ ແລະ ໃນນາມສ່ວນຕົວ ແລະ ກໍ່ໄດ້ມີການສົມລົດ ແລະ ຕັ້ງບ້ານເຮືອນຮ່ວມກັບຊົນເຜົ່າດັ້ງເດີມນັ້ນມີປະມານ 30 ກວ່າຊົນເຜົ່າ ແລະ ບັນດາຊົນເຜົ່າຢູ່ ແຂວງໄຊຍະບູລີ ແມ່ນຍັງຄົງຮັກສາເອກະລັກສະເພາະຂອງຊົນເຜົ່າໃຜລາວຄື: ເອກະລັກກ່ຽວກັບພາສາປາກເວົ້າ; ປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດ, ຊື່ຮຽກເດີມ ແລະ ເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດ, ຈິດຕະສາດທີ່ສະແດງອອກໃນວົງຄະນາຍາດວັດທະນະທຳຄື: ວັດທະນະທຳດ້ານວັດຖຸ, ວັດທະນະທຳດ້ານສັງຄົມ ແລະ ວັດທະນະທຳດ້ານຈິດໃຈ. ບັນດາຊົນເຜົ່າຢູ່ແຂວງໄຊຍະບູລີ ລ້ວນແຕ່ໄດ້ມີມູນເຊື້ອຕໍ່ສູ້ຕ້ານກັບຈັກກະພັດສັກດີນາຕ່າງດ້າວ ແລະ ເຈົ້າສັກດີນາທ້ອງຖິ່ນຈົນເຖິງໄດ້ຮັບໄຊຊະນະຢ່າງສົມບູນ, ມີມູນເຊື້ອດຸໝັ່ນຂະຫຍັນພຽນໃນການເພີ່ມພູນຜະລິດຜົນເພື່ອຫາລ້ຽງຊີວິດຂອງຕົນ( ໄປຢຽບໝາມາຢຽບຊຽດ) ມີຫົວຄິດ ປະດິດສ້າງ ແລະ ສະແຫວງຫາໃນການຫັນປ່ຽນແບບແຜນການດຳລົງຊີວິດຂອງຕົນໃຫ້ດີຂຶ້ນ ແລະ ທວງທັນກັບບາດກ້າວການຂະຫຍາຍຕົວຂອງປະເທດຊາດ ແລະ ຍຸກສະໄໝ. ມັນບໍ່ພຽງແຕ່ເທົ່ານັ້ນບັນດາຊົນເຜົ່າຢູ່ແຂວງໄຊຍະບູລີ ແມ່ນໄດ້ມີມູນເຊື້ອທາງດ້ານສິລະປະວັນນະຄະດີຂອງຊົນເຜົ່າຕົນ ເຊິ່ງຖ້າທ່ານໃດຫາກໄດ້ໄປແວ່ຢາມແຂວງໄຊຍະບູລີ ແລ້ວຄົງຈະໄດ້ຍິນສຽງສໍດ່ຽວຍິງ ແລະ ສໍດ່ຽວຊາຍ ຂອງຊົນເຜົ່າຍວນ, ຂັບກະລອມ, ອ່ານກອນຂອງສາວກະລອມ, ຂັບຈ້ອຍ, ສຽງດົນຕີພື້ນ ແລະ ສີຊໍຂອງຊົນເຜົ່າຍວນ, ສຽງຂັບລື້, ຂັບຂືນ

ແລະ ສຽງດົນຕີ, ເປົ່າປີຂອງຊົນເຜົ່າລື້, ຂັບມົ້ງ, ຂັບເຕີນ, ຂັບໄຕດຳ ແລະ ຂັບອີ້ວມຽນ ທີ່ອ່ອນຊອນ ແລະເປັນໜ້າປະທັບໃຈຢູ່ຕາມສະຖານທີ່ ການອອກແຮງງານຕ່າງໆ.

ປະຈຸບັນຢູ່ ແຂວງໄຊຍະບູລີ ໄດ້ມີໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນ ຫຼາຍກວ່າ 50 ໜ່ວຍ ເຊິ່ງນອນຢູ່ຕາມບັນດາໂຮງຮຽນປະຖົມ, ມັດທະຍົມຕອນຕົ້ນ, ຕອນປາຍ ແລະ ຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆເຊິ່ງໄດ້ເຄື່ອນໄຫວໄປສະແດງຮັບໃຊ້ງານບຸນປະເພນີຢູ່ບ້ານ, ງານບຸນໃຫ່ຍທີ່ສຳຄັນຂອງຊາດ ຢູ່ຂັ້ນເມືອງ ແລະ ອື່ນໆ. ໜ່ວຍສິລະປະດົນຕີ ຂອງກອງບັນຊາການທະຫານແຂວງຂອງກອງພົນທະຫານລາບທີ່II ແລະ ສູນວັດທະນະທຳເດັກທີ່ມີລັກສະນະເຄິ່ງອາຊີບ ແລະ ກອງສິລະປະດົນຕີແຂວງ ທີ່ໄດ້ສ້າງຕັ້ງຂຶ້ນແຕ່ປີ 1976-1977 ນັ້ນກໍ່ພະຍາຍາມປັບປຸງ ແລະຍົກສູງລະດັບຄວາມຮູ້ຄວາມສາມາດ ທາງດ້ານ ວິຊາການ



ຊຸດອາພອນເພດຂອງຊົນເຜົ່າຍວນ,ສາວ ບົວທອງ ລູກສາວ ຂອງຊົນເຜົ່າຍວນ ແຂວງ ໄຊຍະບູລີ

ຂອງຕົນໃຫ້ສູງຂຶ້ນເທື່ອລະກ້າວ ພ້ອມທັງໄດ້ປະດິດຄິດແຕ່ງລາຍການສະແດງທີ່ມີຫຼາກຫຼາຍສີສັນ, ມີລວດລາຍຂອງທຸກຊົນເຜົ່າພາຍໃນແຂວງໄຊຍະບູລີ ແລະໄດ້ເຄື່ອນໄຫວສະແດງຮັບໃຊ້ໜ້າທີ່ການເມືອງຂອງຕົນ, ຮັບໃຊ້ງານບຸນໃຫຍ່ທີ່ ສໍາຄັນຂອງຊາດ, ກອງປະຊຸມໃຫຍ່ ຂອງອົງຄະນະພັກແຂວງ, ເມືອງ, ບຸນປະເພນີ ແລະ ຂະບວນ ການຕ່າງໆພາຍໃນແຂວງຢ່າງບໍ່ລົດລະ, ພິເສດໃນສອງສາມປີຫຼັງນີ້ແມ່ນໄດ້ຈັດຕັ້ງງານບຸນຂອງຊົນເຜົ່າມົ້ງ, ກຶມມຸ ໃນລະດັບແຂວງ.

ປະຈຸບັນເຖິງວ່ານັກສະແດງຢູ່ກອງສິລະປະດົນຕີ ແຂວງ ມີພຽງແຕ່ 21 ຊີວິດເຊິ່ງປະກອບມີນັກຮ້ອງ 3 ຊີວິດ ໃນນັ້ນມີແມ່ຍິງ 2 ຊີວິດ, ນັກດົນຕີ 6 ຊີວິດ ສ່ວນເຫຼືອນັ້ນແມ່ນນັກຟ້ອນມີ 12 ຄົນ ກໍ່ຕາມ ແຕ່ກໍ່ສາມາດຕອບສະໜອງເຄື່ອນໄຫວສະແດງຮັບໃຊ້ ຕາມຄວາມຮຽກຮ້ອງ ຕ້ອງການ ຂອງສັງຄົມ ແລະ ບັນດາລາຍ ການສະແດງຂອງກອງສິລະປະດົນຕີ ແຂວງໄຊຍະບູລີ ແມ່ນໄດ້ມີສີສັນ ຫຼາກຫຼາຍ ຂອງ ຊົນຜົ່າຕ່າງໆ ແລະເດັ່ນທີ່ສຸດແມ່ນໃນງານ ສະເຫຼີມ ສະຫຼອງປີ ທ່ອງທ່ຽວ ປີ 1999 - 2000 ນັ້ນ ບັນດາໜ່ວຍສິລະປະ ວັນນະຄະດີໃນ 10 ເມືອງ ລ້ວນແຕ່ມີລາຍການສະແດງໃໝ່ໆ ເປັນຕົ້ນແມ່ນຂັບລໍ້ທີ່ເປັນສັນຍາລັກຂອງຊົນເຜົ່າລໍ້ ແຕ່ລະເມືອງ, ພ້ອມທັງໄດ້ຕັ້ງໜ້າອອກແຮງຂຸດຄົ້ນ, ອະນຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍສິລະປະວັນນະຄະດີ ທີ່ເປັນມູນເຊື້ອ ຂອງຊົນເຜົ່າຕ່າງໆ ໃຫ້ຍືນຍົງ ຄົງຕົວຄຽງຄູ່ກັບສິລະປະວັນນະຄະດີແຫ່ງຊາດ. ໃນໂອກາດເຂົ້າຮ່ວມງານບຸນມະໂຫລານວັດທະນະທໍາບັນດາຊົນເຜົ່າທົ່ວປະເທດ ປີ 2000 ທີ່ ໄດ້ຈັດຂຶ້ນເມື່ອວັນທີ 7 - 12 / 11 / 2000 . ນັ້ນ ທ່ານ ສົມສັກ ລົມທອງ ຫົວໜ້າພະແນກ ຖະແຫຼງຂ່າວ - ວັດທະນະທໍາ ແຂວງໄຊຍະ ບູລີ ໄດ້ກ່າວວ່າ:“ ເພື່ອເປັນການ ປະກອບສ່ວນ ເຮັດໃຫ້ງານບຸນມະໂຫລານວັດທະນະທໍາ ບັນດາຊົນເຜົ່າຄັ້ງນີ້ໄດ້ ມີລາຍການສະແດງເຕັມໄປດ້ວຍຫຼາຍສີສັນຂອງຊົນເຜົ່າຕ່າງໆ ນັ້ນ, ແຂວງ ໄຊຍະບູລີ ກໍ່ນໍາເອົານັກສະແດງສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າ ຈໍານວນ 23 ຊີວິດ ໃນນັ້ນມີແມ່ຍິງ13 ຊີວິດ ເຊິ່ງໄດ້ຄັດ

ເລືອກມາຈາກໜ່ວຍສິລະປະວັນນະ ຄະດີສະໝັກຫຼິ້ນຕາມໝູ່ບ້ານຊົນເຜົ່າຕ່າງໆ ສົມທົບກັບນັກສະແດງຂອງກອງສິລະປະດົນຕີ ແຂວງ ເຊິ່ງລວມມີ 3 ຊົນເຜົ່າຄື: ຊົນເຜົ່າ ອີວມຽນ, ຍວນ ແລະ ຊົນເຜົ່າລາວ ປະກອບມີ 5 ລາຍການສະແດງຄື: ສໍດ່ຽວຍິງ ຂອງຊົນເຜົ່າຍວນ, ວາດຟ້ອນມູນເຊື້ອການຖັກ ແສ່ວຂອງຊົນເຜົ່າ ອີວມຽນ, ເຕາະກອງກິ່ງ ຂອງຊົນເຜົ່າລາວ ຢູ່ເຂດບ້ານນ້ຳພູນ ເມືອງ ປາກລາຍ, ການສະແດງວາດທະສິນທີ່ເວົ້າເຖິງຄວາມອຸດົມຮັ່ງມີ ຂອງແຂວງໄຊຍະບູລີ ແລະ ຮ້ອງເພງ ໝູ່ຍິງທີ່ເວົ້າເຖິງ ຄວາມອຸດົມສົມບູນຂອງແຂວງໄຊຍະບູລີ."




ຮ້ານວາງສະແດງຜະລິດຕະພັນ ດ້ານ ວັດທະນະທຳ ດ້ານວັດຖຸ ແຂວງ ໄຊຍະບູລີ

ຄຽງຄູ່ກັບໄດ້ນຳເອົາ ສິລະປະວັນນະຄະດີ ທີ່ມີລາຍການແລະ ເນື້ອໃນຫຼາກຫຼາຍ ແລະ ຫຼາຍສີສັນຂອງຊົນເຜົ່າຕ່າງໆ ມາສະແດງໃນງານ ບຸນມະໂຫລານ ວັດທະນະທຳ ບັນດາຊົນເຜົ່າ ຄັ້ງນີ້ແລ້ວ. ແຂວງໄຊຍະບູລີ ຍັງໄດ້ນຳຜະລິດຕະພັນທາງ ດ້ານວັດທະນະທຳ , ດ້ານວັດຖຸຂອງຊົນເຜົ່າຕ່າງໆມາວາງສະແດງໃນງານຕະຫຼາດນັດ ທາດຫຼວງ ປີ 2000 ເຊິ່ງມີເຄື່ອງຫັດຖະກຳທີ່ຄວັດດ້ວຍໄມ້, ໄມ້ຄ້ອນລາຍຂອງຊົນເຜົ່າລາວທີ່ເອົາມາຈາກເມືອງແກ່ນທ້າວ, ຮູບຈຳລອງເຮືອນບູຮານຂອງຊົນເຜົ່າຕ່າງໆ ແລະ ເຄື່ອງນຸ່ງຫົ່ມ, ເອ້ຢ້ອງຂອງແມ່ຍິງ - ຊາຍ ຊົນເຜົ່າມົ້ງ, ລື້, ກຶມມຸ, ອິວມຽນ, ຍວນ ແລະໄຕດຳ. ຜ່ານການສະແດງຢູ່ຫໍວັດທະນະທຳແຫ່ງຊາດ ແລະ ເດີ່ນທາດຫຼວງຂອງໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງໄຊຍະບູລີ ກໍ່ເຫັນວ່າ: ໄດ້ມີບັນຍາກາດຟົດຟື້ນສົມຄວນສາມາດດຶງດູດຈິດໃຈ ຂອງແຂກຕ່າງດ້າວທ້າວຕ່າງແດນຢາກໄປທ່ອງທ່ຽວ ແຂວງໄຊຍະບູລີ ແລະ ມັນໄດ້ສ້າງຄວາມປະທັບໃຈຂອງ ບ່າວໆ ສາວໆ ນະຄອນຫຼວງວຽງຈັນມີຄວາມປະສົງ ແລະ ປາຖະໜາຢາກແວ່ຢາມແຂວງໄຊຍະບູລີ ຢ່າງບໍ່ໄດ້ລົດລະ, ວາດຟ້ອນມູນເຊື້ອການຖັກແສ່ວຂອງຊົນເຜົ່າ ອິວມຽນ ທີ່ໄດ້ສະດຸດຕາຂອງບັນດາທ່ານຜູ້ແທນທີ່ຫໍວັດທະນະທຳແຫ່ງຊາດໄດ້ສ່ອງແສງໃຫ້ເຫັນວ່າ: ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ ອັນມີສະຫາຍ ປະທານ ຄຳໄຕ ສີພັນດອນ ເປັນຜູ້ນຳໜ້ານັ້ນ ແລະ ທ່ານ ສົມບັດ ເຢຍລີເຮີ ເປັນຜູ້ຊີ້ນຳ ນຳພາ ແລະ ກະຕຸກຊຸກຍູ້ ໃນການຈັດຕັ້ງປະຕິບັດໂດຍກົງນັ້ນ ກໍ່ໄດ້ເຮັດໃຫ້ ຊາວອິວມຽນ ຢູ່ແຂວງໄຊຍະບູລີ ມີການ ຫັນປ່ຽນແບບແຜນການດຳລົງຊີວິດທັນກັບບາດກ້າວການຂະຫຍາຍຕົວຂອງປະເທດຊາດ ແລະ ສາກົນ, ອັນໄດ້ເຮັດໃຫ້ຊາວອິວມຽນ ບໍ່ພຽງແຕ່ມີມູນເຊື້ອໃນການປູກຝັງ, ລ້ຽງສັດ ເປັນສິນຄ້າເທົ່ານັ້ນ ແຕ່ຍັງໄດ້ມີຄວາມຊຳນານງານໃນຂົງເຂດວຽກງານບໍລິການ ເຊິ່ງຖ້າທ່ານໃດຫາກໄດ້ໄປຕະຫຼາດໄຊຍະບູລີ ກໍ່ຈະເຫັນບັນດາຫ້າງຮ້ານສ່ວນຫຼວງຫຼາຍແມ່ນຂອງຊາວອິວມຽນທັງນັ້ນ, ສໍດ່ຽວຍິງຂອງຊົນເຜົ່າຍວນ ເຊິ່ງຂັບຮ້ອງໂດຍ ສາວໄຊຍະສິດ ລູກສາວຂອງຊາວບ້ານຖິ່ນທີ່ສວຍງາມ ແລະອຸດົມຮັ່ງມີ, ສຽງເພງຮ້ອງໝູ່ຍິງທີ່ໄດ້ເວົ້າເຖິງຄວາມອຸດົມສົມບູນຂອງ ແຂວງ ໄຊຍະບູລີ ພາຍໃຕ້ການ ນຳພາຂອງພັກ ປະຊາຊົນປະຕິວັດລາວ ຂັບຮ້ອງໂດຍສາວ ບົວທອງ ແລະ ສາວ ໄຊຍະສິດ ນັ້ນໄດ້ດັ່ງກ້ອງທີ່ເດີ່ນ

ຫາດຫຼວງວຽງຈັນ. ເຊິ່ງມັນໄດ້ສ້າງຄວາມສະເທືອນໃຈ ແລະ ສະກິດ ຫົວໃຈເຖິງ ພະການິງ ຂອງໃຜຄົນໜຶ່ງແຕ່ບໍ່ຮູ້ຊື່ ແລະ ຊາວນະຄອນຫຼວງວຽງຈັນ ກໍ່ຄືຊາວລາວທົ່ວປະເທດ ຢ່າງບໍ່ມີວັນເຫືອດແຫ້ງ ແລະຈືດຈາງໄດ້ເລີຍ ມີລຸງຄົນໜຶ່ງໄວ 65 ປີ ທີ່ມາຈາກບັນດາ ແຂວງພາກໃຕ້ ເຊິ່ງເປັນຜູ້ແທນຖືກເຊີນມາຮ່ວມບຸນມະໂຫລານວັດທະ ນະທຳບັນດາເຜົ່າ ປີ 2000 ທີ່ພວມເບິ່ງລາຍການສະແດງຂອງໜ່ວຍສິລະປະພື້ນເມືອງ ບັນດາຊົນເຜົ່າ ແຂວງໄຊຍະບູລີ ດ້ວຍຄວາມຈົດຈໍ່ ເຊິ່ງໄດ້ຄິດລະເມີ ແລະ ພຶມພຳໂດຍດຽວດ້ວຍສຽງຄ່ອຍໆວ່າ: "ສາວ ໄຊຍະສິດ, ສາວບົວທອງ ລູກສາວຂອງຊົນເຜົ່າຍວນໄຊຍະບູລີເອີຍ ! ພວກຫຼານເກີດມາແຕ່ໃສ ? ຄືວ່າຮ້ອງເພງມ່ວນ ແລະ ຟ້ອນງາມແທ້ ຫຼື ວ່າພວກເຈົ້າໄດ້ເປັນລູກເທວະດາຟ້າແຖນລົງມາເກີດຢູ່ໂລກມະນຸດຊັ້ນຫວະ? ແລະ ຍັງມີລຸງຄົນໜຶ່ງອີກໄວ 60 ປີ ທີ່ມາຈາກບັນດາແຂວງ ພາກກາງ ທີ່ພວມຕິດຕາມຊົມລາຍ



.ຊຸດອາພອນເພດຂອງຊົນເຜົ່າອິວມຽນ ນາງ ຖິ່ນໃຈ ບ້ານດອນຕັນ
ເມືອງ ຊຽງຮອນ

---
ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ການສະແດງຂອງໜ່ວຍສິລະປະພື້ນເມືອງແຂວງໄຊຍະບູລີ ຢ່າງບໍ່ພັບຕາ ໄດ້ລະບາຍຄວາມຮູ້ສຶກຂອງຕົນເອງດ້ວຍສຽງຄ່ອຍໆວ່າ: ສາວ ໄຊຍະສິດ, ສາວບົວທອງ ອີກຍັງບໍ່ທັນພໍເທົ່າໃດ ພວກຫຼານກໍ່ຈະກັບຄືນສູ່ໄຊຍະບູລີ ດິນແດນທີ່ສວຍງາມ ແລະຮັ່ງມີ , ແຕ່ສໍດຽວຍິງຂອງຊົນເຜົ່າຍວນ, ສຽງເພງຮ້ອງ ໝູ່ຍິງທີ່ເວົ້າເຖິງຄວາມອຸດົມສົມບູນແຂວງ ໄຊຍະບູລີ ແລະ ວາດ ຟ້ອນງາມຂອງພວກຫຼານແມ່ນຍັງຝັງເລິກໃນຫົວໃຈ ແລະໄດ້ສ້າງຄວາມປະທັບໃຈແກ່ຊາວນະຄອນຫຼວງວຽງຈັນ ກໍ່ຄືຊາວລາວທົ່ວປະເທດຢ່າງບໍ່ມີວັນເຫືອດແຫ້ງ ເສຍດາຍທີ່ລຸງບໍ່ໄດ້ພົບພວກຫຼານ ແຕ່ສະໄໝຍັງໜຸ່ມແໜ້ນຈະຂໍຂວານອາສາເປັນເຂີຍຂອງ ຊາວຍວນພຸ້ນລະ!

ບົນພື້ນຖານບັນດາບັນຫາທີ່ກ່າວມາຂ້າງເທິງນັ້ນໃນຕອນທ້າຍຂອງການສົນທະນາຢູ່ບ້ານ ພັກ ທະວີຊູນ ທີ່ນະຄອນຫຼວງວຽງຈັນ. ທ່ານຫົວໜ້າ ພະແນກຖະແຫຼງຂ່າວ - ວັດທະນະທຳ ຍັງໄດ້ຢືນ ຢັນຕື່ມ ອີກວ່າ: " ພາຍຫຼັງ ກັບຈາກ ການເຂົ້າຮ່ວມງານມະໂຫລານ...ຄັ້ງນີ້, ຄະນະນຳ ຂົງເຂດ ຖະແຫຼງຂ່າວ - ວັດທະນະທຳ ພວກເຮົາຈະໄດ້ປະສານ



ວາດຟ້ອນມູນເຊື້ອການຖັກແສ່ວຂອງຊົນເຜົ່າອີວມຽນ ແຂວງ ໄຊຍະບູລີ

ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງລົງປຸກລະດົມຊຸກ ຍູ້ໜ່ວຍສິລະປະວັນນ ະຄະດີສະໝັກຫຼິ້ນແຕ່ເທດສະບານແຂວງລົງຮອດໝູ່ບ້ານຊົນເຜົ່າຕ່າງໆ. ຢູ່ແຕ່ລະເມືອງ ແລະ ໄດ້ເປີດກ້ວາງໃຫ້ໜ່ວຍ ສິລະປະວັນນະຄະດີສະໝັກຫຼິ້ນຂອງ ແຕ່ລະເມືອງປະມານ 2 ລາຍການເພື່ອສະແດງຮັບໃຊ້ງານບຸນຕ່າງໆ ຢູ່ ຂັ້ນແຂວງ". ພ້ອມກັນນັ້ນ, ທ່ານຫົວໜ້າ ພະແນກ...ຍັງໄດ້ເນັ້ນໜັກເຖິງວິທີການອະນຸລັກ ແລະປົກປັກຮັກສາສິລະປະວັນນະຄະດີ ແລະສິລະປະວັດທະນະທຳ ຂອງຊົນເຜົ່າຕ່າງໆ ຢູ່ແຂວງ ໄຊຍະບູລີວ່າ: ໃນອານາຄົດ ຈະມີແຜນການປະກວດອາພອນເພດຊົງ ບັນດາຊົນເຜົ່າ, ຊຸກຍູ້ພວກເຖົ້າແກ່ອາວຸໂສ ທີ່ມີແວວທາງດ້ານສິລະປະວັນນະຄະດີ ສັ່ງສອນລູກໆຫຼານໆ ໃຫ້ຮູ້ຂັບລຳ ແລະ ນຳໃຊ້ເຄື່ອງດົນຕີພື້ນເມືອງຂອງຊົນເຜົ່າ ຫຼື ທ້ອງຖິ່ນຕົນເອງ, ຈະສູ້ຊົນພະຍາ ຍາມນຳໃຊ້ ທຶນທີ່ທ່ານ ເຈົ້າແຂວງ ອະນຸມັດໃຫ້ປີລະ 10.000.000 ກີບ ນັ້ນໃຫ້ມີປະສິດທິຜົນເປັນຕົ້ນ: ແມ່ນຈະໄດ້ລົງເກັບຊື້ເຄື່ອງເກົ່າຂອງແກ່ຂອງເຜົ່າຕ່າງໆ ມາໄວ້ຫ້ວາງສະແດງຂອງແຂວງ ເພື່ອເປັນການອະນຸລັກ ແລະ ປົກປັກຮັກສາໃຫ້ດີຂຶ້ນກວ່າເກົ່າ. ອີກເທື່ອໜຶ່ງຜູ້ຂຽນເຊື່ອແນ່ວ່າ ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ ອັນມີສະຫາຍ ປະທານ ຄຳໄຕ ສີພັນດອນ ເປັນຜູ້ນຳໜ້ານັ້ນ ແລະ ສະຫາຍ ສົມບັດ ເຢຍລີເຮີ ເລຂາ ພັກແຂວງ ທັງເປັນເຈົ້າແຂວງໄຊຍະບູລີ ທີ່ເປັນຜູ້ຊີ້ນຳ ນຳພາ ແລະ ກະຕຸກຊຸກຍູ້ໂດຍກົງ ນັ້ນກໍ່ຈະສາມາດເຮັດໃຫ້ນະໂຍບາຍ ສາມັກຄີສະເໝີພາບລະຫວ່າງເຜົ່າຕ່າງໆ ຂອງພັກ ປະຊາຊົນ ປະຕິວັດລາວ ກໍ່ຈະໄດ້ຮັບການຈັດຕັ້ງ ປະຕິບັດທຸກໆການເຄື່ອນໄຫວແຫ່ງຊີວິດສັງຄົມ, ຄວາມແຕກຕ່າງ, ຫຼຸດໂຕນກັນ ລະຫວ່າງຊົນເຜົ່າ ແລະລະຫວ່າງຕົວເມືອງກັບຊົນນະບົດ ຢູ່ແຂວງໄຊຍະບູລີ ກໍ່ຈະຫຍັບເຂົ້າຫາກັນຢ່າງເຖິງຖອງ, ສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳຢູ່ ແຂວງໄຊຍະບູລີ ກໍ່ໄດ້ມີການອະນຸລັກ ຮັກສາ ແລະ ເສີມຂະຫຍາຍຄຽງຄູ່ ກັບສິລະປະ ວັນນະຄະດີ ແລະສິລະປະວັດທະນະທຳແຫ່ງ ຊາດຢ່າງແນ່ນອນ.

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

# ການຄົງຕົວ ແລະ ຂະຫຍາຍຕົວຂອງ
# ວຽກງານ ສິລະປະວັນນະຄະດີ ບັນດາຊົນເຜົ່າ ແຂວງ ວຽງຈັນ

******************

ແຂວງວຽງຈັນ ໄດ້ຮັບການສ້າງຕັ້ງຂຶ້ນເປັນທາງການແມ່ນພາຍຫຼັງກອງປະຊຸມໃຫຍ່ຄັ້ງທີ່ III ຂອງພັກປະຊາຊົນ ປະຕິວັດລາວ ເມື່ອປີ 1982 ເພື່ອສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ ແລະການປົກຄອງຂອງປະເທດ. ພື້ນທີ່ມີທົ່ງຮາບພຽງ, ພູໂນນ ແລະ ຜາສູງ. ບ່ອນຮາບພຽງແມ່ນທົ່ງທຸລະຄົມ ຢູ່ລຽບຕາມລ້ອງງື່ມ ແລະລ່າມໄປສຸດລົງທີ່ພູເຂົາຄວາຍ, ດ້ານເໜືອ ແລະ ດ້ານຕາເວັນອອກແຕ່ສາຍພູພະຂື້ນໄປພື້ນທີ່ເປັນຜາສູງ, ມີຜາຫີນ, ມີຖ້ຳຫຼາຍແຫ່ງ ເຊິ່ງເປັນສະຖານທີ່ທ່ອງທ່ຽວ ແລະ ມີປ່າດົງດິບອັນໄດ້ເຮັດໃຫ້ ແຂວງ ວຽງຈັນ ມີທຳມະຊາດ ຫຼາຍແບບ ແລະ ມີຊັບພະຍາ ກອນແຮ່ທາດຫຼາຍ ຢ່າງຄື: ຖ່ານຫີນ, ຫີນກາວ, ໂບຕັດ, ຊືນ. ແຂວງວຽງຈັນ ເປັນເຂດເສດຖະກິດບ່ອນສຳຄັນຂອງປະເທດ ສະເພາະກະແສໄຟຟ້າຜະລິດຈາກເຂື່ອນນ້ຳງື່ມ ອັນແຮງກ້າແມ່ນສິນຄ້າຂາອອກອັນສ້າງລາຍຮັບຕົ້ນຕໍໃຫ້ແກ່ ສ.ປ.ປ .ລາວ. ທົ່ງພຽງ ແລະ ດິນຕາມ ລ້ອງງື່ມແລະ ອື່ນໆເຮັດໃຫ້ແຂວງວຽງຈັນ ມີພືດພັນທັນຍາຫານ ອຸດົມສົມບູນຕະຫຼອດປີ.

ແຂວງວຽງຈັນ ເປັນແຂວງທີ່ຕັ້ງຂື້ນໃໝ່ ຈຶ່ງມີປະຊາຊົນ ຍົກຍ້າຍມາແຕ່ບ່ອນອື່ນເຂົ້າມາຕັ້ງຖິ່ນຖານຢູ່ເປັນອັນມາກມາຍ, ເດີມແທ້ປະຊາຊົນເຂດນີ້ແມ່ນໄທພວນ ຫຼື ມັກເອີ້ນວ່າ: ໄທງື່ມ. ນອກຈາກໄທພວນ ທີ່ໄດ້ຕັ້ງພູມລຳເນົາລຽບຕາມລ້ອງງື່ມແລ້ວຍັງມີຫຼາຍຊົນເຜົ່າທີ່ໄດ້ເຄື່ອນຍ້າຍມາສ້າງຕັ້ງເປັນບ້ານ ເຮືອນຕັ້ງຫຼາຍສະຕະວັດມາແລ້ວເຊັ່ນ: ຊົນເຜົ່າໄຕ, ກຶມມຸ, ມົ້ງ, ອີວມຽນ, ຍວນ...ພ້ອມກັນນັ້ນ ຍັງມີຫຼາຍຊົນເຜົ່າທີ່ໄດ້ເຄື່ອນໄຫວປະຕິບັດໜ້າທີ່ວຽກງານທາງລັດຖະການ ແລະ ສ່ວນຕົວແລ້ວກໍ່ຕັ້ງບ້ານ ເຮືອນຮ່ວມກັບບັນດາ ຊົນເຜົ່າດັ້ງເດີມເຊັ່ນ: ຊົນເຜົ່າລື້, ກະຕາງ, ມັງກອງ, ອາຄາ,ຊ່ວຍ,

ຢຣຸ,ຕະໂອ້ຍ, ຕຣຽງ, ພູນ້ອຍ, ຕຣີ, ຜ້ອງ, ເບຣົາ, ກະຕູ, ລະເມດ, ໄປຣ, ຮາຣັກ, ປະໂກະ, ໂອຍ, ກຣຽງ, ລາຫູ, ຫໍ້, ເຈັງ, ຢັ້ງ, ແຢະ, ແຊກ, ສາມຕ່າວ, ສິງມູນ, ຕູ້ມ, ງວນ, ໂລໂລ, ຮ່າຍີ້, ລະວີ, ຂະແມ, ກຣີ...

ບັນດາຊົນເຜົ່າໃນແຂວງວຽງຈັນ ແມ່ນຍັງຄົງຮັກສາ ເອກະລັກສະເພາະຂອງຊົນເຜົ່າຕົນເອງເຊັ່ນ: ເອກະລັກກ່ຽວກັບພາສາປາກເວົ້າທີ່ໄດ້ນຳໃຊ້ເປັນສື່ສານຕິດຕໍ່ພົວພັນແລກປ່ຽນ ຊື້ຂາຍພາຍໃນຊົນເຜົ່າຂອງຕົນເອງ ແລະ ກັບ ບັນດາຊົນເຜົ່າທີ່ໃກ້ຄຽງ; ບໍ່ພຽງແຕ່ເທົ່ານັ້ນ ພວກເຂົາເຈົ້າຍັງມີເອກະລັກກ່ຽວກັບ ປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດ ທີ່ຕິດພັນເຖິງຊື່ເອີ້ນເດີມ ທີ່ພວກ ເຂົາເຈົ້າມີຄວາມສະໜັກໃຈ ແລະເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບ ແນວຄິດຈິດຕະສາດ ທີ່ສະແດງອອກຢູ່ໃນວິຖີຊີວິດ ວັດທະນະທຳຄື: ວັດທະນະທຳດ້ານວັດຖຸ, ຈິດໃຈ ແລະດ້ານສັງຄົມ. ໄທງິ້ມ ທີ່ຢູ່ຕາມລ້ອງງິ້ມ ຜູ້ທີ່ມີຄວາມສາມາດໃນການປູກມອນປ້ອນໄໝເຊັ່ນດຽວກັບໄທພວນແຂວງຊຽງຂວາງ. ບັນດາຊົນເຜົ່າທີ່ເປັນບ້ານເອກະລາດຂອງຊົນເຜົ່າຕົນເອງລ້ວນແຕ່ໄດ້ມີຄວາມສະຫງວນຄວາມງາມ, ມີມູນເຊື້ອທາງດ້ານສິລະປະວັນນະຄະດີປະຈຳທ້ອງຖິ່ນ ແລະ ປະຈຳຊົນເຜົ່າຄື: ຂັບງື່ມ, ຂັບແມນ, ຂັບໄທດຳ, ຂັບມົ້ງ, ຂັບອີວມຽນ, ຂັບເຕີມ...ແຕ່ວາດຂັບລຳ ທີ່ມີຊື່ສຽງກວ່າໝູ່ແມ່ນຂັບງື່ມ... ພ້ອມກັນນັ້ນພວກເຂົາເຈົ້າຍັງ ມີວາດຟ້ອນທີ່ສະແດງເຖິງລວດລາຍ ແລະ ໜ້າງຶດງໍ້ອັດສະຈັນນັ້ນຄື: ຟ້ອນ " ລາຍງ້າວ "ຂອງຊົນເຜົ່າລາວທີ່ບ້ານປາກກະຍຸງ. ປະຊາຊົນ ບັນດາຊົນເຜົ່າ ໃນ ແຂວງວຽງຈັນ ເປັນຄົນທີ່ມີຄວາມດຸໝັ່ນ ຂະຫຍັນພຽນໃນການ ອອກແຮງງານເພີ່ມພູນຜະລິດຜົນ, ມີມູນເຊື້ອໃນການຕໍ່ສູ້ຕ້ານກັບສັດຕູທຳມະຊາດ ແລະ ສັງຄົມເພື່ອການຄົງຕົວ ແລະ ຂະຫຍາຍຕົວ, ເປັນຜູ້ທີ່ມີຄວາມສະດຸ້ງໄວໃນການຫັນປ່ຽນ ແບບແຜນການດຳລົງຊີວິດ ແລະ ການພັດທະນາຕົນເອງ.

ບົນພື້ນຖານບັນດາຊົນເຜົ່າ ໃນ ແຂວງ ວຽງຈັນ ມີມູນເຊື້ອທາງ ດ້ານສິລະປະວັນ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ນະຄະດີ ແລະວັດທະນະທຳ ດັ່ງໄດ້ ກ່າວມານັ້ນ ແລະ ໄດ້ອີງໃສ່ຄວາມຮຽກຮ້ອງຕ້ອງ ການຂອງປະຕິວັດ ແລະປະຊາຊົນ. ໃນຊຸມປີ 1970 ຄະນະພັກ ແລະອຳນາດການປົກຄອງປະຕິວັດແຂວງວຽງຈັນ ຕາເວັນອອກໄດ້ເລືອກເຟັ້ນລູກຮັກຫຼານແພງ ຂອງປະຊາຊົນເຜົ່າຕ່າງໆ ມາເຕົ້າໂຮມເພື່ອຈັດຕັ້ງເປັນກອງສະແດງອາຊີບຂອງແຂວງ ແລະ ຫຼັງຈາກນັ້ນກໍ່ໄດ້ຈັດສົ່ງຍົກລະດັບທາງດ້ານວິຊາການຢູ່ໂຮງຮຽນສິລະປະດົນຕີຣ ຂອງສູນກາງທີ່ເມືອງ ວຽງໄຊ. ພາຍຫຼັງສຳ ເລັດການສຶກສາເມື່ອຕົ້ນປີ 1976. ນັກສະແດງ 12 ຊີວິດຂອງແຂວງວຽງຈັນ ກໍ່ໄດ້ເດີນທາງເຂົ້າມາວຽງຈັນ ແຕ່ເນື່ອງຈາກໃນທ້າຍປີ 1976 ແຂວງວຽງຈັນ ແລະ ກຳແພງນະຄອນວຽງຈັນ ໄດ້ເອົາເຂົ້າກັນເປັນ ແຂວງກຳແພງ ນະຄອນວຽງຈັນ ເພາະນັ້ນບັນດານັກສະແດງເຫຼົ່ານັ້ນຈິ່ງໄດ້ກາຍເປັນກອງສິລະປະກອນ ແຂວງ ກຳແພງນະຄອນວຽງຈັນ. ແຕ່ພາຍຫຼັງແຂວງວຽງຈັນໄດ້ຮັບການສ້າງຕັ້ງຄືນໃໝ່ ເມື່ອປີ 1982. ກອງສິລະປະກອນແຂວງວຽງຈັນກໍ່ເລີ່ມກໍ່ຮ່າງສ້າງຕົວຂຶ້ນ ເຊິ່ງປະກອບດ້ວຍນັກສະແດງ ແລະນັກດົນຕີຣ ເປັນຈຳນວນບໍ່ພໍເທົ່າໃດຊີວິດ ແລະຜ່ານການຄົງຕົວ, ຂະຫຍາຍຕົວແຕ່ຊຸມປີ 1980 - 1990. ກອງສິລະປະກອນແຂວງວຽງຈັນ ໄດ້ພະຍາຍາມປັບປຸງການ ຈັດຕັ້ງຂອງຕົນ ຄຽງຄູ່ກັບໄດ້ປະດິດບົດຮ້ອງທຳນອງເສບ, ເຄື່ອນໄຫວສະແດງຮັບໃຊ້ແຂກຕ່າງດ້າວທ້າວຕ່າງແດນ, ສະແດງຮັບໃຊ້ພື້ນຖານການຜະລິດ, ຮັບໃຊ້ກອງປະຊຸມໃຫຍ່ອົງຄະນະພັກເມືອງ ແລະບຸນປະເພນີບໍ່ຈັກວ່າເທົ່າໃດຄັ້ງ. ຮອດປີ 1994 ກອງສິລະປະກອນ ແຂວງ ວຽງຈັນໄດ້ຫັນການ ເຄືອນໄຫວໄປສູ່ຮູບການອື່ນ ແລະ ເມື່ອເປັນແນວນັ້ນບັນດານັກສະແດງ ແລະນັກດົນຕີຣ ເປັນຈຳນວນບໍ່ໜ້ອຍກໍ່ຖືກສັບຊ້ອນໄປຮັບໜ້າທີ່ໃໝ່, ຈຳນວນໜຶ່ງກໍ່ລົງສູ່ຮາກຖານບ້ານຊົນເຜົ່າຕ່າງໆ ແລະອີກເປັນຈຳນວນບໍ່ໜ້ອຍກໍ່ເຂົ້າເຮັດການຢູ່ນຳຄະນະວົງດົນຕີໜຸ່ມໂພນໂຮງ. ແຕ່ມື້ນັ້ນມາຮອດມື້ນີ້ ຢູ່ແຂວງວຽງຈັນເຖິງວ່າບໍ່ມີກອງສະແດງອາຊີບຄືແຕ່ກ່ອນກໍ່ຕາມແຕ່ໄດ້ມີໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນ ທີ່ໄດ້ມີການຈັດຕັ້ງ ຂຶ້ນຢູ່ຕາມໆບ້ານຊົນເຜົ່າຕ່າງໆ ແລະຄະນະວົງດົນຕີ

ຂອງບັນດາບຸກຄົນ ແລະ ລວມໝູ່ກໍ່ໄດ້ຕັ້ງຂຶ້ນ ເພື່ອຮັບໃຊ້ຄວາມຮຽກຮ້ອງ ຕ້ອງການຂອງສັງຄົມ. ມາຮອດປະຈຸບັນວຽກງານ ສິລະປະວັນນະຄະດີຢູ່ແຂວງວຽງຈັນ ເຖິງວ່າບໍ່ທັນຂະຫຍາຍຕົວໃນລະດັບສູງກໍ່ຕາມ ແຕ່ກໍ່ທັນວ່າໄດ້ມີການເຕີບໃຫຍ່ ຂຶ້ນພໍ ສົມຄວນ. ເຊິ່ງຕາມຕົວເລກທີ່ບໍ່ທັນຄົບຖ້ວນໄດ້ມີໜ່ວຍສິລະປະວັນນະຄະດີ ສະໝັກ ຫຼິ້ນ 22 ໜ່ວຍທີ່ໄດ້ສ້າງຕັ້ງຂຶ້ນຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ, ໂຮງຮຽນມັດທະຍົມຕົ້ນ, ຕອນປາຍ, ກອງທະຫານ, ປ້ອງກັນຄວາມສະຫງົບແຕ່ວ່າເດັ່ນກວ່າໝູ່ແມ່ນໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນເຂດຍອດແຈ້ງຂອງຊົນເຜົ່າມົ້ງເຄີຍເຄື່ອນໄຫວສະແດງຮັບໃຊ້ງານບຸນ ປະເພນີ, ກອງປະຊຸມໃຫຍ່ອົງຄະນະພັກແຂວງ,ເມືອງ, ແຂກຕ່າງດ້າວທ້າວຕ່າງແດນ ເຊິ່ງໄດ້ຮັບຄວາມນິຍົມຈາກບັນດາ ທ່ານຜູ້ຊົມໂດຍ ບໍ່ມີວັນຈືດຈາງ, ຄະນະຟ້ອນດາບຂອງຊົນເຜົ່າລາວຢູ່ບ້ານປາກກະຍຸງ ກໍ່ສ້າງຄວາມງຶດງໍ້ອັດສະຈັນຈາກບັນດາທ່ານຜູ້ຊົມ. ພ້ອມນັ້ນຍັງມີ ຄະນະ



ຂັບມົ້ງສະແດງໂດຍໜ່ວຍສິລະປະວັນນະຄະດີພື້ນເມືອງ
ບັນດາເຜົ່າແຂວງວຽງຈັນ

ວົງດົນຕີໜຸ່ມໂພນໂຮງ (1) ແລະ (2), ໜຸ່ມວັງວຽງ, ໜຸ່ມເຂົ້າໜຽວ ແລະ ໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຂອງ ຊົນເຜົ່າກຶມມຸຢູ່ເມືອງ ຫີນເຫີບ... ເປັນຕົ້ນ.

ໃນໂອກາດບຸນມະໂຫລານວັດທະນະທຳ ບັນດາຊົນເຜົ່າທົ່ວປະເທດຄັ້ງທີ່ II ປີ 2000 ແລ້ວນີ້. ແຂວງວຽງຈັນ ໄດ້ຄັດເລືອກນັກສະແດງຈາກຄະນະສິລະປະວັນນະຄະດີສະໝັກຫຼິ້ນຊົນເຜົ່າຕ່າງໆ 20 ກວ່າຊີວິດເພື່ອເຂົ້າຮ່ວມງານສະແດງຮ່ວມກັບຄະນະສິລະປະວັນນະຄະດີພື້ນເມືອງຂອງຊົນເຜົ່າຕ່າງໆ ທົ່ວປະເທດທີ່ຫໍວັດທະນະທຳແຫ່ງຊາດ ແລະເດີ່ນທາດຫຼວງ. ແຕ່ມື້ນັ້ນມາຮອດມື້ນີ້ເຖິງວ່າງານມະໂຫລານດັ່ງກ່າວໄດ້ ຜ່ານໄປ 2 ປີ ແລ້ວກໍ່ຕາມ ແຕ່ສຽງເພງຮ້ອງລວມໝູ່, ສຽງຂັບລຳຂອງຊົນເຜົ່າອິວມຽນ ແລະວາດຟ້ອນຂອງຊົນເຜົ່າມົ້ງ ທີ່ຄະນະສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງວຽງຈັນ ໄດ້ສະແດງທີ່ຫໍວັດທະນະທຳແຫ່ງຊາດ ແລະ ເດີ່ນທາດຫຼວງຍັງຝັງເລິກ ແລະ ສະຖິດໝັ້ນຢູ່ໃນໝາກຫົວໃຈຂອງແຂກຕ່າງດ້າວທ້າວຕ່າງແດນ ແລະ ບັນດາທ່ານໄດ້ເບິ່ງໄດ້ຊົມໂດຍບໍ່ມີວັນເຫືອດແຫ້ງແຕ່ຢ່າງໃດເລີຍ ./.



ໜ່ວຍສິລະປະວັນນະຄະດີ ພື້ນເມືອງ ບັນດາຊົນເຜົ່າ ແຂວງ ວຽງຈັນ

# ວຽກງານສິລະປະ ວັນນະຄະດີພື້ນເມືອງ
# ບັນດາຊົນເຜົ່າແຂວງ ບໍລິຄຳໄຊ ກໍ່ມີທ່າຂະຫຍາຍຕົວ

******************

ບໍລິຄຳໄຊ ແມ່ນແຂວງໜຶ່ງໃນບັນດາແຂວງພາກກາງຂອງ ສ ປ ປ ລາວ ເຊິ່ງສ້າງຕັ້ງຂຶ້ນເມື່ອປີ 1986, ມີເຂດແດນຕິດກັບນະຄອນຫຼວງວຽງຈັນ, ແຂວງ ວຽງຈັນ, ຊຽງຂວາງ, ບາງ ແຂວງ ສ.ສ ຫວຽດນາມ, ແຂວງ ຄຳມ່ວນ ແລະ ບາງແຂວງຂອງຣາ ຊະອານາຈັກໄທ. ບໍລິຄຳໄຊ ເປັນແຂວງໜຶ່ງທີ່ປະກອບດ້ວຍຫຼາຍຊົນເຜົ່າ ທີ່ຕັ້ງພູມລຳເນົາ ແລະ ທຳມາຫາກິນ ຢ່າງສະຫຼັບສັບຫວ່າງ ບົນດິນດອນຕອນນີ້ເປັນເວລາເຫິງນານມາແລ້ວເຊັ່ນ: ຊົນເຜົ່າລາວ, ຜູ້ໄທ, ໄຕ, ມັງກອງ, ກະຕາງ, ກືມມຸ, ມົ້ງ, ຕູ້ມ, ຊ່ວຍ, ຜ້ອງ, ຢຣຸກອງ, ກຣີ (ອາເຣມ) ໄຕເມີ້ຍ,ໄຕແມນ,ໄຕປາວ,ໄຕແອ້,ໄຕແຖງ ແລະ ອື່ນໆ.

ບັນດາຊົນເຜົ່າຢູ່ແຂວງບໍລິຄຳໄຊ ເຄີຍມີມູນເຊື້ອແຫ່ງຄວາມສາມັກຄີ ຮັກຫອມຕ່ອມຕູ້ມ ມີມູນເຊື້ອຕໍ່ສູ້ຕ້ານຈັກກະພັດ, ສັກດີນາຕ່າງດ້າວ ແລະ ເຈົ້າສັກດີນາທ້ອງຖິ່ນ ຈົນເຖິງໄຊຊະນະສົມບູນເປັນຊົນເຜົ່າທີ່ມີມູນເຊື້ອດຸໝັ່ນ, ຂະຫຍັນພຽນໃນການອອກແຮງງານ, ມີຄວາມສະແຫວງ ຫາ ແລະ ຫັນປ່ຽນແບບແຜນການດຳລົງຊີວິດ ທວງທັນກັບບາດກ້າວການຂະຫຍາຍຕົວຂອງປະເທດຊາດ ແລະຍຸກສະໄໝ. ບັນດາຊົນເຜົ່າຢູ່ ແຂວງດັ່ງກ່າວ ສ່ວນຫຼວງຫຼາຍແມ່ນຊົນເຜົ່າທີ່ຕັ້ງພູມລຳເນົາເຫິງນານ ແລະ ມີອີກຈຳນວນໜຶ່ງແມ່ນບັນດາຊົນເຜົ່າ ທີ່ຫາກໍ່ເຄື່ອນຍ້າຍມາຈາກບັນດາແຂວງພາກເໜືອ ແລະມີຈຳນວນບໍ່ໜ້ອຍແມ່ນເຄື່ອນຍ້າຍເຂົ້າມາຈາກບັນດາປະເທດໃກ້ຄຽງໄດ້ຫຼາຍສະຕະວັດມາແລ້ວ ໃນທີ່ສຸດກໍ່ໄດ້ຂະ ໜານນາມຕົນເອງວ່າ: ແມ່ນຊາດລາວທັງນັ້ນ.

ບັນດາຊົນເຜົ່າທີ່ມາຢູ່ກ່ອນກໍ່ຄື ບັນດາຊົນເຜົ່າທີ່ຫາກໍ່ເຄື່ອນຍ້າຍມາຕັ້ງພູມລຳເນົາມາຢູ່ໃໝ່ກໍ່ຍັງຄົງຮັກສາ ບັນດາເອກະລັກສະເພາະຂອງຊົນເຜົ່າຕົນເອງ ເຖິງວ່າມີຫຼາຍ

ຊົນເຜົ່າບໍ່ມີພາສາຂຽນແຕ່ກໍ່ມີພາສາປາກເວົ້າສະເພາະຂອງຊົນເຜົ່າຕົນເອງ. ພວກເຂົາເຈົ້າໄດ້ນຳໃຊ້ພາສາປາກເວົ້າ ຂອງຕົນເປັນພາຫະນະສື່ສານຕິດຕໍ່ພົວພັນແລກປ່ຽນຊື້ຂາຍ ພາຍໃນຊົນເຜົ່າ ແລະກັບບັນດາຊົນເຜົ່າທີ່ໃກ້ຄຽງ; ມັນບໍ່ພຽງແຕ່ເທົ່ານັ້ນ ພວກເຂົາເຈົ້າ ຍັງມີປະຫວັດສາດຄວາມເປັນມາ ການເຄື່ອນຍ້າຍ, ກົກເຄົ້າຕົ້ນກຳເນີດ ແລະ ຊື່ຮຽກສະເພາະຂອງຊົນເຜົ່າຕົນເອງ ພ້ອມກັນນັ້ນພວກເຂົາເຈົ້າຍັງມີເອກະລັກ ກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດຈິດຕະສາດ ທີ່ສະແດງອອກໃນວົງຄະນາຍາດວັດທະນະທຳເປັນຕົ້ນແມ່ນໄດ້ມີຮີດຄອງ ແລະ ພິທີກຳຕ່າງໆ ໃນການຊອກທີ່ດິນເພື່ອທຳການຜະລິດ, ຊອກທີ່ດິນໃນການຕັ້ງບ້ານ, ຕັ້ງເຮືອນ, ມີຄຸນລັກສະນະເຮືອນ, ການຈັດວາງໃນຫ້ອງເຮືອນມີເຄື່ອງມືການຜະລິດ, ພາຫະນະຂົນສົ່ງ, ເຄື່ອງນຸ່ງຫົ່ມເອ້ຢ້ອງ, ອາຫານການກິນ ແລະ ການດື່ມ ຫຼື ດູດ ເປັນສະເພາະຂອງຊົນເຜົ່າຕົນເອງ ພ້ອມກັນນັ້ນ ຍັງມີຫຼາຍຊົນເຜົ່າໄດ້ມີໂຄງປະກອບສ້າງທາງດ້ານສັງຄົມ, ມີການພົວພັນສັງຄົມ, ມີເອກະລັກກ່ຽວກັບການແຕ່ງດອງ, ການເກີດ ແລະການສົ່ງສະການ. ບໍ່ພຽງແຕ່ເທົ່ານັ້ນມີຫຼາຍ ຊົນເຜົ່າໄດ້ມີລະບົບການເຊື່ອຖື, ມີຮີດຄອງປະເພນີຕາມຮອບວຽນໃນການຜະລິດໃນປີໜຶ່ງ, ມີວັນນະຄະດີພື້ນເມືອງເຊັ່ນ: ນິທານພື້ນເມືອງ, ມີເຄື່ອງດົນຕີ ແລະບົດຮ້ອງທຳນອງເສບທີ່ໄດ້ນຳໃຊ້ ຂັບລຳ ໃນເວລາອອກແຮງງານ, ເວລາກ່ອມລູກ, ເວລາບຸນສົມກິນທານ ແລະອື່ນໆ ແຕ່ວ່າວາດຂັບລຳ ທີ່ພວກເຂົາເຈົ້າໄດ້ມີຄວາມນິຍົມຫຼາຍກວ່າໝູ່ນັ້ນມີ ຂັບເມີ້ຍ, ລຳຜູ້ໄທ, ລຳມະຫາໄຊ, ຂັບຍໍ ແລະ ອື່ນໆ.

ບົນພື້ນຖານບັນດາຊົນເຜົ່າຢູ່ແຂວງດັ່ງກ່າວໄດ້ມີມູນເຊື້ອທາງດ້ານສິລະປະວັນນະຄະດີພື້ນເມືອງຢ່າງອຸດົມສົມບູນ ມີສີສັນຫຼາກຫຼາຍທຸກຊົນເຜົ່ານັ້ນເຖິງວ່າແຂວງບໍລິຄຳໄຊ ຫາກໍ່ສ້າງຕັ້ງໃໝ່ກໍ່ຕາມ ແຕ່ກໍ່ສາມາດສ້າງຕັ້ງກອງສິລະປະກອນ ແຂວງພ້ອມກັບໄລຍະມື້ສ້າງຕັ້ງແຂວງເມື່ອປີ 1986 ແຕ່ຕົກມາຮອດໄລຍະໜຶ່ງເນື່ອງຈາກອຸປະກອນຮັບໃຊ້ ແລະ ທຶນຮອນທີ່ຈະຮັບໃຊ້ແກ່ການເຄື່ອນໄຫວຮັບໃຊ້ໜ້າທີ່ການເມືອງ

---

ຂອງການສະແດງດັ່ງກ່າວຂາດເຂີນຈຶ່ງໄດ້ຫັນກອງສະແດງດັ່ງກ່າວໄປສູ່ຮູບການອື່ນ.

ປະຈຸບັນ ຢູ່ ແຂວງ ບໍລິຄໍາໄຊ ບໍ່ທັນມີກອງ ສິລະປະກອນແຂວງ ແຕ່ໄດ້ມີ ໜ່ວຍ ສິລະປະວັນນະຄະດີ ຂອງກອງ ບັນຊາການທະຫານແຂວງ 27 ຄົນ, ປ.ກ.ສ ແຂວງ 18 ຄົນ ແລະ ໜ່ວຍສິລະປະວັນນະຄະດີ ຂອງກຸ່ມບໍລິສັດ ພັດທະນາເຂດພູດອຍ 40 ກວ່າຄົນ ທີ່ມີ ລັກສະນະເຄິ່ງອາຊີບ ກໍ່ໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ໜ້າທີ່ການເມືອງ, ຮັບໃຊ້ ກອງປະຊຸມໃຫຍ່ ຂອງອົງຄະນະ ພັກແຂວງ, ເມືອງ, ຂະແໜງການຂັ້ນແຂວງ, ງານບຸນ ປະເພນີຊົນເຜົ່າຕ່າງໆ ແລະສະແດງຮັບໃຊ້ຂະບວນການຕ່າງໆ ພາຍໃນແຂວງຂອງຕົນ ມັນບໍ່ພຽງແຕ່ເທົ່ານັ້ນໜ່ວຍສິລະປະວັນນະຄະດີດັ່ງກ່າວຍັງໄດ້ເຄື່ອນໄຫວສະແດງ ຮັບໃຊ້ບັນດາແຂວງໃກ້ຄຽງ ແລະ ຕ່າງປະເທດອີກດ້ວຍ. ນອກຈາກໜ່ວຍສະແດງທີ່ມີ ລັກສະນະເຄິ່ງອາຊີບທີ່ກ່າວມານັ້ນ ແລ້ວຍັງມີໜ່ວຍສິລະປະວັນນະຄະດີຢູ່ສູນ ວັດທະນະທຳ ເດັກ ແລະ ໜ່ວຍສິລະປະວັນນະຄະດີສະໝັກ ຫຼິ້ນຢູ່ຕາມໂຮງຮຽນ ສາມັນຂັ້ນຕ່າງໆ ໃນເທດສະບານ ແຂວງ ແລະ ຢູ່ແຕ່ ລະເມືອງ ກໍ່ຄືຢູ່ຕາມໝູ່ບ້ານ ເຜົ່າຕ່າງໆ ມີຫຼາຍກວ່າ 50 ໜ່ວຍ,ທ່ານ ເຄນ ລໍມະນີ ກໍາມະການ ພັກ ແຂວງທັງເປັນ ຫົວໜ້າ ພະແນກຖະແຫຼງຂ່າວ ແລະ ວັດທະນະທໍາ ປະຈໍາແຂວງ ບໍລິຄໍາໄຊ ໄດ້ກ່າວວ່າ:



ວາດຟ້ອນຊາວພູດອຍ ຢຸດຕິການຖາງປ່າເຮັດໄຮ່, ໜ່ວຍສິລະປະພື້ນເມືອງ
ບັນດາຊົນເຜົ່າ ແຂວງ ບໍລິຄໍາໄຊ

ຢູ່ແຂວງ ບໍລິຄໍາໄຊ ໄດ້ມີກອງສິລະປະ ວັນນະຄະດີ ເຄື່ອງອາຊີບ ແລະ ສະໝັກຫຼິ້ນ ທີ່ຂຶ້ນກັບຂະແໜງການອື່ນໆ ພະແນກຖະແຫຼງ ຂ່າວ - ວັດທະນະທໍາ ພຽງແຕ່ເຮັດພາລະບົດບາດຄຸ້ມຄອງມະຫາພາກເທົ່ານັ້ນ ແລະຄາດວ່າ ປີ 2001 ນີ້ ຈະສ້າງຕັ້ງກອງສິລະປະກອນແຂວງ, ເພາະທ່ານ ເຈົ້າແຂວງ ໄດ້ຕົກລົງເຫັນດີແລ້ວ ແລະ ໃນປະຈຸບັນ ຍັງພວມຊອກຫາບຸກຄາລະກອນທີ່ຈະບັນຈຸສັບຊ້ອນເຂົ້າໃນຂົງເຂດວຽກງານດັ່ງກ່າວ ແລະ ອີກຈໍານວນໜຶ່ງແມ່ນໄດ້ ສົ່ງ ໄປກໍ່ສ້າງຢູ່ໂຮງຮຽນ ສິລະປະ ດົນຕີ ແຫ່ງຊາດ ທີ່ ນະຄອນ ຫຼວງວຽງຈັນ ແລະ ຢູ່ໂຮງຮຽນ ສິລະປະດົນຕີແຂວງ ແຮກສ່ຽງແຫ່ງ ສ ສ ຫວຽດນາມ ເພິ່ນຮັບຊ່ວຍ ສ້າງປີລະ 5 ທຶນ.”

ໃນໂອກາດບຸນມະໂຫລານວັດທະນະທໍາບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ II ປີ 2000 ເຊິ່ງໄດ້ຈັດຂຶ້ນເມື່ອ ວັນທີ 7 - 12 / 11 / 2000. ທ່ານ ເຄນ ລໍມະນີ ໄດ້ກ່າວວ່າ: " ເພື່ອແນໃສ່ເຮັດໃຫ້ງານບຸນໃຫຍ່ ນີ້ມີບັນຍາກາດຟົດຟື້ນປະຕິວັດປະກອບດ້ວຍເນື້ອໃນ, ລີລາການສະແດງມີ ລັກສະນະຊາດ, ວິທະຍາສາດ ແລະມະຫາຊົນ ເພື່ອເຮັດໃຫ້ການສະແດງມີລັກສະນະຫຼາຍຊົນເຜົ່ານັ້ນແຂວງບໍລິຄໍາໄຊ ໄດ້ນໍາເອົາໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າຈໍານວນໜຶ່ງ ເຊິ່ງໄດ້ມີການຄັດເລືອກມາຈາກບັນດາໜ່ວຍ ສິລະປະວັນນະຄະດີ ກຸ່ມບໍລິສັດພັດທະນາເຂດພູດອຍ, ກອງບັນ ຊາການທະຫານ, ກອງບັນຊາການ ປ.ກ.ສ ແຂວງ ແລະ ມາຈາກໝູ່ບ້ານ ຊົນເຜົ່າຕ່າງໆ ເຊິ່ງແມ່ນພວກທີ່ມີບົດຮຽນ ມີລີລາການສະແດງທີ່ໄດ້ຮັບຄວາມນິຍົມ ຈາກມວນຊົນ ຫຼາຍກວ່າໝູ່ ພ້ອມທັງໄດ້ເຄີຍໄປສະແດງຮັບໃຊ້ທັງພາຍໃນ ແລະ ຕ່າງປະເທດຫຼາຍຄັ້ງ ມາແລ້ວ ແລະ ພ້ອມກັບນັກສະແດງນັ້ນ ຍັງມີລາຍການສະແດງ 8 ລາຍການ ເພື່ອປະກອບສ່ວນໃນການສະແດງຮ່ວມກັບເຂດແຂວງອື່ນ ທັງປະເທດໃນໂອກາດບຸນມະໂຫລານ ຄັ້ງນີ້ດ້ວຍເຊິ່ງມີ: ຂັບລໍາຊົນເຜົ່າເມີ້ຍ, ວາດຟ້ອນຜ້າໄໝ ຂອງຊົນເຜົ່າເມີ້ຍ, ວາດຟ້ອນຊາວພູດອຍ ຢຸດຕິການຖາງປ່າເຮັດໄຮ່, ເພງຮ້ອງລວມໝູ່ຍິງ - ຊາຍ , ເພງດ່ຽວຊາຍ, ເສບດົນຕີພື້ນເມືອງ ຂອງ ເຜົ່າຍໍ, ນິທານ ຊວນຫົວ ແລະ ການສະແດງວາດທະສິນ.”

ລວມຄວາມວ່າ: ບົນເສັ້ນທາງແຫ່ງການ ກໍ່ຮ່າງສ້າງຕົວຂອງບັນດາໜ່ວຍ ສິລະປະວັນນະຄະດີເຄື່ອງອາຊີບ ແລະ ສະໝັກຫຼິ້ນຢູ່ ແຂວງ ບໍລິຄໍາໄຊ ເປັນໄລຍະເຫິງນານນັ້ນ ແມ່ນໄດ້ຕັ້ງ ໜ້າເຄື່ອນໄຫວຮັບໃຊ້ໜ້າ ທີ່ການເມືອງຂອງຕົນ, ສະແດງຮັບໃຊ້ ງານບຸນໃຫຍ່ທີ່ສໍາຄັນຂອງຊາດ, ງານບຸນປະເພນີ, ກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ, ອົງຄະນະພັກ ເມືອງ, ຮັບໃຊ້ຂະບວນການຕ່າງໆ ພາຍໃນ ແຂວງ ແລະໄດ້ ເຂົ້າຮ່ວມສະແດງ ໃນບຸນມະໂຫລານລະດັບທ້ອງຖິ່ນ ແລະລະດັບຊາດໄດ້ເຂົ້າຮ່ວມສະແດງບັ້ນປະກວດ ສິລະປະວັນນະຄະດີຕ່າງໆ ຕາມທີ່ ອົງການຈັດ ຕັ້ງພັກລັດ ໄດ້ຈັດ ຂຶ້ນໃນແຕ່ລະຄັ້ງ. ບັນດາລາຍການສະແດງຂອງໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງ ບໍລິຄໍາໄຊ ໃນໄລຍະທີ່ຜ່ານມາກໍ່ຄືໃນໂອກາດບຸນມະໂຫລານວັດທະນະທໍາບັນດາຊົນເຜົ່າທົ່ວປະເທດ ປີ 2000 ນັ້ນລ້ວນແຕ່ໄດ້ສ້າງຄວາມຈັບ ອົກຈັບໃຈ ແລະ ດຶງດູດຈິດໃຈ ຂອງບັນດາ ທ່ານຜູ້ຊົມຢ່າງບໍ່ມີວັນຈືດຈາງ. ວາດຟ້ອນຊາວພູດອຍຢຸດຕິ ການຖາງປ່າເຮັດໄຮ່ທີ່ໄດ້ສ່ອງແສງໃຫ້ເຫັນວ່າ: ພາຍໃຕ້ ການນໍາພາຂອງ ພັກປະຊາຊົນ ປະຕິວັດ ລາວ ແລະ ແສງສະຫວ່າງຂອງບັນດາມະຕິຂອງສູນກາງພັກ ໃນແຕ່ລະຄັ້ງນັ້ນແມ່ນໄດ້ເຮັດໃຫ້ຊົນເຜົ່າມົ້ງ, ເມີ້ຍ, ກຶມມຸ ແລະ ມັງກອງ ຢູ່ເຂດເມືອງ ຄໍາເກີດ ແມ່ນໄດ້ເຊື່ອມຊຶມແນວທາງນະໂຍບາຍ ຂອງ ພັກ ເຊິ່ງໄດ້ສະແດງ ອອກໃຫ້ເຫັນວ່າ ພວກເຂົາເຈົ້າໄດ້ ຫຼຸດຜ່ອນການຖາງປ່າ ເຮັດໄຮ່ລົງມາຕັ້ງບ້ານຄົງທີ່ ແລະ ໄດ້ຍຶດຖືການເຮັດນາ ປູກເຂົ້າ, ປູກຝັງ ລ້ຽງສັດຊະນິດອື່ນໆ ເປັນສິນຄ້າອັນ ໄດ້ເຮັດໃຫ້ເນື້ອທີ່ ໄຮ່8.300 ກວ່າເຮັກຕາ ໃນເມື່ອກ່ອນມາ ເປັນ 1.000 ເຮັກຕາ; ວາດຟ້ອນ ຜ້າໄໝ ຂອງຊົນເຜົ່າເມີ້ຍ ທີ່ສ່ອງແສງເຖິງ ຊີວິດໃໝ່ຂອງຊົນເຜົ່າເມີ້ຍ ເຊິ່ງແຕ່ກ່ອນແມ່ນ ຖືການຖາງ ປ່າເຮັດໄຮ່ ເປັນອາຊີບຫຼັກ.

ພາຍໃຕ້ແສງສະຫວ່າງແນວທາງປ່ຽນແປງໃໝ່ຂອງພັກ ກໍ່ໄດ້ເຮັດໃຫ້ຊາວເຜົ່າເມີ້ຍ ຫັນປ່ຽນແບບແຜນການດໍາລົງຊີວິດຄື:ດໍາເນີນການຜະລິດຄົງທີ່ເຮັດນາ ແລະສົ່ງເສີມການປູກມອນ ລ້ຽງມ້ອນ ດໍາເນີນການຜະລິດເປັນສິນຄ້າ ແລະ ບັນດາລາຍການ

ສະແດງອື່ນໆ ຂອງ ໜ່ວຍ ສິລະປະ ວັນນະຄະດີ ພື້ນເມືອງບັນດາຊົນເຜົ່າ ແຂວງ ບໍລິຄໍາໄຊ ທີ່ທໍາວັດທະນະທໍາແຫ່ງຊາດ ກໍ່ຄືຢູ່ເດີ່ນທາດຫຼວງ ແມ່ນໄດ້ຝັງເລິກໃນຫົວໃຈຂອງຊາວນະຄອນຫຼວງວຽງຈັນ ແລະ ຊາວລາວທົ່ວປະເທດ, ຈະເປັນການປຸກລະລະດົມ ແລະກະຕຸກຊຸກຍູ້ໃຫ້ຊົນເຜົ່າຕ່າງໆໃນທົ່ວປະເທດບືນຕົວກ້າວຂື້ນໃນການຫັນປ່ຽນແບແຜນການດໍາລົງຊີວິດໃຫ້ທາວງທັນກັບບາດກ້າວການຂະຫຍາຍຕົວຂອງປະເທດຊາດ ແລະຍຸກ ສະໄໝ.

ທັງໝົດເຫຼົ່ານັ້ນ ແມ່ນຢູ່ພາຍໃຕ້ການນໍາພາ ຂອງພັກ ປະຊາຊົນ ປະຕິວັດລາວ ອັນມີສະຫາຍ ປະທານ ຄໍາໄຕ ສີພັນດອນ ເປັນຜູ້ນໍາໜ້າ ແລະຍັງມີອົງຄະນະພັກແຂວງ ອົງຄະນະ ພັກເມືອງອັນມີ ທ່ານ ທອງບັນ ແສງອາພອນ ເປັນຜູ້ ຊີ້ນໍາພາໂດຍກົງ ແລະໃນອານາຄົດເຊື່ອແນ່ວ່າ: ວຽກງານສິລະປະວັນນະຄະດີ ແລະສິລະປະວັດທະນະທໍາ ຂອງຊົນເຜົ່າຕ່າງໆ ຢູ່ແຂວງ ບໍລິຄໍາໄຊ ຈະໄດ້ຮັບການອະນຸລັກຮັກສາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາກວ່ານີ້ ແລະ ກອງສິລະປະກອນແຂວງກໍ່ຈະໄດ້ຮັບການສ້າງຕັ້ງຂື້ນຢ່າງແນ່ນອນ %



ຊຸດອາພອນເພດຊົງຂອງຊົນເຜົ່າ ເມີ້ຍ ແຂວງ ບໍລິຄໍາໄຊ

# ການຄົ້ງຕົວ ແລະ ຂະຫຍາຍຕົວຂອງວຽກງານ ສິລະປະວັນນະຄະດີ ບັນດາຊົນເຜົ່າຢູ່ ແຂວງຄຳມ່ວນ

***************

ແຂວງ ຄຳມ່ວນ ແມ່ນແຂວງໜຶ່ງໃນບັນດາແຂວງທີ່ຕັ້ງຢູ່ພາກກາງຂອງ ສ.ປ.ປ ລາວ ເຊິ່ງມີເຂດແດນ ຕິດກັບແຂວງ ສະຫວັນນະເຂດ, ສ.ສ ຫວຽດນາມ, ບໍລິຄຳໄຊ ແລະ ລາຊະອານາຈັກໄທ. ແຂວງຄຳມ່ວນ ມີຄວາມສຳຄັນທາງດ້ານເສດຖະກິດໂດຍເສັ້ນທາງເລກ 12 ເຊື່ອມຕໍ່ລະຫວ່າງ ສ.ປ.ປ ລາວ ໃສ່ທະເລຂອງ ສ. ສ ຫວຽດນາມ ທີ່ເມືອງວິນ. ນັບວ່າເປັນເສັ້ນທາງອອກສູ່ທະເລຂອງ ສ.ປ.ປ ລາວ ທີ່ສຳຄັນບ່ອນໜຶ່ງ. ແຂວງ ຄຳມ່ວນ ມີແຮ່ທາດເຊັ່ນ: ບໍ່ກົ່ວໂພນຕິ້ວ, ພູພຽງນາແປ ແລະ ພູພຽງ ນາກາຍ ມີປ່າໄມ້ທີ່ມີຄ່າສູງເຊັ່ນ: ໄມ້ແປກ, ໄມ້ເກດສະໜາ ແລະ ເປັນແຫຼ່ງທີ່ສັດປ່າເດີນທາງຜ່ານ. ແຂວງຄຳມ່ວນ ມີທິວທັດທຳມະຊາດອັນງາມຕາ ແລະ ໜ້າຈັບໃຈມີສະຖານທີ່ທ່ອງທ່ຽວຫຼາຍແຫ່ງເຊັ່ນ: ຖ້ຳແອ່ນ , ຖ້ຳປາຝາ,ຖ້ຳພະ ຢູ່ເມືອງທ່າແຂກ...ເປັນຕົ້ນ. ພື້ນທີ່ຂອງແຂວງຄຳມ່ວນ ລວມມີທົ່ງພຽງ ລຽບຕາມລ້ອງແມ່ນ້ຳຂອງ, ຕາມລ້ອງເຊບັ້ງໄຟ ແລະຕາມລ້ອງແມ່ນ້ຳຫີນບູນເປັນຕົ້ນ. ນອກຈາກນັ້ນພື້ນທີ່ຂອງແຂວງຄຳມ່ວນຍັງມີພູພຽງ, ພູດອຍ ແລະ ພູຜາທີ່ສູງຊັນເປັນຈຳນວນມາກມາຍ.

ຄຳມ່ວນ ເປັນແຂວງດັ້ງເດີມເກົ່າແກ່ ເຊິ່ງໄດ້ລະບຸໄວ້ໃນປະຫວັດສາດ ແຂວງຄຳມ່ວນ ເຄີຍເປັນທີ່ຕັ້ງຂອງອານາຈັກໜຶ່ງທີ່ເອີ້ນວ່າ: ສີໂຄດຕະບູນ ປະມານພັນປີມາແລ້ວເຊິ່ງມີທາດເກົ່າແກ່ຄື: ທາດສີໂຄດຕະບູນ ຫຼື ສີໂຄດຕະບອງປະກົດເປັນ ຫຼັກຖານມາຈົນເທົ່າທຸກວັນນີ້. ຄຳມ່ວນ ເປັນແຂວງໜຶ່ງທີ່ປະກອບດ້ວຍຫຼາຍຊົນເຜົ່າທີ່ໄດ້ຕັ້ງພູມລຳເນົາ, ທຳມາຫາກິນ ບົນດິນດອນຕອນນີ້ເປັນໄລຍະເຫິງນານມາແລ້ວເຊັ່ນ: ຊົນເຜົ່າລາວ, ໄຕ, ຜູ້ໄທ, ກຶມມຸ, ມົ້ງ, ກະຕາງ, ມັງກອງ, ຕຣີ, ຊ່ວຍ, ແຊກ, ງວນ, ຕູມ, ຊີງມູນ ແລະ ກຣີ (ສະລາງ ). ນອກຈາກນັ້ນຍັງມີຫຼາຍຊົນເຜົ່າ ທີ່ໄດ້ເຄື່ອນໄຫວໄປມາປະຕິບັດ ໜ້າທີ່

---

ວຽກງານ ທາງລັດຖະການ ແລະສ່ວນຕົວແລ້ວກໍ່ຕັ້ງເຮືອນຊານຮ່ວມກັບ ບັນດາ ຊົນເຜົ່າດັ້ງເດີມ. ບັນດາຊົນເຜົ່າຢູ່ແຂວງຄຳມ່ວນ ຍັງຄົງຮັກສາບັນດາເອກະລັກສະເພາະຂອງຊົນເຜົ່າຕົນເອງເຊັ່ນ: ເອກະລັກກ່ຽວກັບພາສາປາກເວົ້າ, ປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດທີ່ຕິດພັນເຖິງຊື່ເອີ້ນເດີມ ທີ່ພວກເຂົາເຈົ້າໄດ້ມີຄວາມສະໜັກໃຈ ແລະເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດຈິດຕະສາດທີ່ສະແດງ ອອກໃນວົງຄະນາຍາດ ວັດທະນະທຳຄື: ວັດທະນະທຳດ້ານວັດຖຸ, ຈິດໃຈ ແລະດ້ານສັງຄົມ. ບັນດາຊົນເຜົ່າຢູ່ ແຂວງ ຄຳມ່ວນ ໄດ້ມີມູນເຊື້ອ ຕໍ່ສູ້ບໍ່ຍອມຈຳນົນ ໃນການຕ້ານຈັກກະພັດຕ່າງດ້າວ ທີ່ເຂົ້າມາຮຸກຮານ ແລະ ຕ້ານກັບເຈົ້າສັກດີນາທ້ອງຖິ່ນ ເຊັ່ນ: ຂະບວນການຕໍ່ສູ້ເພື່ອປົກປັກ ຮັກສາຕົວເມືອງ ທ່າແຂກ ນຳໂດຍ: ສະເດັດເຈົ້າ ສຸພານຸວົງ ແລະ ນາຍພົນສິງກະໂປ ສີໂຄດຈຸນລະມະລີ ເມື່ອວັນທີ 21 ມີນາ ປີ 1946, ຂະບວນການຕໍ່ສູ້ຍຶດອຳນາດ ການປົກຄອງຝ່າຍວຽງຈັນເກົ່າ ຂອງປະຊາຊົນເມືອງ ໜອງບົກ ເມື່ອ ປີ 1975 ແລະ ອື່ນໆ. ບັນດາຊົນ ເຜົ່າ ຢູ່ແຂວງ ຄຳມ່ວນ ໄດ້ມີມູນເຊື້ອດຸໝັ່ນຂະຫຍັນພຽນໃນການອອກແຮງງານ ເພື່ອຫາລ້ຽງ ກຸ້ມຕົນເອງ, ມີຄວາມສະດຸ້ງໄວໃນການຫັນປ່ຽນ ແບບແຜນການທຳມາຫາກິນຕາມແນວທາງປ່ຽນແປງໃໝ່ຂອງພັກ ແລະ ລັດ. ບໍ່ພຽງແຕ່ ເທົ່ານັ້ນຊົນເຜົ່າຕ່າງໆຢູ່ແຂວງດັ່ງກ່າວໄດ້ມີຄວາມສະຫງວນຄວາມງາມ, ມີມູນເຊື້ອທາງດ້ານສິລະປະ ວັນນະຄະດີ, ມີວາດຂັບລຳ, ວາດຟ້ອນ ປະຈຳ ທ້ອງຖິ່ນ ແລະ ຊົນເຜົ່າຂອງ ຕົນແຕ່ວາດຂັບລຳທີ່ໄດ້ມີຄວາມ ນິຍົມກວ່າໝູ່ນັ້ນ ແມ່ນລຳ ມະຫາໄຊ. ນອກນັ້ນຍັງມີ ລຳຜູ້ ໄທ, ຂັບຍໍ, ຂັບໄທບໍ່...

ບົນພື້ນຖານ ທີ່ຊົນເຜົ່າຕ່າງໆ ຢູ່ແຂວງ ດັ່ງກ່າວໄດ້ມີມູນເຊື້ອທາງດ້ານ ສິລະປະວັນນະຄະດີພື້ນເມືອງຢ່າງອຸດົມສົມບູນມີສີສັນຫຼາກຫຼາຍ ຂອງບັນດາຊົນເຜົ່າ, ສົມທົບກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ ແລະ ຄວາມຄອງຄອຍຂອງປະຊາຊົນຊົນເຜົ່າຕ່າງໆໃນສະໄໝນັ້ນແລ້ວຄະນະພັກ ແລະ ອຳນາດການປົກຄອງ

ປະຕິວັດຂອງແຂວງຄຳມ່ວນ ໄດ້ມີການເລືອກເຟັ້ນເອົາລູກຮັກ ຫຼານແພງຂອງບັນດາຊົນເຜົ່າມາເຕົ້າໂຮມຈັດຕັ້ງເປັນກອງສິລະປະກອນແຂວງ ເມື່ອຊຸມປີ 1970 ແລະ ຖັດຈາກນັ້ນ ກໍ່ໄດ້ສົ່ງຍົກລະດັບທາງດ້ານວິຊາການ ຢູ່ໂຮງຮຽນ ສິລະປະດົນຕີ ຂອງສູນກາງ ທີ່ເມືອງວຽງໄຊ ແຂວງ ຫົວພັນ 2 ຄັ້ງ ຄື ປີ 1971 - 1972 ແລະ ປີ 1974 - 1975.

ພາຍຫຼັງສ້າງຕັ້ງກອງສະແດງອາຊີບແລ້ວ, ກອງສິລະປະກອນແຂວງຄຳມ່ວນ ໄດ້ເຄື່ອນໄຫວສະ ແດງຮັບໃຊ້ກອງທະຫານ, ສຳນັກງານອົງການ, ໂຮງຮຽນ, ໂຮງໝໍ ແລະ ພື້ນຖານການຜະລິດຢູ່ເຂດປົດປ່ອຍ ແລະ ຢູ່ເຂດແນວຫຼັງຂອງສັດຕູ ພາຍຫຼັງປະເທດຊາດໄດ້ຮັບ ການປົດປ່ອຍຢ່າງສົມບູນ. ກອງສິລະປະກອນແຂວງ ຄຳມ່ວນ ພ້ອມດ້ວຍສຳນັກງານອົງການອື່ນໆໄດ້ເຂົ້າມາຕັ້ງສຳນັກງານ ຢູ່ຕົວເມືອງທ່າແຂກຢ່າງສະຫງ່າຜ່າເຜີຍ.

ຮອດປີ 1976 -1990, ກອງສິລະປະກອນແຂວງ ຄຳມ່ວນ ໄດ້ໄປຍົກລະດັບທາງດ້ານວິຊາການ ຢູ່ໂຮງຮຽນ ສິລະປະດົນຕີ ທີ່ນະຄອນຫຼວງວຽງຈັນ ແລະ ຢູ່ແຂວງ ແຮກສ່ຽວ ແຫ່ງ ສ.ສ . ຫວຽດນາມ ຫຼາຍຄັ້ງ. ພ້ອມກັບການຍົກລະດັບທາງດ້ານວິຊາການ ແລ້ວກອງດັ່ງກ່າວຍັງບໍ່ໄດ້ລົດລະ ໃນການປັບປຸງເນື້ອໃນ ແລະ ລີລາ ໃນການສະແດງ, ປະດິດຄິດແຕ່ງບົດຮ້ອງທຳນອງເສບ, ບົດຟ້ອນ ແລະ ຂັບລຳທ້ອງຖິ່ນເປັນຈຳນວນຫຼວງຫຼາຍ. ຄຽງຄູ່ກັນນັ້ນ, ກອງສິລະປະກອນແຂວງຄຳມ່ວນ ຍັງໄດ້ເຄື່ອນໄຫວສະແດງຮັບໃຊ້ກອງປະຊຸມໃຫຍ່ອົງຄະນະພັກແຂວງ, ເມືອງ, ກອງທະຫານ, ສຳນັກງານອົງການ, ໂຮງຮຽນ, ໂຮງໝໍ, ພື້ນຖານການຜະລິດ ແລະງານບຸນປະເພນີເຜົ່າຊົນຕ່າງໆ, ບໍ່ພຽງແຕ່ເທົ່ານັ້ນກອງສິລະປະກອນ ແລະໜ່ວຍສິລະປະວັນນະຄະດີພື້ນເມືອງ ບັນດາຊົນເຜົ່າແຂວງ ຄຳມ່ວນ ຍັງໄດ້ເຂົ້າຮ່ວມງານປະກວດສິລະປະວັນນະຄະດີ ແລະເຂົ້າຮ່ວມງານມະໂຫລານລະດັບທ້ອງຖິ່ນ, ພາກ , ລະດັບຊາດ ແລະ ໄປສະແດງຢູ່ຕ່າງປະເທດຫຼາຍຄັ້ງ.

ສັງລວມແລ້ວ ແຕ່ປີ 1990 ຫາປະຈຸບັນ, ກອງສິລະປະກອນແຂວງຄຳມ່ວນ ຖືກຫັນການເຄື່ອນໄຫວໄປສູ່ຮູບການອື່ນໆ ທີ່ສອດຄ່ອງ ກັບແນວທາງປ່ຽນແປງໃໝ່ຂອງ ພັກ ແລະ ລັດ. ຈາກມື້ນັ້ນ ມາຮອດມື້ນີ້ ວຽກງານ ສິລະປະວັນນະຄະດີຢູ່ ແຂວງ ຄຳມ່ວນ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວດ້ວຍຫຼາຍຮູບຫຼາຍສີທີ່ແຕກຕ່າງກັນເປັນຕົ້ນແມ່ນ ໄດ້ມີໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນ ກໍ່ໄດ້ ຮັບການສ້າງຕັ້ງຂຶ້ນຢູ່ ຕາມໝູ່ບ້ານ ຊົນເຜົ່າຕ່າງໆ, ຕາມໂຮງຮຽນ ມັດທະຍົມຕອນຕົ້ນ, ຕອນປາຍ, ກອງທະຫານ... ຢ່າງ ຫຼວງຫຼາຍ ແລະໃນໂອກາດບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ່ II ປີ 2000 ໄດ້ໄຂຂຶ້ນ ທີ່ນະຄອນຫຼວງວຽງຈັນນັ້ນ.



ວາດຟ້ອນ ປະສານກັບສຽງຂັບລຳມະຫາໄຊ ສະແດງໂດຍ ໜ່ວຍສິລະປະວັນນະຄະດີ ພື້ນເມືອງ ບັນດາຊົນເຜົ່າ ແຂວງ ຄຳມ່ວນ

ຄະນະ ພະແນກ ຖະແຫຼງ ຂ່າວ - ວັດທະນະທຳແຂວງ ຄຳມ່ວນ ໄດ້ມີການເລືອກເຟັ້ນ ນັກສະແດງທີ່ມາຈາກໜ່ວຍ ສິລະປະວັນນະຄະດີສະໝັກຫຼິ້ນ ຂອງຊົນເຜົ່າຕ່າງ 20 ກວ່າຊີວິດ ເພື່ອມາສະແດງຮ່ວມກັບ ຄະນະສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າທົ່ວປະເທດທີ່ຫໍວັດທະນະທຳແຫ່ງຊາດ ແລະເດີ່ນທາດຫຼວງ ບັນດາລາຍການສະແດງຂອງພວກເຂົາເຈົ້າ ແຕ່ມື້ນັ້ນມາຮອດມື້ນີ້ ເຖິງວ່າໄດ້ເປັນ ເວລາຫຼາຍປີແລ້ວກໍ່ຕາມແຕ່ມັນຍັງ ສ້າງຄວາມ ປະທັບໃຈໃຫ້ແກ່ບັນດາ ທ່ານໄດ້ເບິ່ງໄດ້ຊົມ ໃນໂອກາດນັ້ນໂດຍບໍ່ມີວັນ ເຫືອດ ແຫ້ງ ແຕ່ຢ່າງ ໃດເລີຍ .



ວາດຟ້ອນຂອງຊົນເຜົ່າຍໍ ສະແດງໂດຍຄະນະສິລະປະວັນນະຄະດີພື້ນເມືອງບັນດາເຜົ່າ

ແຂວງງຄຳມ່ວນ

ຊົນເຜົ່າຕ່າງໆຢູ່ແຂວງສະຫວັນນະເຂດ ຍັງຄົງຮັກສາບັນດາເອກະລັກ ສະເພາະຂອງ ຊົນເຜົ່າຕົນເອງເຊັ່ນ: ເອກະລັກກ່ຽວກັບພາສາປາກເວົ້າ; ເອກະລັກກ່ຽວກັບປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດ ທີ່ຕິດພັນເຖິງຊື່ຮຽກຊົນເຜົ່າທີ່ພວກເຂົາເຈົ້າມີຄວາມສະໝັກໃຈ ແລະ ເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດຈິດຕະສາດ ທີ່ສະແດງອອກໃນວົງຄະນາຍາດວັດທະນະທຳຄື: ວັດທະນະທຳ ດ້ານວັດຖຸ, ວັດທະນະທຳຈິດໃຈ ແລະສັງຄົມ.

ບັນດາຊົນເຜົ່າຢູ່ແຂວງ ສະຫວັນນະເຂດ ໄດ້ມີມູນເຊື້ອຕໍ່ສູ້ຕ້ານຈັກກະພັດສັກດີນາຕ່າງດ້າວທີ່ເຂົ້າມາຮຸກ ຮານ ແລະຕ້ານກັບເຈົ້າສັກດີນາທ້ອງຖິ່ນ ແຕ່ເລີ່ມຕົ້ນທຳອິດຈົນເຖິງໄຊຊະນະ ສົມບູນ. ຊົນເຜົ່າຕ່າງໆຢູ່ແຂວງ ດັ່ງກ່າວໄດ້ມີມູນ ເຊື້ອດຸໝັ່ນຂະຫຍັນພຽນໃນການ ອອກແຮງງານຫາລ້ຽງກຸ້ມຕົນເອງ ແລະ ສ້າງຄວາມ ເຂັ້ມແຂງດ້ວຍຕົນເອງ, ໄດ້ມີຄວາມສະດຸ້ງໄວໃນການ ສະແຫວງຫາແບບແຜນ ການດຳລົງ ຊີວິດ ແລະ ຫັນປ່ຽນແບບແຜນການດຳລົງຊີວິດ ຂອງຕົນໃຫ້ດີຂຶ້ນເທື່ອລະກ້າວ ເພື່ອແນໃສ່ພັດທະນາຕົນເອງ ໃຫ້ສາມາດແລ່ນທັນກັບບາດກ້າວການຂະຫຍາຍຕົວ ຂອງປະເທດຊາດ ແລະ ຍຸກສະໄໝ. ຊົນເຜົ່າຕ່າງໆຢູ່ແຂວງສະຫວັນນະເຂດ ໄດ້ມີຄວາມສະຫງວນຄວາມ ງາມ, ມີມູນເຊື້ອທາງດ້ານ ສິລະປະວັນນະຄະດີ, ມີວາດຟ້ອນ ແລະວາດຂັບລຳປະຈຳທ້ອງຖິ່ນ, ປະຈຳຊົນເຜົ່າຂອງຕົນ ແຕ່ວາດຂັບລຳທີ່ໄດ້ມີຄວາມນິຍົມ ແລະແຜ່ຫຼາຍທົ່ວໄປແມ່ນລຳ ຄອນສະ ຫວັນ, ລຳຕັງຫວາຍ, ລຳບ້ານ ຊອກ, ລຳຜູ້ໄທ... ບົນຈິດໃຈ ທີ່ຊົນເຜົ່າຕ່າງໆຢູ່ແຂວງສະຫວັນນະເຂດ ໄດ້ມີມູນເຊື້ອ ທາງດ້ານສິລະປະວັນນະ ຄະດີ ແລະ ສິລະປະ ວັດທະນະທຳ ທີ່ອຸດົມສົມບູນ ຫຼາກຫຼາຍສີສັນທຸກຊົນເຜົ່າ. ເຖິງວ່າ ສະພາບເສິກສົງຄາມທຳລາຍຂອງພວກຈັກກະພັດ ແລະ ສັກດີນາຕ່າງດ້າວຢ່າງຮ້າຍແຮງກໍ່ຕາມ. ແຕ່ຄະນະພັກ ແລະ ອຳນາດການປົກຄອງປະຕິວັດແຂວງສະຫວັນນະເຂດ ໄດ້ຕັດສິນໃຈສ້າງຕັ້ງກອງ ສິລະປະກອນແຂວງຂຶ້ນ ໃນຊຸມປີ 1960.

---
ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ພາຍຫຼັງໄດ້ມີການຕົກລົງສ້າງຕັ້ງແລ້ວ, ຄະນະພະແນກຖະແຫຼງຂ່າວ - ວັດທະນະທຳ ແຂວງ ສະຫວັນນະເຂດ ໄດ້ເລືອກເຟັ້ນ ລູກຮັກຫຼານແພງ ຂອງປະຊາ ຊົນເຜົ່າຕ່າງໆ ຢູ່ຕາມຮາກຖານ ແລະ ຖັດຈາກນັ້ນແມ່ນ ໄດ້ຈັດສົ່ງໄປ ຍົກລະດັບທາງດ້ານ ວິຊາ ການ ຢູ່ໂຮງຮຽນ ສິລະປະດົນຕຣີ ຂອງສູນກາງ ທີ່ເມືອງ ວຽງໄຊ ແຂວງ ຫົວພັນ ຊົ່ວ ໄລຍະໜຶ່ງແລ້ວໄດ້ກັບຄືນເມືອເຄື່ອນໄຫວສະແດງຮັບໃຊ້ກອງທະຫານ ຢູ່ແນວ ໜ້າຂອງແຂວງ ສະຫວັນນະເຂດ. ສຽງເພງຮ້ອງ ໂດຍ ນາງສາວ ສົມສີ ເມື່ອຊຸມປີ 1960 - 1970 ຍັງສະຖິດ ໝັ້ນຢູ່ໃນຫົວໃຈ ຂອງປະຊາຊົນ ບັນດາຊົນເຜົ່າ ແຂວງ ສະຫວັນນະເຂດ ( ເຂດປົດປ່ອຍ) ບັນດາບົດຮ້ອງ ທຳນອງເສບ ແລະວາດຟ້ອນ ທີ່ກອງສິລະປະກອນແຂວງ ສະຫວັນນະເຂດ ໄດ້ສະແດງ ແຕ່ລະຄັ້ງ ໃນສະໄໝນັ້ນໆ ມັນໄດ້ປຸກລະດົມຊຸກຍູ້ ກອງທັບ ແລະ ປະຊາຊົນເຜົ່າຕ່າງໆ ຢູ່ ແຂວງ ດັ່ງກ່າວດຳເນີນ ການຕໍ່ສູ້ຕ້ານກັບຈັກກະພັດ ແລະ ສັກດີນາ ເປັນເວລາຍືດ ຍາວ ແລະທັງສາມາດູດດຶງ ຈິດໃຈນາຍ ແລະ ພົນທະຫານຂອງຝ່າຍລາຊະອານາຈັກ ລາວ ຫັນມາຮ່ວມມືກັບກຳລັງ ຂອງຝ່າຍ ແນວລາວຮັກຊາດ ດຳເນີນການຕໍ່ສູ້ເພື່ອປົດປ່ອຍ ປະເທດຊາດ ຈົນສຳເລັດ ຜົນເມື່ອປີ1975.

1974 ມີນັກສະແດງຈຳນວນໜຶ່ງຖືກສັບຊ້ອນໄປຍົກລະດັບທາງດ້ານວິຊາ ການ ຢູ່ໂຮງຮຽນສິລະປະດົນຕຣີ ຂອງສູນກາງທີ່ເມືອງ ວຽງໄຊ ແຂວງຫົວພັນ ອີກ ຄັ້ງໃໝ່ ແລະ ເປັນຈຳນວນບໍ່ໜ້ອຍ ແມ່ນໄດ້ເຄື່ອນໄຫວສະແດງຮັບໃຊ້ພະນັກ ງານ, ນັກຮົບຢູ່ເຂດປົດປ່ອຍ, ເຂດແນວຫຼັງຂອງສັດຕູ ແລະສະແດງຮັບໃຊ້ການຍຶດ ອຳນາດ. ແຕ່ພວກເຂົາເຈົ້າໄດ້ໃຊ້ ສຽງເພງ ແລະ ວາດຟ້ອນທີ່ໜ້າຈັບໃຈ ເພື່ອບຸກ ໂຈມຕີ ແລະ ດູດດຶງກຳລັງນາຍ ແລະ ພົນທະຫານຂອງສັດຕູ ຈົນກວ່າ ແຂວງ ສະຫວັນນະເຂດ ໄດ້ ຮັບການປົດປ່ອຍຢ່າງສົມບູນ.

1976 - 1990 ກອງສິລະປະກອນ ແຂວງ ສະຫວັນນະເຂດ ໄດ້ພ້ອມກັນປັບປຸງການຈັດຕັ້ງ, ເນື້ອໃນ ແລະ ລີລາການສະແດງ, ປະດິດຄິດແຕ່ງບົດຮ້ອງ ,ທຳນອງເສບ, ຂັບລຳທ້ອງຖິ່ນ, ບົດຟ້ອນເປັນຈຳນວນບໍ່ໜ້ອຍ. ຄຽງຄູ່ກັບບັນຫາ ທີ່ກ່າວມານັ້ນ, ກອງສິລະປະກອນແຂວງ ສະຫວັນນະເຂດ ຍັງໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ກອງປະຊຸມໃຫຍ່ ອົງຄະນະພັກແຂວງ, ເມືອງ, ແຂກຂັ້ນສູງຂອງພັກ - ລັດ, ຜູ້ແທນທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ ແວ່ຢາມແຂວງດັ່ງກ່າວ, ສະແດງ ຮັບໃຊ້ໂຮງຈັກ, ໂຮງງານ, ໂຮງຮຽນ, ໂຮງໝໍ, ພື້ນຖານການຜະລິດຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ, ກອງທະຫານທີ່ປະຈຳຢູ່ຊາຍແດນດ້ວຍຄວາມທໍລະຫົດອົດທົນ. ນອກຈາກນັ້ນຍັງໄດ້ໄປຍົກລະດັບທາງດ້ານວິຊາການຢູ່ໂຮງຮຽນ ສິລະປະດົນຕີ ທີ່ນະຄອນຫຼວງວຽງຈັນ ແລະ ຢູ່ບັນດາແຂວງແທກສ່ຽວແຫ່ງ ສ ສ ຫວຽດນາມ ພ້ອມທັງໄດ້ເຄື່ອນໄຫວສະແດງເພື່ອການຖອດຖອນບົດຮຽນລະຫວ່າງແຂວງແຮກສ່ຽວໄດ້ຢ່າງຫຼວງຫຼາຍ. ພ້ອມກັບກອງສິລະປະກອນແຂວງ ແລະ ບັນດາໜ່ວຍສິລະປະວັນນະຄະດີ ສະໝັກຫຼິ້ນກໍ່ໄດ້ແຕກໜໍ່ຈໍ່ແນວຢູ່ຕາມໂຮງຈັກ, ໂຮງງານ, ໂຮງຮຽນ, ໂຮງໝໍ, ກອງທະຫານ ແລະ ຮາກຖານບ້ານຊົນເຜົ່າຕ່າງໆ.

ຮອດ ຊຸມປີ 1990 ກອງສິລະປະກອນແຂວງ ໄດ້ ຫັນການເຄື່ອນໄຫໄປສູ່ຮູບການອື່ນໆ ເພາະສະນັ້ນບັນດານັກສະແດງ ແລະ ນັກດົນຕຣີ ເປັນຈຳນວນບໍ່ໜ້ອຍໄດ້ຖືກສັບຊ້ອນໄປຮັບ ໜ້າທີ່ວຽກງານໃໝ່ ແລະຈຳນວນໜຶ່ງໄດ້ລົງສູ່ຮາກຖານບ້ານຊົນເຜົ່າຕ່າງໆ. ສະນັ້ນວຽກງານສິລະປະວັນນະຄະດີ ຢູ່ແຂວງສະຫວັນນະເຂດ ໃນ ປະຈຸບັນ ຈຶ່ງໄດ້ກຳເນີດເກີດຂຶ້ນຢ່າງຫຼາກຫຼາຍສີສັນ ແຕກຕ່າງກັນຄື: ຄະນະວົງດົນຕຣີຂອງບັນດາບຸກຄົນ ແລະລວມໝູ່ກໍ່ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງສາມາດເຄື່ອນໄຫວຕອບສະໜອງຕາມຄວາມຮຽກຮ້ອງ ຕ້ອງການຂອງສັງຄົມ, ໜ່ວຍສິລະປະວັນນະຄະດີພື້ນເມືອງຂອງບັນດາຊົນເຜົ່າກໍ່ຄ່ອຍໆໄດ້ມີການສ້າງຕັ້ງ ແລະເສີມຂະ

ຫຍາຍພ້ອມທັງໄດ້ມີການ ຂະຫຍາຍຕົວຢູ່ຕາມ ໝູ່ບ້ານຊົນເຜົ່າຕ່າງໆ, ຕາມໂຮງຮຽນ ແລະອື່ນໆ. ປະຈຸບັນເຖິງວ່າບໍ່ມີກອງສະແດງອາຊີບຄືໃນເມື່ອກ່ອນກໍ່ຕາມ ແຕ່ໃນ ເມື່ອມີງານບຸນ, ກອງປະຊຸມ, ແຂກຕ່າງດ້າວທ້າວຕ່າງແດນໄດ້ຢ້ຽມຢາມແຂວງສະຫວັນນະເຂດ ເຊິ່ງມີຄວາມຈຳເປັນໃຫ້ມີການສະແດງສິລະປະວັນນະຄະດີແລ້ວທາງຄະນະພະແນກຖະແຫຼງຂ່າວ - ວັດທະນະທຳແຂວງ ກໍ່ເຕົ້າໂຮມນັກສະແດງຈາກຄະນະວົງດົນຕຣີຕ່າງໆ, ໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນມາເຝິກຊ້ອມຊົ່ວໄລຍະໜຶ່ງ ກໍ່ສາມາດສະແດງຮັບໃຊ້ຂະບວນການຕ່າງໆໄດ້ຢ່າງສະບາຍ. ບໍ່ສະເພາະແຕ່ເທົ່ານັ້ນ, ໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນທີ່ໄດ້ສ້າງຕັ້ງຂຶ້ນມານັ້ນຍັງໄດ້ ເຂົ້າຮ່ວມໃນບັ້ນປະກວດສິລະປະວັນນະຄະດີ ແລະ ເຂົ້າຮ່ວມງານມະໂຫລານວັດທະນະທຳບັນດາຊົນເຜົ່າລະດັບທ້ອງຖິ່ນ, ພາກ , ລະດັບຊາດເປັນຈຳນວນບໍ່ໜ້ອຍ ແລະ ໃນໂອກາດບຸນມະໂຫລານ ວັດທະນະທຳ ບັນດາຊົນເຜົ່າ ທົ່ວປະເທດຄັ້ງທີ່ II ປີ 2000 ທີ່ໄດ້ໄຂຂຶ້ນຢູ່ນະຄອນ ຫຼວງວຽງຈັນ ແລ້ວນັ້ນ. ຄະນະ ພະແນກ ຖະແຫຼງຂ່າວ - ວັດທະ ນະທຳແຂວງໄດ້ເລືອກເຟັ້ນບັນດານັກສະແດງ ຢູ່ຮາກຖານບ້ານຊົນເຜົ່າຕ່າງໆ ຈຳນວນໜຶ່ງມາເຝິກຊ້ອມຊົ່ວໄລຍະໜຶ່ງ ແລ້ວກໍສະແດງຜ່ານຄະນະນຳຂັ້ນແຂວງ ແລ້ວກໍ່ເລີ່ມມາສະແດງຮ່ວມກັບນັກສະແດງຂອງໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າທົ່ວປະເທດທີ່ນະຄອນຫຼວງວຽງຈັນ.

ລວມຄວາມວ່າ: ຕະຫຼອດໄລຍະຫຼາຍທົດສາຕະວັດ ຜ່ານມາວຽກງານສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າ ແລະວຽກງານສິລະປະວັດທະນະທຳ ຢູ່ ແຂວງສະຫວັນນະເຂດ ກໍ່ໄດ້ມີການຄົງຕົວ ແລະ ຂະຫຍາຍຕົວຈາກຮູບ ການນີ້ໄປສູ່ຮູບການອື່ນ ທີ່ສອດຄ່ອງ ກັບແນວທາງ ນະໂຍບາຍ ຂອງພັກ ແລະ ກົດໝາຍຂອງລັດ ໃນແຕ່ລະໄລຍະແລ້ວຈາກມື້ນັ້ນຮອດມື້ນີ້ງານມະໂຫລານວັດທະນະທຳບັນດາຊົນເຜົ່າທົ່ວ

ປະເທດຄັ້ງທີ່ II ໄດ້ຜ່ານໄປເປັນເວລາຫຼາຍປີແລ້ວກໍ່ຕາມແຕ່ວາດຟ້ອນເກັບກ່ຽວຜົນປີບຂອງຊົນເຜົ່າກະຕາງ ທີ່ນັກສະແດງຂອງ ໜ່ວຍ ສິລະປະວັນນະຄະດີພື້ນເມືອງ ບັນດາຊົນເຜົ່າ ແຂວງ ສະຫວັນນະເຂດ ໄດ້ສະແດງ ຢູ່ ຫໍວັດທະນະທຳແຫ່ງຊາດ ແລະ ເດີນທາດຫຼວງວຽງຈັນ ແມ່ນຍັງໄດ້ສະຖິດໝັ້ນໃນຫົວໃຈຂອງແຂກ ຕ່າງດ້າວ ທ້າວຕ່າງແດນ ແລະ ຊາວນະຄອນຫຼວງວຽງຈັນ ໂດຍບໍ່ມີວັນຈືດຈາງໄດ້ເລີຍ ./.



ວາດຟ້ອນເກັບກ່ຽວຜົນລະປູກຂອງຊົນເຜົ່າ ກະຕາງ ສະແດງໂດຍ ໜ່ວຍສິລະປະວັນນະຄະດີ

ແຂວງ ສະຫວັນນະເຂດ

# ການຄົ້ນຄວ້າ ແລະ ຂະຫຍາຍຕົວຂອງວຽກງານ
# ສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າແຂວງສາລະວັນ

*******************



ຊຸດອາພອນເພດຂອງຊົນເຜົ່າກະຕາງ ມ. ຕຸ້ມລານ

ສາລະວັນ ເປັນແຂວງໜຶ່ງ ເຊິ່ງຕັ້ງຢູ່ພາກໃຕ້ ຂອງ ສ.ປ.ປ.ລາວ ເຊິ່ງມີເຂດແດນທິດເໜືອຕິດກັບແຂວງສະຫວັນນະເຂດ, ທິດໃຕ້ຕິດກັບແຂວງເຊກອງ, ທິດຕາເວັນອອກຕິດກັບແຂວງເທືອທຽນເຫວ້ແລະແຂວງ ກວາງ ຕຣີ ເຜິ່ງສ.ສຫວຽດນາມ ແລະ ທິດຕາເວັນຕົກຕິດກັບແຂວງຈຳປາສັກ ແລະລາຊະອານາຈັກໄທ ພື້ນທີ່ທາງທິດຕາເວັນຕົກ ຕາມລ້ອງແມ່ນ້ຳຂອງຮາບພຽງຈອດຕໍ່ໃສ່ ພູພຽງຕະໂອ້ຍ

ແລະພູພຽງບໍລິເວນເຊິ່ງເປັນສາຍ ພູໄຟເກົ່າຂອບດ້ວຍສາຍພູຫຼວງ ທາງທິດຕາເວັນອອກ. ແຂວງ ສາລະວັນ ເປັນແຂວງ ທີ່ເກົ່າແກ່ທີ່ ມີທິວທັດທຳມະຊາດ ທີ່ງາມຕາເຊັ່ນ: ຕາດເລາະ, ຕາດເຊັດ ຢູ່ເມືອງ ສາລະວັນ ແກ້ງກູ້ ເມືອງວາປີ, ແກ້ງກິແນະ ເມືອງ ສະໜ້ວຍ ແລະ ອື່ນໆ ເຊິ່ງສາມາດດຶງດູດນັກ ທ່ອງທ່ຽວໄປທາມາແວ່ຢ່າງບໍ່ຂາດລະດູການ.

ສາລະວັນເປັນແຂວງໜຶ່ງ ປະກອບດ້ວຍຫຼາຍຊົນເຜົ່າ ທີ່ໄດ້ຕັ້ງ ພູມລຳເນົາ ແລະດຳລົງຊີວິດທຳມາຫາກິນບົນດິນດອນແຫ່ງນີ້ຢ່າງສະຫຼັບສັບຫວ່າງເຊິ່ງກັນ ແລະ ກັນເປັນໄລຍະຫຼາຍພັນປີມາແລ້ວຄື: ຊົນເຜົ່າລາວ, ຊ່ວຍ, ກະຕາງ, ຜູ້ໄທກຣຽງ, ຢຣຸກອງ, ຕະໂອ້ຍ,ກະຕູຣາສັກ,ປະໂກະ,ກາໂດກາໄນ,ຕຶງ ແລະ ຢຣົມ.ບັນດາຊົນເຜົ່າຢູ່ແຂວງ ສາລະວັນ ແມ່ນໄດ້ມີມູນເຊື້ອສາມັກຄີ ໃນການຕໍ່ສູ້ຕ້ານກັບຈັກກະພັດ ສັກດີນາຕ່າງດ້າວ ແລະ ຕໍ່ສູ້ຕ້ານກັບ ເຈົ້າສັກດີນາທ້ອງຖິ່ນມີມູນເຊື້ອໃນການອອກແຮງງານເພີ່ມພູນຜະລິດຜົນ ໄປຢຽບໝາມາຢຽບຊຽດ ເພື່ອການຄົງຕົວ ແລະຂະຫຍາຍຕົວ. ຊົນເຜົ່າຕ່າງໆທີ່ຕັ້ງຖິ່ນ ຖານຢູ່ແຂວງສາລະວັນ ແມ່ນລ້ວນແຕ່ໄດ້ມີເອກະລັກ ສະເພາະຂອງເຜົ່າກຣຽງ) ຊົນເຜົ່າ ໃຜລາວຄື: ໄດ້ມີພາສາປາກເວົ້າພວກເຂົາເຈົ້າໄດ້ນຳ ໃຊ້ພາສາປາກເວົ້າຂອງຊົນເຜົ່າຕົນເອງ



ວາດຟ້ອນເຂນສະແດງເຖິງມູນເຊື້ອການຕໍ່ສູ້ ຊົນເຜົ່າ ກຣຽງ

ເປັນສື່ສານຕິດຕໍ່ພົວພັນແລກປ່ຽນຊື້ຂາຍພາຍໃນຊົນເຜົ່າເຂົາເຈົ້າ ແລະ ກັບບັນດາຊົນເຜົ່າທີ່ໃກ້ຄຽງ. ບໍ່ສະເພາະແຕ່ເທົ່ານັ້ນບັນດາຊົນເຜົ່າຢູ່ແຂວງສາລະວັນ ຍັງມີປະຫວັດສາດຄວາມເປັນມາ, ການເຄື່ອນຍ້າຍກົກເຄົ້າຕົ້ນກຳເນີດ ແລະ ຊື່ຮຽກເປັນອັນສະເພາະຂອງຊົນເຜົ່າຕົນເອງ. ພ້ອມກັນນັ້ນບັນດາຊົນເຜົ່າຢູ່ແຂວງດັ່ງກ່າວຍັງມີການເຊື່ອຖື, ມີຮີດຄອງປະເພນີໃນການຊອກຫາທີ່ດິນຕັ້ງບ້ານ ແລະຕັ້ງເຮືອນ, ການຈັດວາງຫ້ອງເຮືອນ, ຄຸນລັກສະນະເຮືອນ, ມີເຄື່ອງມືການຜະລິດ, ພາຫະນະຂົນສົ່ງ, ອາຫານ ການກິນ, ການດື່ມ ແລະດູດ, ເຄື່ອງນຸ່ງຫົ່ມ ແລະເອ້ຍ້ອງ, ມີເອກະລັກກ່ຽວກັບການພົວພັນໃນສັງຄົມພາຍໃນຊົນເຜົ່າ, ການແຕ່ງດອງ, ການສົ່ງສະການ, ການເກີດລູກ ແລະ ມີວັດທະນະທຳດ້ານຈິດໃຈ ເປັນຕົ້ນແມ່ນ: ວັນນະຄະດີພື້ນເມືອງ, ນິທານພື້ນເມືອງບົດຮ້ອງ ທຳນອງເສບ ແລະການຂັບລຳຕ່າງໆ ເຊິ່ງຖ້າຫາກທ່ານໃດໄດ້ໄປປະຕິບັດງານ, ຫຼື ໄປຫາມາແວ່ແຂວງສາລະວັນ ຄົງຈະໄດ້ຍິນຄຳຊ່າລືຂອງເຂົາເຈົ້າວ່າ: ໝາກພ້າວ ນາໄຂ, ປີ້ງໄກ່ນາປົ່ງ, ເຫຼົ້າຂາວ, ສາວງາມຄົງເຊໂດນ, ລຳວົງສາລະວັນ. ມັນບໍ່ສະເພາະແຕ່ເທົ່ານັ້ນ ບັນດາທ່ານຍັງໄດ້ຍິນສຽງຂັບລຳສາລະວັນ, ສຽງຂັບລຳຄົງເຊໂດນ ຂອງຊົນເຜົ່າລາວ ແລະ ອາດຈະໄດ້ຮ່ວມງານມ່ວນຊື່ນ ດ້ວຍການຟ້ອນລຳວົງເຕ້ຍຕຳໆ.

ພ້ອມກັນນັ້ນຖ້າທ່ານຫາກໄດ້ມີໂອກາດໄປເຂດເມືອງຕຸ້ມລານ ກໍ່ຈະໄດ້ຍິນສຽງລຳເຊັ່ນ: ສຽງຂັບລຳກະເລີ້ຍ, ສຽງຂັບລຳ ເມມອນ ຂອງນາງສາວຊົນເຜົ່າກະຕາງ ຢູ່ຕາມສະຖານທີ່ອອກແຮງງານຕ່າງໆ, ຖ້າທ່ານ ຫາກໄປເຂດເມືອງ ເລົ່າງາມ ກໍ່ຈະໄດ້ຍິນ ສຽງຂັບມັງລອງ ຂອງຊົນເຜົ່າຢຣຸກອງ ແລະ ສຽງຂັບຜູ້ໄທ ຂອງຊົນເຜົ່າຜູ້ໄທ. ແຕ່ກົງກັນຂ້າມກໍລະນີ ຫາກທ່ານໄດ້ໄປເຂດເມືອງ ຕະໂອ້ຍ ແລະສະໝ້ວຍ ຄົງຈະໄດ້ຍິນສຽງຂັບ ອະເຈນຂອງຊົນເຜົ່າປະໂກະ, ສຽງຂັບອະເຈີບ ຂອງຊົນເຜົ່າກາໂດ ແລະ ສຽງຂັບບອຍ, ສຽງຂັບລາງ ຂອງຊົນເຜົ່າຕະໂອ້ຍ ກັນພ້ອມກັນນັ້ນຖ້າຫາກທ່ານໄດ້ໄປເມືອງ ສາລະວັນໄປທາງເມືອງ ທ່າແຕງ ກໍ່ຈະໄດ້ຊົມເບິ່ງວາດຟ້ອນເຂນຂອງຊົນເຜົ່າກຣຽງ ທີ່ສະແດງ ເຖິງມູນເຊື້ອ ການຕໍ່ສູ້ ທີ່ບໍ່ຍອມຈຳນົນ ຕໍ່ຕ້ານກັບສັດຕູ ຜູ້ຮຸກຮານ.

ບັນດາຊົນເຜົ່າຢູ່ແຂວງສາລະວັນ ໄດ້ມີມູນເຊື້ອທາງດ້ານສິລະປະວັນ ນະຄະດີ ສົມທົບກັບຄວາມຮຽກ ຮ້ອງຕ້ອງການສະໄໝນັ້ນ ຄະນະພັກ ແລະອຳນາດການ

ປົກຄອງແຂວງສາລະວັນ ຈຶ່ງໄດ້ເລືອກເຟັ້ນພວກລູກຮັກຫຼານແພງຂອງຊົນເຜົ່າຕ່າງໆໄປ ຮຽນວິຊາສິລະປະດົນຕີ ຢູ່ ໂຮງຮຽນ ສິລະປະດົນຕີ ຂອງສູນກາງ ທີ່ເມືອງວຽງໄຊ ແຂວງ ຫົວພັນ ໃນປີ 1974 - 1976 .

ພາຍຫຼັງສຳເລັດ ການສຶກສາເປັນເວລາ 2 ປີເຕັມ, ກອງສິລະປະກອນ ແຂວງສາລະວັນ ໄດ້ປະກາດສ້າງຕັ້ງຂຶ້ນໃນປີ 1976 ນັ້ນເອງ ແລະໄດ້ ຕັ້ງໜ້າເຄື່ອນໄຫວ ສະແດງຮັບໃຊ້ງານບຸນສຳຄັນຂອງຊາດ, ງານບຸນປະເພນີຂອງ ຊົນເຜົ່າຕ່າງໆ, ຮັບໃຊ້ ສຳນັກງານອົງການ, ກອງທະຫານ, ຮາກຖານການຜະລິດຈຳນວນ ໜຶ່ງ ພ້ອມກັນນັ້ນຍັງ ໄດ້ເຄື່ອນໄຫວໄປສະແດງຮັບໃຊ້ກອງປະຊຸມໃຫຍ່ອົງຄະນະພັກ ແຂວງ, ກອງປະຊຸມໃຫຍ່ ອົງຄະນະ ພັກເມືອງ ແລະ ສະແດງ ຮັບໃຊ້ ແຂກຕ່າງດ້າວທ້າວ ຕ່າງແດນ ທີ່ໄດ້ຢ້ຽມຢາມ ແຂວງ ສາລະວັນ ໃນແຕ່ ລະຄັ້ງ. ຜ່ານຂະບວນ ວິວັດແຫ່ງ ການຄົງ ຕົວ ແລະຂະຫຍາຍຕົວ ກອງສິລະປະກອນແຂວງສາລະວັນ ໄດ້ໄປສະແດງໃຫ້ແຂວງ ແຮກສ່ຽວກວາງນາມ - ດາໜັງ ແຫ່ງ ສ.ສ ຫວຽດນາມ 2 ຄັ້ງ, ໄປສະແດງຢູ່ ໄທ 1 ຄັ້ງ ແລະ ເນື້ອໃນກໍ່ຄືລີລາການ ສະແດງ ຂອງກອງສິລະປະກອນແຂວງ ສາລະວັນ ທີ່ໄດ້ເຄື່ອນໄຫວສະແດງ ແຕ່ລະຄັ້ງນັ້ນ ລ້ວນແຕ່ໄດຮັບຄວາມນິຍົມຊົມຊອບຈາກມວນ ຊົນ ທີ່ໄດ້ເບິ່ງໄດ້ ຊົມໃນອັດຕາສ່ວນສູງ ສົມຄວນ ,ທັງໄດ້ຮັບການຍ້ອງຍໍຊົມເຊີຍຈາກຂັ້ນເທິງຢ່າງສົມກຽດເປັນຕົ້ນແມ່ນ: ໃນ ໂອກາດເຂົ້າຮ່ວມສະແດງສິລະປະວັນນະຄະດີບັນດາຊົນເຜົ່າ ສະຫຼອງວັນມະຫາ ປະຕິວັດລັດເຊຍ ຄົບຮອບ 70 ປີ ແມ່ນໄດ້ຮັບທຸງໄຊຂອງກະຊວງວັດທະນະທຳ ໄປ ສະແດງ ແລະ ເຂົ້າຮ່ວມງານລະນຶກວັນສ້າງຕັ້ງຈັງຫວັດ ອຸບົນ ປະເທດໄທ ຄົບຮອບ 200 ປີ ໄດ້ຮັບຂອງຂວັນ, ຫຼຽນລະນຶກ 1 ຫຼຽນ ແລະ ໄປຮ່ວມສະແດງໃນງານມະຫະກຳ ສິລະປະວັນນະຄະດີພື້ນເມືອງ ທາງເລກ 9 ຊຽວ ຢູ່ ສ.ສ ຫວຽດນາມ ແມ່ນໄດ້ຮັບຫຼຽນ ຄຳ 2 ໜ່ວຍ ແລະ ຫຼຽນ ເງິນ 1 ໜ່ວຍ. ສະນັ້ນຈຶ່ງສາມາດເວົ້າໄດ້ວ່າ: ກອງສິລະປະກອນ ແຂວງສາລະວັນ ນັບແຕ່ມື້ສ້າງຕັ້ງ ປີ 1976 ຈົນເຖິງ ຊຸມປີ 1990 ແມ່ນໄດ້ອອກແຮງ ເຄື່ອນໄຫວສະແດງຮັບໃຊ້ຂະບວນການຕ່າງໆ ພາຍໃນແຂວງຢ່າງບໍ່ລົດລະ ແລະໄດ້ປະ ດິດຄິດສ້າງບັນດາລາຍການສະແດງໄດ້ຢ່າງຫຼວງຫຼາຍ , ແຕ່ຕົກມາຮອດໄລຍະໜຶ່ງນັກ ສະແດງສ່ວນຫຼວງຫຼາຍແມ່ນອາຍຸກະສຽນສູງ ແລະ ຍັງຂາດລະດັບຄວາມຮູ້ຄວາມສາ

ມາດໃນການສະແດງຈຶ່ງໄດ້ເຮັດໃຫ້ກອງສະແດງອາຊີບ ດັ່ງກ່າວຖືກຢຸບ ແລະ ນັກສະແດງຈຳນວນໜຶ່ງແມ່ນ ໄດ້ສັບຊ້ອນ ໄປ ເຮັດວຽກງານໃໝ່ ແລະສ່ວນຫຼວງຫຼາຍແມ່ນໄດ້ລົງສູ່ຮາກຖານ ແລະໃນເມືອທຳມາຫາກິນ ຢູ່ບ້ານຂອງຊົນເຜົ່າໃດ ເຂົາເຈົ້າໄດ້ຍາດເວລາ ສິດສອນລູກໆຫຼານໆ ຢູ່ຕາມໝູ່ ບ້ານຊົນເຜົ່າຕ່າງໆ ເພື່ອແນໃສ່ເຮັດໃຫ້ຄົນຮຸ່ນຫຼັງໄດ້ຮູ້ສິລະປະວັນນະຄະດີຂອງຊົນເຜົ່າ ຕົນເອງ  ເພາະສະນັ້ນ ມາເຖິງປະຈຸບັນຢູ່ ແຂວງສາລະວັນ ເຖິງວ່າບໍ່ມີກອງສະແດງອາຊີບກໍ່ຕາມແຕ່ໃນເມື່ອມີວຽກງານທີ່ສຳຄັນ ຫາກຕ້ອງການມີການສະແດງສິລະປະວັນນະຄະດີແລ້ວກໍ່ລົງລະດົມເອົາໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າ ຢູ່ຮາກຖານມາສະແດງຮັບໃຊ້ແຂກຕ່າງດ້າວທ້າວຕ່າງແດນ ໄດ້ເບິ່ງໄດ້ຊົມເໝືອນໃນສະໄໝ ໄດ້ມີກອງ ສະແດງອາຊີບ.




ຮ້ານວາງສະແດງຜະລິດຕະພັນທາງດ້ານ ວັດທະນະທຳ,

ທາງວັດຖຸຂອງເຜົ່າ , ສາລະວັນ

ໃນໂອກາດເຂົ້າຮ່ວມບຸນມະໂຫລານວັດທະນະທຳບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ II ປີ 2000 ເຊິ່ງໄດ້ຈັດ ຂຶ້ນເມື່ອ ວັນທີ 7 - 12 ຕຸລາ 2000 ທີ່ ນະຄອນ ຫຼວງວຽງຈັນ, ໝາກຫົວໃຈຂອງປວງຊົນລາວທັງຊາດນັ້ນ, ທ່ານ ແສງຈະເລີນ ວັນສະເຫຼີມ ຍອດຊາຍງາມ ຮອງຫົວໜ້າພະແນກຖະແຫຼງຂ່າວ - ວັດທະນະທຳໄດ້ກ່າວວ່າ: ບັນດານັກສະແດງມາຈາກແຂວງສາລະວັນ ທີ່ໄດ້ ເຂົ້າ ຮ່ວມງານມະໂຫລານຄັ້ງນີ້ ມີຈຳນວນ 19 ຄົນ ໃນນັ້ນມີແມ່ຍິງ 2 ຄົນ, ເຊິ່ງປະກອບມີ 3 ຊົນເຜົ່າຄື: ຊົນເຜົ່າລາວ, ຊົນເຜົ່າກະຕາງ ແລະ ຊົນເຜົ່າກຣຽງ ເຊິ່ງມີ 4 ລາຍການສະແດງຄື: ລຳສາລະວັນ ໂດຍ ນາງສາວ ບຸນມີ ລູກສາວບ້ານໂຄກ ເກົ່າ ເມືອງສາລະວັນ ເປັນຜູ້ຂັບຮ້ອງ, ຂັບກະເລີຍ ທີ່ເວົ້າເຖິງການກ້ຽວບ່າວສາວ ແລະ ຂັບລະເລມອນທີ່ເວົ້າເຖິງຄວາມຮັກບ້ານເກີດເມືອງນອນຂອງຊົນເຜົ່າກະຕາງ ເມືອງ ຕຸ້ມລານ ( ຂັບ ໂດຍ ຍິງ - ຊາຍ ) ແລະວາດຟ້ອນ ເຂນ ໝູ່ຊາຍ ທີ່ເວົ້າເຖິງມູນເຊື້ອການຕໍ່ສູ້ຕ້ານສັດຕູ ຜູ້ຮຸກຮານ ອງຊົນເຜົ່າກຣຽງ ໃນອາດີດຕະການ. ຜ່ານການສະແດງຢູ່ຫໍວັດທນະທຳແຫ່ງຊາດ ແລະ ເດີ່ນທາດຫຼວງ ໃນຄັ້ງນັ້ນເຫັນວ່າລາຍການທີ່ຊາວນະຄອນຫຼວງ ມີຄວາມນິ ຍົມຊົມຊອບ ກວ່າໝູ່ນັ້ນ ແມ່ນ ຂັບກະເລີຍ , ສຽງຂັບລະເລມອນ ຂອງຊົນເຜົ່າກະຕາງຢູ່ ເມືອງ ຕຸ້ມລານ ແລະ ວາດຟ້ອນເຂນທີ່ເວົ້າມູນເຊື້ອໃນການຕໍ່ສູ້ຕ້ານຜູ້ຮຸກຮາກຂອງຊົນເຜົ່າກຣຽງ ອັນໄດ້ເຮັດໃຫ້ຊາວນະຄອນຫຼວງວຽງຈັນ ຍັງປະກົດໄດ້ຍິນຈົນເທົ່າທຸກວັນນີ້.



ສາກໜຶ່ງຟ້ອນມູນເຊື້ອການຕໍ່ສູ້ ຂອງຊົນເຜົ່າກຣຽງ ແຂວງ ສາລະວັນ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ຄຽງຄູ່ກັບໄດ້ນຳເອົາໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າມາສະແດງ ໃນບຸນມະໂຫລານວັດທະນະທຳບັນດາເຜົ່າທົ່ວປະເທດ ຄັ້ງທີ 2 ປີ2000 ແລ້ວແຂວງສາລະວັນ ຍັງໄດ້ເອົາຜະລິດຕະພັນທາງດ້ານວັດທະນະທຳ, ດ້ານວັດຖຸຂອງບາງຊົນເຜົ່າມາວາງສະແດງຢູ່ຮ້ານວາງສະແດງ ໃນໂອກາດບຸນນະມັດສະການພະທາດຫຼວງປີ 2000. ເຊິ່ງຕາມທ່ານ ບຸນປອນ ພະນັກງານສັງກັດ ພະແນກຖະແຫຼ່ງຂ່າວ - ວັດທະນະທຳ ແຂວງສາລະວັນ ໄດ້ກ່າວວ່າ: " ວັດທະນະທຳ ທາງດ້ານວັດຖຸ ຂອງບາງຊົນເຜົ່າທີ່ໄດ້ມາວາງສະແດງໃນຄັ້ງນີ້ມີກະຕ່ຽວ, ກອກເດີະ ແລະ ໜ້າເກັກ ຜູ້ຊາຍ ຊົນເຜົ່າຕະໂອ້ຍ, ສິ້ນກາໂດ, ເສື້ອແຈະ , ກະພາ, ກະຈົ້ ( ເຄື່ອງໃຊ້ຂອງລູກສາວ ). ກໍລະນີໄປທາງໃດກໍ່ຕ້ອງເຈ່ຍກະພາ ແລະກອກເດີະ, ມີສະຫວີງ, ໝໍ້ທຸມ( ໝໍ້ທອງ ) ສຳລັບໃຊ້ຄ່າດອງໃຫ້ແກ່ລູກຊາຍ ແລະ ສຳລັບຂອງແມ່ຍິງຊົນເຜົ່າຕະໂອ້ຍ, ມີສິ້ນ, ເສື້ອຂອງຊົນເຜົ່າກະຕາງ ແລະຍັງມີໝາກນ້ຳເຕົ້າທີ່ໃຊ້ທຸກຊົນເຜົ່າ." ໃນຕອນທ້າຍຂອງການສົນທະນາ ຢູ່ບ້ານພັກປ່າພ້າວ ທີ່ນະຄອນຫຼວງວຽງຈັນ ທ່ານຮອງຫົວໜ້າ ພະແນກ ຖະແຫຼ່ງຂ່າວ - ວັດທະ ນະທຳ ແຂວງສາລະວັນໄດ້ເນັ້ນໜັກເຖິງບາງວິທີການ ອະນຸລັກ ຮັກສາ ສົ່ງເສີມສິລະປະວັນນະຄະດີ ແລະສິລະປະວັດທະນະທຳ ເຊິ່ງມີລາຍລະອຽດດັ່ງນີ້:

- ມອບໃຫ້ຫ້ອງການຖະແຫຼ່ງຂ່າວ - ວັດທະນະທຳຂັ້ນເມືອງ ເປັນຜູ້ຟື້ນຟູ ແລະສົ່ງເສີມສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳຂອງບັນດາຊົນເຜົ່າຢ່າງແຂງແຮງ.

- ຕັ້ງໜ້າເຄື່ອນໄຫວສະແດງຢູ່ຮາກຖານໃຫ້ມີບັນຍາກາດ ແລະເປັນຂະບວນຟົດຟື້ນ ເລີ່ມຈາກຂະບວນການຢູ່ຮາກຖານ.

- ເອົາໃຈໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍສິລະປະວັນນະດີຂອງບັນດາຊົນເຜົ່າ ໃຫ້ຍືນຍົງຄຽງຄູ່ກັບສິລະປະວັດທະນະທຳແຫ່ງຊາດຕະຫຼອດໄປ.

- ປຸກລະດົມໃຫ້ປະຊາຊົນເຜົ່າຕ່າງໆມີສ່ວນຮ່ວມໃນການປົກປັກຮັກສາສິລະປະວັນນະຄະດີ ແລະສິລະປະວັດທະນະທຳ ທີ່ມີມູນເຊື້ອຂອງບັນດາຊົນເຜົ່າ ເພື່ອບໍ່ໃຫ້

ເຊື່ອມເສຍ, ຈຳກັດ ແລະ ຕີຖອຍບັນດາວັດທະນະທຳຂອງຕ່າງປະເທດ ທີ່ແຊກເຂົ້າທຳລາຍວັດທະນະທຳຂອງຊົນເຜົ່າຕ່າງໆ.

- ເສີມຂະຫຍາຍທິວຄິດປະດິດສ້າງຂອງບັນດາຊົນເຜົ່າ ເພື່ອປະກອບສ່ວນເຂົ້າໃນວຽກງານນີ້ຢ່າງແຂງແຮງ.

- ຈັດຕັ້ງການເຄື່ອນໄຫວດ້ານວັດທະນະທຳ, ສິລະປະວັນນະຄະດີ ໃຫ້ລົງເຖິງຮາກຖານຢ່າງກວ້າງຂວາງ ແລະເຖິງຖອງ.

ລວມຄວາມວ່າ: ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ ໂດຍສະເພາະແມ່ນອົງຄະນະພັກແຂວງ, ເມືອງ ແລະ ອຳນາດການປົກຄອງຂັ້ນຕ່າງໆ ເປັນຜູ້ຄຸ້ມຄອງໂດຍ ກົງ ນັ້ນ ກໍ່ເຫັນວ່າວຽກງານສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳຢູ່ແຂວງສາລະວັນ ແມ່ນໄດ້ມີການອະນຸລັກ, ຮັກສາ ແລະ ສົ່ງເສີມຂະຫຍາຍໃນ ລະດັບດີພໍສົມຄວນເພາະເຖິງວ່າບໍ່ມີກອງສະແດງອາຊີບ ແຕ່ກໍ່ມີໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນ ແລະ ໜ່ວຍສິລະປະວັນນະຄະດີພື້ນເມືອງ ຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ ເຊິ່ງໃນເມື່ອມີຂະບວນການຕ່າງໆທີ່ມີຄວາມຈຳເປັນຕ້ອງການຢາກເບິ່ງຢາກຊົມການສະແດງສິລະປະວັນນະຄະດີແລ້ວກໍ່ເຕົ້າໂຮມເອົານັກສະແດງຢູ່ບັນດາໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຢູ່ຕາມໂຮງຮຽນ ແລະຮາກຖານມາເຝິກຊ້ອມໄລຍະໜຶ່ງກໍ່ສາມາດສະແດງຮັບໃຊ້ສັງຄົມຢ່າງທັນການເໝືອນກັນ ແລະໃນປະຈຸບັນກໍ່ເຫັນວ່າວຽກງານ ສິລະປະວັນນະຄະດີຢູ່ ແຂວງສາລະວັນ ແມ່ນໄດ້ມີການຂະຫຍາຍຕົວຢ່າງແຂງແຮງເປັນຕົ້ນ: ແມ່ນຢູ່ບັນດາໂຮງຮຽນ ຂັ້ນປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ, ໜ່ວຍສິລະປະວັນນະຄະດີ ຂອງກອງບັນຊາການທະຫານແຂວງ, ປ. ກ .ສ ແຂວງ ແລະ ຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ ທີ່ມີລັກສະນະເຄິ່ງອາຊີບກໍ່ໄດ້ຕັ້ງໜ້າເຄື່ອນໄຫວຮັບໃຊ້ສັງຄົມຢ່າງບໍ່ຢຸດຢັ້ງ ແລະອານາຄົດເຊື່ອແນ່ວ່າວຽກງານດັ່ງກ່າວຄົງຈະໄດ້ຮັບການພັດທະນາ ແລະ ສົ່ງເສີມພ້ອມປົກປັກຮັກສາໃນລະດັບສູງທີ່ສຸດ ./.

# ວຽກງານສິລະປະວັນນະຄະດີພື້ນເມືອງບັນດາເຜົ່າ ຢູ່ແຂວງ ເຊກອງກໍ່ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍ

***************************

ແຂວງເຊກອງ ຫາກໍ່ສ້າງຕັ້ງເມື່ອປີ ຄ.ສ 1985 ເປັນແຂວງທີ່ພົນລະເມືອງໜ້ອຍອັນດັບສອງຮອງຈາກແຂວງອັດຕະປື ທັງເປັນແຂວງທີ່ມີພົນລະເມືອງໜ້ອຍກວ່າໝູ່. ຢູ່ປະເທດເຮົາ. ສະໄໝການປະຕິວັດ ຊາດປະຊາທິປະໄຕ ເປັນແຂວງໜຶ່ງເອີ້ນວ່າ: ແຂວງເວັນອອກເຊິ່ງກວມເອົາແຂວງສາລະວັນ ສ່ວນໜຶ່ງ, ພື້ນທີ່ສ່ວນຫຼາຍເປັນພູພຽງ ແລະ ພູສູງ, ພູພຽງຕຽງ ແລະ ຈາຍວານ ເຄີຍເປັນສະໜາມຮົບ ແລະເສັ້ນທາງລຳລຽງຂອງ ກອງທັບປົດປ່ອຍ ແລະ ໄດ້ມີເສັ້ນທາງ ໂຫຈີ່ມິນ ທີ່ໄດ້ຕັດຜ່ານສະໄໝສົງຄາມກູ້ຊາດ ລະຫວ່າງ ຊຸມປີ 1960 - 1970. ເຊກອງ ເປັນແຂວງໜຶ່ງທີ່ປະກອບດ້ວຍຫຼາຍຊົນເຜົ່າທີ່ໄດ້ດຳລົງຊີວິດ ແລະ ຕັ້ງພູມລຳເນົາ



ຊຸດອາພອນເພດຊົນເຜົ່າຮ່າຣັກ:ທ້າວວັນທອງ ແລະນາງ ວິລະກອນ

ບົນດິນດອນຕອນນີ້ ເປັນໄລຍະເວລາເຫິງນານມາແລ້ວຄື: ຊົນເຜົ່າ ຣາຣັກ,ຕຣຽງ, ກຣຽງ, ກະຕູ, ຕະໂອ້ຍ, ຊ່ວຍ, ກະຕາງ, ແຢະ, ຢຣຸກອງ, ລາວ, ລະວີ, ຕຼີວ, ດາກກັງ, ຈາຕ໊ອງ. ບັນດາຊົນເຜົ່າຢູ່ແຂວງເຊກອງ ເປັນຊົນເຜົ່າດັ້ງເດີມ ແຕ່ຍັງຄົງຮັກສາບັນດາເອກະລັກສະເພາະຂອງຊົນເຜົ່າຕົນເອງຄື: ບັນດາຊົນເຜົ່າລ້ວນແຕ່ມີພາສາປາກເວົ້າຂອງຊົນເຜົ່າຕົນເອງ; ມີປະຫວັດສາດຄວາມເປັນມາ, ການເຄື່ອນຍ້າຍ, ກົກເຄົ້າຕົ້ນກຳເນີດ ແລະຊື່ຮຽກສະເພາະຂອງຊົນເຜົ່າຕົນເອງ; ບໍ່ສະເພາະແຕ່ເທົ່ານັ້ນບັນດາຊົນເຜົ່າ ຢູ່ແຂວງເຊກອງລ້ວນແຕ່ໄດ້ມີເອກະລັກສະເພາະໃນການຕັ້ງບ້ານເຮືອນ, ການຈັດວາງໃນຫ້ອງເຮືອນ, ເຄື່ອງນຸ່ງຫົ່ມເອ້ຢ້ອງ, ເຄື່ອງມືການຜະລິດ ເຄື່ອງໃຊ້ໃນຄອບຄົວ ອາຫານ ການກິນ,ການດື່ມແລະດູດ, ບັນດາພິທີກຳທາງຮີດຄອງໃນການຜະລິດຕາມຮອບວຽນໃນປີໜຶ່ງໆ ມີເອກະລັກໃນການສົມລົດ, ການເກີດ, ການສົ່ງສະການ ແລະ ການພົວພັນສັງຄົມພາຍໃນຊົນເຜົ່າ ບໍ່ສະເພາະແຕ່ເທົ່ານັ້ນ. ບັນດາຊົນເຜົ່າຢູ່ແຂວງເຊກອງ ຍັງມີການເຊື່ອຖື



ຊຸດອາພອນເພດຂອງຊົນເຜົ່າກຣຽງ: ທ້າວອິນຕາ ແລະນາງ ອານິງ ແຂວງ ເຊກອງ

ຂະນົບທຳນຽມ, ມີສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳໂດຍສະເພາະແມ່ນ ວາດຂັບລຳ, ວາດຟ້ອນ, ດົນຕຣີ, ນິທານພື້ນເມືອງ ແລະອື່ນໆ ເຊິ່ງຖ້າທ່ານໃດຫາກໄດ້ ໄປເຄື່ອນໄຫວປະຕິບັດໜ້າທີ່ວຽກງານຢູ່ແຂວງດັ່ງກ່າວແລ້ວຄືງຈະໄດ້ຍິນສຽງຂັບລຳ ຣາຣັກຂອງຊົນເຜົ່າຣາຣັກ, ຂັບລຳຂອງຊົນເຜົ່າກຣຽງ, ຂັບລຳຂອງຊົນເຜົ່າຕຣຽງ, ຂັບລຳ ຂອງຊົນເຜົ່າກະຕູ ແລະ ຂັບນັງລອງຂອງຊົນເຜົ່າຢຣຸກອງ ຢູ່ຕາມງານບຸນປະເພນີ ແລະ ຢູ່ຕາມສະຖານທີ່ການອອກແຮງງານຕ່າງໆ. ບໍ່ສະເພາະແຕ່ເທົ່ານັ້ນຖ້າຫາກໄດ້ແວ່ຢາມ ແຂວງເຊກອງ, ຢາມບາງຊົນເຜົ່າໃນເວລາເຂົາເຈົ້າຈັດງານບຸນປະເພນີກໍ່ຈະໄດ້ຊົມ ໄດ້ເບິ່ງ ວາດຟ້ອນຈາຕຣີ ຂອງຊົນເຜົ່າກຣຽງ, ກະຕູ, ຕະໂອ້ຍ; ວາດຟ້ອນຈ້ອງກະປຽວຂອງ ຊົນເຜົ່າ ຕະໂອ້ຍ, ຊົນເຜົ່າຕຣຽງ ແລະວາດຟ້ອນຕວດລາປີບ ຂອງຊົນເຜົ່າຕະໂອ້ຍ, ກຣຽງ, ກະຕູ.

ແຂວງເຊກອງ, ເລີ່ມແຕ່ມື້ສ້າງຕັ້ງເມື່ອປີ 1985 ຈົນເຖິງປະຈຸບັນນີ້ , ເຖິງວ່າບໍ່ທັນ ມີກອງສິລະປະກອນແຂວງ ຫຼື ກອງສະແດງອາຊີບກໍ່ຕາມ ແຕ່ຄະນະພັກ ແລະອຳນາດ ການປົກຄອງແຂວງເຊກອງ ກໍ່ໄດ້ວາງແຜນນະໂຍບາຍກ່ຽວກັບການປົກປັກຮັກສາ ຊຸກຍູ້ສົ່ງເສີມວຽກງານສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳ ທີ່ເປັນເອກະລັກ ແລະ ມູນເຊື້ອຂອງບັນດາຊົນເຜົ່າໄດ້ເປັນຢ່າງດີ. ພ້ອມກັນນັ້ນຍັງໄດ້ວາງມາດຕາການ ຕ່າງໆເພື່ອຈຳກັດ ແລະ ກ້າວໄປເຖິງລົບລ້າງບັນດາຮີດຄອງປະເພນີ ທີ່ໄດ້ແຕະຕ້ອງເຖິງ ຄວາມເຈັບປວດ ທາງຮ່າງກາຍ, ແຕະຕ້ອງເຖິງນະໂຍບາຍສາມັກຄີສະເໝີພາບ, ນະໂຍບາຍ ສາມັກຄີ ປອງດອງລະຫວ່າງ ຊົນເຜົ່າຕ່າງໆ. ນະໂຍບາຍສະເໝີພາບລະຫວ່າງຍິງ - ຊາຍ ແຕ່ບັນຫາທີ່ໜ້າສັນລະເສີນອີ່ຫຼີນັ້ນ ຄະນະພັກ ແລະອຳນາດການປົກຄອງ ແຂວງເຊກອງ ແມ່ນໄດ້ຕັ້ງໜ້າປັບປຸງການຈັດຕັ້ງ ແລະເສີມຂະຫຍາຍວຽກງານສິລະປະວັນນະຄະດີ ພື້ນເມືອງບັນດາຊົນເຜົ່າ ຢູ່ຕາມແຕ່ລະຄຸ້ມບ້ານ ແລະ ສຳນັກງານບ່ອນທີ່ມີເງື່ອນໄຂ ດ້ວຍ ຄວາມເອົາໃຈໃສ່, ການກະຕຸກຊຸກຍູ້ ແລະສົ່ງເສີມຂະຫຍາຍຂອງຄະນະນຳຂັ້ນຕ່າງໆ ຢູ່ ແຂວງເຊກອງຢ່າງບໍ່ລົດລະນັ້ນ ຈຶ່ງໄດ້ເຮັດໃຫ້ໜ່ວຍສິລະປະວັນນະຄະດີພື້ນເມືອງ ບັນດາ

ຊົນເຜົ່າຢູ ແຂວງເຊກອງ ສາມາດເຂົ້າຮ່ວມງານ ບຸນມະໂຫລານລະດັບຊາດຫຼາຍຄັ້ງແລ້ວ. ບໍ່ສະເພາະແຕ່ເທົ່ານັ້ນໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າຢູ່ແຂວງດັ່ງກ່າວຍັງສາມາດເຄື່ອນໄຫວສະແດງຮັບໃຊ້ງານບຸນສຳຄັນຂອງຊາດຮັບໃຊ້ ກອງປະຊຸມໃຫຍ່ ຂອງອົງຄະນະພັກແຂວງ, ເມືອງ, ຮັບໃຊ້ງານບຸນປະເພນີຂອງບາງຊົນເຜົ່າ, ສະແດງຮັບໃຊ້ ແຂກຕ່າງປະເທດທີ່ໄດ້ຢ້ຽມຢາມແຂວງເຊກອງ ໄດ້ຫຼາຍຄັ້ງ ແລະ ຜ່ານການເຄື່ອນໄຫວສະແດງຮັບໃຊ້ມວນຊົນໃນ ແຕ່ລະຄັ້ງນັ້ນ, ບັນດາລາຍການສະແດງຂອງໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນພື້ນເມືອງບັນດາຊົນເຜົ່າແຂວງເຊກອງ ກໍ່ໄດ້ຮັບຄວາມນິຍົມຊົມຊອບຈາກບັນດາທ່ານຜູ້ເບິ່ງ ຜູ້ຊົມເປັນຢ່າງດີ.



ວາດຟ້ອນຊົນເຜົ່າຕຣຽງ, ສະແດງໂດຍ ໜ່ວຍສິລະປະວັນນະຄະດີ ພື້ນເມືອງບັນດາຊົນເຜົ່າ
ແຂວງເຊກອງ ໃນໂອກາດເຂົ້າຮ່ວມບຸນມະໂຫລານວັດທະນະທຳບັນດາຊົນເຜົ່າປີ 2000 ທີ່ວຽງຈັນ

ໃນໂອກາດເຂົ້າຮ່ວມບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າ ທົ່ວປະເທດ ຄັ້ງທີ II ເຊິ່ງໄດ້ຈັດຂຶ້ນເມື່ອວັນທີ 7 - 12 ພະຈິກ 2000 ທີ່ນະຄອນຫຼວງວຽງຈັນ, ໝາກຫົວໃຈຂອງປວງຊົນ ລາວທັງຊາດນັ້ນ ທ່ານ ວັນນາວົງ ໂພສະລາດ ກຳມະການ ພັກແຂວງ ທັງເປັນຫົວໜ້າ ພະແນກຖະແຫຼງຂ່າວ - ວັດທະນະທຳ ປະຈຳແຂວງເຊກອງ ໄດ້ກ່າວວ່າ: ກ່ອນຈະເດີນທາງເພື່ອເຂົ້າຮ່ວມງານບຸນມະໂຫລານວັດທະນະທຳບັນດາຊົນເຜົ່າຄັ້ງນີ້, ຄະນະນຳຂອງພະແນກຖະແຫຼງຂ່າວ - ວັດທະນະທຳແຂວງເຊກອງ... ແມ່ນໄດ້ຫ້າງຫາກະກຽມຢ່າງຄົບຖ້ວນເປັນຕົ້ນ: ໄດ້ກະກຽມແຜນວຽກ, ແຜນຄົນ ແລະ ແຜນເງິນ ຢ່າງລະອຽດແລ້ວ ກໍ່ນຳສະເໜີຂຶ້ນຫາການນຳສາຍຕັ້ງ ແລະ ສາຍຂວາງເພື່ອຂໍທິດຊີ້ນຳ ໃນການຈັດຕັ້ງປະຕິບັດ ແຜນວຽກໃນແຕ່ລະຂັ້ນຕອນ. ພາຍຫຼັງໄດ້ຮັບການຊີ້ນຳຈາກຂັ້ນເທິງແລ້ວ ຄະນະນຳ ພວກເຮົາໄດ້ແບ່ງກັນລົງເຄື່ອນໄຫວເພື່ອຈະຕ້ອງປະຕິບັດ 2 ວຽກງານໃຫຍ່ຢູ່ຂັ້ນເມືອງເປັນຕົ້ນ ແມ່ນວຽກງານການວາງສະແດງແມ່ນໄດ້ລົງປຸກລະດົມໃຫ້ແຕ່ລະເມືອງ ສິ່ງຜະລິດຕະພັນທາງດ້ານວັດທະນະທຳ, ດ້ານວັດຖຸ ຂອງບັນດາຊົນເຜົ່າ ເພື່ອເຂົ້າຮ່ວມການວາງສະແດງທີ່ຈະໄດ້ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ ແລະວຽກງານສິລະປະວັນນະຄະດີ ແມ່ນລົງໄປຄັດເລືອກ ແລະເລືອກເຟັ້ນເອົາລາຍການຕ່າງໆ ຂອງແຕ່ລະໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນຂອງບັນດາຊົນເຜົ່າຢູ່ຂັ້ນເມືອງ ແລະຖັດຈາກນັ້ນແມ່ນໄດ້ຈັດຕັ້ງເປັນໜ່ວຍງານສິລະປະວັນນະຄະດີຢູ່ຂັ້ນແຂວງ ແລ້ວໄດ້ດຳເນີນການເຝິກຊ້ອມ ແລະເມື່ອເຫັນວ່າການເຝິກແອບໄດ້ດີແລ້ວກໍ່ໄດ້ສະແດງປະກວດລາຍການຕ່າງໆ ຜ່ານຄະນະປະຈຳພັກແຂວງ ແລະ ມວນຊົນໃນເທດສະບານແຂວງ...ເພື່ອເລືອກເຟັ້ນເອົາລາຍການທີ່ມີລັກສະນະໂດດເດັ່ນຂຶ້ນມາສະແດງຮ່ວມໃນງານມະໂຫລານຄັ້ງນີ້ ". ທ່ານ ຫົວໜ້າພະແນກຖະແຫຼງຂ່າວ - ວັດ ທະນະທຳ ຍັງໄດ້ ຢືນຢັນຕື່ມອີກວ່າ: ຜ່ານການເກັບກຳ ແລະເລືອກເຟັ້ນຕາມແຕ່ລະຂັ້ນຕອນນັ້ນພວກເຮົາຈຶ່ງສາມາດນຳເອົາຜົນສຳເລັດດັ່ງກ່າວ ເພື່ອມາວາງສະແດງ ແລະສະແດງຮັບໃຊ້ໃນບຸນມະໂຫລານຄັ້ງນີ້.ເຊິ່ງມີລາຍລະອຽດ ດັ່ງນີ້ຄື:

ບົດຟ້ອນຊ້ອນປາຂອງຊົນເຜົ່າຣາຣັກ ທີ່ສ່ອງແສງເຖິງວາດການດຳລົງຊີວິດຂອງຊາວຣາຣັກ ລຽບຕາມລຳເຊກອງ, ຂັບລຳຂອງຊົນເຜົ່າຣາຣັກ ທີ່ໄດ້ເວົ້າເຖິງການພັດທະນາທາງດ້ານເສດຖະກິດ - ສັງຄົມ ຢູ່ແຂວງເຊກອງ ພາຍໃຕ້ການນຳພາຂອງພັກ. ວາດຟ້ອນການຕີຄ້ອງລາຂອງຊົນເຜົ່າກຣຽງ ທີ່ໄດ້ສ່ອງແສງເຖິງວິຖີຊີວິດ ແລະຮີດຄອງປະເພນີ ຂອງຊົນເຜົ່າດັ່ງກ່າວ, ວາດຟ້ອນມ່ວນຊື່ນການຫຼິ້ນບຸນປີໃໝ່ຂອງຊົນເຜົ່າຕຣຽງ ແລະ ຂັບລຳຂອງ ຊົນເຜົ່າກຣຽງ ທີ່ໄດ້ສ່ອງແສງເຖິງການພົວພັນສັງຄົມພາຍໃນຊົນເຜົ່າດັ່ງກ່າວ. ມັນບໍ່ພຽງແຕ່ເທົ່ານັ້ນແຂວງເຊກອງ ຍັງໄດ້ນຳເອົາຜະລິດຕະພັນທາງດ້ານວັດທະນະທຳດ້ານວັດຖຸຂອງຊົນເຜົ່າກຣຽງລວມມີ : ສິ້ນກຣຽງ (ຝ້າຍທຸເລ), ສິ້ນກຣຽງ ແລະສິ້ນ ລວດລາຍກຣຽງ; ສິ້ນໂລມ, ກະຕ່ງວໝາກປັດ, ກະເຈາະ, ກະພາ, ກະບຽນ, ຕະເລັກ, ຕະນູມ ແລະທອກ ຂອງຊົນເຜົ່າຕຣຽງ; ຍັງມີສິ້ນໂລມຂອງຊົນເຜົ່າຣາຣັກ ມາວາງສະແດງໃນໂອກາດບຸນນະມັດສະການພະທາດຫຼວງ ພ້ອມກັນນັ້ນຍັງມີເທດສະການອາຫານການປຸງແຕ່ງນ້ຳຊຸ້ງວຂອງຊົນເຜົ່າຕຣຽງ " ແລະ ໃນຕອນທ້າຍຂອງການສົນທະນາ ຢູ່ທີ່ ບ້ານ ພັກປ່າແປກ ນະຄອນຫຼວງວຽງຈັນ ນັ້ນ ທ່ານ ຫົວໜ້າ ພະແນກຖະແຫຼງຂ່າວ - ວັດທະນະທຳໄດ້ເນັ້ນ ໜັກເຖິງທິດທາງ, ແຜນການ ແລະວິທີການຊຸກຍູ້ສົ່ງເສີມຂະຫຍາຍວຽກງານສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າຢູ່ ແຂວງເຊກອງ ຕື່ມອີກວ່າ: ຈະສືບຕໍ່ຊຸດຄົ້ນໃຫ້ເລິກເຊິ່ງ ແລະລະອຽດກ່ຽວກັບມູນເຊື້ອຄວາມຫຼາກຫຼາຍທາງດ້ານສິລະປະວັນນະຄະດີຂອງຊົນເຜົ່າຕ່າງໆ.

- ສືບຕໍ່ຊຸກຍູ້ສົ່ງເສີມສິລະປະວັນນະຄະດີພື້ນເມືອງຂອງແຕ່ລະບ້ານຊົນເຜົ່າຕ່າງໆເປັນຢ່າງດີ ເຊິ່ງຖ້າເປັນໄປໄດ້ຈະໄດ້ສ້າງຕັ້ງຄະນະສິລະປະ ຫຼືກອງສະແດງອາຊີບຂອງແຂວງຂຶ້ນ.

- ຈຳກັດການແຜ່ລາມຂອງຂະບວນສິລະປະວັນນະຄະດີ ທີ່ຈະເປັນພິດ ເປັນໄພຈາກພາຍ ນອກທີ່ຈະແຜ່ລາມເຂົ້າສູ່ວົງການ ສິລະປະວັນນະຄະດີພື້ນເມືອງຊົນເຜົ່າຕ່າງໆ

ຢູ່ແຂວງເຊກອງ ຢ່າງເຂັ້ມງວດ ເຊິ່ງເປັນໄຟຂີ້ມຂູ່ ແລະ ກີດຂວາງຕໍ່ ສີລະປະວັນນະຄະດີ ທີ່ເປັນມູນເຊື້ອຂອງຊົນເຜົ່າຕ່າງໆ ກໍ່ຄືຂອງຊາດລາວເຮົາ.

- ສຶກສາອົບຮົມມະຫາຊົນໃຫ້ເຊື່ອມຊຶມແນວທາງນະໂຍບາຍຂອງພັກກ່ຽວກັບ ຊີງເຂດ ວຽກ ງານຖະແຫຼງຂ່າວ - ວັດທະນະທຳໃຫ້ເລິກເຊິ່ງ.

-ຈະກຳນົດທິດກ່ຽວກັບການອະນຸລັກ, ປົກປັກຮັກສາ ແລະ ທັງຊຸກຍູ້ ສົ່ງເສີມໃຫ້ ຊົນເຜົ່າ ຕ່າງໆ ຜະລິດເຄື່ອງດົນຕຣີພື້ນເມືອງ,ເຄື່ອງນຸ່ງຫົ່ມ, ເອ້ຍ້ອງແບບພື້ນເມືອງ, ເຄື່ອງຫັດຖະກຳ ຈັກສານ ເພື່ອແນໃສ່ຜະລິດ ເຄື່ອງໃຊ້ສອຍພາຍໃນຄອບຄົວ ແລະ ເປັນສິນຄ້າອີກດ້ວຍ. ເພື່ອແນໃສ່ເຮັດໃຫ້ທຸກຄົນຮັບຮູ້ຄຸນຄ່າ ທາງດ້ານຜະລິດຕະພັນທາງດ້ານວັດທະນະທຳ ດ້ານຕ່າງໆຂອງບັນດາຊົນເຜົ່າ ເພື່ອພ້ອມກັນອະນຸລັກປົກປັກຮັກສາ ແລະ ສົ່ງເສີມຜະລິດ ຕະພັນດັ່ງກ່າວໃຫ້ຍືນຍົງຄຽງຄູ່ກັບຜະລິດຕະພັນ ວັດທະນະທຳແຫ່ງຊາດ.



ລຳຂອງຊົນເຜົ່າຮ່າຮັກສະແດງໂດຍ: ໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າ ແຂວງເຊກອງ

ລວມຄວາມວ່າ: ພາຍໃຕ້ການນຳພຂອງພັກ ປະຊາຊົນປະຕິວັດລາວ ແລະການຄຸ້ມຄອງຂອງລັດຖະບານແຫ່ງ ສ.ປ.ປ. ລາວ ເປັນໄລຍະຫຼາຍທົດສະຕະວັດມານີ້ ສິລະປະວັນນະຄະດີ ພື້ນເມືອງຂອງບັນດາຊົນເຜົ່າ ແລະ ວັດທະນະທຳ ທີ່ເປັນມູນເຊື້ອຂອງບັນດາຊົນເຜົ່າຢູ່ແຂວງເຊກອງ ແມ່ນໄດ້ມີການປົກປັກຮັກສາ, ຊຸກຍູ້ສົ່ງເສີມ ແລະ ໄດ້ມີ ການຂະຫຍາຍຕົວພໍສົມຄວນ. ອີກເທື່ອໜຶ່ງ ຂ້າພະເຈົ້າເຊື່ອແນ່ວ່າ ພາຍໃຕ້ ການນຳພາໂດຍກົງຂອງທ່ານ ຄຳບຸນ ດວງປັນຍາ ກຳມະການສູນກາງພັກ ທັງເປັນເລຂາຄະນະພັກ ແລະ ເປັນເຈົ້າແຂວງເຊກອງ ຄົງຈະສາມາດເຮັດໃຫ້ວຽກງານຖະແຫຼງຂ່າວ - ວັດທະ ນະທຳ ຢູ່ແຂວງເຊກອງ ມີຄວາມເຕີບໃຫຍ່ຂະຫຍາຍຕົວສິລະປະວັນນະຄະດີ ຂອງ ຊົນເຜົ່າຕ່າງໆ ຈະໄດ້ມີການຂຸດຄົ້ນ, ອະນຸລັກ., ຊຸກຍູ້ສົ່ງເສີມຢ່າງແຮງກ້າ ແລະ ບັນຫາສຳຄັນຍິ່ງ ຖ້າຫາກ ທ່ານໃດຈະແມ່ນແຂກພາຍໃນ ແລະຕ່າງ ປະເທດໄດ້ໄປແວ່ຢາມແຂວງເຊກອງ ໃນອານາຄົດຄົງຈະໄດ້ຊົມການສະແດງຂອງກອງສິລະປະອາຊີບຂອງແຂວງດັ່ງກ່າວ ເຊິ່ງຈະມີຫຼາຍສີສັນ ແລະລວດລາຍຂອງຊົນເຜົ່າຕ່າງໆ%



ຜະລິດຕະພັນທາງດ້ານວັດທະນະທຳ ,ດ້ານວັດຖຸ ຂອງບັນດາຊົນເຜົ່າ ແຂວງ ເຊກອງ

# ການຄົງຕົວ ແລະ ຂະຫຍາຍຕົວຂອງ
# ສິລະປະວັນນະຄະດີຂອງບັນດາຊົນເຜົ່າຢູ່ແຂວງຈຳປາສັກ

*****************

ຈຳປາສັກ ແມ່ນໜຶ່ງໃນສອງແຂວງທີ່ຕັ້ງຢູ່ຝັ່ງຂວາຂອງແມ່ນ້ຳຂອງ ເຊິ່ງມີເຂດແດນຕິດກັບແຂວງອັດຕະປື, ເຊກອງ, ສາລະວັນ, ລາຊະອານາຈັກໄທ ແລະ ລາຊະອານາຈັກກຳປູເຈຍ. ເປັນແຂວງທີ່ອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ, ມີທິວທັດທຳມະຊາດ ແລະ ສະຖານທີ່ທ່ອງທ່ຽວຫຼາຍແຫ່ງ ເຊັ່ນ: ວັດພູຈຳປາສັກ, ຄອນພະເພັງ, ຫຼີ່ຜີ, ມີເກາະດອນທີ່ເປັນບ້ານ ເຮືອນ ຂອງປະຊາຊົນ ຢູ່ກາງ ແມ່ນ້ຳຂອງຫຼາຍແຫ່ງ.

ຈຳປາສັກ ເປັນແຂວງ ອູ່ເຂົ້າ, ອູ່ປາ, ມີທົ່ງພຽງ ແລະ ພູພຽງທີ່ກວ້າງຂວາງສຸດສາຍຕາເປັນບ່ອນທີ່ປະຊາຊົນເຜົ່າຕ່າງໆ ດຳລົງຊີວິດດ້ວຍການເຮັດນາປູກເຂົ້າ, ເຮັດສວນປູກກາເຟ, ໝາກສາລີ, ມັນຝະຣັ່ງ, ກະລຳປີ, ກາລົດ, ຜັກບົ່ວ ທົ່ວໃຫຍ່, ຖົ່ວລຽນ...ແລະຫາປາຢູ່ຕາມລຳແມ່ນ້ຳຂອງເປັນສິນຄ້າ.

ຈຳປາສັກ ເປັນແຂວງດັ້ງເດີມເກົ່າແກ່ ເຊິ່ງປະກອບດ້ວຍຫຼາຍ ຊົນເຜົ່າ ທີ່ໄດ້ຕັ້ງພູມລຳເນົາບົນດິນດອນຕອນນີ້ເປັນໄລຍະເວລາເຫິງນານມາແລ້ວ ຊັ່ນ: ຊົນເຜົ່າລາວ, ຢຣຸກອງ, ຍະເຫີນ, ຊ່ວຍ,ເບຣົາ, ຕະໂອ້ຍ, ຣາຣັກ, ກຣຽງ, ໂອຍ, ຂະແມ, ຜູ້ໄທ, ກຶມມຸ... ແລະ ຍັງມີຫຼາຍຊົນເຜົ່າທີ່ເຄື່ອນໄຫວໄປມາປະຕິບັດໜ້າທີ່ວຽກງານທາງລັດຖະການ ແລະສ່ວນຕົວແລ້ວໄດ້ຕັ້ງເຮືອນຊານຮ່ວມກັບບັນດາຊົນເຜົ່າທີ່ມາຢູ່ກ່ອນ ບັນດາຊົນເຜົ່າຢູ່ແຂວງຈຳປາສັກ ແມ່ນຍັງຄົງຮັກສາບັນດາເອກະລັກດ້ານຕ່າງໆເຊັ່ນ: ເອກະລັກກ່ຽວກັບພາສາປາກ ເວົ້າ; ເອກະລັກກ່ຽວກັບປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດທີ່ຕິດພັນເຖິງຊື່ຮຽກເດີມ ທີ່ພວກເຂົາເຈົ້າມີຄວາມສະໝັກໃຈ ແລະເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດຈິດຕະສາດ ທີ່ສະແດງອອກໃນວົງຄະນາຍາດວັດທະນະທຳຄື: ວັດທະນະທຳດ້ານວັດຖຸ, ຈິດໃຈ ແລະດ້ານສັງຄົມ.

---

ບັນດາຊົນເຜົ່າຢູ່ແຂວງຈຳປາສັກ ໄດ້ມີມູນເຊື້ອຕໍ່ສູ້ບໍ່ຍອມຈຳນົນໃນການຕໍ່ສູ້ຕ້ານກັບຈັກກະພັດຕ່າງດ້າວທີ່ເຂົ້າມາຮຸກຮານ ແລະເຈົ້າສັກດີນາທ້ອງຖິ່ນຈົນກວ່າໄດ້ຮັບໄຊຊະນະຢ່າງສົມບູນ, ມີມູນເຊື້ອດຸໝັ່ນຂະຫຍັນພຽນໃນການເພີ່ມພູນຜະລິດຜົນເພື່ອຫາລ້ຽງຊີວິດຂອງຕົນໃຫ້ດີຂຶ້ນ, ໄປຢ່ຽມໜາມາຢ່ຽມຂຽດ, ມີຫົວຄິດປະດິດສ້າງມີຄວາມສະດຸ້ງໄວໃນການຫັນປ່ຽນແບບແຜນການດຳລົງຊີວິດຂອງຕົນໃຫ້ດີຂຶ້ນເທື່ອລະກ້າວ ແລະ ທວງທັນກັບບາດກ້າວການຂະຫຍາຍຕົວຂອງປະເທດຊາດ ແລະຍຸກສະໄໝ.

ບັນດາຊົນເຜົ່າຢູ່ແຂວງຈຳປາສັກ ໄດ້ມີມູນເຊື້ອທາງດ້ານສິລະປະວັນນະຄະດີ ໄດ້ມີຄວາມສະຫງວນຄວາມງາມມີຂັບລຳ ແລະ ວາດຟ້ອນປະຈຳທ້ອງຖິ່ນ ແລະ ຊົນເຜົ່າ ແຕ່ວາດຂັບລຳທີ່ມີຊື່ສຽງມີລຳໂສມ ແລະ ລຳສີພັນດອນ ເຊິ່ງຖ້າຫາກທ່ານໄດ້ແວ່ຢາມ ແຂວງຈຳປາສັກ ເຂດບ້ານໜອງເມັກ ເມືອງປາກຊ່ອງ ກໍ່ຈະໄດ້ຍິນສຽງຂັບລຳເຈີກ ຂອງຊົນເຜົ່າຍະເຫີນ, ສຽງຂັບຜູ້ໄທ, ຂັບນັ່ງລອງ ຂອງຊົນເຜົ່າຍຣຸກອງ ແລະຖ້າຫາກໄປເຂດບ້ານຫຼັກ 19 ເມືອງປະທຸມພອນ, ບ້ານໂພນສະອາດ ເມືອງໂຂງ ກໍ່ຈະໄດ້ຍິນສຽງລຳເຈືອງ ແລະອາດຈະໄດ້ຊົມວາດຟ້ອນຂອງຊົນເຜົ່າເບຣົາ ແລະອື່ນໆ ...

ບົນພື້ນຖານບັນດາຊົນເຜົ່າຢູ່ແຂວງຈຳປາສັກ ໄດ້ມີສິລະປະ ວັນນະຄະດີ ຫຼາກຫຼາຍ ແລະ ຫຼາຍສີສັນດັ່ງໄດ້ກ່າວມານັ້ນ. ຄະນະພັກ ແລະ ອຳນາດການປົກຄອງ ແຂວງຈຳປາສັກ ໄດ້ມີ ນະໂຍບາຍປົກປັກຮັກສາ, ກະຕຸກຊຸກຍູ້ ແລະ ສົ່ງເສີມວຽກງານ ສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳ ທີ່ເປັນມູນເຊື້ອຂອງຊົນເຜົ່າຕ່າງໆ ໃຫ້ຍື ຍົງຄຽງຄູ່ ກັບສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳແຫ່ງຊາດ ເຊິ່ງສະແດງໃຫ້ເຫັນວ່າ: ເກືອບທຸກປີທາງອຳນາດການປົກຄອງແຂວງ ຈຳປາສັກ ຈັດງານປະກວດອາພອນເພດຊີງ, ສະແດງ ສິລະປະວັນນະຄະດີ ແລະ ສະແດງສິນຄ້າ ທີ່ເປັນຜະລິດຕະພັນ ທາງດ້ານກະສິກຳ ແລະຫັດຖະກຳຂອງຊົນເຜົ່າຕ່າງໆ. ພ້ອມກັບການປົກປັກຮັກສາ ແລະເສີມຂະຫຍາຍບັນດາບັນຫາທີ່ກ່າວມານັ້ນສົມທົບກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ ແລະ ຄວາມຄອງຄອຍ ຂອງ ປະຊາຊົນ.

ຊົນເຜົ່າຕ່າງໆໃນສະໄໝນັ້ນ. ຄະນະພັກ ແລະອຳນາດການປົກຄອງແຂວງ ຈຳປາສັກ ຈຶ່ງໄດ້ຕົກລົງ ສ້າງຕັ້ງກອງສິລະປະກອນແຂວງຂຶ້ນ ເມື່ອ ປີ 1973 ແລະ ຫຼັງຈາກ ນັ້ນແມ່ນ ໄດ້ປຸກລະດົມຂົນຂວາຍ ລູກຮັກ ຫຼານແພງຂອງ ພໍ່ແມ່ປະຊາຊົນເຜົ່າຕ່າງໆ ແລ້ວ ໄດ້ຈັດສົ່ງໄປຍົກລະດັບທາງດ້ານວິຊາການຢູ່ໂຮງຮຽນ ສິລະປະດົນຕຣີຂອງສູນກາງ ທີ່ເມືອງ ວຽງໄຊ ແຂວງຫົວພັນ ເມື່ອ ປີ 1974 - 1976. ເມື່ອສຳເລັດການສຶກສາທາງດ້ານວິຊາ ການແລ້ວພໍດີໃນ ຊ່ວງໄລຍະປະເທດເຮົາສຳເລັດການປະຕິວັດຊາດ ປະຊາທິປະໄຕ ເຊິ່ງໄດ້ໂຮມເອົາແຂວງຈຳປາສັກ, ສີພັນດອນ, ແຂວງເຊໂດນ ແລະແຂວງອຸດົມສິນ ມາ ເປັນແຂວງໜຶ່ງເອີ້ນວ່າ: ແຂວງຈຳປາສັກ ແລະ ໃນຂະນະນັ້ນບັນດານັກສະແດງແຕ່ລະ ແຂວງ ທີ່ໄປຍົກລະດັບດ້ານວິຊາການຢູ່ໂຮງຮຽນສິລະປະດົນຕີຂອງສູນກາງທີ່ເມືອງ ວຽງໄຊ ແຂວງຫົວພັນ ກັບຄືນທ້ອງຖິ່ນ ພ້ອມທັງໄດ້ໂຮມເຂົ້າກັນ ເປັນກອງສະແດງໜຶ່ງເອີ້ນວ່າ: ກອງ ສິລະປະກອນແຂວງຈຳປາສັກ.

ນັບແຕ່ມື້ນັ້ນມາຮອດມື້ນີ້ ກອງສິລະປະກອນແຂວງ ຈຳປາສັກໄດ້ພ້ອມກັນປັບປຸງ ການຈັດຕັ້ງ ແລະ ເນື້ອໃນລີລາການສະແດງໃຫ້ສອດຄ່ອງ ກັບສະພາບແນວຄິດຈິດຕະສາດ ຂອງປະຊາຊົນບັນດາຊົນເຜົ່າ. ເພາະສະນັ້ນເມື່ອກອງສິລະປະກອນແຂວງຈຳປາສັກ ໄດ້ ເຄື່ອນໄຫວສະແດງຮັບໃຊ້ມວນຊົນທັງພາຍໃນ ແລະ ຕ່າງປະເທດລ້ວນແລ້ວແຕ່ໄດ້ ຮັບ ຄວາມນິຍົມຊົມຊອບຈາກບັນດາທ່ານຜູ້ຊົມ ໂດຍບໍ່ມີວັນເຫືອດແຫ້ງແຕ່ຢ່າງໃດເລີຍ.

ຕົກມາໄລຍະທີ່ ສູນກາງ ພັກ ແລະ ລັດຖະບານໄດ້ວາງແນວທາງປ່ຽນແປງໃໝ່ ມານີ້, ກອງສິລະປະກອນຢູ່ບັນດາແຂວງຕ່າງໆໄດ້ຫັນການເຄື່ອນໄຫວໄປສູ່ຮູບການອື່ນໆ ແຕ່ກອງສິລະປະກອນແຂວງຈຳປາສັກ ບໍ່ສະເພາະແຕ່ໄດ້ຄົງຕົວ ທາງດ້ານການຈັດຕັ້ງ ເທົ່ານັ້ນ. ແຕ່ຍັງໄດ້ປັບປຸງເນື້ອໃນລີລາການສະແດງໃຫ້ມີຄຸນນະພາບຂຶ້ນເທື່ອລະກ້າວ ດັ່ງທ່ານ ສີປະເສີດ ແສນສະຫວັດ ກຳມະການໃນຄະນະ ບໍລິຫານງານພັກແຂວງ ທັງເປັນ ແຈ້ງໃຫ້ ຜູ້ຂຽນວ່າ:ກອງສິລະ ປະກອນແຂວງຈຳປາສັກນັບແຕ່ໄດ້ຮັບການສ້າງຕັ້ງ ເປັນທາງການ ເມື່ອ ປີ1976 .

ມາຮອດປະຈຸບັນນີ້, ຄະນະພັກ ແລະ ອຳນາດການປົກຄອງແຂວງດັ່ງກ່າວໄດ້ປັບປຸງ ແລະຮັກສາການຈັດຕັ້ງ, ບັນດານັກສະແດງ ຂອງກອງສິລະປະກອນ ແຂວງຈຳປາສັກ ຍັງໄດ້ປະດິດຄິດແຕ່ງເພງຮ້ອງ, ກອນລຳ ແລະບົດຟ້ອນໄດ້ຢ່າງຫຼວງຫຼາຍ. ຕະຫຼອດໄລຍະການຄົງຕົວ ແລະຂະຫຍາຍຕົວເປັນເວລາຫຼາຍທົດສະຕະວັດມານີ້ ກອງສິລະປະກອນແຂວງຈຳປາສັກ ໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ກອງທະຫານທີ່ປະຈຳຢູ່ຊາຍແດນ, ຮັບໃຊ້ກອງປະຊຸມໃຫຍ່ ອົງຄະນະພັກແຂວງ, ເມືອງ, ສຳນັກງານ, ອົງການ, ໂຮງຮຽນ, ໂຮງໝໍ, ພື້ນຖານການຜະລິດ, ບຸນປະເພນີຂອງຊົນເຜົ່າຕ່າງໆ, ສະແດງຮັບໃຊ້ການນຳ ແລະແຂກຕ່າງປະເທດທີ່ໄດ້ແວ່ຢາມ ແຂວງ ຈຳປາສັກ. ບໍ່ພຽງ ແຕ່ເທົ່ານັ້ນ ກອງສິລະປະກອນແຂວງຈຳປາສັກ ຍັງໄດ້ສະແດງຮັບໃຊ້ເພື່ອເປັນການຖອດຖອນບົດຮຽນຢູ່ຕ່າງປະເທດເຊັ່ນ: ສ. ສ ຫວຽດນາມ, ກຳປູເຈຍ ແລະໄທ ຫຼາຍຄັ້ງ ແລະສິ່ງທີ່ໜ້າສົນລະເສີນອີ່ຫຼີນັ້ນ ຈຳນວນພົນໃນກອງສະແດງດັ່ງກ່າວໄດ້ມີການຂຶ້ນໆລົງໆສອດຄ່ອງກັບຄວາມຮຽກຮ້ອງຕ້ອງ ການຂອງສະພາບການໃນ ແຕ່ລະໄລຍະຄື: ໃນເວລາສ້າງຕັ້ງທະອິດເມື່ອປີ 1976 ນັ້ນມີນັກສະແດງ ແລະນັກດົນຕີພຽງແຕ່ 12 ຊີວິດ ແຕ່ ວ່າໃນຊຸມປີ 1980 ມີ 50 ກວ່າຄົນ ແລະມາຮອດປະຈຸບັນມີ 30 ກວ່າຄົນ. ພ້ອມກັບໄດ້ເຄື່ອນໄຫວສະແດງຮັບໃຊ້ຕາມໜ້າທີ່ການເມືອງຂອງຕົນແລ້ວ. ກອງ ສິລະປະກອນ ແຂວງຈຳປາສັກ ຍັງໄດ້ເຂົ້າຮ່ວມງານປະກວດສິລະປະວັນນະຄະດີ,ເຂົ້າຮ່ວມສະແດງຮັບໃຊ້ງານບຸນມະໂຫລານລະດັບທ້ອງຖິ່ນ, ພາກ ແລະລະດັບຊາດເປັນຈຳນວນບໍ່ໜ້ອຍ ແລະໃນໂອກາດບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າທົ່ວປະເທດຄັ້ງທີ II ປີ 2000 ທີ່ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ແລ້ວນັ້ນ. ຄະນະນຳແຂວງຈຳປາສັກ ໄດ້ສົ່ງນັກສະແດງ ແລະ ນັກດົນຕຣີ ທີ່ໄດ້ຮັບການເລືອກເຟັ້ນຈາກກອງສິລະປະກອນແຂວງ ແລະຈາກໜ່ວຍສິລະປະສະໝັກຫຼິ້ນຂອງຊົນເຜົ່າຕ່າງໆ 20 ກວ່າຊີວິດ ເພື່ອເຂົ້າຮ່ວມສະແດງກັບບັນດາຄະນະສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າທົ່ວປະເທດ.

ແຕ່ນັ້ນມາຮອດມື້ນີ້ ເຖິງວ່າງານບຸນມະໂຫລານດັ່ງກ່າວໄດ້ຜ່ານໄປເປັນເວລາຫຼາຍປີແລ້ວກໍ່ຕາມແຕ່ວາດຟ້ອນລຳເຈີກ ຂອງຊົນເຜົ່າຍະເຫີນ, ວາດຟ້ອນຖົ່ງບັ້ງ ຂອງ ຊົນເຜົ່າເບຣົາ ແລະ ບົດເພັງ ທີ່ເວົ້າເຖິງຄວາມອຸດົມຮັ່ງມີຂອງ ແຂວງຈຳປາສັກ ຮ້ອງໂດຍ: ນັກຮ້ອງຊື່ດັງທະນູໄລ ຄຳພູມີ ທີ່ສະແດງຢູ່ຫໍວັດທະນະທຳແຫ່ງຊາດ ແລະເດີ່ນທາດຫຼວງວຽງຈັນ ແມ່ນຍັງຝັງເລີກຢູ່ໃນຫົວໃຈຂອງແຂກຕ່າງດ້າວທ້າວຕ່າງແດນ ແລະຊາວນະຄອນ ຫຼວງວຽງຈັນ ໂດຍບໍ່ມີວັນຈືດຈາງ.

ລວມຄວາມວ່າ: ວຽກງານສິລະປະວັນນະຄະດີບັນດາຊົນເຜົ່າຢູ່ແຂວງ ຈຳປາສັກໃນປະຈຸບັນນີ້ ບໍ່ສະເພາະແຕ່ໄດ້ຮັກສາທາງ ດ້ານການຈັດຕັ້ງ ແລະຍົກລະດັບ ຄຸນນະພາບຂອງນັກສະແດງ ອາຊີບເທົ່ານັ້ນ ແຕ່ມາເບິ່ງ ວຽກງານສິລະປະ ວັນນະຄະດີ ສະໝັກຫຼິ້ນ ແລະ ຄະນະວົງດົນຕຣີຂອງບັນດາບຸກຄົນ ແລະ ລວມໝູ່ກໍ່ມີການຂະຫຍາຍຕົວຢູ່ຕາມໝູ່ບ້ານຊົນເຜົ່າຕ່າງໆ, ໂຮງຮຽນ, ກອງທະຫານແຕ່ວ່າເດັ່ນກວ່າໝູ່ນັ້ນແມ່ນໜ່ວຍສິລະປະວັນນະຄະດີສະໝັກຫຼິ້ນວິທະຍາໄລສ້າງຄູ, ໝໍລຳເລື່ອງແມ່ນໄດ້ແຕກ ໜໍ່ຈໍ່ ແໜງປະມານ 10 ກວ່າຄະນະ ແລະທັງໝົດເຫຼົ່ານັ້ນກໍ່ແມ່ນມາຈາກການຊີ້ນຳ ນຳພາຂອງ ຄະນະພັກ ແລະອຳນາດການປົກຄອງ ແຂວງຈຳປາສັກ ນັ້ນເອງ./.



ວາດຟ້ອນສ້ອນປາຂອງຊົນເຜົ່າຣາຣັກ ແຂວງ ເຊກອງ



ຄະນະສິລະປະວັນນະຄະດີພື້ນເມືອງ ຊົນເຜົ່າເບຣົາ ບ້ານ ຫຼັກ 19 ເມືອງ ປະທຸມພອນ



ໝໍລຳວັນນາ ລຳໃນໂອກາດບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າ
ປີ 2000 ທີ່ຫໍວັດທະນະທຳແຫ່ງຊາດ

# ສິລະປະວັນນະຄະດີບັນດາຊົນເຜົ່າ

## ຢູ່ແຂວງ ອັດຕະປື ໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍ

**************

"ອັດຕະປື" ເປັນແຂວງໜຶ່ງທີ່ຢູ່ໃຕ້ສຸດຂອງ ສ.ປ.ປ. ລາວ ເຊິ່ງມີເຂດແດນຕິດກັບແຂວງຈຳປາສັກ, ເຊກອງ, ບາງແຂວງຂອງ ສ.ສ ຫວຽດນາມ ແລະ ບາງແຂວງຂອງລາຊະອານາຈັກ ກຳປູເຈຍ. ອັດຕະປື ແມ່ນແຂວງໜຶ່ງທີ່ມີທິວທັດທຳມະຊາດທີ່ງາມຕາ ແລະ ໜ້າຈັບໃຈ ຂອງແຂກຕ່າງດ້າວທ້າວຕ່າງແດນ ເຊິ່ງຖ້າທ່ານໃດໄດ້ເດີນທາງໄປ ແຂວງອັດຕະປື ຖ້າຫາກແມ່ນລະດູຝົນ ກໍລະນີແນມເບິ່ງໄປທິດຕາເວັນຕົກລຽບຕາມສາຍພູຫຼວງ ບັນດາທ່ານຄົງຈະເຫັນທິວທັດນ້ຳຕົກຕາດ ແຕ່ເໜືອລົງຮອດໃຕ້ 10 ກວ່າແຫ່ງ. ອັດຕະປື ກໍ່ແມ່ນໜຶ່ງໃນບັນດາແຂວງທີ່ມີແຫຼ່ງທ່ອງທ່ຽວຫຼາຍແຫ່ງເຊັ່ນ: ທິວທັດພູສະພອງ, ຕາດພອກ, ແກ້ງຂາມ, ຖ້ຳແຂ່ພະ, ພູຍະປູ້, ສຳນັກງານເຈືອງ, ເມືອງ, ອົງການ ແລະແຫ່ງອື່ນໆ.



ລຳອັດຕະປື ປະສານກັບສຽງແຄນຍາວແປດສອກ, ມີການຟ້ອນປະກອບ:ສະແດງໂດຍ ໜ່ວຍສິລະປະວັນນະຄະດີ
ພື້ນເມືອງບັນດາຊົນເຜົ່າແຂວງອັດຕະປື ຢູ່ ຫໍວັດທະນະທຳແຫ່ງຊາດ ນະຄອນຫຼວງວຽງຈັນ

ແຂວງອັດຕະປື ເປັນແຂວງດັ້ງເດີມ ເຊິ່ງປະກອບມີຫຼາຍຊົນເຜົ່າທີ່ໄດ້ຕັ້ງພູມລຳເນົາ ແລະດຳລົງຊີວິດຢາງສະຫຼັບສັບຫວ່າງເຊິ່ງກັນ ແລະ ກັນບົນດິນດອນຕອນນີ້ເປັນໄລຍະຫຼາຍສະຕະວັດມາແລ້ວເຊັ່ນ: ຊົນເຜົ່າລາວ, ເບຣົາ, ໂອຍ, ເຈັງ, ຕຣຽງ, ຣາຣັກ, ຢຣຸກອງ, ຢຣຸດາກ, ຍະເຫີນ, ຕະໂອ້ຍ, ແຢະ, ສະດາງ ແລະ ກະຢ້ອງ, ບັນດາຊົນເຜົ່າຢູ່ແຂວງ ອັດຕະປື ແມ່ນໄດ້ມີມູນເຊື້ອແຫ່ງຄວາມສາມັກຄີ ໃນການຕໍ່ສູ້ຕ້ານກັບຈັກກະພັດ ແລະ ສັກດີນາຕ່າງດ້າວ ກໍ່ຄືໄດ້ຕໍ່ສູ້ຕ້ານກັບເຈົ້າສັກດີນາທ້ອງຖິ່ນຜ່ານຫຼາຍຍຸກສະໄໝທີ່ແຕກຕ່າງກັນ. ມັນບໍ່ສະເພາະແຕ່ເທົ່ານັ້ນ ບັນດາຊົນເຜົ່າຢູ່ແຂວງອັດຕະປື ຍັງໄດ້ມີມູນເຊື້ອໃນການອອກແຮງງານຊ່ວຍເຫຼືອເຊິ່ງກັນ ແລະ ກັນເພື່ອການດຳລົງຄົງຕົວຂອງຕົນ. ຊົນເຜົ່າຕ່າງໆຢູ່ແຂວງອັດຕະປືປະກອບດ້ວຍເອກະລັກສະເພາະຂອງຊົນເຜົ່າຕົນເອງເປັນຕົ້ນແມ່ນເອກະລັກກ່ຽວກັບພາສາປາກເວົ້າ , ປະຫວັດສາດຄວາມເປັນມາ,ກົກເຄົ້າຕົ້ນກຳເນີດ ແລະ ຊື່ຽກເດີມທີ່ເປັນ



ຊຸດອາພອນເພດ ແລະເຄື່ອງດົນຕີດຣວານ ຂອງຊົນເຜົ່າໂອຍ

ເອະລັກສະເພາະຂອງແຕ່ລະຊົນເຜົ່າ ແລະ ເອກະລັກກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດຈິດຕະສາດ ສະແດງໃນວົງຄະນາຍາດວັດທະນະທຳຄື: ວັດທະນະທຳດ້ານວັດຖຸ, ວັດທະນະທຳດ້ານສັງຄົມແລະ ວັດທະນະທຳດ້ານຈິດໃຈ. ຊົນເຜົ່າຕ່າງໆຢູ່ແຂວງອັດຕະປື ລ້ວນແຕ່ໄດ້ມີສິລະປະວັນນະຄະດີ ທີ່ມີມູນເຊື້ອຂອງຊົນເຜົ່າໃຜລາວເຊັ່ນ: ລຳອັດຕະປື ແລະ ແຄນຍາວແປດສອກ ທີ່ຫາກໍຄົ້ນຄວ້າພົບເຫັນບໍ່ທັນເຖິງປີ. ເຊິ່ງໄດ້ປະດິດຄິດສ້າງຂຶ້ນສະໄໝເຈົ້າໄຊຍະເສດຖາທິລາດ (ສະຕະວັດທີ່ 16 ) ພ້ອມກັນນັ້ນຖ້າຫາກບັນດາທ່ານໄດ້ໄປແວ່ຢາມເຂດບ້ານຊົນເຜົ່າ ເບຣົາ ກໍ່ຈະໄດ້ຍິນສຽງລຳເຈືອງນິທານ ແລະ ລຳເຈືອງຕໍ່ສູ້ ພ້ອມກັນນັ້ນຍັງອາດຈະໄດ້ຊົມວາດຟ້ອນປະສານສຽງຄ້ອງນ້ອງແນ້ງ ແລະຄ້ອງຈູມປະສານກັບວາດຟ້ອນມີສຽງຄ້ອງຈູມ ແລະ ຖັ່ງບັ້ງ ເຊິ່ງໄດ້ນຳໃຊ້ໃນເວລາພ່ອນຊື່ນຍາມເຮັດພະວຽງ, ພະມັນ, ພະເຂົ້າເມົ້າ, ບຸນຂຶ້ນເຮືອນໃໝ່ ແລະເວລາຄົບຮຸ້ນຄົນເສຍຊີວິດ ພ້ອມກັນນັ້ນ ຖ້າທ່ານ



ນາງ ສາວ ຊົນເຜົ່າ ຢຣຸດາກ ເມືອງ ສະໜາມໄຊ

ຫາກໄດ້ໄປແວ່ຢາມບ້ານເຮືອນຂອງຊົນເຜົ່າໂອຍໃນຍາມເຮັດເຮືອນແປຊານ (ເດືອນ 3 ເດືອນ 4 ) ກໍ່ຈະໄດ້ ຮ່ວມງານກິນເຫຼົ້າຊຸມແຊ່ວຂຶ້ນເຮືອນໃໝ່. ພ້ອມທັງຈະໄດ້ເບິ່ງໄດ້ຊົມ ຫຼື ໄດ້ຍິນສຽງຂັບລຳນາງອຶມນາງ ປະສານກັບສຽງດົນຕີດຣວານ(ແຄນໝາກນ້ຳເຕົ້າ) ແຕ່ ຖ້າໄດ້ ແວ່ຢາມບ້ານຂອງຊົນເຜົ່າໂອຍ ລຽບຕາມຕີນພູຫຼວງໃນຂະນະພວກເຂົາເຈົ້າພວມມຸງເຮືອນກໍ່ຈະໄດ້ຍິນສຽງຂັບລຳ "ຈາເລີເລ" ແຕ່ວ່າກໍລະນີແວ່ຢາມໃນລະດູເກັບກ່ຽວເຂົ້ານາປີກໍ່ຈະໄດ້ຍິນສຽງຂັບລຳ ກ່ຽວເຂົ້ານາປີກໍ່ຈະໄດ້ຍິນສຽງເອາະໂຢ໊ໂອ໊. ແຕ່ຖ້າຫາກໄປແວ່ຢາມເຮັດໄຮ່ໄຖນາຈະໄດ້ຍິນສຽງ ຂັບລຳ ເອີ້ຍໄບຣບຣາຍ ເຊິ່ງມີເນື້ອໃນພັນລະນາທິວທັດທຳມະຊາດຂອງທົ່ງນາ ແລະ ພູຫຼວງ. ໄດ້ສ່ອງແສງຕິຽນ, ຕຳໜິວິຈານພວກທີ່ຖືພາກ່ອນແຕ່ງດອງ, ບໍ່ສະເພາະແຕ່ເທົ່ານັ້ນ ຊົນເຜົ່າໂອຍກໍ່ມີສິລະປະວັນນະຄະດີຫຼາກຫຼາຍສີສັນເປັນຕົ້ນແມ່ນຂັບລຳ " ມາງເບຣາະ ", " ເຢງງາຍ " ຫຼຽວງາຍ ເປຣັດປຣໍ, ມີສຽງດົນຕຣີຕ່າງຄື: ໂປເນຸກ, ແຣະກາໝີ, ຕີຄ້ອງລາ, ເປຣັງກຶນນິງ, ເປຣັງເກາະອຶ໊ງເກາະ ຕາມແຕ່ລະລະດູການ. ພ້ອມກັນນັ້ນຖ້າຫາກທ່ານໄດ້ໄປແວ່ຢາມເຂດໝູ່ບ້ານຂອງຊົນເຜົ່າເຈັງ, ຢຣຸດາກ, ຢຣຸກອງ, ຍະເຫີນ, ຕຣຽງຣາຣັກ, ແຢະ, ສະດາງ, ກາຢ້ອງ ກໍ່ ຈະໄດ້ຍິນສຽງຂັບລຳ ອັນອ່ອນຊອນ ຂອງຄູ່ບ່າວ - ສາວ ບັນດາເຜົ່າເຫຼົ່ານັ້ນເໝືອນ ກັນ.

ບົນພື້ນຖານບັນດາຊົນເຜົ່າຢູ່ແຂວງດັ່ງກ່າວນັ້ນ ໄດ້ມີສິລະປະວັນນະຄະດີຫຼາກຫຼາຍ ແລະຫຼາຍສີສັນດັ່ງທີ່ກ່າວມານັ້ນ ຄະນະພັກ ແລະອຳນາດການປົກຄອງແຂວງອັດຕະປື ຈຶ່ງໄດ້ມີນະໂຍບາຍປົກປັກຮັກສາ, ກະຕຸກຊຸກຍູ້ສົ່ງເສີມສິລະປະວັນນະຄະດີ ແລະສິລະປະວັດທະນະທຳທີ່ເປັນມູນເຊື້ອຂອງຊົນເຜົ່າຕ່າງໆ ໃຫ້ຍືນຍົງຄຽງຄູ່ກັບສິລະປະວັນນະຄະດີ ແລະ ສິລະປະວັດທະນະທຳແຫ່ງຊາດ. ພ້ອມກັບການປົກປັກຮັກສາ ແລະເສີມຂະຫຍາຍບັນດາບັນຫາທີ່ໄດ້ກ່າວມານັ້ນສົມທົບກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ ກອງທັບ ແລະປະຊາຊົນເຜົ່າຕ່າງໆສະໄໝນັ້ນ, ຄະນະພັກ ແລະອຳນາດການປົກຄອງປະຕິວັດແຂວງອັດຕະປືຈຶ່ງໄດ້ຕົກລົງສ້າງຕັ້ງກອງສິລະ

---

ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ປະກອນແຂວງຂຶ້ນ ເມື່ອ ປີ 1965. ກອງສະແດງດັ່ງກ່າວເຖິງວ່ານັກສະແດງບໍ່ຫຼວງຫຼາຍ, ອຸປະກອນຮັບໃຊ້ການສະແດງ ບໍ່ພຽງພໍ, ລາຍການສະແດງບໍ່ທັນຫຼວງຫຼາຍ ແລະອຸດົມສົມບູນກໍ່ຕາມ ແຕ່ກໍ່ໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ກອງທະຫານຢູ່ແນວໜ້າ ແລະສະແດງຮັບໃຊ້ປະຊາຊົນເຜົ່າຕ່າງໆຢູ່ເຂດທີ່ໝັ້ນຂອງການປະຕິວັດ ເຊິ່ງໄດ້ເຮັດໃຫ້ສຽງເພງວາດຟ້ອນທີ່ກອງສິລະປະກອນແຂວງອັດຕະປືໄດ້ໄປສະແດງແຕ່ລະຄັ້ງນັ້ນ ໄດ້ປຸກລະດົມ ແລະກະຕຸກຊຸກຍູ້ໃຫ້ກອງທັບ ແລະປະຊາຊົນລຸກຂຶ້ນຕໍ່ສູ້ກັບຈັກກະພັດ, ສັກດີນາຕ່າງດ້າວ ແລະເຈົ້າສັກດີນາທ້ອງຖິ່ນຈົນກວ່າແຂວງອັດຕະປືໄດ້ສຳເລັດການປົດປ່ອຍໃນປີ 1971 ຢ່າງສະຫງ່າງາມ ແລະພາຍຫຼັງແຂວງອັດຕະປືໄດ້ຮັບການປົດປ່ອຍຢ່າງສົມບູນແລ້ວ ມາເຖິງປີ 1973 -1975 ໄດ້ສົ່ງນັກສະແດງ



ຊຸດອາພອນເພດຂອງຊົນເຜົ່າເບຣົາ ເມືອງ ພູວົງ

ໄປປັບປຸງ ແລະ ຍົກລະດັບຢູ່ໂຮງຮຽນສິລະ ປະດິນຕີ ຂອງສູນກາງທີ່ເມືອງວຽງໄຊ ແຂວງຫົວພັນ ແລະ ໃນປີ 1979 - 1984 ໄດ້ສົ່ງນັກສະແດງໄປປັບປຸງ ແລະ ຍົກລະດັບ ຢູ່ແຂວງແຫກສ່ຽວຢາລາຍ - ກອນຕູມ ແຫ່ງ ສ.ສ ຫວຽດນາມ.

ກອງສິລະປະກອນແຂວງອັດຕະປື ເລີ່ມແຕ່ມື້ໄດ້ຮັບການສ້າງຕັ້ງຈົນເຖິງຊຸມປີ 1990 ແມ່ນໄດ້ຕັ້ງໜ້າເຄື່ອນໄຫວສະແດງຮັບໃຊ້ໜ້າທີ່ການເມືອງ, ກອງທະຫານ, ສຳນັກ ງານ, ສະແດງຮັບໃຊ້ງານບຸນສຳຄັນຂອງຊາດ, ກອງປະຊຸມໃຫຍ່ ອົງຄະນະພັກແຂວງ, ເມືອງ, ຮັບໃຊ້ງານບຸນປະເພນີຂອງຊົນເຜົ່າຕ່າງໆສະແດງຮັບໃຊ້ພື້ນຖານການຜະລິດ ແລະ ເຄື່ອນໄຫວສະແດງແລກປ່ຽນບົດຮຽນກັບແຂວງແຫກສ່ຽວເປັນຈຳນວນບໍ່ໜ້ອຍ ແຕ່ ສິ່ງທີ່ພົ້ນເດັ່ນກວ່າໝູ່ນັ້ນແມ່ນໃນປີ 1986 ຄະນະສິລະປະວັນນະຄະດີພື້ນເມືອງ ບັນດາຊົນເຜົ່າແຂວງອັດຕະປື ໄດ້ເຂົ້າຮ່ວມສະແດງຮັບໃຊ້ ໃນງານບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າທົ່ວປະເທດຄັ້ງທີ I ກໍ່ໄດ້ຮັບລາງວັນຊະນະເລີດ ແລະກໍ່ ໄດ້ເອົາກອງ ສິລະປະກອນອອກສະແດງຮັບໃຊ້ມວນຊົນພາຍໃນນະຄອນຫຼວງວຽງຈັນ ແລະເຄື່ອນ ໄຫວສະແດງຢູ່ຕ່າງປະເທດອີກດ້ວຍ. ບໍ່ພຽງແຕ່ເທົ່ານັ້ນໃນໂອກາດປະ ກວດສິລະວັນນະຄະດີປະພື້ນເມືອງເຍົາວະຊົນບັນດາຊົນເຜົ່າທົ່ວປະເທດປີ 1993 ແລະຂັ້ນປະກວດສິລະປະວັນນະຄະດີທົ່ວກອງທັບເມື່ອປີ 1994 ໜ່ວຍສິລະປະ ວັນນະຄະດີພື້ນເມືອງ ບັນດາຊົນເຜົ່າແຂວງອັດຕະປື ກໍ່ໄດ້ເຂົ້າຮ່ວມ ແລະໄດ້ຮັບລາງ ວັນປະເພດ I ແລະປະເພດ II.

ນັບແຕ່ຊຸມປີ 1990 ເຖິງປະຈຸບັນກອງສິລະປະກອນແຂວງອັດຕະປື ຖືກຍຸບ ແລະ ໄດ້ເຄື່ອນໄຫວລົງສູ່ຮາກຖານ ແລະບັນດາອະດີດນັກສະແດງຮຸ່ນເອື້ອຍ, ອ້າຍ, ຮຸ່ນພໍ່, ຮຸ່ນແມ່ ທີ່ໄດ້ດຳລົງຊີວິດ, ທຳມາ ຫາກິນຢູ່ບ້ານໃດ, ຊົນເຜົ່າໃດແມ່ນໄດ້ສິດສອນ ຄົນຮຸ່ນໃໝ່ ເພື່ອສືບທອດທາງດ້ານສິລະປະວັນນະຄະດີພື້ນເມືອງຂອງຊົນເຜົ່າຕ່າງໆໃຫ້ ຄົງຕົວ ແລະຂະຫຍາຍຕົວ ຢ່າງບໍ່ຢຸດຢັ້ງ. ບົນພື້ນຖານນັ້ນ ມາເຖິງປະຈຸບັນຈຶ່ງໄດ້ມີໜ່ວຍ

ສິລະປະວັນນະຄະດີສະໝັກຫຼິ້ນຢູ່ຕາມໂຮງຮຽນຊັ້ນຕ່າງໆ, ກອງທະຫານ ແລະ ໝູ່ບ້ານຊົນເຜົ່າຕ່າງໆ ມີຫຼາຍກວ່າ 20 ໜ່ວຍ ແລະບໍ່ສະເພາະແຕ່ເພີ່ມຂຶ້ນທາງປະລິມານ ແຕ່ມາເບິ່ງດ້ານຄຸນນະພາບ, ເນື້ອໃນ, ລີລາການສະແດງຂອງໜ່ວຍສິລະປະວັນ ນະຄະດີສະໝັກຫຼິ້ນນັ້ນ ກໍ່ລ້ວນແຕ່ໄດ້ມີລັກສະນະຊາດ, ວິທະຍາສາດ ແລະ ມີລັກສະນະມະຫາຊົນ. ດ້ວຍເຫດນັ້ນ ບັນດາລາຍການສະແດງຂອງກອງສິລະປະກອນກໍ່ຄືສິລະປະພື້ນເມືອງ ບັນດາເຜົ່າແຂວງ ອັດຕະປືທີ່ສະແດງໃນອະດີດຕະການນັ້ນ ແຕ່ມາເຖິງປະຈຸບັນກໍ່ຍັງບໍ່ສາມາດເຮັດໃຫ້ບັນດາມວນຊົນຫຼົງລືມໄດ້ແຕ່ຢ່າງໃດ. ສຽງເພງຂອງສາວ ທອງລາ ສາວບານເຢັນ ແລະ ວາດຟ້ອນ ຂອງສາວ ບຸດສະດີ ໄຊຍະສອນ ແລະ ວາດຟ້ອນສາວ ພາສິດ ເມື່ອຊຸມປີ 1970 ແລະ 1980 ນັ້ນ ແມ່ນຍັງ ຝັງເລິກ ຢູ່ໃນສາຍຫູ ແລະ ສາຍຕາ ຂອງມວນ ຊົນ ທີ່ເຄີຍໄດ້ເບິ່ງໄດ້ ຊົມ ສຽງລຳເຈືອງ ຂອງໜ່ວຍ ສິລະປະ ວັນນະຄະດີ ພື້ນເມືອງ ເຢົາວະຊົນ ຂອງຊົນເຜົ່າເບຣົາ ທີ່ໄດ້ນຳມາສະແດງ ຢູ່ໂຮງມະໂຫລະສົບ ແຫ່ງຊາດ ເມື່ອປີ 1993 ແລະ ສຽງ ຂັບລຳນາງອຶມນາງ ປະສານກັບສຽງດົນຕີດຣວານ ຂອງຊົນເຜົ່າໂອຍ ທີ່ໄດ້ສະແດງຢູ່ໂຮງກາຍຍະສິນແຫ່ງຊາດເມື່ອປີ 1994 ໄດ້ດັງກ້ອງທີ່ນະຄອນຫຼວງວຽງຈັນ ເຊິ່ງໄດ້ຝັງເລິກໃນໝາກຫົວໃຈຂອງ ຊາວນະຄອນຫຼວງວຽງຈັນ ຢ່າງບໍ່ມີວັນເຫືອດແຫ້ງແຕ່ຢ່າງໃດເລີຍ.

ໃນໂອກາດເຂົ້າຮ່ວມບຸນມະໂຫລານ ວັດທະນະທຳບັນດາຊົນເຜົ່າທົ່ວປະເທດຄັ້ງທີ່ II ປີ 2000 ທີ່ໄດ້ຈັດຂຶ້ນ ຢູ່ນະຄອນ ຫຼວງວຽງຈັນ ເມື່ອວັນທີ 7 - 12 / 11 / 2000 ນັ້ນ, ນາງ ບຸດສະດີ ໄຊຍະສອນ ຮອງຫົວໜ້າພະແນກຖະແຫຼງຂ່າວ - ວັດທະນະທຳ ແຂວງອັດຕະປື ໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ຂຽນວ່າ : " ໃນໂອກາດ ບຸນມະໂຫລານຄັ້ງນີ້ ແຂວງອັດຕະປື ພວກເຮົາໄດ້ນຳເອົາຜະລິດຕະພັນວັດທະນະທຳທາງວັດຖຸເປັນຕົ້ນແມ່ນມີເຄື່ອງຫັດຖະກຳຈັກສານ ທີ່ເປັນເຄື່ອງໃຊ້ໃນຄອບຄົວຄື: ຫວດ, ແອບເຂົ້າ ( ກະຕິບ ), ໂປຣງ, ກະຊ້ອນ, ມະຣຶງຂອງຊົນເຜົ່າໂອຍ, ກະໂຕກ, ພາເຂົ້າ, ໝໍ້ທຸງເຂົ້າ ທີ່ເຮັດດ້ວຍທອງ, ໝໍ້ທຸມ,

ເສື້ອ ແລະ ຄ້ອງຈູ້ມ ຂອງຊົນເຜົ່າເບຣົາ, ຂ້ອງ, ກະຊ້ອນ, ກະພາ, ກະນຸນ, ກະລອນ, ກະເລບ, ກະເຈາະ, ຂ້ອງ, ສິ້ນກາໂດ, ສິ້ນກາໂລມ,( ກະດາງບຣອງ ), ກະຕ່ງວໝາກປັດ, ກະຕ່ງວຍອຍ, ໝໍ້ທຸມ ແລະ ດາບຂອງຊົນເຜົ່າຕຣຽງ ແລະໜ້າຂອງຊົນເຜົ່າຣ່າຣັກ ມາວາງສະແດງໃນໂອກາດ ບຸນມະນັດ ສະການພະທາດຫຼວງ ສ່ວນລາຍການສະແດງນັ້ນມີພຽງແຕ່ເລັກນ້ອຍຄື: ລຳອັດຕະປື ປະສານກັບສຽງແຄນຍາວແປດສອກ ທີ່ຫາກໍ່ໄດ້ຄົ້ນຄວ້າພົບບໍ່ທັນເຖິງປີ, ຟ້ອນຊີວິດໃໝ່ຂອງຊົນເຜົ່າເບຣົາ ແລະ ເປົ່າແຄນໝາກນ້ຳເຕົ້າຂອງຊົນເຜົ່າໂອຍ."




ຮ້ານວາງສະແດງຜະລິດຕະພັນທາງດ້ານວັດຖຸຂອງເຜົ່າ ແຂວງ ອັດຕະປື

ຜ່ານການສະແດງຢູ່ຫໍວັດທະນະທຳແຫ່ງຊາດ ແລະເດີ່ນທາດຫຼວງຕາມຜູ້ຂຽນເຫັນວ່າບໍ່ຄ່ອຍໄດ້ຮັບຄວາມນິຍົມຈາກທ່ານຜູ້ຊົມພໍປານໃດ. ແຕ່ວ່າເຄື່ອງ ທີ່ ພວກເຂົາເຈົ້າມີຄວາມນິຍົມຫຼາຍກວ່າໝູ່ນັ້ນ ແມ່ນກະໂຕກຂອງຊົນເຜົ່າເບຣົາ ຈົນເຮັດໃຫ້ພວກຜູ້ຄົນຍາດ ຊື້ບໍ່ແມ່ນຂອງໜ້ອຍ ເຖິງຢ່າງໃດກໍ່ຕາມຜູ້ຂຽນຄິດ ແລະເຊື່ອແນ່ວ່າ ພາຍໃຕ້ການນຳພາຂອງຄະນະພັກ ແຂວງ ອັດຕະປື ແລະ ຄະນະພັກໃນ 5 ຕົວເມືອງ ຂອງ ແຂວງ ນັ້ນໆ ອັນມີ ທ່ານ ຄຳເກີດ ເວີນຄຳ ເປັນຜູ້ນຳໜ້າ ແລະກະຕຸກຊຸກຍູ້ໂດຍກົງນັ້ນ ໃນງານບຸນມະໂຫລານຄັ້ງໜ້າແຂວງອັດຕະປື ຄົງຈະໄດ້ນຳເອົາລາຍການສະແດງທີ່ໄດ້ຮັບຄວາມນິຍົມລື່ນແຂວງ ອື່ນທັງປະເທດ ແລະ ຫວັງວ່າວຽກງານ ສິລະປະວັດທະນະທຳ ແລະສິລະປະວັນນະຄະດີ ຂອງບັນດາຊົນເຜົ່າຢູ່ແຂວງອັດຕະປື ກໍ່ຈະໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍຄຽງຄູ່ກັບວັດທະນະທຳແຫ່ງຊາດ.



ການນຸ່ງຖື ແລະເຮືອນຂອງຊົນເຜົ່າຕຣຽງ ເມືອງຊານໄຊ ແຂວງ ອັດຕະປື

## ວຽກງານສິລະປະວັນນະຄະດີ ບັນດາຊົນເຜົ່າຢູ່ ເຂດພິເສດ ໄຊສົມບູນພວມກໍ່ຮ່າງສ້າງຕົວຂຶ້ນຮັບໃຊ້ສັງຄົມ

******************

ເຂດພິເສດໄຊສົມບູນໄດ້ຮັບການສ້າງຕັ້ງຂຶ້ນເມື່ອ ປີ 1994 ໂດຍອີງຕາມຄວາມຮຽກຮ້ອງຕ້ອງຂອງສອງໜ້າທີ່ຍຸດທະສາດ ຄື: ການປົກປັກຮັກສາ ແລະ ສ້າງສາພັດທະນາເສດຖະກິດ - ສັງຄົມ. ເຂດພິເສດໄຊສົມບູນ ມີເຂດແດນຕິດກັບແຂວງຊຽງຂວາງ , ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ. ພື້ນທີ່ສ່ວນຫຼາຍຂອງ ເຂດພິເສດໄຊສົມບູນ ແມ່ນພູດອຍທຸລະກັນດານ ແລະພູສູງຄືພູເບັ້ຍສູງ 20.820 ແມັດ. ນອກຈາກນັ້ນຍັງມີທົ່ງ ພຽງລຽບຕາມຮ່ອມພູ ແລະຮ່ອມຫ້ວຍ ເຊິ່ງເປັນເງື່ອນໄຂ ເໝາະສົມແກ່ການປູກຝັງ ແລະລ້ຽງສັດໃຫຍ່ປະເພດ: ງົວ, ຄວາຍ. ໃນເຂດພິເສດໄຊສົມບູນ ໄດ້ມີຮ່ອງຮອຍປະຫວັດສາດເຊັ່ນ: ຖ້ຳຂອງເຈົ້າອະນຸວົງ ກະສັດ ອົງສຸດທ້າຍແຫ່ງລາດຊະວົງວຽງຈັນ.

ເຂດພິເສດໄຊສົມບູນ ແມ່ນຫາກໍ່ສ້າງຕັ້ງຂຶ້ນເກືອບທົດສະຕະວັດໜຶ່ງ ແຕ່ເປັນເຂດທີ່ປະກອບມີຫຼາຍຊົນເຜົ່າ ທີ່ໄດ້ຕັ້ງພູມລຳເນົາ ແລະທຳມາຫາກິນບົນດິນດອນ ຕອນນີ້ເປັນເວລາຊ້ານານຄື:ຊົນເຜົ່າລາວ, ໄຕ, ມົ້ງ, ກຶມມຸ ແລະ ອິວມຽນ. ນອກຈາກນັ້ນຍັງມີຫຼາຍຊົນເຜົ່າທີ່ໄດ້ເຄື່ອນໄຫວໄປມາປະຕິບັດໜ້າທີ່ວຽກງານທາງລັດຖະການ ແລະໃນນາມສ່ວນຕົວແລ້ວກໍ່ຕັ້ງເຮືອນຊານຮ່ວມກັບຊົນເຜົ່າທີ່ມາຢູ່ກ່ອນ ແລະບັນດາຊົນເຜົ່າທີ່ເປັນບ້ານສະເພາະ ຢູ່ ເຂດພິເສດໄຊສົມບູນນັ້ນ ແມ່ນຍັງຄົງຮັກສາເອກະລັກ ສະເພາະຂອງຊົນເຜົ່າຕົນເອງເຊັ່ນ: ເອກະລັກກ່ຽວກັບພາສາປາກເວົ້າ, ເອກະລັກກ່ຽວກັບປະຫວັດສາດຄວາມເປັນມາ, ກົກເຄົ້າຕົ້ນກຳເນີດ ທີ່ຕິດພັນເຖິງຊື່ຮຽກເດີມທີ່ພວກເຂົາເຈົ້າມີຄວາມສະໝັກໃຈ ແລະເອກະລັກ ກ່ຽວກັບການປະກອບສ້າງທາງດ້ານລະບົບແນວຄິດຈິດຕະສາດ ທີ່ສະແດງອອກໃນວົງຄະນາຍາດ ວັດທະນະທຳຄື: ວັດທະນະທຳດ້ານວັດຖຸ, ຈິດໃຈ ແລະສັງຄົມ.ສ່ວນບັນດາ ຊົນເຜົ່າທີ່ເປັນບັນດາບຸກຄົນ ແລະຄອບຄົວ

---
ງານມະໂຫລານ ວັດທະນະທຳບັນດາເຜົ່າ ປີ 2000

ນັ້ນພວກເຂົາເຈົ້າກໍ່ຍັງມີຄວາມຕື່ນຕົວໃນການຮັກສາ ຊື່ຂອງຊົນເຜົ່າຕົນເອງ ແລະ ພາສາປາກເວົ້າ. ສ່ວນເອກະລັກດ້ານອື່ນໆ ອາດຈະເຊື່ອມໄປເນື່ອງຈາກໄດ້ຮັບຜົນສະທ້ອນດ້ານວັດທະນະທຳຂອງບັນດາຊົນເຜົ່າ ທີ່ມູນເຊື້ອທາງດ້ານ ສິລະປະວັນນະຄະດີ ຂັບລຳປະຈຳທ້ອງຖິ່ນ ແລະຊົນເຜົ່າຂອງຕົນເອງເຊັ່ນ: ຂັບງື້ມ, ຂັບເຫຼີມ, ຂັບງື່ມ, ຂັບໄຕດຳ ແລະອື່ນໆເປັນຕົ້ນ.

ບົນຈິດໃຈບັນດາບັນຫາທີ່ກ່າວມານັ້ນ ເຖິງວ່າເຂດພິເສດໄຊສົມບູນ ໄດ້ຮັບການສ້າງບໍ່ພໍເທົ່າໃດກໍ່ຕາມ ແຕ່ມາເບິ່ງວຽກງານສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າຢູ່ເຂດດັ່ງກ່າວ ກໍ່ໄດ້ຮັບການປົກປັກ ຮັກສາ ແລະເສີມຂະຫຍາຍໄດ້ດີພໍສົມຄວນ ເພາະສະນັ້ນເຖິງວ່າບໍ່ມີກອງສະແດງອາຊີບ ແຕ່ໃນເມື່ອມີງານບຸນຕ່າງໆທີ່ຕ້ອງການໃຫ້ມີການສະແດງ ສິລະປະວັນນະຄະດີພື້ນເມືອງບັນດາເຜົ່າກໍເຕົ້າໂຮມເອົານັກສະແດງຈາກພາກສ່ວນຕ່າງໆມາຝຶກຊ້ອມຊົ່ວໄລຍະໜຶ່ງ ແລ້ວກໍ່ສາມາດອອກສະແດງຮັບໃຊ້ ສັງຄົມຢ່າງທັນການຢ່າງສະບາຍ ເຊັ່ນ: ງານກວດສອບສິລະປະວັນນະຄະດີ ທົ່ວປະເທດສາຍການເງິນທີ່ແຂວງສະຫວັນນະເຂດ, ບັ້ນກວດສອບສິນລະປະວັນນະຄະດີໃນໂອກາດສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 50 ປີ, ງານເປີດປີທ່ອງທ່ຽວ ປີ 1999 - 2000 ທີ່ເດີ່ນທາດຫຼວງ ແລະງານບຸນມະໂຫລານວັດທະນະທຳ ບັນດາຊົນເຜົ່າທົ່ວປະເທດຄັ້ງທີ II ປີ 2000 ທີ່ນະຄອນຫຼວງວຽງຈັນ ແລະງານອື່ນໆ ກໍ່ໄດ້ເຂົ້າຮ່ວມກັບບັນດາ ນັກສະແດງ ທີ່ມາຈາກທຸກແຂວງ ຂອງປະເທດຊາດແຕ່ຕົ້ນຕະຫຼອດປາຍ.

ລວມຄວາມວ່າ: ຜ່ານໄລຍະທີ່ສິລະປະວັນນະຄະດີພື້ນເມືອງບັນດາຊົນເຜົ່າເຂດພິເສດ ໄຊສົມບູນ ໄດ້ສະແດງຮັບໃຊ້ງານບຸນຕ່າງໆ ນັ້ນລ້ວນແຕ່ໄດ້ ຮັບຄວາມນິຍົມຈາກທ່ານຜູ້ຊົມໂດຍບໍ່ມີວັນຈືດຈາງແຕ່ຢ່າງໃດເລີຍ.



ນັກສະແດງຂອງໜ່ວຍສິລະປະວັນນະຄະດີພື້ນເມືອງບັນດາເຜົ່າ ເຂດພິເສດໄຊສົມບູນ

ບັນຊີລາຍຊື່ບຸກຄົນ ແລະນິຕິບຸກຄົນ ທີ່ອຸປະຖຳໃນການ
ພິມປຶ້ມວັດທະນະທຳບັນດາຊົນເຜົ່າໃນງານມະໂຫລານປີ 2000.

| | | | |
|---|---|---|---|
| 1. ບໍລິສັດເບຍລາວຈຳກັດ | ຈຳນວນ | = | 10.000.000 ກີບ |
| 2. ທະນາຄານແຫ່ງ ສປປລາວ | ຈຳນວນ | = | 5.000.000 ກີບ |
| 3. ທະນາຄານພັດທະນາລາວ | ຈຳນວນ | = | 1.000.000 ກີບ |
| 4. ລັດວິສາຫະກິດໄປສະນີ | ຈຳນວນ | = | 1.000.000 ກີບ |
| 5. ບໍລິສັດ ສັງກະສີລາວ | ຈຳນວນ | = | 1.000.000 ກີບ |
| 6. ໂຮງແຮມລາວປຣາຊາ | ຈຳນວນ | = | 1.000.000 ກີບ |
| 7. ລັດວິສາຫະກິດການບິນລາວ | ຈຳນວນ | = | 1.000.000 ກີບ |
| 8. ຄິດສະຈັກຂ່າວປະເສີດ | ຈຳນວນ | = | 1.000.000 ກີບ |
| 9. ພັດຕະຄານ ແມ່ຂອງ | ຈຳນວນ | = | 600.000 ກີບ |
| 10. ທະນາຄານການຄ້າຕ່າງປະເທດ | ຈຳນວນ | = | 500.000 ກີບ |
| 11. ບໍລິສັດນ້ຳປະປາລາວ | ຈຳນວນ | = | 500.000 ກີບ |
| 12. ທະນາຄານ ທະຫານໄທ | ຈຳນວນ | = | 300.000 ກີບ |
| 13. ທະນາຄານ ກຸງເທບ | ຈຳນວນ | = | 300.000 ກີບ |
| 14. ທະນາຄານ ກຸງໄທ | ຈຳນວນ | = | 300.000 ກີບ |
| 15.ທະນາຄານ ກຸງສີ | ຈຳນວນ | = | 300.000 ກີບ |
| 16. ທະນາຄານ ໄທພານິດ | ຈຳນວນ | = | 300.000 ກີບ |
| 17. ຮ້ານອາຫານ ຄົວລາວ | ຈຳນວນ | = | 250.000 ກີບ |
| 18. ຫ້ອງການຄຸ້ມຄອງຈັດສັນຕະຫຼາດເຊົ້າ | ຈຳນວນ | = | 200.000 ກີບ |
| 19. ບໍລິສັດ ທ່ອງທ່ຽວ ດິນແທນ | ຈຳນວນ | = | 200.000 ກີບ |
| 20. ປ້ຳນ້ຳມັນ ໂພນສະອາດ | ຈຳນວນ | = | 100.000 ກີບ |
| 21.ໂຮງແຮມ ໄຊຊະນະ | ຈຳນວນ | = | 50.000 ກີບ |

# ຂອບໃຈ

35th
Anniversary 1973-2008
L.B.C.
Beerlao
ເບຍລາວຄົບຮອບ 35 ປີ

35 ປີ ແຫ່ງການເຕີບໃຫຍ່ເຂັ້ມແຂງຂອງ ບໍລິສັດເບຍລາວ ເປັນຄວາມພາກພູມໃຈອັນຫຍິ່ງໃຫຍ່ ຂອງພະນັກງານທຸກຄົນໃນບໍລິສັດເບຍລາວຈຳກັດ ແລະ ຄົນລາວທັງຊາດ ບໍລິສັດເບຍລາວ ໄດ້ດຳເນີນທຸລະກິດຢ່າງຖືກຕ້ອງຕາມນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເປັນບໍລິສັດນຳໜ້າໃນການປະຕິບັດພັນທະແກ່ລັດຖະບານ ນອກຈາກນັ້ນບໍລິສັດ ຍັງໄດ້ປະກອບສ່ວນຊຸກຍູ້ສັງຄົມໃນດ້ານຕ່າງໆເຊັ່ນ:

- ວຽກງານທີ່ສຳຄັນຂອງພັກ ແລະ ລັດຖະບານ
- ວຽກງານດ້ານການສຶກສາ ແລະ ສາທາລະນະສຸກທີ່ສຳຄັນເຊັ່ນ: ປະກອບທຶນໃຫ້ແກ່ມູນລະນິທິການສຶກສາ ແລະ ຊ່ວຍເຫລືອອຸປະກອນການສຶກສາໃຫ້ແກ່ 47 ຕົວເມືອງທຸກຍາກທີ່ເປັນບໍລິມາສິດ ຂອງລັດຖະບານເປັນເວລາ 10 ປີ
- ວຽກງານດ້ານກິລາເຊັ່ນ: ເປັນຜູ້ອຸປະຖຳຫລັກກິລາ SEA GAME 2009 ທີ່ ສ.ປ.ປ ລາວ ເປັນເຈົ້າພາບ ແລະ ງານກິລາແຫ່ງຊາດເປັນຕົ້ນ
- ວຽກງານດ້ານອານຸລັກ ແລະ ສົ່ງເສີມວັດທະນາທຳເຊັ່ນ: ງານບຸນຊ່ວງເຮືອ ແລະ ງານບຸນນະມັດສະການພະທາດຫລວງເປັນຕົ້ນ
- ວຽກງານສາທາລະນະປະໂຫຍດອື່ນໆເຊັ່ນ: ໂຄງການຫລຸດຜ່ອນອຸປະຕິເຫດ ແລະ ໂຄງການຫລຸດຜ່ອນຄວາມທຸກຍາກ


ຜູ້ອຸປະຖຳຫລັກກິລາ SEA GAME 2009



ໂຄງການຫລຸດຜ່ອນອຸປະຕິເຫດ


ໂຄງການຊ່ວຍເຫລືອອຸປະກອນການສຶກສາ



ງານບຸນຊ່ວງເຮືອ




ເບຍລາວຂໍຂອບໃຈຄົນລາວ
ທີ່ຮ່ວມສະໜັບສະໜູນ ແລະ ສົ່ງເສີມ
ສັງຄົມລາວຕະຫຼອດ 35 ປີ ແລະ ອີກຕະຫຼອດໄປ



ເບຍລາວ ເບຍຂອງຄົນລາວ ຄົນຈິງໃຈ